ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ
ສະຖາບັນຄົ້ນຄວ້າພາສາສາດ

ສຶກສາການຢືມຄຳໃນພາສາລາວ

Study on Word Borrowing in Lao Language

ຄົ້ນຄວ້າ ແລະ ຮຽບຮຽງໂດຍ : ສົມແສງ ໄຊຍະວົງ
Somseng XAYAVONG

ນະຄອນວຽງຈັນ 2005

ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ
ສະຖາບັນຄົ້ນຄວ້າພາສາສາດ

ສຶກສາການຢືມຄຳໃນພາສາລາວ

Study on Word Borrowing in Lao Language

ຄົ້ນຄວ້າ ແລະ ຮຽບຮຽງໂດຍ : ສົມແສງ ໄຊຍະວົງ
ທີ່ເປີກສາ : ດຣ. ທອງເພັດ ກິ່ງສະດາ
ຜູ້ຮ່ວມງານ : ອ.ຈ ບຸນເລີດ ແສງສຸລິນ
ພິມ ແລະ ຈັດໜ້າ : ໄຊຍະສິດ ພູໄຊ
ຄຳເມິງ ສູນດາລາ

ທະບຽນການພິມ : 07 ພຈ 1112004.
ພິມທີ່ : ໂຮງພິມມັນທາຕຸລາດ
ຈຳນວນພິມ : 1200 ຫົວ

ອຸປະຖຳໂດຍ: ມູນນິທິໂຕໂຢຕາ
Supported by: The TOYOTA FOUNDATION

ສະຫງວນ ລິຂະສິດ ຂອງຜູ້ຄົ້ນຄວ້າ

ນະຄອນວຽງຈັນ 2005

ຄຳນຳ

ການສຶກສາຄຳທີ່ຮັບຈາກພາສາອື່ນຢູ່ໃນພາສາຕົນນັ້ນໄດ້ມີຄວາມສຳຄັນຫຼາຍປະການຄື: ຕໍ່ກັບການສຶກສາພາສາ, ຕໍ່ກັບການສຶກສາໃນແງ່ວັດທະນະທຳ, ປະຫວັດ,ບູຮານຄະດີ ແລະສັງຄົມ. ປະມວນຄຳ ທີ່ຮັບຈາກພາສາອື່ນໆມາ ຢ່າງສົມເຫດສົມຜົນ ແລະການທີ່ຄຳນັ້ນ ເຂົ້າມາເປັນຄຳໃນຄັງຂອງຄຳລາວ ໄດ້ສະແດງເຖິງຂະບວນການ ຂະຫຍາຍຕົວຂອງຈຳນວນ ຄຳສັບ ຂອງພາສາຕົນໃນແຕ່ລະໄລຍະ ,ທັງມີຄ່າທີ່ໃຫ້ເຫັນເຖິງວິວັດທະນະການທາງພາສາ, ສັງຄົມ ແລະວັດທະນະທຳ ເຮົາຢ່າງເລິກເຊິ່ງ, ການປ່ຽນແປງດ້ານຮູບຄຳແລະບາງຄວາມໝາຍ ຂອງຄຳທີ່ຮັບມາໃນພາສາເຮົານັ້ນ ກໍ່ໄດ້ສະແດງເຖິງວ່າ ພາສາເຮົາຍັງເປັນຕົວຫຼັກທີ່ມີລະບົບ ອັນສົມບຸນສຳລັບ ຄັດ, ເລືອກເຟັ້ນ, ດັດຫຼື ປ່ຽນແປງຄຳຕ່າງໆ ຈາກພາສາອື່ນ ເຊິ່ງໝາຍ ເຖິງວ່າ ພາສາເຮົາມີກົດເກນ ແລະມີຄວາມເປັນເອກະລັກເຊັ່ນກັນ.

ປຶ້ມເຫຼັ້ມນີ້ໄດ້ເປັນຜົນງານທຳອິດທີ່ ສຶກສາ ການຮັບຄຳຈາກພາສາຕ່າງໆເຂົ້າມາໃນພາສາ ລາວ ເຊິ່ງໃນນີ້ຜູ້ຄົ້ນຄວ້າໄດ້ໃຊ້ວິທີນຳສະເໜີ ທິດສະດີພາສາສາດບາງຢ່າງທີ່ກ່ຽວກັບການຮັບ ຄຳ,ໄດ້ສຶກສາປະຫວັດແລະສາເຫດທີ່ພາໃຫ້ຮັບຄຳຈາກພາສາອື່ນເຂົ້າມາໃນພາສາຕົນ, ພ້ອມ ດຽວກັນນີ້ ກໍ່ໄດ້ມີການວິໄຈໃນຂັ້ນພື້ນຖານຕໍ່ການປ່ຽນແປງໃນຄຳທີ່ຮັບມາ ທັງສາມາດຮວບ ຮວມຄຳ ທີ່ຮັບມາຈາກພາສາຕ່າງໆໄດ້ຫຼາຍພາສາສົມຄວນ. ເຫັນວ່າການສຶກສານີ້ຈະມີຄຸນຄ່າ ຢ່າງຫຼວງຫຼາຍຕໍ່ກັບພາສາລາວ, ຈະເປັນເອກະສານສຳຄັນຢ່າງໜຶ່ງກ່ຽວກັບພາສາລາວເພື່ອໃຊ້ ຄົ້ນຄວ້າ,ສິ່ງເສີມຄວາມຮູ້ຫຼາຍປະການກ່ຽວກັບພາສາ, ໂດຍສະເພາະໃນແງ່ພາສາກັບສັງຄົມໃຫ້ ແກ່ຜູ້ທີ່ສົນໃຈໂດຍທົ່ວໄປ. ໂອກາດນີ້ຂໍສະແດງຄວາມຊົມເຊີຍຕໍ່ ການອອກແຮງ, ຕໍ່ຄວາມ ພະຍະຍາມຂອງຜູ້ຄົ້ນຄວ້າ ທີ່ສາມາດສ້າງຜົນງານເຊັ່ນນີ້ອອກມາ ຢ່າງສຳເລັດຜົນ ແລະຫວັງ ວ່າພາຍໜ້າ ຈະມີຜົນງານອັນໃໝ່ເພີ່ມໃຫ້ແກ່ວົງການຄົ້ນຄວ້າພາສາລາວ.

ສະຖາບັນຄົ້ນຄວ້າພາສາສາດ

ອາລຳພະບິດ

ຂ້າພະເຈົ້າມີຄວາມຄິດທີ່ຢາກເກັບກຳ, ຄົ້ນຄວ້າຄຳລາວທີ່ຮັບຈາກພາສາອື່ນນັ້ນໄດ້ເລີ່ມມາແຕ່ປີ 1994 ເຊິ່ງເປັນປີທີ່ຂ້າພະເຈົ້າໄດ້ເລີ່ມຄົ້ນຄ້ວາເລື່ອງການພົວພັນລະຫວ່າງພາສາຕ່າງໆ ໃນການພົວພັນັ້ນພາໃຫ້ຮັບເອົາຄຳອັນທີ່ຕ້ອງການເຂົ້າໄປໃຊ້ ແລະ ໃນປີນັ້ນກໍ່ແມ່ນໄລຍະທີ່ຂ້າພະເຈົ້າໄດ້ຮ່ວມເຮັດວັດຈະນານຸກົມພາສາຂະມຸ-ລາວເປັນທີ່ສຳເລັດເຊິ່ງໄດ້ໃຫ້ເຫັນວ່າ ຄຳທີ່ລາວຮັບຈາກພາສານີ້ກໍ່ມີຊຸມໜຶ່ງ. ແຕ່ຜ່ານມາຄົງບໍ່ມີໃຜໄດ້ເກັບກຳເທື່ອເພາະການສຶກສາພາສາເຊິ່ງປະຫວັດນັ້ນ ຜ່ານມາໃນລາວບໍ່ທັນປະກົດ. ເຖິງປີ 1998 ຄວາມຄິດທີ່ຢາກສຶກສາເລື່ອງຄຳຢືມໃນພາສາລາວຍິ່ງເພີ່ມຂຶ້ນ ແລະ ມີຄວາມຄາດວ່າຈະເຮັດໄດ້ໃນລະດັບໃດໜຶ່ງຢ່າງແນ່ນອນ ເນື່ອງຈາກວ່າຫຼາຍປີທີ່ຂ້າພເຈົ້າໄດ້ໄປສຶກສາຮ່ຳຮຽນຕ່ໍທີ່ຕ່າງປະເທດກໍ່ໄດ້ພົບເອກະສານກ່ຽວກັບທິດສະດີພາສາສາດ, ກ່ຽວກັບການສຶກສາພາສາ ໃນນັ້ນກໍມີທັງທິດສະດີ,ທັງປຶ້ມກ່ຽວກັບຄຳຢືມໃນພາສາຕ່າງໆ. ດ້ວຍຄວາມຄິດຢາກຄົ້ນຄວ້າໄດ້ມີຕ່ໍເນື່ອງມາຫຼາຍປີ ໃນໂອກາດທີ່ພົບເອກະສານອັນທີ່ຈະເປັນຕົວຈະປະກອບແກ່ການຄົ້ນຄວ້ານີ້ ຂ້າພະເຈົ້າກໍ່ເລີ່ມເກັບກຳໃນທີ່ສຸດກໍ່ໄດ້ຈຳນວນໜຶ່ງທີ່ສາມາດໃຊ້ອ່ານປະກອບຄວາມຮູ້ທາງທິດສະດີ, ໃຫ້ປະໂຫຍດແກ່ການສ້າງແງ່ຄິດສຳລັບການຄົ້ນຄວ້າ, ການຂຽນ.

ການຄົ້ນຄວ້າໄດ້ເລີ່ມເຮັດໃນປີ 2002 ເຊິ່ງເລີ່ມແຕ່ການວາງໂຄງເລື່ອງບົດ, ການຈັດຫາເອກະສານອັນທີ່ກ່ຽວຂ້ອງສະເພາະ, ກວດກາຂໍ້ມູນທີ່ຈະໃຊ້ຂຽນໃນແຕ່ລະພາກວ່າມີຂໍ້ມູນທີ່ຈະໃຊ້ໄດ້ແລ້ວມີສ່ຳໃດ, ຂໍ້ມູນໃດຂາດ ແລະ ຕ້ອງການຂໍ້ມູນໃໝ່ອັນໃດ. ການຄົ້ນຄວ້ານອກຈາກຕ້ອງມີຄວາມຮູ້ແລ້ວແມ່ນຍັງຕ້ອງການເວລາ, ຕ້ອງການຄວາມຕັ້ງໃຈ ແລະ ຕ້ອງການສິ່ງສະໜັບສະໜູນຄື ທຶນສຳລັບ ຈັດຫາເຄື່ອງມື,ໃຊ້ເຄືອນໄຫວ, ການດຳເນີນງານ, ການຂຽນ ແລະ ການພິມເຊິ່ງຖືເປັນປັດໄຈສູ່ຄວາມສຳເລັດແກ່ນການຄົ້ນຄວ້າ.

ໃນສ່ວນສະໜັບສະໜູນນີ້ ຂ້າພະເຈົ້າ ກໍ່ໄດ້ຮັບຈາກການຊ່ວຍເຫຼືອຂອງ ມູນນິທິໂຕໂຢຕາ ແຫ່ງປະເທດຍີ່ປຸ່ນ ເຊິ່ງເປັນທຶນສຳລັບໃຊ້ຈັດຫາເຄື່ອງມື, ການໄປເກັບກຳຂໍ້ມູນ, ການຕີພິມ ແລະ ການພິມເປັນປຶ້ມ. ດ້ວຍທຶນຊ່ວຍເຫຼືອນີ້ ຂ້າພະເຈົ້າກໍ່ໄດ້ດຳເນີນການຄົ້ນຄວ້າດ້ວຍຄວາມເອົາໃຈໃສ່ ແລະ ວາງຄາດໝາຍຂອງຄວາມສຳເລັດເອົາໄວ້ໃຫ້ທັນຕາມກຳນົດທັງໃຫ້ສິ່ງທີ່ຄົ້ນຄວ້າສາມາດບັນລຸຄຸນນະພາບອັນດີທັງ ໃຫ້ຄ່າແກ່ສັງຄົມ.

ຜ່ານການປະຕິບັດ ຂ້າພະເຈົ້າກໍ່ປະສົບຫຼາຍຢ່າງທີ່ເປັນຄວາມລຳບາກ, ອັນອ່ຳອ ສະດວກ ແລະ ເປັນຄວາມຮູ້ອັນໃໝ່. ຄວາມຮູ້ອັນໃໝ່ນັ້ນແມ່ນໄດ້ແກ່ຄວາມຮູ້ຕໍ່ຄວາມເປັນມາຂອງ ການຮັບຄຳຈາກພາສາຕ່າງໆມາສູ່ພາສາລາວ, ໃນພາສາລາວມີຄຳຮັບມາຈາກຫຼາຍພາສາ ແລະ ຮັບໃນທຸກຍຸກ, ໃນການຮັບນັ້ນມີການຮັບທີ່ເປັນຄຳ ແລະ ບາງອັນກໍ່ຮັບເອົາພຽງຈິດສຳນຶກ (Concept) ແລ້ວມາຫາເອົາຄຳທີ່ມີແລ້ວໃນພາສາລາວສ້າງໃຫ້ກໍ່ມີ, ນອກນີ້ ຫາກເບິ່ງດ້ານສັງຄົມຂອງພາສາກໍ່ຈະເຫັນວ່າຄັງຄຳໃນພາສາລາວແມ່ນມີຄຳຈາກຫຼາຍຕະກູນພາສາທີ່ມາຮ່ວມໃຊ້ໃນພາສາລາວ,ເປັນຄຳຂອງພາສາລາວ ເຊິ່ງກໍ່ປຽບຄືກັບຊາດໜຶ່ງ ສັງຄົມໜຶ່ງທີ່ປະກອບມີຫຼາຍເຜົ່າຢູ່ນຳກັນ, ບັນດາຄຳທີ່ຮັບມາ ແລະ ຄຳເດີມຂອງພາສາລາວຕ່າງກໍ່ໄດ້ຮັບການໃຊ້ຕາມພາລະ ແລະ ກໍ່ປ່ຽນແປງໄປຕາມຂະບວນການວິວັດຂອງສັງຄົມ, ພາໃຫ້ບາງຄຳໄດ້ຮັບການນຳໃຊ້ຫຼາຍທັ່ງຂະຫຍາຍໄປນຳໃຊ້ໃນທາງວັນນະຄະດີ, ທາງສຳນວນ ຈົນອຸດົມສົມບູນ ແຕ່ບາງຄຳກໍ່ໄດ້ຖືການນຳໃຊ້ໜ້ອຍເຂົ້າ, ປ່ຽນແປງຄວາມໝາຍໄປ ຫຼື ພວມຈະສູນຫາຍໄປ ນີ້ຄືຂະບວນທາງສັງຄົມຂອງພາສາມັນກໍ່ມີການເໜັງຕີງ ແລະ ສູນຫາຍເຊັ່ນກັນກັບວັດຖຸ.ແຕ່ສິ່ງສຳຄັນໃນນີ້ຍັງເຫັນວ່າ ຄຳທີ່ຮັບຈາກພາສາອື່ນຈະເປັນພາສາໃດໆກໍ່ຕາມ ເມື່ອເຂົ້າມາສູ່ພາສາລາວກໍ່ໄດ້ເກີດການປັບ ຫຼື ແປງ ບໍ່ແມ່ນອັນໃດກໍ່ອັນໜຶ່ງເຊັ່ນ ໂຄງສ້າງ, ຮູບຄຳ, ສຽງຂອງຄຳ, ວັນນະຍຸດ ຫຼື ຕົວສະກົດ, ເມື່ອເຫັນແນວນີ້ ຂ້າພະເຈົ້າຈຶ່ງໄດ້ທຳການສຶກສາເບິ່ງການປັບ ຫຼື ແປງນັ້ນເພື່ອໃຫ້ເຫັນວ່າມັນມີກໍລະນີໃດແດ່ ເຖິງຈະບໍ່ເນັ້ນວ່າໃຫ້ໄຄວ່ທຸກຄຳແຕ່ກໍ່ໃຫ້ເຖິງຊຸມຄຳທີ່ຮັບມາເປັນໝວດຈາກພາສາໃດທີ່ເຫັນວ່າລາວມີການຮັບຄຳຫຼາຍ.

ສຳລັບຄວາມລຳບາກທີ່ວ່າໄດ້ພົບນັ້ນແມ່ນມີຫຼາຍປະການ ເນື່ອງຈາກວ່າເປັນການຄົ້ນຄວ້າໃນເບື້ອງຕົ້ນ ໃນເລື່ອງທີ່ບໍ່ທັນມີໃຜວາງພື້ນໄວ້ເປັນເອກະສານມາກ່ອນ . ແຕ່ການຄົ້ນຄວ້າພັດມຸ່ງໃຫ້ຜູ່ອ່ານເຂົ້າໃຈຢ່າງເປັນລະບົບ, ເຂົ້າໃຈເຖິງການພົວພັນລະຫວ່າງ ເນື້ອໃນຂອງພາກຕ່າງໆ. ຂ້າພະເຈົ້າ ຈຶ່ງໄດ້ຂຽນຫຼາຍເລື່ອງທີ່ເຫັນວ່າ ຈະເປັນເນື້ອໃນສຳລັບ ຈະໃຫ້ພູມຄວາມຮູ້ເລື່ອງການຮັບຄຳ ມາໄວ້ໃນປຶ້ມອັນນີ້.ສະນັ້ນພາໃຫ້ມີຄວາມອ່າວຍາວໃນບາງພາກ. ນອກນັ້ນ ບາງເລື່ອງຄືບໍ່ສົມຄວນນຳມາສະເໜີ ແຕ່ກໍ່ຕ້ອງນຳມາສະເໜີ ເພາະວ່າຄວາມຮູ້ຊຸມນັ້ນໃນລາວເຮົາບໍ່ທັນມີປຶ້ມໃດຊິເປັນຕົວຊ່ວຍທີ່ແທ້ຈິງ, ຫາກບໍ່ນຳມາຂຽນໃນນີ້ນຳກັນ ແມ່ນອນຄວາມຮູ້ຕໍ່ສິ່ງຊຸມນັ້ນກໍ່ຈະບໍ່ມາສູ່ ແລ້ວ ຊ່ອງຫວ່າງກໍ່ຈະມີຫຼາຍໆບ່ອນຈົນຕະຫຼອດແນວຂອງເລື່ອງທີ່ຄົ້ນຄວ້າ, ເມື່ອຂຽນຫຼາຍເລື່ອງກໍ່ຕ້ອງການຄວາມອົດທົນ ເຊິ່ງຕ້ອງຢືມເວລາຄ່ຳ, ເວລາເດິກມາຊ່ວຍໃນບາງໂອກາດ. ນອກນັ້ນ ການຂຽນ, ຕີພິມເຊິ່ງໃຊ້ອັກສອນຫຼາຍຂະນິດກໍ່ແມ່ນອຸປະສັກໜຶ່ງທີ່ໄດ້ພົບທັງໄດ້ແກ້ຫຼາຍຫົນແຕ່ກໍ່ຍັງສ່ຽງຕໍ່ຄວາມພາດພັ້ງຢູ່ໃນຫຼາຍອັນ.

ສຳລັບເອກະສານ, ຂໍ້ມູນທີ່ໄດ້ໃຊ້ໃນນີ້ແມ່ນໄດ້ຮັບມາຈາກປຶ້ມຫຼາຍເຫຼັ້ມທີ່ເປັນພາສາອັງກິດ ແລະ ຈຳນວນໜຶ່ງເປັນພາສາໄທແລະພາສາລາວໜ້ອຍໜຶ່ງ, ຂໍ້ມູນຄຳສັບນັ້ນແຫຼ່ງສຳຄັນແມ່ນໄດ້ຮວບຮວມຈາກປຶ້ມວິຊາການກ່ຽວກັບຄຳຢືມທີ່ເປັນພາສາຕ່າງປະເທດ, ຈາກວັດຈະນານຸກົມເຫຼັ້ມຕ່າງໆເຊັ່ນ ວັດຈະນານຸກົມພາສາຂະແມ-ຣັດເຊຍ, ວັດຈະນາວິທະຍາພາສາມົງໂກນ, ວັດຈະນານຸກົມຣັດເຊຍ-ຝຣັ່ງ, ວັດຈະນານຸກົມພາສາຂະແມ-ລາວ, ວັດຈະນານຸກົມພາສາຈາມ-ຝຣັ່ງ, ວັດຈະນານຸກົມ 12 ພາສາ, ວັດຈະນານຸກົມລາວ-ຝຣັ່ງທັງເຫຼັ້ມ 1 ແລະ 2, ວັດຈະນານຸກົມລາວ-ໄທ-ອັງກິດ, ປຶ້ມພາສາສັນສະກິດໃນພາສາໄທ, ປຶ້ມພາສາຕ່າງປະເທດໃນພາສາໄທ ແລະອື່ນໆດັ່ງທີ່ນຳມາສະເໜີໃນພາກເອກະສານອ້າງອີງຂອງປຶ້ມນີ້ ພ້ອມນັ້ນກໍ່ໄດ້ຂໍ້ມູນໃໝ່ຈາກການໄປເກັບກຳຄຳສັບໃນທ້ອງຖິ່ນບາງຖິ່ນ ເຊິ່ງກໍ່ໄດ້ນຳມາປະກອບໃນການຄົ້ນຄວ້ານີ້.

ຜົນສຳເລັດເຊັ່ນນີ້ໄດ້ມີຂຶ້ນ ຂ້າພະເຈົ້າກໍ່ບໍ່ລືມຕໍ່ການສະໜັບສະໜູນທີ່ມີປະໂຫຍດຂອງມູນນິທິໂຕໂຢຕາ ແຫ່ງປະເທດຍີ່ປຸ່ນ ແລະ ຮູ້ບຸນຄຸນຕໍ່ກັບທ່ານຜູ້ທີ່ໄດ້ໃຫ້ການອຸ້ມຊູທັງຕິດຕາມຢ່າງໃກ້ຊິດຄືທ່ານ Reiko Ogawa, ພ້ອມນັ້ນກໍ່ມີທ່ານ Shiro Honda ເຊິ່ງຊ່ວຍຈັດການແກ່ການພິມປຶ້ມ. ໃນໂອກາດນີ້ ຂ້າພະເຈົ້າຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງທ່ານປະ

ທານມູນນິທິ ໂຕໂຍຕາ ພ້ອມດ້ວຍທຸກທ່ານທີ່ໄດ້ໃຫ້ຄຳເຫັນ ການແນະນຳອັນມີປະໂຫຍດຕໍ່ກັບເນື້ອໃນຂອງການຄົ້ນຄວ້າທັງໝົດໃນປຶ້ມນີ້, ຂໍອວຍພອນໃຫ້ພວກທ່ານຈົ່ງປະສົບແຕ່ຄວາມສຳເລັດໃນການງານ ແລະ ຄວາມຫວັງທຸກຢ່າງ. ຂ້າພະເຈົ້າກໍ່ຍັງຈະບໍ່ໃຫ້ການຄົ້ນຄວ້າຂອງຕົນຢຸດເຊົາພຽງເທົ່ານີ້ ແລະ ການຊ່ວຍເຫຼືອຂອງພວກທ່ານນັ້ນກໍ່ຍັງເປັນຄວາມຕ້ອງການທີ່ຈະໃຫ້ການຄົ້ນຄວ້າຂອງຂ້າພະເຈົ້າໄດ້ເກີດຜົນອັນໃໝ່ແລະທັງກວ້າງຂວາງອອກໃນພາຍໜ້າ. ສິ່ງຜິດຂໍ້ພາດທີ່ທ່ານຫາກພົບເຫັນໃນການຄົ້ນຄວ້ານີ້ກໍ່ຍິນດີໃຫ້ຮັບຊາບ ແລະ ຈະຖືເປັນບົດຮຽນເພື່ອປັບແປງໃນຂັ້ນຕໍ່ໄປ.

ຜູ້ຄົ້ນຄວ້າ: ສົມແສງ ໄຊຍະວົງ

ຂໍຂອບໃຈ

ສາລະບານ

ຄວາມເປັນມາ ແລະ ຄວາມສຳຄັນຂອງເລື່ອງທີ່ຄົ້ນຄວ້າ..... 1

ຈຸດປະສົງຂອງການຄົ້ນຄວ້າ 4

ເປົ້າໝາຍຂອງການຄົ້ນຄວ້າ. 4

I. ການຢືມຄຳ. 5

1. ຄວາມໝາຍຂອງຄຳວ່າ ການຢືມຄຳ..... 5

2. ສາເຫດການຢືມຄຳ 6

1). ການຢືມເນື່ອງຈາກວັດທະນະທຳ (Cultural borrowing)..... 6

2). ການຢືມເນື່ອງຈາກຄວາມໃກ້ຊິດ (Intimate borrowing). 7

3). ການຢືມຄຳເພາະຄວາມຕ່າງຖິ່ນ (Dialect borrowing)..... 7

II. ສະພາບ ແລະ ຜົນຈາກພາຍນອກທີ່ມີຕໍ່ການຢືມຄຳ 8

1. ສະພາບດ້ານປະຫວັດສາດ..... 8

2. ອິດທິພົນທາງດ້ານຕ່າງໆ 9

1). ອິດທິພົນທາງສາສະໜາ. 9

2). ອິດທິພົນຈາກພາສາຄົນກຸ່ມໃຫຍ່. 10

3. ຜົນສະທ້ອນຈາກພາຍນອກ 11

1). ຜົນສະທ້ອນຈາກການສຶກສາ 11

2). ຜົນສະທ້ອນຈາກຄວາມຈະເລີນຂອງເທັກໂນໂລຢີ 11

3). ຜົນສະທ້ອນດ້ານທຸລະກິດ, ການພົວພັນລະຫວ່າງຊາດ 12

4). ຜົນສະທ້ອນດ້ານການບັນເທີງ..... 12

III. ການສົ່ງຜົນຈາກຄຳທີ່ຢືມສູ່ພາສາ, ຄຳຢືມໃນບາງພາສາ 15

1. ຜົນສະທ້ອນຕໍ່ດ້ານຕ່າງໆ..... 15

1) ຜົນສະທ້ອນທີ່ມີຕໍ່ດ້ານສຽງ 16

2) ຜົນສະທ້ອນທີ່ມີຕໍ່ວິງຄຳສັບ..... 17

3) ຜົນສະທ້ອນທີ່ມີຕໍ່ວິງຄວາມໝາຍ. 18
4) ຜົນສະທ້ອນທີ່ມີຕໍ່ການລຽງຄຳ 18
2. ການຢືມຄຳໃນບາງພາສາ 19
IV. ການຈຳແນກພາສາ..... 20
I. ພາສາຊະນິດຄຳໂດດ (Isolating language) 21
2. ພາສາຊະນິດທີ່ມີວິພັດ ປັດໄຈ (Inflectional language)..... 22
3. ພາສາຊະນິດຄຳຕິດ (Agglutinative language) 22
4. ພາສາຊະນິດຫຼາຍພະຍາງໃນຄຳ (Incorporative language)..... 23
5. ການຈັດຊະນິດພາສາແບບອື່ນໆ..... 24
1). ພາສາຕະກູນອິນດູ - ຢູຣົບ (Indo European)..... 28
2). ພາສາຕະກູນ ເຮມີໂຕ - ເສມີຕິກ (Hemito Semitic)..... 28
3). ພາສາຕະກຸນ ຈີນ-ຕິເບດ (Sino Tibeton)..... 29
4). ພາສາຕະກູນໄຕ (Tai)..... 29
5). ພາສາຕະກູນ ມອນ - ຂະແມ (Mon-Khmer) 29
6). ພາສາຕະກູນ ອິສໂຕຣ- ເອເຊຍຕິກ (Austro Asiatic) 30
7). ພາສາຕະກູນ ດຣາວິດຽນ: (Dravidian) 30
8). ພາສາຕະກູນ ປາປວນ (Papuan)..... 30
9). ພາສາຕະກູນ ນີເກຍ ກົງໂກ (Niger Congo) 31
10). ພາສາຕະກຸນອື່ນໆ 31
6. ການຈັດແບ່ງກຸ່ມໃນພາສາຕະກຸນໄຕ. 31
7. ລະດັບຂອງຄວາມສຳພັນລະຫວ່າງພາສາ 35
1). ລະດັບຊັ້ນເລິກ (Substratum) 35
2). ລະດັບຊັ້ນຜິວ (Super stratum)..... 36
3). ລະດັບຊັ້ນໃກ້ຄຽງ (Adstratum) 38

24/VII
ทองเอกพาย

V. ຄວາມຮູ້ບາງປະການກ່ຽວກັບພາສາລາວ 39
1. ຄວາມເປັນມາ 39
2. ຕົ້ນກຳເນີດ 39
3. ການສຶກສາບາງຢ່າງກ່ຽວກັບພາສາລາວ 40
4. ລັກສະນະທົ່ວໄປຂອງພາສາລາວ 40
1). ຕົວພະຍັນຊະນະພາສາລາວ 41
2) ການຈັດໝວດຕົວອັກສອນຂອງພາສາລາວ 42
3). ພະຍັນຊະນະຄວບ 44
4). ສະຫຼະ 45
5). ສະຫຼະປະສົມ 46
6). ສຽງວັນນະຍຸດໃນພາສາລາວ 46
7). ລັກສະນະຂອງຄຳ 47
VI. ກ່ຽວກັບຊະນິດຄຳຢືມ, ການແປງຄຳ, ວິທີ ແລະ ແບບການຮັບຄຳມາໃນພາສາລາວ 49
1. ກ່ຽວກັບຊະນິດຄຳ 49
2. ວິທີ ແລະ ແບບການຮັບຄຳ 51
1). ຄຳທີ່ຢືມແບບທັບສັບ (loan word) 53
2). ຄຳທີ່ຢືມແບບດຶງເຂົ້າຄວາມ 54
3). ການທີ່ຢືມດ້ວຍການແປ (Calquing) 55
4) ການຢືມພຽງຄວາມໝາຍ (Semantic borrowing) 56
3. ການແປງຄຳຢືມ 57
1). ການແປງສຽງ 58
2). ການແປງສຽງພະຍັນຊະນະ ຫຼື ສະຫຼະ 59
3). ການເພີ່ມ (adding) 59
4). ການແປງຕົວສະກົດ 61

5). ການແປງສຽງສະຫຼະ..... 61
5. ການປ່ຽນແປງທາງຄວາມໝາຍ..... 62
VII. ການຮັບຄຳຈາກພາສາຕ່າງໆ..... 66
1. ການຮັບຄຳຈາກພາສາຈີນ..... 66
1). ກ່າວສັງເຂບກ່ຽວກັບອະລິຍະທຳບູຮານຂອງຈີນ. 66
2). ຄວາມສຳພັນລະຫວ່າງຊົນຊາດລາວກັບຈີນ. 68
3). ລັກສະນະບາງຢ່າງຂອງພາສາຈີນ..... 70
4). ການຮິບໂຮມຄຳທີ່ຮັບມາຈາກພາສາຈີນ..... 72
2. ການຮັບຄຳຈາກພາສາມອນ 76
1) ສະເໜີກ່ຽວກັບມອນໂດຍຫຍໍ້. 76
2) ລັກສະນະບາງຢ່າງຂອງພາສາມອນ. 77
3. ການຮັບຄຳຈາກພາສາຂະແມ 81
1) ຄວາມເປັນມາຂອງຄວາມສຳພັນລະຫວ່າງລາວກັບຂະແມໂດຍຫຍໍ້. 81
2) ບາງລັກສະນະຂອງພາສາຂະແມ..... 83
3). ການຮັບຄຳຂະແມເຂົ້າມາໃນພາສາລາວ. 89
4. ການຮັບຄຳຈາກ ປາລິ - ສັນສະກິດ 109
1). ກ່ຽວກັບ ປາລິ ແລະ ສັນສະກິດ 109
2). ຄວາມເປັນມາຂອງ ປາລິ ແລະ ສັນສະກິດ..... 111
3). ສະເໜີໂດຍສັງເຂບສາເຫດທີ່ພາໃຫ້ຮັບຄຳປາລິ ແລະ ສັນສະກິດມາໃນພາ ສາລາວ
..... 114
4) ຄວາມແຕກຕ່າງບາງປະການຂອງປາລິ ແລະ ສັນສະກິດ..... 117
5). ການປຽບທຽບຄຳຢືມຈາກປາລິ ແລະ ສັນສະກິດໃນພາສາລາວ 123
6). ການເລືອກໃຊ້ຄຳ ປາລິ ແລະ ສັນສະກິດ. 129
7). ການກາຍຄວາມໝາຍ 131

8). ບັນດາຄຳປາລີທີ່ຮັບມາໃນພາສາລາວ. 134
9). ຄຳສັນສະກິດທີ່ຮັບເຂົ້າມາໃນພາສາລາວ 147
5. ການຮັບຄຳຈາກພາສາຝຣັ່ງ 152
1).ຄວາມເປັນມາໂດຍຫຍໍ້ຂອງການຮັບຄຳຈາກພາສາຝຣັ່ງສູ່ ພາສາລາວ. 152
2). ຜົນສະທ້ອນຈາກການເຂົ້າມາຂອງຄຳພາສາຝຣັ່ງໃນພາສາ ລາວ..... 153
3). ບາງລັກສະນະພາສາຝຣັ່ງ..... 154
4). ຊະນິດຄຳທີ່ຮັບຈາກພາສາຝຣັ່ງສູ່ພາສາລາວ..... 155
6. ການຮັບຄຳຈາກພາສາອັງກິດ..... 159
1). ຄວາມເປັນມາໂດຍຫຍໍ້: ການເຂົ້າມາຂອງພາສາອັງກິດໃນພາສາລາວ. 159
2). ລັກສະນະບາງຢ່າງຂອງພາສາອັງກິດ..... 161
3). ວິທີການຮັບຄຳຂອງພາສາອັງກິດ ມາໃນພາສາລາວ..... 163
4). ການປ່ຽນແປງ ທາງຄວາມໝາຍ ຂອງຄຳທີ່ຮັບຈາກພາສາອັງ ກິດ. 170
5). ບັນດາຄຳທີ່ຮັບຈາກພາສາອັງກິດໃນພາສາລາວ..... 172
7. ການຮັບຄຳຈາກພາສາໄທ..... 186
1). ຄວາມສຳພັນທາງ ພາສາລາວ ແລະ ໄທ 186
2). ຄວາມແຕກຕ່າງ ບາງປະການໃນພາສາລາວ ແລະ ພາສາ ໄທ..... 186
3). ການຮັບຄຳຈາກພາສາໄທມາໃນພາສາລາວ..... 189
4). ຂໍ້ສັງເກດ ຕໍ່ກັບຄຳທີ່ຮັບຈາກພາສາໄທ 190
8. ການຮັບຄຳຈາກພາສາຊວາມະລາຍູ 193
9. ຄຳກຸ່ມຍ່ອຍຈາກພາສາຕ່າງໆ 197
1). ຄຳທີ່ຮັບຈາກພາສາເກຣັກ..... 197
2). ການຮັບຄຳຈາກພາສາລາແຕັ໋ງ..... 198
3). ການຮັບຄຳຈາກພາສາຈາມ 200
4). ການຮັບຄຳຈາກພາສາຂະມຸ 202

5). ການຮັບຄຳຈາກພາສາທະນິນ..... 206
6). ກຸ່ມຄຳທີ່ຊາບແຫຼ່ງທີ່ມາໂດຍກວ້າງໆ..... 209
7). ບັນດາຄຳທີ່ບໍ່ທັນຊາບແຫຼ່ງທີ່ມາ..... 210
ເອກະສານອ້າງອີງ..... 213

ຄວາມເປັນມາ ແລະ ຄວາມສຳຄັນຂອງເລື່ອງທີ່ຄົ້ນຄວ້າ

ພາສາຕ່າງໆທີ່ຖືວ່າເປັນພາສາທີ່ມີຊີວິດ ມີການໃຊ້ຕິດຕໍ່ສື່ສານກັນຢູ່ໃນສັງຄົມນັ້ນຄົງບໍ່ມີພາສາໃດທີ່ມີພຽງຄຳພື້ນຖານຂອງພາສາຕົນເທົ່ານັ້ນ.ພາສາຕ່າງໆລ້ວນແຕ່ມີຄວາມສຳພັນກັນດ້ວຍການມີຕົ້ນກຳເນີດອັນດຽວກັນຫຼືດ້ວຍຄວາມໃກ້ຊິດກ່ຽວຂ້ອງກັນໃນລັກສະນະ ແລະ ຮູບແບບໃດໜຶ່ງ.

ພາສາລາວເປັນພາສາໜຶ່ງທີ່ມີປະຫວັດການກຳເນີດອັນດົນນານ, ໄດ້ຮັບການຂະຫຍາຍຕົວດ້ານປະລິມານຂອງຄຳສັບ ແລະ ການໃຊ້ຄຳສ້າງຖ້ອຍຄຳ, ສຳນວນເລື້ອຍມາ, ພາສາລາວມີຄຳຢ່າງອຸດົມສົມບູນ ເຊິ່ງຄວາມອຸດົມສົມບູນນີ້ໄດ້ເກີດຂຶ້ນເພາະມີການເສີມສ້າງ, ປົກປັກ ແລະ ນຳໃຊ້. ການເສີມສ້າງອັນປະກົດເປັນທີ່ເດັ່ນຊັດຢ່າງໜຶ່ງນັ້ນຄື: ການສ້າງຄຳໂດຍວິທີແຜງສຽງ, ແປງສຽງໃນຄຳພາໃຫ້ເກີດເປັນຄຳໃໝ່ຂຶ້ນ ແລະ ວິທີນຳຄຳມາປະກອບກັນເຂົ້າໃຫ້ເປັນຄຳໃໝ່, ໃນຂະບວນການອັນນີ້ ກໍ່ມີການຮັບເອົາຄຳອັນທີ່ຈຳເປັນຈາກພາສາອື່ນເຂົ້າມາເພີ່ມຕາມແຕ່ສະໄໝທີ່ຕ້ອງການສຳລັບສື່ສານສຳພັນກັນ. ສຳລັບການປົກປັກນັ້ນຈະເຫັນໄດ້ຈາກລະບົບຄຳທີ່ມີໃນພາສາລາວຄື: ຄຳພື້ນຖານຕ່າງໆເຊິ່ງແມ່ນຄຳເດົ້າຄຳກົກແຫ່ງພາສາລາວກໍ່ຍັງຮັກສາ ແລະ ໃຊ້ມາຢ່າງສະເໝີຫັ້ງໃຫ້ຖານະວ່າເປັນຄຳທີ່ສຳຄັນເປັນເອກະລັກຂອງຊາດ, ພ້ອມນີ້ຄຳໃດໆທີ່ມີໃນພາສາລາວຈະເປັນຄຳເດົ້າ ຫຼື ຄຳທີ່ຮັບມາຈາກພາສາອື່ນແຕ່ຄາວໃດໆເມື່ອມາເຂົ້າຢູ່ໃນພາສາລາວແລ້ວກໍ່ຈະຮັບວ່າເປັນຄຳຂອງພາສາລາວ. ຄຳຕ່າງໆນີ້ຈະໄດ້ຮັບການນຳໃຊ້ຕາມລະບົບສຽງ, ລະບົບຄວາມໝາຍ, ລະບົບໄວຍາກອນ ແລະ ມັນໄດ້ມີພາລະກຳຄືກັບຄຳທົ່ວໄປທີ່ມີໃນລະບົບສັງຄົມພາສາລາວຈຶ່ງຖືວ່າປັນຄຳລາວ, ເປັນສົມບັດແຫ່ງພາສາລາວ ເມື່ອມີການໃຊ້ ສົມຄວນໃຊ້ ແລະ ຫຼົງຫາອັນເປັນສົມບັດນີ້ກ່ອນ; ຫາກມີການຈະຮັບຄຳອື່ນເຂົ້າມາເພີ່ມກໍ່ຄວນຄຳນຶງກ່ອນວ່າຈະມາເພີ່ມຫຼື ທຳລາຍຊັບສົມບັດທາງພາສາອັນນີ້. ການປົກປັກຮັກສາເອກະລັກທາງພາສາຕ້ອງດຳເນີນ

ໄປຄຽງຄູ່ກັບການຄົ້ນຄວ້າ, ດ້ວຍການຄົ້ນ ຄວ້າຈະພາໃຫ້ຮູ້ທີ່ມາ, ການເຄື່ອນໄຫວ, ການປ່ຽນ ແປງ, ຮູ້ພາລະ ແລະ ຄວາມສຳຄັນຂອງມັນ. ໃນຜ່ານມາພາສາລາວໄດ້ຮັບໂອກາດ ແລະ ສິ່ງທີ່ ໄດ້ຮັບການຄົ້ນຄວ້າຍັງມີໜ້ອຍ, ການຄົ້ນຄວ້າໃນທາງເລິກກໍ່ຍັງມີສິ່ງຈຳກັດອັນເນື່ອງມາຈາກ ນັກວິຊາການທາງດ້ານສາດແຫ່ງພາສາມີ ໜ້ອຍ.

ການຄົ້ນຄວ້າການຢືມຄຳໃນພາສາລາວນີ້ ເປົ້າໝາຍຕົ້ນຕໍທີ່ຕັ້ງໄວ້ແມ່ນເພື່ອໃຫ້ຮູ້ຂະ ບວນການຂອງການຮັບເອົາຄຳຈາກພາສາອື່ນມາສູ່ພາສາລາວ; ໃນນັ້ນຈະໄດ້ຮູ້ເຖິງສາເຫດທີ່ ພາໃຫ້ເກີດການຮັບເອົາຄຳອັນລວມມີສາເຫດດ້ານພູມສາດ, ປະຫວັດສາດ, ຄວາມສຳພັນທາງ ເສດຖະກິດ, ວັດທະນະທຳ, ວິທະຍາສາດ ແລະ ອື່ນໆ. ໃນຂະບວນການຮັບຄຳນັ້ນກໍ່ຄືງມີການ ຮັບເປັນແຕ່ລະສະໄໝ, ມີການຮັບເປັນກຸ່ມເປັນໝວດ ຫຼື ບໍ່ເປັນກຸ່ມເປັນໝວດ. ສະໄໝຂອງ ການຮັບຄຳກັບຈຳນວນຄຳ, ຊະນິດຄຳທີ່ຮັບນັ້ນຈະເປັນການສ່ໃຫ້ຮູ້ເຖິງປະຫວັດສາດແຫ່ງການ ພົວພັນຂອງຊົນຊາດລາວກັບຊົນຊາດອື່ນວ່າມີແນວໃດ, ດົນສ່ຳໃດ, ນອກນີ້ກໍ່ໃຫ້ຮູ້ລະດັບຂອງ ຂະບວນການຮັບຄຳ ຂະບວນການນີ້ມີຄວາມສຳຄັນຕໍ່ການຄົ້ນຄວ້າປະຫວັດສາດລາວ. ສຳລັບ ການຄົ້ນຄວ້າການປ່ຽນແປງຂອງຄຳທີ່ຮັບມານັ້ນ ເປັນການຄົ້ນຄວ້າໃຫ້ເຫັນກົດແຫ່ງການປ່ຽນ ແປງເຊິ່ງຈຳຕ້ອງເກີດກັບຄຳທີ່ຮັບມາ, ຄຳໃດກໍ່ຕາມເມື່ອຖືກຮັບໄປສູ່ພາສາໃດກໍ່ຕ້ອງມີການປັບ ປ່ຽນຕົວໃຫ້ເຂົ້າກັບລະບົບຂອງພາສານັ້ນ ໃນລະບົບທີ່ວ່ານີ້ລວມມີລະບົບສຽງ, ລະບົບໂຄງ ສ້າງຄຳ, ລະບົບຄວາມໝາຍເປັນສຳຄັນ, ຄຳທີ່ຮັບມາເມື່ອເກີດການປ່ຽນແປງບາງຄຳກໍ່ຈະປ່ຽນ ໄປຈາກເດີມຈົນເກີດຄວາມເໝືອນກັບຄຳພື້ນຖານໃນພາສາຕົນກໍ່ພົບເຫັນມີຫຼາຍໆຄຳ. ສະນັ້ນ ການຄົ້ນຄວ້າການຢືມຄຳກໍ່ມີຄວາມຍາກໃນຫຼາຍເລື່ອງ ການຈະຄົ້ນໃຫ້ຮູ້ຄຳທີ່ຮັບມາທຸກຄຳ ແລະ ສາມາດເກັບກຳຈຳນວນຄຳທີ່ຮັບມາທັ້ງໝົດໃຫ້ໄດ້ນັ້ນເປັນເລື່ອງລຳບາກເຖິງຈະໃຊ້ ຄວາມພະຍາຍາມຫຼາຍເທົ່າໃດຜົນສຳເລັດທີ່ໄດ້ໃນຄວາມພະຍາຍາມນີ້ກໍ່ຄືງໃຫ້ຄວາມເຕັມຂີດ ບໍ່ໄດ້. ການຄົ້ນຄວ້ານີ້ຄືງຈະນຳປະໂຫຍດສຳລັບການຮຽບໂຮມບັນດາຄຳທີ່ລາວເຮົາຮັບມາຈາກ ພາສາຕ່າງໆໄດ້ໃນຈຳນວນທີ່ຫຼາຍພໍຄວນ; ການຮູ້ວ່າຄຳໃດເປັນຄຳທີ່ຮັບມານັ້ນຈະເປັນການ ຊ່ວຍໃຫ້ຜູ້ທີ່ສຶກສາຄົ້ນຄວ້າເລື່ອງຄຳ, ລະບົບຄວາມໝາຍ, ໄວຍາກອນລາວໄດ້ນຳໄປເລືອກ ຄຳທີ່ຖືກເພື່ອໃຊ້ໃນການຄົ້ນຄວ້າຂອງຕົນໄດ້ສະດວກຂຶ້ນ.

ການສຶກສາການຢືມຄຳຍັງຈະສາມາດນຳໄປເປັນຂໍ້ມູນສຳລັບຄົ້ນຄວ້າອະລິຍະທຳ, ບູຮານນະຄະດີຂອງລາວ ແຕ່ລະສະໄໝຈາກແຕ່ຄາວກ່ອນກົ້ມາ. ທັງນີ້ກໍ່ເພາະວ່າ ຄຳທີ່ເຮົາຮັບມາຈາກພາສາອື່ນນັ້ນ ໃນດ້ານໜຶ່ງໄດ້ຖືວ່າ ຍ້ອນຄວາມຂາດເຂີນ ຄວາມທີ່ເຮົາບໍ່ມີໃນຍຸກສະໄໝນັ້ນ, ຄຳທີ່ຮັບຈາກພາສາຕ່າງໆໄດ້ສະແດງເຖິງອັນທີ່ເຮົາມີຄວາມຕ້ອງການ ແລະ ໄດ້ຮັບຈາກພາສານັ້ນໆ ບັນດາຄຳທີ່ຮັບມາທັງໝົດໄດ້ມີຄ່າສະແດງເຖິງສິ່ງທີ່ເຮົາຂາດ, ສິ່ງທີ່ເຮົາຕ້ອງການໃນສິ່ງນັ້ນໆ ເຊັ່ນກັນ. ສະນັ້ນ ການສຶກສາການຮັບຄຳຈາກພາສາອື່ນຈຶ່ງມີຄວາມໝາຍຫຼາຍຢ່າງ, ຈະໃຫ້ຄຸນປະໂຫຍດຕໍ່ສັງຄົມ ແລະ ວັດທະນະທຳໃນທາງເລິກອີກດ້ວຍ, ກ່ຽວກັບການຮັບຄຳຈາກພາສາອື່ນມາສູ່ພາສາລາວ ນັບວ່າເປັນຄັ້ງທຳອິດທີ່ໄດ້ຮັບການສຶກສາໃຫ້ເກີດເປັນບົດເປັນບັ້ນອອກມາສຳລັບການສຶກສາ ແລະ ນຳມາຮວບຮວມເປັນປຶ້ມນີ້ໄດ້ໃຊ້ເວລາເກືອບສອງປີ, ສິ່ງທີ່ສາມາດເຮັດໄດ້ກໍ່ມີຫຼາຍຢ່າງ ເຊັ່ນ: ຮຶບໂຮມກ່ຽວກັບຄຳຢືມໄດ້ເປັນຈຳນວນຫຼາຍ, ສາມາດຫາທີ່ມາຂອງຄຳໄດ້ຫຼາຍໆຄຳ, ໄດ້ສຶກສາສາເຫດທີ່ພາໃຫ້ຮັບຄຳ, ການປ່ຽນແປງໃນດ້ານຕ່າງໆຂອງຄຳທີ່ໄດ້ຮັບມາໃນລະບົບພາສາລາວ. ສຳລັບການສຶກສາເລື່ອງນີ້ໄດ້ໃຊ້ຂໍ້ມູນຫຼາຍຢ່າງນັບທັງອັນທີ່ເປັນທິດສະດີດ້ານພາສາສາດ ໂດຍສະເພາະພາສາສາດສັງຄົມ ແລະ ຂໍ້ມູນທາງພູມສາດ, ປະຫວັດສາດ, ຊົນເຜົ່າວິທະຍາ ໃນນີ້ ຂໍ້ມູນທາງພາສາເຊັ່ນ ວັດຈະນານຸກົມ ແລະ ພາສາຖິ່ນຕ່າງໆໄດ້ຮັບການຄົ້ນ ແລະ ນຳມາໃຊ້ຢ່າງມີການເລືອກເຟັ້ນດ້ວຍຄວາມເອົາໃຈໃສ່. ແຕ່ເຖິງຢ່າງໃດຜົນຂອງການຄົ້ນຄວ້າ ກໍ່ຍັງບໍ່ສາມາດບັນລຸຄວາມສົມບູນ ແລະ ຖືກຕ້ອງໄດ້ໝົດ. ທັງນີ້ກໍ່ເພາະຂໍ້ມູນບາງອັນທີ່ຕ້ອງການຍັງຂາດ ແລະ ເອກະສານບາງອັນທີ່ໃຫ້ຂໍ້ມູນຢ່າງດຽວໄວ້ບໍ່ກົງກັນກໍ່ມີພາໃຫ້ການສຶກສາບາງຄຳພົບຄວາມຫຍຸ້ງຍາກໃນການຕັດສິນ. ເຖິງຢ່າງໃດການຄົ້ນຄວ້ານີ້ກໍ່ຈະເປັນການບຸກເບີກເພື່ອຈະໃຫ້ຜູ້ອື່ນໆໄດ້ສືບຕໍ່ ແລະ ຂະຫຍາຍຜົນອອກໄປ, ສິ່ງທີ່ຂາດຫາກຮູ້ໄວ້ກໍ່ຈະເປັນການດີເພື່ອຈະໄດ້ຫາມາເພີ່ມ, ອັນທີ່ຮູ້ສິ່ງໃດເປັນຄຳຜິດກໍ່ຈະໄດ້ປ່ຽນ ແລະ ແກ້ໄຂເພື່ອໃຫ້ໄດ້ອັນທີ່ຖືກກວ່າສົມບູນກວ່າໃນຕໍ່ໄປ.

ຈຸດປະສົງຂອງການຄົ້ນຄວ້າ

ການຄົ້ນຄວ້າ ການຢືມຄຳໃນພາສາລາວ ໄດ້ມີຈຸດປະສົງທີ່ສຳຄັນດັ່ງນີ້:

1. ເພື່ອສຶກສາຄວາມເປັນມາຂອງການຮັບຄຳ ຈາກພາສາອື່ນເຂົ້າມາໃນພາສາລາວ.
2. ເພື່ອໃຫ້ຮູ້ວ່າໄດ້ຮັບຄຳຈາກພາສາໃດແດ່ມາໃນພາສາຕົນເຖິງວ່າການຄົ້ນຄວ້າຈະບໍ່ສາມາດເຂົ້າເຖິງໄດ້ທັງໝົດໃນສິ່ງທີ່ລາວເຮົາມີການຮັບມາກໍ່ຕາມແຕ່ຈະພະຍາຍາມໃຫ້ຮູ້ໄດ້ຈຳນວນຫຼາຍ.
3. ເພື່ອເກັບກຳຄຳທີ່ຮັບມາຈາກແຕ່ລະພາສາ ໃຫ້ໄດ້ຈຳນວນຫຼາຍ.
4. ເພື່ອສຶກສາວິທີການຢືມ, ການແປງຄຳຢືມ ໃນພາສາລາວ.
5. ເພື່ອໃຫ້ຮູ້ຄວາມສາມາດພາໃຫ້ເກີດ ມີການຮັບຄຳເຂົ້າມາໃນພາສາລາວ.
6. ເພື່ອໃຫ້ໄດ້ເອກະສານອັນພື້ນຖານກ່ຽວກັບປະເດັນຕ່າງໆທີ່ກ່າວມາໄວ້ເປັນຂໍ້ມູນສຳລັບຈະຄົ້ນຄວ້າ, ຮູ້ ແລະ ນຳໄປໃຊ້ຕາມຈຸດປະສົງຂອງແຕ່ລະວຽກງານ.
7. ເພື່ອສົ່ງເສີມການປົກປັກຮັກສາ ແລະ ການຄົ້ນຄວ້າກ່ຽວກັບພາສາລາວ.

ເປົ້າໝາຍຂອງການຄົ້ນຄວ້າ.

ສຳລັບເປົ້າໝາຍ ຂອງການຄົ້ນຄວ້າໄດ້ກຳນົດໄວ້ ດັ່ງນີ້:

1. ຄົ້ນຄວ້າໃຫ້ຮູ້ວ່າ ລາວກໍ່ໄດ້ຮັບຄຳຈາກພາສາອື່ນ ເຂົ້າມາໃນພາສາຕົນ.
2. ຈຳແນກໃຫ້ຮູ້ລັກສະນະທາງພາສາໂດຍສະເພາະແມ່ນລັກສະນະຂອງຄຳທີ່ແມ່ນຄຳພື້ນຖານ ຂອງພາສາລາວ, ຄຳທີ່ເປັນຄຳຈາກພາສາອື່ນ.

3. ຄົ້ນຄວ້າສາເຫດ,ໄລຍະແລະສະໄໝຂອງການຮັບຄຳຈາກພາສາຕ່າງໆເຖິງບໍ່ສາມາດບົ່ງຊີ້ປີ ທີ່ເລີ່ມຮັບເອົາຄຳໃດໜຶ່ງຢ່າງແນ່ນອນ ແຕ່ຈະໃຫ້ຮູ້ໄລຍະສະໄໝຂອງການຮັບຄຳຈາກແຕ່ ລະພາສາເຂົ້າມາ.
4. ສຶກສາໃຫ້ຮູ້ວິທີຮັບ, ວິທີແປງຄຳທີ່ຮັບມາຕະຫຼອດເຖິງການປ່ຽນຄວາມໝາຍຂອງຄຳທີ່ຮັບ ມາເປັນກຸ່ມໃຫ່ຍຈາກບາງພາສາໃນພາສາລາວ.
5. ຮຽບໂຮມ ບັນດາຄຳທີ່ຮັບມາຈາກພາສາຕ່າງໆໃຫ້ໄດ້ຫຼາຍເທົ່າທີ່ຈະເຮັດໄດ້.
6. ການຄົ້ນຄວ້ານີ້ ຍັງມີເປົ້າໝາຍຊ່ວຍໃຫ້ຂໍ້ມູນການຄົ້ນຄວ້າປະຫວັດການຂະຫຍາຍດ້ານຈຳ ນວນຂອງຄຳໃນພາສາລາວ ແລະ ການສຳພັນລະຫວ່າງພາສາຕາມກົດເກນຂອງມັນ ແລະ ເພື່ອເພີ່ມພູນຄວາມຮູ້ກ່ຽວກັບອົງປະກອບດ້ານຄ້ຳສັບໃນພາ ສາລາວ.

I. ການຢືມຄຳ.

1. ຄວາມໝາຍຂອງຄຳວ່າ ການຢືມຄຳ.

ການຢືມຄຳ ເປັນປາກົດການໜຶ່ງໃນຂະບວນຂອງພາສາ ເຊິ່ງປະກົດການນີ້ໄດ້ມີໃນທຸກ ຊາດທຸກພາສາ. ການຢືມຄຳເກີດຂຶ້ນດ້ວຍສາເຫດທີ່ເປັນລະບົບຢູ່ໃນຕົວຂອງພາສາ ຄືຄວາມ ຕ້ອງການຄຳໃຫ້ມີພໍ ເພື່ອການສື່ສານໃນສັງຄົມ ແລະ ການຕິດຕໍ່ສຳພັນລະຫວ່າງກັນແລະກັບ ພາຍນອກຜ່ານເວລາຍາວນານ ເຊິ່ງຕ່າງຊາດ ຕ່າງພາສາກັນ. ປາກົດການນີ້ ໝາຍເຖິງການທີ່ ຄົນຊາດໜຶ່ງ ໄດ້ເກີດການຮັບເອົາຄຳ ຫຼື ລັກສະນະທາງພາສາບາງອັນຂອງພາສາອື່ນເຂົ້າມາໃຊ້ ໃນພາສາຕົນເອງ. ໃນທາງວິຊາການ ຮຽກໃຫ້ຂະບວນການນີ້ວ່າ: Word borrowing. ຫຼື Loan word, ມີຄວາມໝາຍວ່າ ການຢືມຄຳ. ແຕ່ໃນບາງພາສາໃຊ້ຄຳວ່າ: ການຮັບຄຳເພາະ ວ່າແຕ່ລະຄຳທີ່ໄດ້ຈາກພາສາອື່ນມາສູ່ພາສາຕົນ ນັ້ນເປັນຂະບວນການຂອງເຈົ້າຂອງພາສາ ເປັນຝ່າຍຕ້ອງການ ແລະ ສະໝັກໃຈ ຮັບເອົາຄຳນັ້ນເຂົ້າມາ ຫຼື ຕາມຄວາມຈຳເປັນເຊິ່ງໄດ້ ຄວາມໝາຍທີ່ເຂົ້າເລື່ອງເຂົ້າຄວາມກັບປາກົດການນີ້ກວ່າການໃຊ້ຄຳວ່າ ຢືມ. ເມື່ອຮັບມາ ແລ້ວຄຳເຫຼົ່ານັ້ນ ກໍ່ຖືກນຳໃຊ້ໃນຂະບວນການຂອງພາສາຜູ້ຢືມໂດຍບໍ່ມີຄວາມປະສົງ ຫຼື ກຳນົດ

ຈະສິ່ງຄຳນັ້ນຄືນໃຫ້ພາສາທີ່ຖືກຮັບມາ ແລະ ໃຊ້ຄຳວ່າ ຢືມ ກໍ່ເໝືອນກັບມີກຳນົດທີ່ຈະຕ້ອງສົ່ງ. ສະນັ້ນ ໃນບາງພາສາຈຶ່ງມັກເອີ້ນວ່າ ການຮັບຄຳ. ໝາຍວ່າ ຢືມ ແລະ ຮັບຈະໃຫ້ຄວາມໝາຍຕ່າງກັນຕໍ່ກັບການເອົາຄຳຈາກພາສາອື່ນມາສູ່ພາສາຕົນ.

2. ສາເຫດການຢືມຄຳ

Leonard Bloomfield (P. 444-495) ນັກພາສາສາດຜູ້ທີ່ໄດ້ລິເລີ່ມຄົ້ນຄວ້າຂະບວນການຮັບເອົາພາສາຈາກພາສາໜຶ່ງເຂົ້າໄປສູ່ອີກພາສາໜຶ່ງນັ້ນ ໄດ້ສຶກສາເຖິງສາເຫດທີ່ພາໃຫ້ເກີດການຢືມ ແລະ ໄດ້ຈຳແນກສາເຫດການຢືມອອກເປັນ 3 ຊະນິດຄື:

1). ການຢືມເນື່ອງຈາກວັດທະນະທຳ (Cultural borrowing).

ຄືການຢືມ ທີ່ເກີດຈາກຄົນສອງກຸ່ມ ທີ່ມີວັດທະນະທຳ ແລະ ພາສາຕ່າງກັນໄດ້ມີການຕິດຕໍ່ກັນ, ກຸ່ມທີ່ມີລັກສະນະທາງວັດທະນະທຳ, ຄວາມຈະເລີນທີ່ດ້ອຍກວ່າ ກໍ່ຈະຮັບເອົາວັດທະນະທຳ ແລະ ແບບການເປັນຢູ່ຈາກກຸ່ມທີ່ມີຄວາມຈະເລີນກວ່າ.

ເມື່ອເກີດມີການຢືມເລື່ອງຕ່າງໆ ນີ້ພາສາກໍ່ເປັນຕົວເກາະຫ້ອຍສອຍຕາມມາກັບຂະບວນການນັ້ນພາໃຫ້ເກີດການຢືມຄຳ ຢືມລັກສະນະພາສາຕາມແຕ່ລະກໍລະນີ. ຕົວຢ່າງ: ໃນພາສາລາວເຮົາສະໄໝກ່ອນໆ ລາວໄດ້ຮັບວັດທະນະທຳບາງຢ່າງ, ສາສະໜາ, ວັນນະຄະດີຊາດິກຈາກອິນເດຍ ເຊິ່ງອິນເດຍມີຄວາມຈະເລີນດ້ານນີ້ກວ່າກໍ່ພາໃຫ້ຄຳປາລີ-ສັນສະກິດຕາມມາກັບຂະບວນການນັ້ນ, ກ່ອນນີ້ ຈີນກໍ່ມີຄວາມຈະເລີນດ້ານການປະດິດສ້າງເຄື່ອງໄລ່ຫົວໜ່ວຍນ້ຳໜັກ, ເລກນັບ ແລະ ລາຍການອາຫານ, ລາວກໍ່ໄດ້ຮັບຄຳກ່ຽວກັບສິ່ງນີ້ເຂົ້າມາຫຼາຍຄຳ. ບັນດາປະເທດໃນເຂດຢູຣົບມີຄວາມຈະເລີນທາງຄວາມຮູ້ວິຊາການ, ມີຄວາມກ້າວໜ້າທາງເທັກໂນໂລຢີດ້ານຕ່າງໆ ເມື່ອລາວຮັບເອົາສິ່ງຕ່າງໆນີ້ເຂົ້າມາ ກໍ່ມີເລື່ອງຄຳ ເລື່ອງພາສາຕາມມາເຊັ່ນ

ນັ້ນ. ການຢືມເນື່ອງຈາກວັດທະນະທຳ ຝ່າຍຈະເລີນກວ່າເປັນຝ່າຍໃຫ້ສ່ວນຝ່າຍດ້ອຍກວ່າໄດ້ເປັນຝ່າຍຮັບສະເໝີ ການຢືມໃນກໍລະນີນີ້ບໍ່ກ່ຽວຂ້ອງກັບຄວາມໃກ້ຊິດ ຫຼື ສະໜິດກັນແຕ່ຢ່າງໃດ.

2). ການຢືມເນື່ອງຈາກຄວາມໃກ້ຊິດ (Intimate borrowing).

ການທີ່ຄົນສອງຊາດ ສອງພາສາ ທີ່ຕ່າງກັນໄດ້ຢູ່ຮ່ວມກັນໃນສັງຄົມອັນດຽວ ຫຼື ມີສະພາບດ້ານອານາເຂດຕິດຈອດ ທັງມີຄວາມໃກ້ຊິດ ສຳພັນລະຫວ່າງກັນເປັນປະຈຳ ກໍ່ຈະເກີດມີການຢືມຄຳຂອງພາສາລະຫວ່າງກັນຂຶ້ນ ແຕ່ການຢືມນີ້ບໍ່ໝາຍຄວາມວ່າ ຕ່າງຝ່າຍຕ່າງຢືມໂດຍໃຫ້ມີຄຳທີ່ຢືມເທົ່າກັນ ແຕ່ອາດມີຝ່າຍໃດຝ່າຍໜຶ່ງ ຢືມຄຳຈາກອີກຝ່າຍໜຶ່ງຫຼາຍກວ່າ ເຊິ່ງຂຶ້ນກັບຄວາມຈະເລີນກວ່າ ແລະ ຄວາມຕ້ອງການຢູ່ພາຍໃນ ຂອງພາສາ ຂອງຜູ້ທີ່ຢືມ ທີ່ຂາດແຄນຄຳນັ້ນໆ.

ຕົວຢ່າງ : ລາວ ກັບ ຂະແມ ມີຊາຍແດນຕິດຈອດກັນ ເຄີຍມີການຕິດຕໍ່ພົວພັນລະຫວ່າງກັນ ກໍ່ພາໃຫ້ເກີດການຮັບເອົາຄຳຂອງກັນແລະກັນເຊັ່ນ: ຄຳຂອງຂະແມບາງຄຳທີ່ລາວຮັບມາຄື: ເດີນ, ຈະເລີນ, ເພີ່ງ, ສຳນັກ, ຮຽນ, ສະເຫຼີມ, ບັນທຶມ, ບ້ຽອນ... ພ້ອມດຽວກັນ ຂະແມກໍ່ຮັບຄຳຈາກພາສາລາວ ແລະ ພາສາຕະກຸນໄຕເຂົ້າໄປໃຊ້ຄື: ຫຼວງ, ແຂວງ, ເຝົ້າ, ເຖົ້າ, ແກ່, ເລກນັບ ຫົວສິບ, ສາມສິບ, ສີ່ສິບ, ພັນ, ໝື່ນ, ແສນ ....

3). ການຢືມຄຳເພາະຄວາມຕ່າງຖິ່ນ (Dialect borrowing)

ໝາຍເຖິງການຢືມຄຳຂອງພາສາໃນຕະກູນ ຫຼື ກຸ່ມດຽວກັນ ແຕ່ເປັນຄຳທ້ອງຖິ່ນທີ່ຕ່າງກັນ. ການຢືມດ້ວຍກໍລະນີນີ້ເກີດຂຶ້ນເພາະຄຳບາງຄຳຂອງພາສາຖິ່ນໃດໜຶ່ງມີການປ່ຽນຖານະ ຫຼື ຄຳ ຄຳນັ້ນໄດ້ຖືກນຳມາໃຊ້ເປັນທີ່ປາກົດມີການແຜ່ກະຈາຍອອກດ້ວຍທາງໃດໜຶ່ງ ອັນພາໃຫ້

ຫຼາຍໆຄົນເກີດການຮູ້ຈັກ. ນອກຈາກນີ້ ຄຳພາສາຖິ່ນບາງຖິ່ນໄດ້ຮັບຖານະກາຍເປັນຄຳໃນພາສາ ມາດຖານຫຼາຍຂຶ້ນກໍ່ພາໃຫ້ຖິ່ນອື່ນໆໄດ້ຮູ້ ແລະ ຮັບເອົາຄຳນັ້ນເຂົ້າໄປໃຊ້ໃນພາສາຂອງກຸ່ມຕົນ ເອງ.

ກ່ຽວກັບສາເຫດທີ່ພາໃຫ້ຢືມຄຳນີ້ ນັກພາສາສາດຫຼາຍທ່ານກໍ່ໄດ້ສຶກສາໂດຍໄດ້ແບ່ງສາ ເຫດອອກເປັນຫຼາຍຊະນິດຄື: 1. ສາເຫດທາງສິ່ງແວດລ້ອມ; 2. ສະພາບສັງຄົມວັດທະນະທຳ; 3. ຜົນສະທ້ອນຈາກພາຍນອກ; 4. ອິດທິພົນຈາກພາຍນອກເປັນຕົ້ນ.

II. ສະພາບ ແລະ ຜົນຈາກພາຍນອກທີ່ມີຕໍ່ການຢືມຄຳ

1. ສະພາບດ້ານປະຫວັດສາດ

ສະພາບທາງປະຫວັດສາດນັ້ນປະກອບດ້ວຍຫຼາຍສິ່ງເຊັ່ນ: ຂະບວນການປ່ຽນແປງ ທາງສັງຄົມ, ຂະບວນການປ່ຽນແປງການປົກຄອງ, ການເຄື່ອນຍ້າຍ ແລະ ການເຂົ້າມາຢູ່ຂອງ ຄົນທີ່ບໍ່ແມ່ນພວກດຽວກັນ ຫຼື ຊາດດຽວກັນດັ່ງນີ້ເປັນຕົ້ນ.

ໃນໄລຍະປະຫວັດສາດອັນດົນນານຂອງຫຼາຍຊາດ ໄດ້ໃຫ້ເຫັນວ່າມີການບຸກຍຶດ, ການຄອບຄອງໂດຍອີກກຸ່ມຄົນ ຫຼື ຊາດໃດຊາດໜຶ່ງ ພ້ອມນີ້ກໍ່ເກີດມີການກວາດຕ້ອນຄົນເປັນ ຈຳນວນຫຼາຍໃຫ້ອອກຈາກທີ່ໜຶ່ງໄປຢູ່ທີ່ໃໝ່ ຫຼືບໍ່ກໍ່ມີການອົບພະຍົບຫຼົບໄພຈາກສົງຄາມ, ການ ຕໍ່ສູ້, ຈາກການທີ່ບໍ່ທົນຢູ່ໃນການປົກຄອງທີ່ໜັບຮັດ ແລະ ອື່ນໆ. ການເຄື່ອນຍ້າຍໄປ ຫຼື ການ ເຄື່ອນຍ້າຍເຂົ້າມາຢູ່ນັ້ນພາໃຫ້ເກີດການນຳເອົາວັດທະນະທຳ, ຄຳ, ຖ້ອຍຄຳໄປນຳ ແລະ ໃນຖິ່ນ ທີ່ຢູ່ໃໝ່ກໍ່ເກີດການປະສົມ (mixture) ດ້ານວັດທະນະທຳ ອັນພາໃຫ້ເກີດການຮັບບາງຢ່າງຂອງ ກຸ່ມຄົນເດີມໃນທີ່ນັ້ນ ຫຼື ຈາກພວກຄົນທີ່ເຂົ້າມາຢູ່ໃໝ່, ຂະບວນການອັນນີ້ ໄດ້ມີຜົນໄປເຖິງພາ ສາພາໃຫ້ມີການຮັບເອົາຄຳ.ໃນການຮັບນັ້ນ ຫາກຮັບໃນລະດັບຄຳດ້ວຍຈຳນວນໜ້ອຍກໍ່ຈະເປັນ ພາວະຂອງການຢືມຄຳ ແຕ່ຫາກເປັນການຮັບເອົາຄຳເປັນຈຳນວນຫຼາຍ ແລະ ຮັບເອົາກາຍລະ ດັບຄຳ ເຖິງລະດັບສຳນວນກໍ່ຈະເກີດພາວະພາສາຮູບປະສົມ (Creole) ໄດ້.

2. ອິດທິພົນທາງດ້ານຕ່າງໆ

1). ອິດທິພົນທາງສາສະໜາ.

ສາສະໜາ ແມ່ນທາງຄວາມຄິດ ແລະ ຄວາມເຊື່ອຢ່າງໜຶ່ງ ດັ່ງນັ້ນ ຈຶ່ງເປັນສິ່ງກ່ຽວກັບ ຈິດໃຈ, ຄວາມນຶກຄິດ, ຄວາມຫວັງ ແລະ ຄວາມປາຖະໜາ ດ້ວຍເຫດນີ້ ສາສະໜາຈຶ່ງມີອິດທິພົນຫຼາຍ ຕໍ່ການເປັນຢູ່, ການດຳລົງຊີວິດ ແລະ ຈິດໃຈຂອງຄົນ. ເມື່ອສາສະໜາໄດ້ແຜ່ຂະຫຍາຍໄປ ກໍ່ມີເລື່ອງສັບພາສາ ເຊິ່ງເປັນຮູບແບບຄຳສອນຊາດົກ ກ່ຽວກັບພິທີທາງສາສະໜາຕາມໄປ. ລັກສະນະຢ່າງໜຶ່ງ ຂອງຄຳສອນ ຄຳພີ ໃນສາສະໜານັ້ນໄດ້ໃຫ້ຖາມະເປັນຄຳສັກສິດທີ່ບໍ່ອະນຸຍາດ ໃຫ້ຄົນທົ່ວໄປ ແຕະຕ້ອງປ່ຽນແປງ ຫຼື ແປ ດ້ວຍຖ້ອຍຄຳສາມັນ. ສະນັ້ນ ຄຳໃນຄຳພີ, ຄຳສອນ ກັບສາສະໜາ ຈຶ່ງເປັນສິ່ງມີຄ່າລະຫວ່າງກັນ, ຫາກມີການແຕະຕ້ອງປ່ຽນແປງຄຳໃນຄຳພີ, ຄຳສອນ ກໍ່ໝາຍເຖິງແຕະຕ້ອງເຖິງສາສະໜາເຊັ່ນກັນ ດ້ວຍເຫດນີ້ ສາສະໜາຈຶ່ງມີອິທິພົນທີ່ກັ້ນຫ້າມການແຕະຕ້ອງທັງຖືເປັນອັນສັກສິດແລະສູງສົ່ງທີ່ຜູກພັນກັບຄົນ ເມື່ອແຜ່ໄປເຖິງທີ່ໃດກໍ່ຕ້ອງມີຊາດົກ ຄຳສອນ, ຄຳສັບຂອງສາສະໜານັ້ນໆ ຕາມໄປນຳສະເໝີ; ຕົວຢ່າງ: ລາວໄດ້ຮັບສາສະໜາພຸດຈາກອິນເດຍ ກໍ່ມີຄວາມຈຳເປັນຮັບເອົາຄຳຂອງສັນສະກິດ ແລະ ປາລີ ເຊິ່ງເປັນຄຳທີ່ໃຊ້ຂຽນຄຳພີ,ຄຳສອນຂອງສາສະໜາພຸດນຳດ້ວຍ.ຍ້ອນອິດທິພົນທາງສາສະໜານີ້ ພາສາລາວຈຶ່ງໄດ້ຮັບຄຳສັບທີ່ເປັນ ຄຳປາລີ ແລະ ສັນສະກິດ ເປັນຈຳນວນຫຼາຍ ນັບທັງຄຳທີ່ຮູ້ຄວາມໝາຍໄດ້ ແລະ ຄຳທີ່ໃຊ້ກ່າວແຕ່ບໍ່ໄດ້ແປຄວາມໝາຍກໍ່ມີຫຼາຍ.

2). ອິດທິພົນຈາກພາສາຄົນກຸ່ມໃຫຍ່.

ຄຳວ່າ ຄົນກຸ່ມນ້ອຍ ແລະ ຄົນກຸ່ມໃຫຍ່ໃນນີ້ໝາຍເຖິງກຸ່ມຄົນທີ່ປາກພາສາໃດໜຶ່ງ ໂດຍມີຈຳນວນຄົນໜ້ອຍ ຫຼື ຫຼາຍກວ່າກັນເຊິ່ງບໍ່ໄດ້ໝາຍເຖິງທີ່ຢູ່ຂອງຄົນກຸ່ມນັ້ນວ່າຢູ່ໃນປະເທດລາວ ຫຼື ຢູ່ນອກປະເທດ.

ໂດຍທົ່ວໄປແລ້ວຄົນກຸ່ມນ້ອຍມັກໃຊ້ພາສາຂອງຄົນກຸ່ມໃຫຍ່ ສາເຫດຫຼັກຄື: ພາສາຄົນກຸ່ມນ້ອຍມີຈຳນວນຄຳສັບຈຳກັດກວ່າເຊັ່ນວ່າ ມີພຽງຄຳຈຳນວນທີ່ພໍໃຊ້ໃນແວດວົງແຄບ ແລະ ໃນກຸ່ມຄົນສະເພາະບໍ່ເທົ່າໃດຄົນ. ສາເຫດຕໍ່ມາກໍ່ຄື ຄົນກຸ່ມໃຫຍ່ກໍ່ມີອິດທິພົນດ້ານອື່ນໆ ເຊັ່ນ: ດ້ານວັດທະນະທຳ ເສດຖະກິດ ການຄ້າ... ປະກອບນຳດ້ວຍ. ຫາກມີອິດທິພົນຕ່າງໆນີ້ນຳ ກໍ່ຍິ່ງຈະເປັນສິ່ງທີ່ເພີ່ມອິດທິພົນໃຫ້ແກ່ພາສາຂອງກຸ່ມຄົນທີ່ໃຫຍ່ໃຫ້ແຜ່ເຂົ້າສູ່ພາສາຂອງຄົນທີ່ກຸ່ມນ້ອຍໄດ້ແຮງຂຶ້ນ ຕົວຢ່າງ: ຄົນສະວີເດັນທີ່ໃຊ້ພາສາ Swedish ເຊິ່ງເປັນພາສາແຫ່ງສຳນຽງ (Accent) ມາແຕ່ໃດໆ ແຕ່ຕໍ່ມາ ຄົນສະວີເດັນ ກຸ່ມນີ້ ບາງສ່ວນໄດ້ຕົກໄປເປັນພົນລະເມືອງຂອງ ຟິນແລນ. ເມື່ອໄປເປັນຄົນກຸ່ມນ້ອຍໃນປະເທດຟິນແລນເຊິ່ງໃຊ້ພາສາ Finish ທີ່ເປັນພາສາຂອງຄົນສ່ວນໃຫຍ່, ບໍ່ແມ່ນພາສາແຫ່ງສຳນຽງ ຫຼື ແຫ່ງສຽງວັນນະຍຸດ. ເມື່ອໄດ້ຮັບອິດທິພົນໃໝ່ຈາກພາສາ Finish ພາໃຫ້ ພາສາ Swedish ເດີມຂອງຄົນກຸ່ມນີ້ ສູນເສຍສຽງພາສາເດີມເຊິ່ງເປັນພາສາແຫ່ງສຳນຽງກາຍເປັນດັ່ງດຽວກັບພາສາ Finish ໄປເລີຍ. ຢູ່ໃນລາວເຮົາຫຼາຍເຜົ່າໄດ້ຮັບເອົາພາສາລາວ, ຄຳລາວໄປໃຊ້ກໍ່ເພາະເຜົ່າຕ່າງໆນັ້ນມີຈຳນວນໜ້ອຍ ແລະ ເປັນຄົນກຸ່ມນ້ອຍກວ່າຈຶ່ງເປັນໄປຕາມກົດເກນຂອງການຮັບຄຳ - ຮັບພາສາດັ່ງກ່າວມານີ້.

3. ผົນສະທ້ອນຈາກພາຍນອກ

1). ຜົນສະທ້ອນຈາກການສຶກສາ

ການສຶກສານັ້ນມີຄວາມກວ້າງຫຼາຍ ເຊິ່ງກ່ຽວກັບຄວາມຮູ້ ທີ່ຈັດເປັນ ລາຍວິຊາ ທີ່ກ່ຽວກັບທຳມະຊາດ ແລະ ສັງຄົມ. ການຮຽນຮູ້ວິທະຍາສາດໃນແຕ່ລະວິຊາຄວາມຮູ້ນັ້ນ ຍ່ອມມີຄຳສັບທາງວິທະຍາສາດຂອງວິຊານັ້ນໆ. ສະນັ້ນ ເມື່ອການສຶກສາຈະເລີນເທົ່າໃດກໍ່ໝາຍເຖິງຄວາມຮູ້ກ່ຽວກັບວິທະຍາສາດ, ເລື່ອງຂອງຄຳສັບໄດ້ຂະຫຍາຍອອກຕາມເຊັ່ນກັນ. ໃນຫຼາຍປະເທດ ໄດ້ພະຍາຍາມແປ ຄວາມຮູ້ທາງວິຊາການແຕ່ລະຢ່າງ ເຂົ້າມາສູ່ພາສາຕົນດ້ວຍຄຳ ແລະ ພາສາຂອງຕົນ ແຕ່ກໍ່ເປັນສິ່ງລຳບາກ ອັນເນື່ອງມາຈາກການທຽບພາຍໃນລະຫວ່າງສອງພາສາ, ການຫາຄຳໃຫ້ມີເທົ່າກັນ, ມີຄວາມພໍດີກັນທາງສຳນວນ ແລະ ທາງຄວາມໝາຍນັ້ນ ຈະບໍ່ໄດ້ສະເໝີໄປ. ດັ່ງນັ້ນ ໃນຈຸດທີ່ແປລຳບາກຫາກແປໄປໂດຍບໍ່ຄຳນຶງເຖິງຈຸດໝາຍທາງວິທະຍາສາດເຊິ່ງຮຽກຮ້ອງເຖິງຄວາມຊັດເຈນແມ່ນຢຳຕາມຕົ້ນສະບັບ ກໍ່ຈະພາໃຫ້ສິ່ງທີ່ແປມີຄຸນນະພາບບໍ່ເທົ່າເຖິງຕົ້ນສະບັບ, ພາໃຫ້ຄວາມເຂົ້າໃຈໃນວິທະຍາສາດສິ່ງນັ້ນໆຂາດຫາຍເຂວ ຫຼື ຜິດໄປ. ຈາກສາເຫດດັ່ງກ່າວ ໃນຫຼາຍໆ ພາສາ ຈຶ່ງໄດ້ຮັບເອົາຄຳຂອງພາສາອື່ນ ທີ່ໃຊ້ເປັນຄຳວິຊາການເຂົ້າມາໂດຍແບບທັບສັບ ຫຼື ຮັບດ້ວຍວິທີ່ອື່ນໆທາງດ້ານການສຶກສາວິທະຍາສາດ. ອິດທິພົນນີ້ໄດ້ກາຍເປັນສາເຫດສຳຄັນທີ່ພາໃຫ້ເກີດການຮັບເອົາຄຳຈາກ ພາສາອື່ນດ້ວຍຄວາມຈຳເປັນ.

2). ຜົນສະທ້ອນຈາກຄວາມຈະເລີນຂອງເທັກໂນໂລຢີ

ຄວາມຈະເລີນຂອງເທັກໂນໂລຢີ ໄດ້ພາໃຫ້ສາມາດຜະລິດເຄື່ອງຂອງຕ່າງໆ ອັນທັນສະໄໝມາປ່ຽນແທນການໃຊ້ແຮງງານ ດ້ວຍຕົນມືຂອງຄົນ ການຮັບເອົາເຄື່ອງຕ່າງໆ ນັ້ນກໍ່ມີເລື່ອງຄຳສັບ ເຊິ່ງກ່ຽວຂ້ອງກັບຊື່, ເທັກນິກ, ວິທີໃຊ້ ແລະ ອື່ນ ທີ່ກ່ຽວຂ້ອງຕິດຕາມໄປນຳ. ຄຳທີ່ຕິດຕາມໄປນຳນີ້ຫາກຄຳໃດເປັນສິ່ງຈຳເປັນແລະຕ້ອງການຄຳສັບດັ່ງກ່າວກໍ່ຖືກຮັບເອົາໄປໃຊ້ໃນພາສາຊາດນັ້ນໆ.

3). ຜົນສະທ້ອນດ້ານທຸລະກິດ, ການພົວພັນລະຫວ່າງຊາດ

ໃນດ້ານທຸລະກິດ ໄດ້ມີເລື່ອງການຄ້າຂາຍ ແລກປ່ຽນສິນຄ້າ, ແລະ ສຳລັບການພົວພັນລະຫວ່າງຊາດນັ້ນກໍ່ມີຫຼາຍຢ່າງຕາມທີ່ຕ້ອງການພົວພັນເຊັ່ນ ເລື່ອງເສດຖະກິດ, ການຄ້າ, ການລົງທຶນ, ການສຶກສາ, ວັດທະນະທຳ ແລະ ອື່ນໆ. ໃນບັນດາສິ່ງພົວພັນນັ້ນໆ ກໍ່ກ່ຽວຂ້ອງກັບພາສາ, ຄຳສັບ ຖ້ອຍຄຳອັນສະເພາະຂອງວຽກງານນັ້ນໆ ເຊິ່ງຈະຫາຄຳທີ່ຄືກັນໃນພາສາຂອງຕົນເອງບໍ່ມີ, ພາໃຫ້ຈຳເປັນຮັບເອົາຄຳນັ້ນ, ຖ້ອຍຄຳນັ້ນໆ ມາໃຊ້ໃນພາສາຂອງຕົນ.

ຕົວຢ່າງ: ຄຳກ່ຽວກັບທຸລະກິດການຄ້າໃນພາສາລາວ: ກົງ, ບັນຊີທະບຽນ, ພາສີ, ທຳນຽມ...

ຄຳກ່ຽວກັບການພົວພັນລະຫວ່າງຊາດ: ກົງສູນ, ດີປໂປລມັດ, ວີຊາ. . .

4). ຜົນສະທ້ອນດ້ານການບັນເທີງ.

ອິດທິພົນທາງດ້ານການບັນເທີງເປັນສິ່ງທີ່ປະກົດໃໝ່ເມື່ອທຽບກັບອິດທິພົນດ້ານອື່ນ. ອິດທິພົນດ້ານນີ້ ໄດ້ຮັບການແຜ່ຂະຫຍາຍ ພ້ອມກັບຂະບວນການຂະຫຍາຍຂອງເທັກໂນໂລຢີທີ່ກ່ຽວກັບການເຮັດສິ່ງບັນເທີງອອກມາເຊັ່ນ ເຄື່ອງດົນຕີ, ເຄື່ອງສຽງ, ສິ່ງບັນທຶກທຳນອງເພງ ເປັນຕົ້ນ ໄດ້ເປັນຕົວຊ່ວຍນຳເອົາສຽງຂັບ ຮ້ອງເພງ ແລະ ສຽງດົນຕີຈາກທີ່ໜຶ່ງໄປສູ່ອີກທີ່ໜຶ່ງ ເຊິ່ງເປັນການນຳເອົາຖ້ອຍຄຳ,ສຳນວນ ຈາກພາສາໃດໜຶ່ງ ແຜ່ເຂົ້າໄປຍັງພາສາອື່ນເຊັ່ນກັນ. ປາກົດການນີ້ກໍ່ພົວພັນກັບຄ່ານິຍົມໃນສິ່ງບັນເທີງນຳດ້ວຍ.

ໃນປັດຈຸບັນການແຜ່ໄປຂອງສິ່ງບັນເທີງມີລັກສະນະສາກົນ, ລັກສະນະຂອງຈິດຕະສາດ ແລະ ການແຜ່ຜາຍວັດທະນະທຳຂ້າມຊາດ (Cross Culture) ໄປນຳກັນ. ຫາກເປັນວັດທະນະທຳພາສາ ມີຄວາມໃກ້ຄຽງກັນຄ້າຍຄືກັນເທົ່າໃດກໍ່ຈະເຮັດໃຫ້ການມີອິດທິພົນຈາກສິ່ງບັນເທີງກໍ່ຫຼາຍ. ເຄື່ອງມືສຳລັບການແຜ່ຜາຍຂອງອິດທິພົນທາງການບັນເທີງ ມີຫຼາຍວິທີເຊັ່ນ: ທາງວິທະຍຸ

ໂທລະທັດ ຂ່າວສານ ວາລະສານ,ຮູບພາບ, ສິ່ງພິມຕ່າງໆ. ຕົວຢ່າງ ບາງຄຳທີ່ຮັບມາເພາະອິດທິພົນດ້ານນີ້ເປັນຊື່ທີ່ຮຽກເຄື່ອງເສບ: ອາກອກດີອົງ(Accordion) ເບດ (Bass), ກີຕ້າ (Guitar), ແມນໂດລິນ (Mandolin), ໂອແກນ (Organ), ປີອາໂນ (Piano), ໄວໂອລິນ(Violin)... ຊື່ທີ່ກ່ຽວກັບຈັງຫວະການຟ້ອນເຊັ່ນ: ໂຊໂລ (Solo), ອໍບິດ (Orbit), ແທງໂກ (Tango), ໂອເປຣາ (Opera) ຣ້ອກ (Rock) ...

ໃນພາສາລາວໄດ້ມີການຮັບຄຳຢ່າງຫຼວງຫຼາຍຈາກພາສາອື່ນຕະຫຼອດຫຼາຍສະຕະວັດ ມາ. ການຮັບນັ້ນໄດ້ເກີດຂຶ້ນອາດເປັນໄປຕາມສະພາບ ແລະ ອິດທິພົນດ້ານຕ່າງໆດັ່ງທີ່ສະເໜີ ມາ ແລະ ໃນນັ້ນກໍ່ຄົງມີສະພາບ ແລະ ສາເຫດອັນສະເພາະອີກບາງຢ່າງນັ້ນຄື:ດ້ານພູມສາດ ແລະ ປະຊາກອນຂອງລາວນຳອີກເຊິ່ງດ້ານນີ້ໄດ້ເຫັນເປັນດັ່ງນີ້:

ປະເທດລາວ ຕັ້ງຢູ່ໃຈກາງຂອງແຫຼມອິນດູຈີນ ເປັນປະເທດທີ່ ຖືກອ້ອມລ້ອມ (Locked Country) ດ້ວຍ 5 ປະເທດ, ບໍ່ມີຊາຍ ແດນທີ່ຕິດກັບທະເລ, ດິນແດນສ່ວນໃຫຍ່ເປັນ ພູເຂົາ ແລະ ໂນນ, ມີປ່າໄມ້ສາຍນ້ຳ, ແມ່ນ້ຳຫຼາຍໆສາຍ. ແມ່ນ້ຳຂອງເປັນແມ່ນ້ຳອັນສຳຄັນ ເພາະມັນໄຫຼຜ່ານຕາມລວງຍາວ ຂອງປະເທດ ເນື້ອທີ່ໃນປະຈຸບັນມີ 236.800 km^2 ພົນລະ-ເມືອງ ໃນປີ 2002 ມີ 5.260.000 ຄົນ ປະຊາກອນສ່ວນຫຼາຍເປັນກຸ່ມຄົນເຜົ່າຕະກຸນລາວ-ໄຕ (LaoTai) ຄືພວກທີ່ຮຽກວ່າ ລາວ ໄດ້ຕັ້ງຖິ່ນຖານຢູ່ຕາມລ້ອງແມ່ນ້ຳຂອງ ແລະ ລ້ອງແມ່ນ້ຳສາຍ ອື່ນໆ ທີ່ພົບວ່າມີຄວາມໜາແໜ້ນກວ່າເຂດອື່ນໆ ໂດຍສະເພາະ ນັບແຕ່ຫຼວງພະບາງໄປເຖິງລີ່ຜີ ສີພັນດອນ.

ພວກທີ່ຮຽກວ່າ ໄຕ ໄດ້ຕັ້ງຖິ່ນຖານຢູ່ແຖບພາກເໜືອ, ພາກຕາເວັນອອກສ່ຽງເໜືອ ແລະ ຕາມຈ້າຍຂອງສາຍພູຫຼວງ ຕໍ່ກັບທົ່ງພຽງ.ກຸ່ມນີ້ ປະກອບມີເຊັ່ນ ໄຕລື້, ໄຕແດງ, ໄຕຂາວ, ໄຕຍໍ້, ຜູ້ໄທ, ໄທເມີ້ຍ. ພາສາຂອງພວກລາວ ແລະ ໄຕ ໄດ້ມີຄວາມຕ່າງບາງຢ່າງເຊັ່ນ ບາງຄຳ, ສຳນຽງ ແລະ ສຽງວັນນະຍຸດ. ພ້ອມດຽວກັນ ພາສາລາວກໍ່ມີຫຼາຍຖິ່ນ ເຊິ່ງມີຄວາມແຕກ ຕ່າງທາງພາສາ ບາງຢ່າງໄປຕາມແຕ່ລະຖິ່ນ ເຖິງວ່າເປັນແນວນັ້ນ ການໃຊ້ພາສາເວົ້າບໍ່ໄດ້ເປັນ ອຸປະສັກປານໃດໃຫ້ແກ່ຄວາມເຂົ້າໃຈ ໃນການຕິດຕໍ່ສື່ສານລະຫວ່າງ ລາວ ກັບ ໄຕ ແລະລະ ຫວ່າງຖິ່ນຕ່າງໆ ທີ່ປາກພາສາຕະກຸນ ລາວ-ໄຕ.

ໃນລາວ ນອກຈາກຊົນເຜົ່າ ລາວ -ໄຕ ແລ້ວກໍ່ມີເຜົ່າຕ່າງໆ ທີ່ປາກພາສາອື່ນໄດ້ແກ່: ພາສາຕະກຸນມອນ - ຂະແມ (Mon-Khmer), ມົ້ງ - ຢ້າວ (Hmong-Yao), ຕິເບດ - ມຽນມາ (Tibet-Mayanma). ກຸ່ມທີ່ປາກພາສາມອນ - ຂະແມ ໄດ້ດຳລົງຊີວິດຢັ້ງຢາຍຢູ່ທົ່ວທຸກພາກ ຂອງປະເທດ ໂດຍສ່ວນຫຼາຍໄດ້ແກ່ ໃນເຂດທີ່ມີພູດອຍ ແລະ ພູພຽງ.

ກຸ່ມທີ່ປາກພາສາໃນຕະກຸນ ມົ້ງ - ຢ້າວ ໄດ້ດຳລົງຊີວິດຢູ່ໃນພາກເໜືອເຖິງເຂດພາກ ກາງຂອງປະເທດ, ໃນແຕ່ເດີມນັ້ນ ຢູ່ຕາມເຂດພູເຂົາ ແລະ ພູດອຍ.

ກຸ່ມທີ່ປາກພາສາໃນຕະກຸນ ຕິເບດ - ມຽນມາ ນັ້ນໄດ້ດຳລົງຊີວິດຢູ່ແຖບພາກເໜືອຂອງ ປະເທດ ໂດຍສະເພາະ ຕາມບັນດາແຂວງທີ່ມີຊາຍແດນຕິດກັບ ປະເທດຈີນ ແລະ ມຽນມາ.

ພາກຕາເວັນອອກຂອງລາວຕິດກັບ ຫວຽດນາມ ເຊິ່ງມີຊາຍແດນຍາວ 2069 ກມ. ຕາມ ແນວຊາຍແດນເປັນເຂດທີ່ມີພູສູງໂດຍທົ່ວໄປ ແລະ ສ່ວນໜຶ່ງກໍ່ເປັນສາຍພູເຊັ່ນ ແຖບສາຍພູ ໝວງ ເຂດພາກກາງຂອງລາວ ພາສາຂອງຄົນກຸ່ມໃຫຍ່ໃນຫວຽດນາມ ໄດ້ແກ່ພາສາເມືອງ ເຊິ່ງກໍ່ ໄດ້ຖືກຈັດຢູ່ໃນຕະກຸນພາສາມອນ - ຂະແມ.

ພາກເໜືອຕິດກັບປະເທດຈີນ ມີຊາຍແດນຮ່ວມກັນ 415 ກມ. ກຸ່ມຊົນທີ່ຢູ່ຕາມຊາຍ ແດນປະກອບມີຫຼາຍກຸ່ມຊົນ ທີ່ໃຊ້ພາສາຕ່າງກັນ. ໃນນີ້: ລື້, ຈ້ວງ, ເຊິ່ງກໍ່ປາກພາສາໃນຕະກຸນ ລາວ-ໄຕ; ຫໍ້ ແລະ ຈີນກວາງຕຸ້ງ ກໍ່ໃຊ້ພາສາຕະກຸນຈີນຫໍ້.

ພາກຕາເວັນຕົກສ່ຽງເໜືອ ມີຊາຍແດນຕິດກັບປະເທດມຽນມ້າ ຍາວ 230 ກມ. ກຸ່ມຊົນ ທີ່ຢູ່ແຖບນີ້ສ່ວນໃຫຍ່ເປັນຄົນເຜົ່າຊານ (Shan) ກໍ່ເປັນກຸ່ມຊົນທີ່ປາກພາສາໃນຕະກຸນລາວ-ໄຕ ນອກນີ້ ກໍ່ມີເຜົ່າອື່ນໆ ເຊັ່ນ ກຣຽງ, ລະວ້າ, ເຊິ່ງປາກພາສາຕະກູນມອນ-ຂະແມ.

ພາກຕາເວັນຕົກ ຊາຍແດນສ່ວນຫຼາຍຕິດກັບປະເທດໄທ ເຊິ່ງສ່ວນນີ້ມີຄວາມຍາວ 1730 ກມ. ຊາຍແດນບາງບ່ອນມີແມ່ນ້ຳ - ສາຍນ້ຳເປັນເຂດແບ່ງ, ກຸ່ມຊົນທີ່ຢູ່ລຽບຕາມຊາຍ ແດນເປັນກຸ່ມທີ່ປາກພາສາລາວເປັນສ່ວນຫຼາຍ. ເຊິ່ງໃນປະຫວັດສາດໃນແຕ່ເດີມໄດ້ກ່າວເຖິງ ຊົນຊຸມນີ້ວ່າ ເປັນກຸ່ມດຽວກັບລາວ ໂດຍສະເພາະກຸ່ມຊົນໃນພາກອີສານຂອງໄທ. ໃນດ້ານພາ ສາ ແລະ ທາງດ້ານປະເພນີ ກໍ່ເຊັ່ນດຽວກັນ.

ໃນປະຈຸບັນລາວໄດ້ຖືວ່າ ພາສາລາວ ແລະ ພາສາໄທເປັນຄົນລະພາສາ ເຊິ່ງມີຄວາມແຕກຕ່າງຫຼາຍຢ່າງໃນທຸກລະບົບຂອງພາສາເຊັ່ນ: ລະບົບໜ່ວຍສຽງພະຍັນຊະນະ, ລະບົບສຽງວັນນະຍຸດ ,ລະບົບຄຳ ແລະ ການໃຊ້ຄຳສຳນວນພາສາ.

ທາງພາກໃຕ້ຂອງລາວ ມີຊາຍແດນຕິດກັບ ປະເທດກຳປູເຈຍ ໃນແຕ່ເດີມນັ້ນເຄີຍເອີ້ນວ່າ ປະເທດຂະເໝນ ຄວາມຍາວຂອງຊາຍແດນຂອງລາວກັບຂະເໝນມີ 492 ກມ. ເຂດທີ່ເປັນຊາຍແດນມີສ່ວນເປັນທົ່ງພຽງ ແລະ ເປັນພູຕ່ຳ, ມີແມ່ນ້ຳເຊກອງ ແລະ ນ້ຳຂອງທີ່ໄຫຼຜ່ານລາວແລ້ວລົງສູ່ກຳປູເຈຍ. ຕາມແຖບຊາຍແດນບາງແຫ່ງມີກຸ່ມຊົນທີ່ໃຊ້ພາສາຕະກຸນ ລາວ - ໄຕ ເຊັ່ນ ເຂດຊຽງແຕ ນອກນັ້ນໄດ້ແກ່ກຸ່ມຊົນທີ່ໃຊ້ພາສາຂະແມ. ຊາວຂະແມໃນແຕ່ກ່ອນມີຄວາມເຊື່ອໃນສາສະໜາພາມ ແລະ ຕໍ່ມາກໍ່ປ່ຽນມາເຊື່ອໃນສາສະໜາພຸດເປັນສ່ວນໃຫຍ່. ລາວໄດ້ຮັບອິທິພົນທາງສາສະໜາພຸດ ໃນນັ້ນ ກໍ່ມີຫຼາຍຢ່າງໄດ້ຮັບເອົາມາໂດຍຜ່ານພາສາຂະແມ.

III. ການສົ່ງຜົນຈາກຄຳທີ່ຢືມສູ່ພາສາ, ຄຳຢືມໃນບາງພາສາ

1. ຜົນສະທ້ອນຕໍ່ດ້ານຕ່າງໆ

ການຮັບເອົາຄຳຈາກພາສາອື່ນເຂົ້າມານັ້ນພາໃຫ້ພາສາມີການປ່ຽນແປງຫຼາຍຢ່າງ, ການປ່ຽນແປງນັ້ນຈະເປັນໄປໃນສອງທາງຄື: ທາງທີ່ດີ (positive) ແລະ ທາງທີ່ຮ້າຍ (negative). ການປ່ຽນແປງໃນລັກສະນະທີ່ຖືວ່າເປັນໄປໃນທາງດີນັ້ນກໍ່ຄື ໜຶ່ງ: ເປັນການນຳເອົາຄຳມາເພີ່ມໃຫ້ພາສາຕົນ ມີຈຳນວນຫຼາຍຂຶ້ນ ເພື່ອພຽງພໍກັບຄວາມຕ້ອງການໃຊ້. ສອງ: ເມື່ອນຳຄຳເຂົ້າມາກໍ່ມີຈິດສຳນຶກ (concept) ໃໝ່ໆ ຕາມເຂົ້າມາກັບຄຳນັ້ນໆ ໃນບາງຈິດສຳນຶກກໍ່ຈະເປັນສິ່ງໃໝ່ເຊິ່ງຕ່າງຈາກແບບເດີມທີ່ເຄີຍມີ, ພາສາກັບການເບິ່ງໂລກ ມີສິ່ງສ່ອງແສງ ແລະ ສຳພັນຕໍ່ກັນ ດັ່ງນັ້ນຈິດສຳນຶກທີ່ຕາມເຂົ້າມາກໍ່ເປັນຜົນໄປເຖິງການເບິ່ງໂລກໄປຕາມລັກສະນະທີ່ມີໃນຄຳນັ້ນໆ.

ໃນດ້ານທີ່ຖືວ່າເປັນໄປທາງຮ້າຍກໍ່ຄືໜຶ່ງ:ຄຳສັບໃນພາສາໄດ້ມີຄ່າທາງວັດທະນະທຳ ຮວມຢູ່ນຳ. ເມື່ອຮັບເອົາພາສາອື່ນເຂົ້າມາຫຼາຍເທົ່າໃດ ກໍ່ຍິ່ງສະແດງເຖິງການຍອມຮັບເອົາຄ່າ ທາງດ້ານວັດທະນະທຳ ສ່ວນນັ້ນເຂົ້າມາ ສອງ: ໃນກໍລະນີສິ່ງນັ້ນ ຄຳນັ້ນ ມີຢູ່ໃນພາສາຕົນແລ້ວ ແຕ່ກໍ່ໄປຮັບຄຳໃນຄວາມໝາຍດຽວກັນຈາກພາສາອື່ນເຂົ້າມາ ກໍ່ຈະພາໃຫ້ຄຳເດີມທີ່ມີໃນພາສາ ຕົນເກີດການປ່ຽນແປງ ຄື: ອາດຈະປ່ຽນໄປແບບຄວາມໝາຍເດີມ ຖືກແຄບເຂົ້າ ຫຼື ສູນເສຍໄປ ເລີຍ ໃນພາສາລາວກໍ່ມີປະກົດການນີ້ຕົວຢ່າງ ຄຳວ່າ: ດາຍໆ ໝາຍວ່າ ບໍ່ມີຫຍັງດັ່ງນີ້ ເປັນຕົ້ນ, ຕໍ່ມາເມື່ອນຳຄຳວ່າ ຟຣີ (free) ຈາກພາສາອັງກິດ ທີ່ມີຄວາມໝາຍດັ່ງດຽວກັນມາໃຊ້ໄດ້ ເຮັດ ໃຫ້ຄວາມໝາຍຄຳວ່າ ລ້າ ເຊິ່ງເຄີຍໃຊ້ໄດ້ ກວ້າງຂວາງໃນເມື່ອກ່ອນຖືກຫຼຸດລົງ ແຕ່ບໍ່ທັນເຖິງ ຂັ້ນວ່າສູນເສຍຄຳໄປ, ຄວາມໝາຍຂອງຄຳວ່າ ຟຣີ ກັບຄຳວ່າ ລ້າ ສາມາດນຳໃຊ້ໃນຫຼາຍບໍລິ ບົດ ເຊັ່ນ: ກິນຟຣີ ຄືກັນກັບວ່າ ກິນລ້າ ແຕ່ບາງບໍລິບົດກໍ່ໃຊ້ໃຫ້ຄືກັນບໍ່ໄດ້ ເຊັ່ນ : ເວົ້າລ້າ ຕ່າງ ກັນກັບຄຳວ່າ: ເວົ້າຟຣີ.

ອິດທິພົນຂອງຄຳຢືມມີຕໍ່ພາສານັ້ນ ສະຫຼຸບໄດ້ດັ່ງນີ້ :

1. ຜົນທີ່ມີຕໍ່ດ້ານສຽງ.
2. ຜົນທີ່ມີຕໍ່ວິງຄຳສັບ.
3. ຜົນທີ່ມີຕໍ່ຄວາມໝາຍ.
4. ຜົນທີ່ມີຕໍ່ການລຽງຄຳ.

24 / VII
ห้ามจำหน่าย

1) ຜົນສະທ້ອນທີ່ມີຕໍ່ດ້ານສຽງ

ການຮັບຄຳຈາກພາສາອື່ນເຂົ້າມານັ້ນ ມີຫຼາຍວິທີ ເຊັ່ນ ດ້ານການແປ, ດ້ານການຮັບ ເອົາພຽງຄວາມໝາຍ ແລະ ດ້ວຍວິທີທັບສັບ. ໃນສາມວິທີນີ້, ວິທີຮັບແບບທັບສັບ ທີ່ໝາຍເຖິງ ຮັບທັ້ງຮູບຄຳ, ສຽງ ແລະ ຄວາມໝາຍນັ້ນ ໄດ້ມີອິທິພົນບໍ່ໜ້ອຍຕໍ່ກັບຄຳໃນພາສາ. ການຮັບຄຳ ເຂົ້າມາ ຈຸດປະສົງຫຼັກ ກໍ່ຄືຮັບເອົາຄວາມໝາຍ ສ່ວນເລື່ອງສຽງນັ້ນ ເປັນສິ່ງທີ່ຕິດຕາມມາກັບ

ຄຳ. ແຕ່ເມື່ອສຽງນັ້ນ ມາປະກົດໃນພາສາຂອງຜູ້ຮັບ ຫາກໃນພາສາຂອງຜູ້ຮັບມີສຽງຢ່າງນັ້ນຢູ່ແລ້ວ ກໍ່ບໍ່ເກີດຄວາມຮູ້ສຶກວ່າຕົນໄດ້ຮັບສຽງນັ້ນມາ ແຕ່ກໍລະນີໃນພາສາຂອງຜູ້ຮັບບໍ່ມີສຽງນັ້ນ ກໍ່ຈະເກີດຄວາມຮູ້ສຶກທັນທີ ຕໍ່ກັບສຽງທີ່ຕິດຕາມມາອັນ ຈະພາໃຫ້ເກີດການປັບປ່ຽນ ດ້ວຍການໃຊ້ສຽງທີ່ໃກ້ຄຽງຂອງພາສາ ຜູ້ທີ່ຮັບເປັນສຳຄັນ.

ຕົວຢ່າງ: ໃນພາສາລາວ ບໍ່ມີໜ່ວຍສຽງພະຍັນຊະນະ / g / ແຕ່ໃນຄຳທີ່ຮັບມາ ເຊັ່ນ: Bungary, Bolga, Garage... ປາກົດວ່າ / g / ໃນທຸກຄຳໄດ້ຖືກປ່ຽນດ້ວຍສຽງ /k/ ອັນທີ່ມີໃນພາສາລາວໃຫ້ກັບ / g / ສະນັ້ນ ກໍ່ຈະໄດ້ຄຳ : ບູນກາຣີ, ໂວນກາ, ກາຣາ ໄປຢ່າງເປັນລະບົບ.

2) ຜົນສະທ້ອນທີ່ມີຕໍ່ວົງຄຳສັບ

ການຮັບຄຳຈາກພາສາອື່ນເຂົ້າມາ ໃນກໍລະນີໃດ, ວິທີໃດ ກໍ່ຈະມີຜົນຕໍ່ວົງຄຳສັບຢູ່ສະເໝີຄື: ທຳອິດຈະເປັນການເພີ່ມພູນວົງຄຳສັບ ໃຫ້ມີຈຳນວນຫຼາຍຂຶ້ນ ແຕ່ໃນນີ້ກໍ່ເຫັນໄດ້ວ່າ ຄຳທີ່ຮັບມາຫາກເປັນຄຳໃໝ່ ທີ່ແທນໃຫ້ຄວາມຄິດໃໝ່ກໍ່ຈະມີຜົນໂດຍກົງຕໍ່ການເພີ່ມພູນຄັງຄຳສັບໃນພາສາໃຫ້ເປັນໄປໃນທາງທີ່ດີຂຶ້ນ ແຕ່ໃນກໍລະນີນີ້ ຄຳທີ່ຮັບມາຫາກມີຄວາມໝາຍຊ້ຳ ກັບຄວາມໝາຍ, ສິ່ງ ແລະ ຄຳສັບທີ່ເຮົາມີແລ້ວ ກໍ່ຈະພາໃຫ້ເກີດກໍລະນີເຊັ່ນ ພາວະແຍ່ງທີ່ ຫຼື ຍາດບ່ອນຂອງຄວາມໝາຍເດີມ ການຍາດບ່ອນນັ້ນພາໃຫ້ຍາດເອົາທັງໝົດ ຫຼື ຍາດເອົາສ່ວນໃດສ່ວນໜຶ່ງ. ຫາກເປັນການຍາດເອົາທັງໝົດ ອາດຈະພາໃຫ້ຄຳທີ່ມີແລ້ວ ໃນພາສາເຮົາສູນເສຍໄປ, ຫາກເອົາສ່ວນໃດສ່ວນໜຶ່ງ ກໍ່ຈະພາໃຫ້ຄວາມໝາຍເດີມ ຖືກແບ່ງຍ່ອຍອອກໄປພາໃຫ້ຄວາມໝາຍເດີມທີ່ກວ້າງນັ້ນ ຖືກແຄບເຂົ້າເພາະມີຄຳອື່ນມາແຍ່ງ. ດັ່ງຄຳເດີມ ແລະ ຄຳທີ່ຮັບມາກໍ່ຈະເຄື່ອນໄຫວພາໃຫ້ມີໂອກາດຊ້ຳກັນ ຫຼື ກໍ່ບໍ່ຫຼົງກັນກໍ່ມີ.

ຕົວຢ່າງ: ໃນພາສາລາວມີ ຄຳວ່າ: ເດືອນ ຢູ່ແລ້ວ ເມື່ອຮັບຄຳວ່າ: ຈັນ ພະຈັນ ເຂົ້າມາເຊິ່ງກໍ່ມີຄວາມໝາຍອັນດຽວກັນກັບເດືອນ ກໍ່ພາໃຫ້ໃນຄວາມໝາຍ ນີ້ມີຄວາມຍ່ອຍເຖິງ 3 ຄຳ ແລະ ໃຊ້ໃນໂອກາດທີ່ຕ່າງກັນ.

ນອກນີ້ກໍ່ພົບວ່າ ຍັງມີຄຳຊຸມໜຶ່ງ ທີ່ຫາກໍ່ຮັບຈາກພາສາໄທເຂົ້າມາ ກໍ່ພາໃຫ້ເກີດພາວະເຊັ່ນນີ້ ຄື: ໃນພາສາລາວມີຄຳວ່າ ເຂົ້າດອກຊ້ອນ, ໃນພາສາໄທຮຽກວ່າ ເຂົ້າດອກມະລິ, ເມື່ອເຮົານຳເອົາຄຳວ່າ: ເຂົ້າມາລິ ມາໃຊ້ພາໃຫ້ຄຳວ່າ ເຂົ້າດອກຊ້ອນ ໄດ້ຫລຸດຂອບເຂດທາງຄວາມໝາຍລົງ.

3) ຜົນສະທ້ອນທີ່ມີຕໍ່ວິງຄວາມໝາຍ.

ອິດທິພົນທີ່ມີຕໍ່ຄວາມໝາຍນັ້ນ ນອກຈາກເລື່ອງທີ່ກ່າວມາໃນນີ້ແລ້ວ ກໍ່ຍັງພົບວ່າ: ຄຳຢືມຍັງມີອິດທິພົນຕໍ່ຄວາມໝາຍຂອງຄຳຢືມດ້ວຍກັນເຊັ່ນ : ຄວາມໝາຍຂອງຄຳທີ່ຢືມມາອາດສົ່ງຜົນໃຫ້ຄວາມໝາຍທີ່ມີແລ້ວປ່ຽນແປງ ແລະ ຕໍ່ມາເມື່ອຮັບຄຳຈາກພາສາອື່ນເຂົ້າມາເພີ່ມຫາກເປັນຄຳໃນກຸ່ມຄວາມໝາຍດຽວກັນ ກໍ່ຈະພາໃຫ້ຄວາມໝາຍທີ່ຢືມມາກ່ອນນັ້ນຖືກປ່ຽນແປງໄປໃນທາງໃດທາງໜຶ່ງ.

ຕົວຢ່າງ: ໃນພາສາລາວ ໄດ້ຮັບຄຳກ່ຽວກັບການແທກນ້ຳໜັກ ຈາກພາສາຈີນເດີມມາແລ້ວແຕ່ນານ ເຊັ່ນ ເບ້ຍ, ເຖ້ ຫຼື, ອັດ, ເຟີນ, ປິ, ເຊັ ດັ່ງນີ້ເປັນຕົ້ນ. ຕໍ່ມາກໍ່ໄດ້ຮັບຄຳວ່າ ກຣາມ, ກິໂລກຣາມ, ໂຕນ, ເຂົ້າມາພາໃຫ້ເກີດການປ່ຽນແປງໃນຄຳທີ່ຮັບມາແລ້ວຄື ພາໃຫ້ສູນເສຍ ລະລືມໄປກໍ່ມີ.ສ່ວນທີ່ຍັງໃຊ້ຢູ່ ກໍ່ໃຊ້ສະເພາະກັບບາງຢ່າງເທົ່ານັ້ນ ເຊັ່ນ : ນ້ຳໜັກຄຳ, ເງິນ ເປັນຕົ້ນ.

4) ຜົນສະທ້ອນທີ່ມີຕໍ່ການລຽງຄຳ

ໃນແຕ່ລະພາສາ ການຮັບເອົາຄຳຈາກພາສາອື່ນເຂົ້າມານັ້ນຄຳຕ່າງກັນບາງພາສາກໍ່ຮັບເອົາຄຳເປັນຈຳນວນຫຼາຍ ແລະ ອາດກາຍຈາກລະດັບຄຳ ເປັນລະດັບວະລີຈຳນວນໜຶ່ງ ເມື່ອ

ມີການຮັບເອົາເປັນຈຳນວນຫຼວງຫຼາຍເຊັ່ນນີ້ ຍ່ອມມີຜົນເຖິງການລຸງຄຳ ໃນໂຄງສ້າງປະໂຫຍກ ລະດັບຕ່າງໆໄດ້.

2. ການຢືມຄຳໃນບາງພາສາ

ດ້ວຍການສຶກສາສະພາບ ແລະ ອິດທິພົນຈາກພາຍນອກ ທີ່ພາໃຫ້ເກີດການຢືມຄຳນັ້ນ ພົບວ່າ ຫຼາຍໆພາສາທີ່ຄົນໃຊ້ ຢູ່ໃນໂລກປະຈຸບັນ ລ້ວນແຕ່ໄດ້ຮັບສະພາບ ແລະ ອິດທິພົນລະ ຫວ່າງກັນ ເວົ້າຢ່າງໜຶ່ງຄື: ຫຼາຍໆພາສາລ້ວນແຕ່ໄດ້ຮັບຄຳຈາກພາສາອື່ນເຂົ້າມາໃນພາສາຕົນ. ນັກພາສາສາດບາງຄົນກ່າວວ່າ ຈະຫາພາສາທີ່ບໍລິສຸດ ອັນໝາຍເຖິງພາສາທີ່ປອດການຮັບຄຳ ຈາກພາສາອື່ນເຂົ້າມາ ຫຼື ພາສາທີ່ບໍ່ມີຄຳຈາກພາສາອື່ນ ເຈືອປົນຢູ່ນັ້ນ ຄົງຈະບໍ່ມີ. ດ້ວຍການ ສຶກສາເອກະສານກ່ຽວກັບການຢືມຄຳໃນພາສາຕ່າງໆ ທີ່ພົບໄດ້ໃຫ້ຮູ້ວ່າ: ຄຳສັບກວ່າເຄິ່ງໜຶ່ງ ຂອງພາສາອັງກິດເປັນຄຳຢືມ, ພາສາສະວິດ(Swish)ໃນພາສາມີຄຳຢືມເຖິງ 75%, ພາສາອາມ ບານີ (Albania) ມີຄຳຢືມ 90% ແລະ ພາສາຟິນິສ (Finish) ມີ 20% ໃນພາສາມົ້ງໂກນ ມີ ຄຳຢືມຈາກພາສາ ອິນເດຍ, ຈີນ, ເມນຈູ,ໂອຍກາຣ, ຕິເບດ, ອາຣັບ, ຣັດເຊຍ, ລາຕິນ, ເກຣັກ, ຝຣັ່ງ, ອັງກິດ ແລະ ອື່ນໆ ຢ່າງຫຼວງຫຼາຍ. ໃນພາສາຂະແມ ກໍ່ມີຄຳຮັບມາຈາກພາສາອື່ນ ປະ ມານ 20%. ໃນພາສາໄທພົບວ່າ ຄຳສັບສ່ວນໃຫຍ່ເກີດມາຈາກຄຳຢືມ ໂດຍສະເພາະຄຳທີ່ໃຊ້ ໃນທາງວິຊາການຕ່າງໆ ເຊັ່ນ: ວິທະຍາສາດ, ສັງຄົມສາດ, ມະນຸດສາດ. ອັນທີ່ເຫັນໄດ້ແຈ້ງກໍ່ຄື ຄຳທີ່ໃຊ້ໃນທາງສາສະໜາ ແລະ ໃນວັນນະຄະດີ ມີຄຳຮັບຈາກສັນສະກິດ-ປາລີ ຫຼາຍກວ່າຄຳ ຈາກແຫຼ່ງອື່ນໆ, ນອກນີ້ ແຫຼ່ງທີ່ຮັບຄຳເຂົ້າມາ ທີ່ສຳຄັນກໍ່ຍັງມີ ພາສາຂະແມ, ຈີນ, ອັງກິດ, ລັງ ກາ, ຊວາມະລາຢູ...

ໃນພາສາລາວ ຕາມການສຳຫຼວດເບື້ອງຕົ້ນ ຈາກວັດຈະນານຸກົມພາສາລາວຈຳນວນ ໜຶ່ງກ່ຽວກັບຈຳນວນຄຳທີ່ຢືມ ແລະ ຄຳເດີມພາສາລາວໃນປີ 1986 ໂດຍຄະນະວິທະຍາສາດ ສັງຄົມ ຂອງກະຊວງສຶກສາທິການເຊິ່ງ ເກັບຈຳນວນຄຳແລ້ວຄິດໄລ່ເປັນສ່ວນຮ້ອຍພົບໄດ້ດັ່ງນີ້:

ຄຳລາວ	ມີປະມານ	67.56%
ຄຳປາລີ	ມີປະມານ	24.97%
ຄຳສັນສະກິດ	ມີປະມານ	5.90%
ຄຳຂະແມ	ມີປະມານ	0.53%
ຄຳຈີນ	ມີປະມານ	0.28%
ຄຳຝຣັ່ງ	ມີປະມານ	0.23%
ຄຳໄທສະຫຍາມ	ມີປະມານ	0.40%

ການເກັບສະຖິຕິ ຈຳນວນຄຳຂອງພາສາລາວ ທີ່ສະແດງຜົນໃນນີ້ ເຖິງຍັງບໍ່ເປັນການຢືນຢັນດ້ວຍຄວາມຊັດເຈນກໍ່ຕາມ ແຕ່ກໍ່ເປັນພື້ນຖານທາງດ້ານຂໍ້ມູນເພື່ອໃຫ້ຊາບຈຳນວນຄຳ ແລະ ແຫ່ງພາສາທີ່ເຮົາຮັບມາ, ເນື່ອງຈາກວ່າ ຂໍ້ມູນທີ່ໄດ້ຍັງມີຈຳນວນໜ້ອຍ ແລະ ບາງຄຳເຊິ່ງສົງໄສວ່າເປັນຄຳຢືມ ແຕ່ຜູ້ຮວບຮວມບໍ່ໄດ້ໃຫ້ສິ່ງໝາຍໄວ້ໃນເອກະສານພ້ອມນັ້ນ ການເກັບກຳກໍ່ເຮັດຂຶ້ນໃນຂັ້ນທົດລອງ ເຊິ່ງເອົາປຶ້ມວັດຈະນານຸກົມບາງເຫຼັ້ມເທົ່ານັ້ນເປັນຂໍ້ມູນ ສະນັ້ນ ການເກັບສະຖິຕິດັ່ງກ່າວກໍ່ຍັງສືບຕໍ່ເຮັດໃນຂັ້ນຕໍ່ໄປໄດ້ໂດຍວາງເປົ້າໝາຍໃໝ່ ແລະ ໃຊ້ຂໍ້ມູນໃຫ້ຫຼາຍກວ່າເກົ່າ.

IV. ການຈຳແນກພາສາ

ພາສາ ທີ່ປາກົດຢູ່ໃນໂລກຫຼາຍພັນພາສານັ້ນ ມີຈຳນວນຫຼາຍໄດ້ຮັບການສຶກສາໂດຍນັກ ພາສາສາດ ແລະ ກໍ່ມີຈຳນວນໜຶ່ງ ກໍ່ຍັງບໍ່ທັນໄດ້ຮັບການສຶກສາ.

ຂໍ້ມູນທີ່ໄດ້ຈາກການສຶກສາພາສາແຕ່ລະພາສານັ້ນ ນັກພາສາສາດພົບວ່າແຕ່ລະພາສາມີລັກສະນະສະເພາະທີ່ເປັນຂອງຕົນເອງ ເຊິ່ງແຕກຕ່າງກັບສ່ວນປະກອບອື່ນໆ ໃນນັ້ນກໍ່ພົບເຫັນລັກສະນະທີ່ຄ້າຍຄືກັນ ອັນເປັນສ່ວນທີ່ສືບເນື່ອງມາຈາກຕົ້ນກຳເນີດ ຫຼື ຮຽກວ່າຕົ້ນຕະກຸນ

ພາສາດຽວກັນ. ດ້ວຍເຫດນີ້ນັກພາສາສາດ ຈຶ່ງໄດ້ໃຫ້ຄຳເຫັນສຳລັບການຈຳແນກພາສາເພື່ອສາມາດຈັດພາສານັ້ນ ໃຫ້ເປັນກຸ່ມດຽວກັນ ຫຼື ອອກເປັນກຸ່ມຕ່າງກັນ .

ການຈຳແນກພາສາໂດຍໃຊ້ວິທີສັງເກດ ແລະ ປຽບທຽບລັກສະນະຂອງຄຳໃນແຕ່ລະພາສາໄດ້ເກີດຂຶ້ນໃນລະຫວ່າງສະຕະວັດທີ່ 19 ໂດຍນັກພາສາສາດ August Schlegel[1]. ການຈຳແນກໄດ້ຍຶດຕາມວິທີຄື: ຍຶດໜ່ວຍຄຳຂອງພາສານັ້ນໆເປັນຫຼັກ, ໂດຍພິຈາລະນາວ່າ ໜ່ວຍຄຳ ໝາຍເຖິງ ຫຍັງ ແລະ ມັນປະກອບຂຶ້ນເປັນຄຳໄດ້ແນວໃດ, ໃນເວລາປະກອບເຂົ້າເປັນຄຳນັ້ນ ໜ່ວຍຄຳເກີດການປ່ຽນແປ່ງຢ່າງໃດ, ແຕ່ລະໜ່ວຍຄຳສາມາດສື່ຄວາມໝາຍໄດ້ແນວໃດ, ຜ່ານການສຶກສາ ແລະ ຈຳແນກຕາມວິທີນີ້ ໄດ້ພາໃຫ້ສາມາດແບ່ງພາສາອອກເປັນຊະນິດໄດ້ດັ່ງນີ້:

I. ພາສາຊະນິດຄຳໂດດ (Isolating language)

ລັກສະນະຂອງພາສາທີ່ຈັດຢູ່ໃນກຸ່ມພາສາທີ່ເປັນປະເພດຄຳໂດດ ໄດ້ສະແດງອອກ ຄື: ຄຳພື້ນຖານ (Basic word) ໃນພາສາເປັນຄຳທີ່ມີພະຍາງດຽວ (Monosyllabic) ໜ່ວຍຄຳ ກັບການແບ່ງລະຫວ່າງພະຍາງ ຈະພົບວ່າມີຈຸດແບ່ງອັນດຽວກັນ, ເມື່ອຄຳແຕ່ລະຄຳ ນຳໄປປະກອບເປັນປະໂຫຍກ ຮູບຂອງຄຳ ແລະ ສຽງກໍ່ບໍ່ມີການປ່ຽນ.ພາສາລັກສະນະນີ້ ການແຍກໜ່ວຍປະສົມໃນ ຄຳ ຫຼື ໜ່ວຍຂອງປະໂຫຍກ ອອກເປັນໜ່ວຍຍ່ອຍໄດ້ງ່າຍ ເພາະວ່າແຕ່ລະຄຳ ເປັນອິດສະລະຕໍ່ກັນ.

ຕົວຢ່າງ: ຄຳໃນພາສາລາວ: ດິນ, ນ້ຳ, ລົມ, ໄຟ, ພໍ່, ແມ່, ອ້າຍ, ນ້ອງ....

---

[1] ປຣະຍູນ ຊິງສິນ: ການປ່ຽນແປງຂອງພາສາ. ພ.ສ. 2526. ໜ້າ 29.

ບັນດາພາສາ ໃນກຸ່ມທີ່ເປັນປະເພດຄຳໂດດນີ້ ມີ: ພາສາລາວ, ໄທ, ຈີນ, ຫວຽດນາມ ແລະ ອີກຫຼາຍພາສາ, ໃນພາກພື້ນອາຊີຕາເວັນອອກສຽງໃຕ້ (Southeast Asia) ລັກສະນະຂອງປະໂຫຍກພື້ນຖານຈະເປັນແບບ ປະທານ - ກິລິຍາ- ກຳ (SVO)

2. ພາສາຊະນິດທີ່ມີວິພັດ ປັດໄຈ (Inflectional language)

ລັກສະນະຄຳໃນພາສາທີ່ມີວິພັດປັດໄຈປະກອບຂຶ້ນດ້ວຍໜ່ວຍຄຳຫຼາຍໜ່ວຍ ແຕ່ລະໜ່ວຍ ເມື່ອປະກອບເຂົ້າກັນເປັນຄຳ ຈະເກີດການປ່ຽນແປງບາງສ່ວນໃນຮູບຄຳແຕ່ລະສຽງ ການຈະແຍກຄຳ ແຕ່ລະໜ່ວຍຄຳອອກຈາກກັນຈະບໍ່ງ່າຍ ເພາະແຕ່ລະໜ່ວຍຄຳມີການຜູກພັນກັນ ເຊິ່ງເອີ້ນວ່າ ໜ່ວຍຄຳຜູກພັນກັນ (bound form) ພ້ອມກັນນີ້ ກໍ່ຈະມີໜ່ວຍຄຳຕື່ມເຂົ້າດ້ານທ້າຍມີຫຼາຍໆໜ່ວຍ.

3. ພາສາຊະນິດຄຳຕິດ (Agglutinative language)

ລັກສະນະຂອງຄຳໃນພາສາປະເພດນີ້ຈະມີຄຳເກີນສອງໜ່ວຍປະກອບຕິດກັນ ຫາກແຕ່ລະໜ່ວຍແຍກກັນໂດຍມີຮູບ ແລະ ມີສຽງສະເພາະຕົວບໍ່ປົນເປກັນ. ການປະກອບຂອງຄຳລັກສະນະນີ້ ເອີ້ນເປັນການຕື່ມຄຳ (Affixation) ໄດ້ແກ່ prefix, Infix, ແລະ suffix ຄື: ອັນທີ່ຕື່ມດ້ານໜ້າ, ດ້ານກາງ ແລະ ສ່ວນທ້າຍ.

ຄວາມແຕກຕ່າງກັນລະຫວ່າງພາສາ ທີ່ມີວິພັດປັດໄຈ ແລະ ພາສາທີ່ເປັນຄຳຕິດນີ້ມີຄື: ໃນພາສາມີຄຳເດີມ (base word) ຄຳໃດໜຶ່ງ ເປັນຕົວຕັ້ງ ແລະ ນຳເອົາຄຳທີ່ປະກອບມາຕື່ມເຂົ້າກັນກັບຄຳນັ້ນໂດຍຄຳເດີມ ແລະ ຄຳທີ່ນຳມາຕື່ມຕ່າງກໍ່ຍັງຮັກສາຮູບ ແລະ ສຽງເໝືອນເກົ່າ, ສາມາດສັງເກດເຫັນສ່ວນຄຳເດີມ ແລະ ສ່ວນທີ່ຕື່ມ ໄດ້ຈະແຈ້ງ.

ຕົວຢ່າງ: ບາງຄຳໃນພາສາຂະແມ

/ baŋkaət / ບັງເກີດ = ເຮັດໃຫ້ເກີດ[2]

/ ʔamnuoj ອຳນວຍ = ການໃຫ້, ຂອງໃຫ້.

ທັງສອງຄຳໃນນີ້ປະກອບດ້ວຍໜ່ວຍຄຳສອງໜ່ວຍຄື: ໜ່ວຍຄຳເດີ່ມ ແລະ ໜ່ວຍຄຳຕື່ມ ເຊິ່ງແຕ່ລະສ່ວນເມື່ອນຳມາຮວມກັນກໍ່ຈະໄດ້ຄຳທີ່ສົມບູນ, ໃນນີ້ ກໍ່ສັງເກດເຫັນລັກສະນະຂອງແຕ່ລະສ່ວນ ທີ່ເປັນໜ່ວຍຂອງຄຳໄດ້ຄື :

ຄຳ: / baŋkaət /[3] ໃນນີ້: / baŋ/ ໝາຍເຖິງ ເຮັດໃຫ້.

/ kaət / ໝາຍເຖິງ ເກີດ.

ຄຳ: / ʔamnuoj /[4] ໃນນີ້: / ʔam / ເປັນໜ່ວຍທີ່ມີໜ້າທີ່ປ່ຽນຄຳກິລິຍາເປັນຄຳນາມ

/ nɑoj / ໝາຍເຖິງ: ໃຫ້.

ພາສາໃນກຸ່ມທີ່ເປັນຄຳຕິດນີ້ໄດ້ແກ່ພາສາມາລາຢູ, ພາສາທາມິນ, ພາສາເກົາຫຼີ, ມົງໂກນ, ພາສາໃນຕະກຸນ ມອນ-ຂະແມ ຫຼາຍໆ ພາສາ.

4. ພາສາຊະນິດຫຼາຍພະຍາງໃນຄຳ (Incorporative language)

ລັກສະນະຂອງພາສາຫຼາຍພະຍາງໃນຄຳນີ້ ເປັນພາສາທີ່ເອົາໂຕຕັ້ງ, ກິລິຍາ ແລະ ໂຕປະກອບ ພ້ອມກັບລັກສະນະທາງໄວຍາກອນຫຼາຍໆຢ່າງໄປຮວມເຂົ້າກັນໃນຄຳນັ້ນໆ ເປັນຄຳດຽວ ສະນັ້ນ ລັກສະນະຂອງຮູບຄຳ ຈຶ່ງເໝືອນລັກສະນະຂອງປະໂຫຍກ. ເນື່ອງດ້ວຍ ເປັນຮູບ

---

[2] ປຣະຍູນ ຊິງສິນ ການປ່ຽນແປງຂອງພາສາ. ພ.ສ. 2526. ໜ້າ 134.

[3;4] ປຣະຍູນ ຊິງສິນ ການປ່ຽນແປງຂອງພາສາ. ພ.ສ. 2526. ໜ້າ 134.

ຄຳທີ່ຍາວດ້ວຍຫຼາຍໜ່ວຍຄຳ; ພ້ອມນີ້ລັກສະນະທັງໝົດ ກໍ່ຈະສະແດງອອກໃນລັກສະນະຂອງ ຮູບປະໂຫຍກ ເຊັ່ນ: ທັງປະທານ ແລະ ກຳ ມາສະແດງອອກໃນສ່ວນທີ່ເປັນ ກິລິຍາທັງນັ້ນ.

ຕົວຢ່າງ: ຄຳ ໃນພາສາ ອາຊີເຕັກ (ເມັກຊິກໂກ).

1. / ku /	ໝາຍ ເຖິງ	ລາວກຳລັງກິນ (he eats) [5]
/ ku wạ /		ພວກເຈົ້າກິນ (you (pl.) eat)
/ kṵ /		ຂ້ອຍກິນ (I eat)
/ ku' /		ເຈົ້າກິນ you (sg.) eat
2. / ta' /		ເຈົ້າໃຫ້ you (sg.) give
/ nda wạ/		ພວກເຈົ້າກຳລັງເອົາໃຫ້ you (pl.) are giving
/ nda' /		ເຈົ້າກຳລັງໃຫ້ you (sg.) are giving

5. ການຈັດຊະນິດພາສາແບບອື່ນໆ

ການຈັດແບ່ງ ຫຼື ການຈຳແນກພາສານີ້ ໃນໄລຍະຕໍ່ມາກໍ່ມີນັກພາສາສາດບາງຄົນ ເຊິ່ງ ມີແງ່ມອງທີ່ແຕກຕ່າງຈາກອັນທີ່ສະເໜີມາບາງຢ່າງ, ໂດຍເຫັນໄປໃນແງ່ທີ່ວ່າພາສາທັງຫຼາຍ ຕ່າງກໍ່ຍັງມີລັກສະນະຮ່ວມກັນບາງຢ່າງ ເມື່ອສັງເກດໃນແຕ່ລະພາສາກໍ່ຈະພົບວ່າ ມີຄຳຫຼາຍປະ ເພດຮ່ວມຢູ່ນຳ.ໂດຍສະເພາະໃນພາສາທີ່ເປັນຄຳຕິດ, ຄຳຫຼາຍພະຍາງ ແລະ ພາສາທີ່ມີວິພັດ ປັດໄຈຕ່າງໆກໍ່ຍັງມີຄຳໂດດຮ່ວມຢູ່ໃນນັ້ນເຊັ່ນກັນ. ດັ່ງນັ້ນ ໃນສະຕະວັດທີ່ 20 ທ່ານ Eward

---

[5] ຕົວຢ່າງຈາກປຶ້ມ: ລະບົບຄຳ: ກົມມະລາ ນາຄະສີລິ. ພາກພາສາສາດ. ມ. ກະເສດສາດ. ພ.ສ. 2539. ໜ້າ 48.

Sapir[6] ได้สะเหนีอีหิจำแนกพาสาเป็นอีกแบบหนึ่งที่ต่างจากสะเหนีมา โดยได้สะแดง ความคิดเห็นไว้ 4 ปะการคือ:

1. ความคิดเบื้องต้นจะเกิดแก่สิ่งที่เป็นรูบปะหำทั่งหลายก่อน นับทั่งตัวที่เป็น วัดถุ หรี การนกะหำ, ลักสะนะต่างๆ ตัวอย่าง: ดิน, นำ้, ลม,ไฟ, นอน, นั่ง, ไป, มา, สั้น, ยาว, สูง, ตำ่, จ่อย, ผอม ...
2. ความคิดในการผันความหมายในคำเชื่น: จากคำว่า ไว มาสู่คำว่า ความ ไว, จากคำว่า งาม มาสู่คำว่า ความงาม หรี จากคำว่า ไป มาสู่ การไป และ กิน มาส่ การกิน ...
3. ความคิดในรูบปะหำที่มีความสำพันกัน, เป็นความสำพันที่บ่แม่นคำดียว กันตัวอย่าง: คำในพาสาลาแต้ง vi: di: virum bonum (เรำได้เห็นดีมดี) ในนี้จุดสังเกดอยู่ที่ / um / ในคำ virum และ bonum เห็นว่ามีความสำ พันกัน.
4. ความคิดที่สะแดงความสำพันในสิ่งที่เป็นนามมะหำ เชิ่งแม่นความคิด ล้อมๆ ความคิดนี้เป็นการนำเอาความคิดที่เป็นรูบปะหำนั้นเชื่อมเข้ำกัน ในการเชื่อมนั้นจะบอกให้รู้ว่า ตัวใดเป็นตัวตั้ง และ ตัวใดที่เป็นตัวมา เชื่อมเข้ำ, การรู้ได้นี้แม่นรู้ได้จากลำดับที่อยู่ของคำ ในชุดของคำที่ให้มา เป็นชุด (ปะโหยก) จะรู้ว่าตัวใดเป็นตัวปะทาน, ตัวใดเป็นกิลิยา และ ตัวใดเห็นตัวกำ ตัวอย่าง: เรำรักเด็กน้อย สะแดงว่า: เรำเป็นผู้กะหำ แต่ ถ้าลำดับที่อยู่ของรูบปะหำตัวนี้ปุ่นจากหน้าที่เป็นตัวหัก ด้วยการนำเอาคำ ว่า เด็กน้อย มาแทนก่จะให้รู้ว่า: เด็กเป็นตัวกะหำ ก่จะเกิดการปุ่นตัว กะหำคือ: เด็กน้อยรักเรำ.

---

[6] ประยูน ชิงสิน การปุ่นแปงของพาสา: พ.ส. 2526. หน้า 32-34.

ຄວາມຄິດໃນຂໍ້ 1 ແລະ ຂໍ້ 4 ເປັນຄວາມຄິດທີ່ຮຽກວ່າ: ເປັນສາກົນ ຫຼື ລັກສະນະສາກົນໃນພາສາ, ສ່ວນໃນຄວາມຄິດຂໍ້ທີ 2 ແລະ 3 ນັ້ນ ພົບວ່າ ເປັນແບບສະເພາະຊຶ່ງປາກົດມີໃນບາງພາສາເທົ່ານັ້ນ. ຈາກຄວາມຄິດເຫັນທີ່ Eward Spir ສະເໜີນັ້ນ ກໍ່ສາມາດນຳມາຈຳແນກພາສາອອກເປັນປະເພດໄດ້ 4 ປະເພດດັ່ງນີ້:

1. ພາສາເຊິ່ງສະແດງຄຳຄິດຕາມຂໍ້ທີ່ 1 ແລະ 4
2. ພາສາເຊິ່ງສະແດງອອກຄວາມຄິດຂໍ້ 1, 2 ແລະ 4
3. ພາສາເຊິ່ງສະແດງອອກຄວາມຄິດຂໍ້1, 3 ແລະ 4
4. ພາສາເຊິ່ງສະແດງອອກຄວາມຄິດຕາມຂໍ້ 1 ເຖິງ 4

ໃນນີ້ ສັງເກດເຫັນວ່າ: ຂໍ້ທີ 4 ຈະກ່ຽວກັບທຸກຊະນິດຂອງພາສາ, ນັກພາສາສາດ ທ່ານ Joseph H. Greenberge[7] ໄດ້ສັງເກດລັກສະນະໃນການລຽງຄຳໃນປະໂຫຍກຂອງພາສາຕ່າງໆ ແລະ ພົບເຫັນຄວາມແຕກຕ່າງໃນສ່ວນທີ່ເປັນປະໂຫຍກຫຼັກ ຫຼື ປະໂຫຍກພື້ນຖານ ເຊິ່ງມີການລຽງຄຳຕາມແບບໜຶ່ງສະເພາະ. ຈາກນີ້ຈຶ່ງສະຫຼຸບເອົາບັນດາແບບສະເພາະຂອງປະໂຫຍກທີ່ພົບນັ້ນ ແລ້ວນຳມາແບ່ງພາສາອອກໄດ້ 3 ຊະນິດ ຄື:

1 ຊະນິດປະທານ, ກຳ, ກິລິຍາ, SOV
2 ຊະນິດປະທານ, ກິລິຍາ, ກຳ, SVO
3. ຊະນິດ ກິລິຍາ, ປະທານ, ກຳ, VSO

ການຈຳແນກພາສາຕາມລັກສະນະນີ້ ບໍ່ໄດ້ໝາຍຄວາມວ່າ ໃນພາສາໜຶ່ງໆຈະມີແບບໂຄງສ້າງຂອງປະໂຫຍກຢ່າງດຽວຕະຫຼອດ. ໃນນັ້ນ ຍັງພົບວ່າມີແບບປະໂຫຍກຢ່າງອື່ນໆກໍ່ຖືກນຳມາໃຊ້ເຊັ່ນກັນ. ການຈຳແນກພາສາເຊັ່ນນີ້ ແມ່ນອີງໃສ່ວິທີແບບຈັດລຽງຄຳສ່ວນໃຫຍ່ໃນພາສາ ແລະ ກາຍເປັນປະໂຫຍກພື້ນຖານໃຫ້ແກ່ພາສານັ້ນໆ ເປັນສຳຄັນ, ສ່ວນການເຄື່ອນໄຫວໃນ

---

[7] Joseph Greenberg: Universals of Language. P 73_113.

ການໃຊ້ນັ້ນ ກໍ່ຈະພົບແບບຈັດລຽງພາສາຫຼາຍແບບສະຫຼັບກັນໄປ ຕົວຢ່າງ ໃນພາສາລາວມີໂຄງ ສ້າງປະໂຫຍກພື້ນຖານຄື VSO ແຕ່ຫຼາຍຄັ້ງກໍ່ຈະພົບແບບ ປະໂຫຍກຢ່າງອື່ນຄື

1. ຂຶ້ນຕົ້ນດ້ວຍກໍາຕາມດ້ວຍປະທານ ແລະ ກິລິຍາ ເຊັ່ນ: ເດັກຖືກລົດຕໍາ, ໝູຖືກເສືອ ກັດ.(osv)...
2. ຂຶ້ນຕົ້ນດ້ວຍ ກິລິຍາ ຕໍ່ດ້ວຍກໍາ ແລະ ປະທານ ເຊັ່ນ: ເກີດຝົນລົມໝາກເຫັບຕົກ ຢ່າງໜັກທີ່ເມືອງປາກທອກຂອງແຂວງສະຫວັນໄຊ.
   ແລະ ຕົວຢ່າງອື່ນໆ.

ການຈໍາແນກພາສາ ໂດຍສັງເກດຈາກລັກສະນະການຈັດລຽງຄໍາໃນປະໂຫຍກຂອງແຕ່ ລະພາສານີ້ ພາໃຫ້ຮູ້ໄດ້ເຖິງລັກສະນະຂອງແຕ່ລະພາສາ ເຊິ່ງມີສິ່ງທີ່ຮວມກັນ ຫຼື ຮຽກວ່າ ລັກສະ ນະທາງສາກົນຂອງພາສາໄດ້ ອັນຈະເປັນຜົນຕໍ່ກັບການສຶກສາປຽບທຽບລະຫວ່າງພາສາເພື່ອໃນ ການຄົ້ນຄວ້າ ຫຼື ເພື່ອການຮຽນຮູ້ ແລະ ນໍາໃຊ້.

ນອກຈາກວິທີນໍາໃຊ້ຈໍາແນກພາສາທີ່ໄດ້ສະເໜີມາຍັງມີວິທີຈໍາແນກອີກແບບໜຶ່ງໄດ້ແກ່ ວິທີຈໍາແນກໂດຍອາໄສຄວາມສໍາພັນຂອງພາສາ ເຊິ່ງໃຊ້ການທຽບສຽງໂດຍຈະນໍາຄໍາເດີມຊຸມ ໜຶ່ງມາສົມທຽບກັບໜ່ວຍສຽງຂອງພະຍັນຊະນະ, ສະຫຼະຂອງອີກພາສາໜຶ່ງ ເພື່ອເບິ່ງວ່າຈະ ມີຄວາມຄື ຫຼື ກົງກັບສຽງໃດ ໃນພາສາທີ່ນໍາມາທຽບ, ການປຽບທຽບທໍາອິດ ກໍ່ຈະເອົາພາສາທີ່ຖື ວ່າ ມີຄວາມໃກ້ຄຽງກັນ ຫຼື ສືບທອດຈາກກັນມາແຕ່ຄາວເດີກໍ່ບັນທຶກໄວ້ ແລະ ວັດທະ ນະທໍາຮ່ວມກັນມາ. ການປຽບທຽບແບບນີ້ ກໍ່ຈະຊ່ວຍໃນການເບິ່ງເຫັນພາສາເພື່ອຈັດກຸ່ມໃຫ້ເປັນ ຕະກູນໆໄດ້ດີຂຶ້ນ.

ການຈໍາແນກພາສາໂດຍວິທີປຽບທຽບສຽງນີ້ກໍ່ເປັນວິທີ່ດີ ແຕ່ວ່າການຈະເຮັດໃຫ້ຄົບແກ່ ທຸກພາສາໃນໂລກກໍ່ເປັນໄປໄດ້ຍາກ ເນື່ອງຈາກຈໍານວນພາສາມີຕັ້ງຫຼາຍພັນພາສາ ທັງຢູ່ແຈກ ຢາຍມີ ບາງກຸ່ມໃຫຍ່ ແລະ ບາງກຸ່ມກໍ່ນ້ອຍໆ, ຖ້າຫາກເຮັດການປຽບທຽບໄດ້ບໍ່ທົ່ວເຖິງທຸກພາ ສາ ກໍ່ຈະເຮັດໃຫ້ການຈັດກຸ່ມໄດ້ບໍ່ສົມບູນ. ເພື່ອລໍການປຽບທຽບຈົນຄົບໄຄ່ວ ກໍ່ຈະບໍ່ສາມາດກໍາ ນົດວ່າຈະໃຊ້ເວລາດົນປານໃດຈຶ່ງຈະແລ້ວ. ນອກນີ້ກໍ່ຍັງມີອີກຫຼາຍເລື່ອງທີ່ຖືວ່າຈະເປັນບັນຫາ

ໃຫ້ແກ່ການຈຳແນກພາສາຕາມວິທີນີ້. ແຕ່ເຖິງຢ່າງໃດມາເຖິງປະຈຸບັນນັກພາສາສາດກໍ່ລ້ຽງ ຄວາມເຫັນທີ່ສາມາດຮັບຮອງໃນການຈັດແບ່ງພາສາເປັນຕະກຸນທີ່ສຳຄັນຕາມວິທີນີ້ ແລະ ຈັດ ຕະກູນພາສາຕ່າງໆໄດ້ດັ່ງນີ້:

1). ພາສາຕະກູນອິນດູ - ຢູຣົບ (Indo European)

ພາສາຕະກຸນນີ້ເປັນພາສາກຸ່ມໃຫຍ່ ເຊິ່ງຮວມເອົາຫຼາຍພາສາໃນແຖບທະວີບຢູຣົບ ຮວມທັ້ງພາສາອິນເດຍສ່ວນໜຶ່ງ ແລະ ອີຣານສ່ວນໜຶ່ງ, ລັກສະນະລວມຂອງພາສາຊຸມທີ່ຖືກ ຈັດເປັນກຸ່ມໃນຕະກຸນນີ້ຄື: ເປັນພາສາທີ່ມີວິພັດປັດໄຈ, ຄຳໃນພາສາປ່ຽນຮູບ ໂດຍມີຄຳຕິ່ມເຊິ່ງ ສະແດງອອກເຖິງການເວລາ, ເພດ, ພົດ, ມາລາ, ແລະ ບຸລຸດ ເປັນຕົ້ນ. ພາສາທີ່ສຳຄັນໃນຕະ ກຸນນີ້ໄດ້ແກ່ ພາສາອັງກິດ, ແອັສປາຍ, ເຢຍລະມັນ, ເປີເຊຍ, ຣັດເຊຍ, ບາລີ, ສັນສະກິດເປັນ ຕົ້ນ.

2). ພາສາຕະກູນ ເຮມີໂຕ - ເສມີຕິກ (Hemito Semitic)

ໃນຕະກຸນນີ້ ຮວມມີພາສາທີ່ປາກໃນເຂດລະຫວ່າງແດນອາຟຣິກກາ ແລະ ອາຊີ. ກຸ່ມ Hemito ມີພາສາກອບຕິກ (Coptic) ເຊິ່ງເປັນພາສາພື້ນເມືອງເອຢິບ, ພາສາໂຊມາລີ (Somali) ຂອງປະເທດໂຊມາລີ. ສ່ວນກຸ່ມ Semitic ມີຜູ້ປາກຢູ່ແຖບອາຊີກາງ ອັນເປັນເຂດທີ່ ຕິດຕໍ່ ຂອງອາຟຣິກກາ ຄື: ພາສາຮິບຣູ (Hipru) ໃນອິສຣາແອນ, ພາສາອາຣັບເຂດໃນຕາວັນ ອອກກາງ, ພາສາກຸ່ມນີ້ ມີບົດບາດ ໃນທາງສາສະໜາມາຕັ້ງແຕ່ນານ, ເຂົາເຈົ້າເຄີຍໃຊ້ພາສາ ຊຸມນີ້ ບັນທຶກຄຳພີ ກຣຸອານ ຂອງສາສະໜາອິສະລາມ.

3). ພາສາຕະກຸນ ຈີນ-ຕິເບດ (Sino Tibeton)

ພາສາຕະກຸນນີ້ເປັນກຸ່ມໃຫຍ່ສົມຄວນໃນແຖບອາຊີຕາເວັນອອກ, ໃນຕະກຸນນີ້ ກໍ່ຈັດເປັນສອງກຸ່ມຄື: ກຸ່ມເຊນີຕິກ (senitic) ປະກອບດ້ວຍພາສາຈີນເກືອບທຸກກຸ່ມເຊັ່ນ: ຈີນກຸ່ມກາງ (mandarin), ກວາງຕຸ້ງ, ໄຕຫວັນ, ຊຽງໄຮ ແລະ ອື່ນໆ. ກຸ່ມຕິເບດຮວມມີພາສາຕິເບດ, ພະມ້າ (ມຽນມາ), ພາສາກະຊິນ ແລະ ພາສາຂອງເຜົ່ານ້ອຍໃນເຂດພະມ້າ, ເຂດພາກເໜືອລາວ.

4). ພາສາຕະກູນໄຕ (Tai)

ໃນກ່ອນນີ້ ນັກພາສາສາດໄດ້ຈັດພາສາໄຕໄວ້ກັບກຸ່ມ (Sino-Tibeton) ແຕ່ເມື່ອມີການສຶກສາປຽບທຽບລະຫວ່າງພາສາໃນແຕ່ລະສ່ວນໄດ້ພົບວ່າ ພາສາກຸ່ມໄຕມີລັກສະນະການແຕກຕ່າງກັບພາສາກຸ່ມ SinoTibet ຢ່າງເດັ່ນຊັດເຊັ່ນ ເລື່ອງຄຳພື້ນຖານ, ສຽງວັນນະຍຸດ, ໜ່ວຍສຽງພະຍັນຊະນະ, ຄຳສັບເປັນຕົ້ນ. ສ່ວນທີ່ມີຄວາມຄືນັ້ນ ກໍ່ມີພຽງໃນສ່ວນທີ່ໄດ້ຮັບຜົນສະທ້ອນຈາກການທີ່ຢູ່ໃກ້ຄຽງກັນດົນ, ພາໃຫ້ເກີດການຢືມດ້ານໃດໜຶ່ງ ຫຼື ຢືມພຽງບາງຢ່າງ ຈາກນັ້ນ ຈຶ່ງໄດ້ແຍກພາສາກຸ່ມນີ້ອອກເປັນກຸ່ມຕ່າງຫາກ ຄື: ພາສາຕະກຸນໄຕ (Tai language family).

ພາສາໃນຕະກຸນນີ້ມີຜູ້ປາກທີ່ສຳຄັນໄດ້ແກ່: ລາວ, ໄທ, ໄຕດຳ, ໄຕແດງ, ໄຕຂາວ, ລື້, ອາຫົມ, ຊານ, ໂປອາຍ, ແລະ ຈູມິ. ພາສາທີ່ສະເໜີນີ້ ມີຢູ່ເຂດພາກໃຕ້ຂອງຈີນ, ພາກເໜືອຂອງມຽນມາ, ພາກຕາເວັນອອກຂອງອິນເດຍ ແລະ ໃນຫວຽດນາມ.

5). ພາສາຕະກູນ ມອນ - ຂະແມ (Mon-Khmer)

ກຸ່ມພາສານີ້ ມີແຫ່ງສຳຄັນຢູ່ໃນເຂດອາຊີອາຄະເນ ແລະ ມີຄວາມໜາແໜ້ນໃນຫຼາຍປະເທດເຊັ່ນ ກຳປູເຈຍ, ລາວ, ສ່ວນໜຶ່ງໃນໄທ, ຫວຽດນາມ ແລະ ມຽນມາ. ໃນນີ້ ໄດ້ແກ່ພາສາຂະແມ, ພາສາຂະມຸ, ພາສາເມືອງ, ພາສາສ່ວຍ, ຍຸຣຸ, ກາລຽງ, ມາກອງ, ລະແວ ແລະອື່ນໆ.

6). ພາສາຕະກູນ ອິສໂຕຣ- ເອເຊຍຕິກ (Austro Asiatic)

ພາສາຕະກຸນນີ້ຜ່ານມາເຄີຍເອີ້ນເປັນສອງຊື່ ຄື: ມະລີໂອ ແລະ ໂປລີເນເຊຍ (Malyo Polynesia). ກຸ່ມນີ້ກໍ່ເປັນກຸ່ມພາສາທີ່ໃຫຍ່ ແລະ ແຈກຢາຍຢູ່ເປັນບໍລິເວນກວ້າງ ເຊິ່ງນັບແຕ່ປະເທດມາເລເຊຍລົງໄປເຖິງອິນໂດເນເຊຍ ຮວມເອົາບັນດາໝູ່ເກາະຕ່າງໆໃນຂົງເຂດມະຫາສະມຸດປາຊີຟິກຕອນໃຕ້ຈົນເຖິງ ຟີລິບປິນ ແລະ ລາມໄປເຖິງບາງປະເທດໃນແຖບມາດາສະກັສກາ ແລະ ທາງພາກຕາເວັນອອກສຽງໃຕ້ຂອງອາຟຣິກກາມຳດ້ວຍ. ພາສາໃນກຸ່ມນີ້ມີພາສາຊວາ, ພາສາມາເລ, ພາສາຕາກາລອກ, ພາສາທີ່ໃຊ້ໃນເກາະຊາມວນ, ຟີຈີ ແລະ ຮາວາຍ.

7). ພາສາຕະກູນ ດຣາວິດຽນ: (Dravidian)

ໄດ້ແກ່ພາສາຂອງຊາວດຣາວິດຽນ ທີ່ຢູ່ພາກໃຕ້ຂອງປະເທດອິນເດຍ ຄື: ພາສາຊາວທາມິນ, ເຕຣູດູ, ມາລາຍາລຳ ເປັນຕົ້ນ.

8). ພາສາຕະກູນ ປາປວນ (Papuan).

ໃນຕະກຸນນີ້ ແບ່ງເປັນ ສອງກຸ່ມໄດ້ແກ່ກຸ່ມ ອິສະຕຣາລຽນ (Australian) ເຊິ່ງມີພາສາຂອງຊາວພື້ນເມືອງໃນອິສຕຣາລີ ສ່ວນກຸ່ມທີ່ສອງໄດ້ແກ່ກຸ່ມປາປວນ (Papuan) ໄດ້ແກ່ພາສາທີ່ໃຊ້ເວົ້າກັນໃນເກາະ ປາປວນ ແລະ ນິວກີນີ ແຖບອິສຕຣາລີ.

9). ພາສາຕະກູນ ນີເກຍ ກົງໂກ (Niger Congo)

ເປັນພາສາກຸ່ມທີ່ໃຊ້ກັນໃນທະວີບອາຟຣິກກາເຊັ່ນ ພາສາກາ (Ga) ເຊິ່ງປາກໃນປະເທດການາ (Chana) ພາສາໂຢຣຸມບາ (Yoruba) ແລະ ອີໂປ (Igbo) ໃນປະເທດຈີເຣຍ, ພາສາສວາຮີລີ (Swahili) ເປັນພາສາກຸ່ມໃຫຍ່ທີ່ໃຊ້ຢ່າງກວ້າງຂວາງໃນພາກຕາເວັນອອກຂອງອາຟຣິກກາ.

10). ພາສາຕະກູນອື່ນໆ

ຍັງມີພາສາຕະກຸນອື່ນບາງຕະກຸນທີ່ໃຊ້ປາກກັນຢູ່ແຖບທະວີບອາຟຣິກກາເໜືອ ແລະ ອາເມລິກາໃຕ້. ພາສາໃນກຸ່ມນີ້ ທີ່ຮູ້ຈັກກັນດີກໍ່ຄື: ພາສາຊາວອິນເດຍແດງ, ເຊິ່ງເປັນຊາວພື້ນເມືອງທີ່ມີຈຳນວນຄົນຫຼາຍ ແລະ ມີພາສາພື້ນເມືອງຂອງຊາວອາຟຣິກກາທີ່ເຂົ້າໄປຢູ່. ພາສາໃນພາກພື້ນນີ້ ໄດ້ປະກອບຈາກພາສາຕ່າງໆຈາກທີ່ສະເໜີມາ ຕົວຢ່າງ ພາສາປາປວມ ກໍ່ເປັນພາສາຂອງຊາວເປີເຊຍ ເຊິ່ງກໍ່ເປັນຊາວອິນເດຍແດງ ພວກໜຶ່ງ.

6. ການຈັດແບ່ງກຸ່ມໃນພາສາຕະກຸນໄຕ.

ບັນດານັກພາສາສາດຜູ້ເຊິ່ງໄດ້ສຶກສາພາສາຕ່າງໆໃນຕະກຸນໄຕໄດ້ຈັດແບ່ງພາສາເຫຼົ່ານັ້ນອອກເປັນຫຼາຍກຸ່ມດ້ວຍກັນ, ການຈັດແບ່ງກຸ່ມນີ້ໄດ້ອີງໃສ່ຄວາມສຳພັນທາງພາສາ ແລະ ລັກສະນະທາງພາສາທີ່ມີຄວາມໃກ້ຄຽງກັນຫຼາຍຢ່າງເປັນຫຼັກເຊັ່ນ ລັກສະນະຂອງໜ່ວຍສຽງພະຍັນຊະນະ ສະຫຼະ ແລະ ສຽງວັນນະຍຸດ, ລັກສະນະທີ່ຄື ແລະ ຄວາມໃກ້ຄຽງດ້ານຮູບຄຳ ພ້ອມຄວາມໝາຍຂອງຄຳ ກັບການໃຊ້ຄວາມໝາຍນັ້ນໆ ເປັນຕົ້ນ.

Fang kuei Li (1977)[1] ຜູ້ທີ່ໄດ້ສຶກສາພາສາຖິ່ນຕະກຸນໄຕ ໄດ້ຈັດບັນດາພາສາໃນຕະກຸນນີ້ ອອກເປັນ 3 ກຸ່ມຄື ກຸ່ມເໜືອ, ກຸ່ມກາງ ແລະ ກຸ່ມຕາເວັນຕົກສຽງໃຕ້. ສ່ວນພາສາລາວນັ້ນ ໄດ້ຮັບການຈັດເຂົ້າໃນກຸ່ມທີ່ສາມຄື ກຸ່ມຕາເວັນຕົກສຽງໃຕ້. ເຊິ່ງແຕ່ລະກຸ່ມປະກອບດ້ວຍພາສາ ຕ່າງໆດັ່ງນີ້.

ກຸ່ມເໜືອ:

ໄດ້ແກ່ພາສາຂອງເຜົ່າໄຕຕ່າງໆທີ່ຢູ່ໃນປະເທດຈີນ ແຕ່ຊື່ຮຽກບາງເຜົ່າບໍ່ໄດ້ຂຶ້ນດ້ວຍ ຄຳວ່າ ໄຕ ກໍ່ມີເຊັ່ນ: ພາສາຈູມິງ, ພາສາຈຸ່ນຊຸ່ງ, ພາສາສິງຍຸນ, ພາສາທຸ່ນເລົ່າ ແລະ ພາສາ ໂປອາຍ.

ກຸ່ມກາງ:

ໄດ້ແກ່: ພາສາໄຕນຸ່ງ, ພາສາໄຕຂາວ, ພາສາໄທ, ພາສາທຸ່ນເປົ່າ, ພາສາຢຸ່ງຊຸນ ແລະ ພາສາຈ້ວງ.

ກຸ່ມຕາເວັນຕົກສ່ຽງໃຕ້:

ໄດ້ແກ່: ພາສາລີ້, ພາສາລາວ, ພາສາໄຕດຳ, ພາສາໄຕອາຫົມ, ພາສາໄທສະຫຍາມ ແລະອີກບາງສ່ວນໃນພາກເໜືອຂອງປະເທດ ຂະເໝນ, ບາງກຸ່ມໃນປະເທດມຽນມ້າ.

Joel M. Halpern,(1964) Pier Lafont Michael Moermon (1969) ພ້ອມຄະນະ ໄດ້ຈັດແບ່ງບັນດາພາສາໃນຕະກຸ່ນໄຕອອກເປັນກຸ່ມ ດັ່ງນີ້:[2]

ກຸ່ມຕາເວັນຕົກ: (Western groups)

---

[1] Fang kuei Li . A Handbook of comparative Tai. Hawai. 1971.

[2] Frank M . Lebar, Gerald D. Hickey; Ethnic Group of Mainland Southeast Asia. 1964. p187 239.

ได้แก่: ไตอาหัม (Ahom) ไตคำติ (Khamti) ซาน (Shan) ปายอี (Payi)ไตยิก (Tai Yok) และ ง้ัว(Ngiow)

กุ่มใต้(Southern groups)

ได้แก่: สะหยามไต (Siam Tai) ปักไต (Pak Tai).

กุ่มหั้งแม่ฃองตอนกาๆ (Central Mekong River groups)

ได้แก่: ไตเหนือ(Tai- Nua) ไตเขิน (Tai Khin) ไตยวน (Yoan Lanna)

กุ่มกางถิ่นฮาบสูง (Central upland groups)

ได้แก่: ไตดำ (Tai Dam) ไทขาว (Wite Tai) ไตแดง (Red Tai) พวน (Puan) ผู้ไท (Pou Tai)

กุ่มพากตาเวันฅอก (Eastern groups)

ได้แก่: จุงยง (Jung Yieng) ปูยี (Pui) จ้วง (Chuang) ตุงจง (Tung Yieng) ท้ (To) ตุงจา (Tung cha) นุง (Nung) ตูลาว (Tu lao) และ นัง (Nang).

เรืองเดช เป็นเอื้อมฉัดติยะได้สึกสา และ แบ่งพาสาต่างๆ ในตะกุนไต (Tai) เป็นกุ่มๆ ในปี้มพาสาถิ่นตะกุนไต (พ.ส.2531)[3] ดั่งนี้:

พาสากุ่มใต้ (Southern groups)ได้แก่พาสาไทสะหยาม (Siames Tai) เซิ่ง รวมมีพาสาไทถิ่นต่างๆ แต่สำคันได้แก่พาสาไทกาง (Central Tai) และ ไทใต้ (Southern Tai).

พาสากุ่มตอนกางแม่นำ้ฃอง (Central Mekong River groups)ได้แก่: ไตเหนือ (Nua) ไตลื้ (Lu) ไตเขิน (Khun) และ ลาว (Lao tian).

---

[3] เรืองเดช เป็นเอื้อมฉัดติยะ: พาสาถิ่นตะภูนไต: พ.ส. 2531 หน้า 37-51.

ກຸ່ມໃຈກາງຖິ່ນສູງ (Central Upland groups)ໄດ້ແກ່: ໄຕດຳ (Black Tai or Tai Dam) ລາວສົ້ງ (Lao Song) ໄຕຂາວ (White Tai or Tai Khao) ພວນ (Puan) ຜູ້ໄທ (Pou Tai) ໄທຍ໊ (Tai Yo) ໄຕໂຍ້ຍ (Tai Yoi) ແລະ ໄຕແສກ (Tai Seek).

ພາສາກຸ່ມຕາເວັນອອກ (Eastern groups)ໄດ້ແກ່: ຈ້ວງ (Chuang) ໄຕໂທ້ (Tai To) ໄຕນຸງ (Nung) ໄຕນັ້ງ (Nang) ໄຕຕູລາວ (Tu Lao) ໄຕປາຢີ (Pa Yi).

ການແບ່ງກຸ່ມພາສາໃນຕະກຸນໄຕໃນນີ້ ເປັນການແບ່ງໃນລັກສະນະກວ້າງໆ, ການຈັດກຸ່ມໃນຜ່ານມາກໍ່ຍັງມີຄວາມແຕກຕ່າງກັນຢູ່ບາງອັນ, ແຕ່ເຖິງຢ່າງໃດການສະເໜີກຸ່ມພາສາຕະກຸນໄຕໃນທີ່ນີ້ກໍ່ຄົງໃຫ້ຄວາມຮູ້ກ່ຽວກັບກຸ່ມ ແລະ ຊື່ຂອງກຸ່ມທີ່ປະກອບໃນຕະກຸນນີ້ ໄດ້ດີຂຶ້ນຕື່ມ. ສະເພາະພາສາໃນກຸ່ມໃດທີ່ນຳມາສະເໜີ ໃນນີ້ບໍ່ທັນຄົບກໍ່ສາມາດແກ້ໄຂເພີ່ມເຕີມຕໍ່ໄປໄດ້.

ພາສາລາວເປັນພາສາໜຶ່ງໃນຕະກູນພາສາໄຕ (Tai) ເຊິ່ງອີງຕາມການຈັດແບ່ງກຸ່ມທີ່ສະເໜີມາພົບວ່າ ພາສາລາວຢູ່ໃນກຸ່ມເຂດຕອນກາງຫຼັ້ງແມ່ນ້ຳຂອງ. ພາສາລາວເປັນພາສາກຸ່ມໃຫຍ່ ເຊິ່ງປະກອບດ້ວຍພາສາຖິ່ນລາວຫຼາຍຖິ່ນ. ຕາມການສຶກສາພາສາຖິ່ນຂອງພາສາລາວໄດ້ຈັດແບ່ງແບບກວ້າງໆດັ່ງນີ້: ຖິ່ນຫຼວງພະບາງ, ຖິ່ນຊຽງຂວາງ, ຖິ່ນວຽງຈັນ, ຖິ່ນຄຳມ່ວນ, ຖິ່ນສະຫວັນນະເຂດ, ຖິ່ນຈຳປາສັກ ເປັນຕົ້ນ. ພາສາລາວຖິ່ນຕ່າງໆນີ້ໄດ້ແບ່ງຕາມລັກສະນະທາງພາສາ ເຊິ່ງພົບວ່າມີຄວາມແຕກຕ່າງກັນບາງຢ່າງ. ຕົວແຕກຕ່າງທີ່ເດັ່ນ ແລະ ຖືເປັນລັກສະນະສະເພາະຂອງພາສາຖິ່ນນັ້ນ ໄດ້ແກ່ຈຳນວນສຽງວັນນະຍຸດ, ຄຳບາງຄຳ, ການໃຊ້ຄວາມໝາຍຂອງບາງຄຳ ແລະ ສຳນຽງເວົ້າ. ໂດຍທົ່ວໄປແລ້ວພາສາລາວບໍ່ວ່າຖິ່ນໃດໆ ກໍ່ປະກອບມີລັກສະນະທີ່ເໝືອນກັນຫຼາຍກວ່າສິ່ງທີ່ແຕກຕ່າງກັນ, ຄວາມແຕກຕ່າງດ້ານສຳນຽງນັ້ນ ບໍ່ໄດ້ເປັນອຸປະສັກ ທີ່ເປັນສິ່ງຂັດຂ້ອງແກ່ການຕິດຕໍ່ສື່ສານດ້ວຍການເວົ້າ ຫຼື ການຮັບຟັງ.

7. ລະດັບຂອງຄວາມສຳພັນລະຫວ່າງພາສາ

ການທີ່ພາສາໜຶ່ງຮັບເອົາຄຳຈາກພາສາອື່ນເຂົ້າມາໃຊ້ປົນກັບຄຳໃນພາສາຕົນນັ້ນຖືເປັນທຳມະຊາດຂອງພາສາ ເພາະເມື່ອຄົນຕ້ອງການສຳພັນລະຫວ່າງກັນໃນສິ່ງໃດຫາກຂາດ, ສິ່ງນັ້ນກໍ່ຕ້ອງຫາອັນສະໜອງ ເພື່ອໃຊ້ສຳພັນກັນໃຫ້ໄດ້, ຕົວທີ່ຫາມານັ້ນກໍ່ຄື ຄຳສັບ, ການຫາສ່ວນໜຶ່ງ ເປັນການຫາຄຳທີ່ມີແລ້ວໃນພາສາຕົນເອງ, ຫາກຫາຄຳໃນພາສາຕົນບໍ່ມີກໍ່ໄດ້ເລືອກເອົາວິທີຮັບຄຳຈາກພາສາອື່ນ. ສອງວິທີນີ້ເປັນຕົວສຳຄັນທີ່ເຮັດໃຫ້ຄັງຄຳສັບໃນພາສາອຸດົມສົມບູນຂຶ້ນ ເພື່ອໃຫ້ພໍຄວາມຕ້ອງການໃຊ້, ການຢືມຄຳລະຫວ່າງກັນນັ້ນຖືວ່າເປັນຄວາມສຳພັນລະຫວ່າງພາສາກັບພາສາ, ໃນຄວາມສຳພັນນີ້ ກໍ່ມີກົດເກນ ແລະ ມີລະດັບຊັ້ນເຊັ່ນກັນ, ນັກພາສາສາດຜູ້ທີ່ສຶກສາໃນເລື່ອງລະດັບຂອງຄວາມສຳພັນລະຫວ່າງພາສາໄດ້ຈຳແນກລະດັບຄວາມສຳພັນນັ້ນ ອອກເປັນ 3 ລະດັບດັ່ງນີ້:

1). ລະດັບຊັ້ນເລິກ (Substratum) [1]

ຄວາມສຳພັນທາງພາສາໃນກໍລະນີນີ້ຄື ຄົນກຸ່ມໜຶ່ງເຊິ່ງເປັນກຸ່ມໃຫຍ່ມີຈຳນວນພົນຫຼາຍກວ່າອີກກຸ່ມໜຶ່ງ ເຊິ່ງທັງສອງກຸ່ມນີ້ມີພາສາແຕກຕ່າງກັນ, ໃນເມື່ອຄົນກຸ່ມໃຫຍ່ໄດ້ມີອິດທິພົນເໜືອກວ່າ ກໍ່ຈະພາໃຫ້ຄົນກຸ່ມນ້ອຍຕົກຢູ່ພາຍໃຕ້ອິດທິພົນທີ່ເໜືອກວ່າ; ຈາກນັ້ນ ຄົນກຸ່ມນ້ອຍກວ່າກໍ່ຈະໄດ້ຮັບເອົາຄຳ ຫຼື ລັກສະນະທາງພາສາ ແລະ ຄວາມຄິດ (Concept) ຂອງກຸ່ມຄົນ

---

[1] Robert J. Jeffers and Ilse lehiste, Principles and Methods for Histcrical linguistics, 1979. P 142.

ກຸ່ມໃຫຍ່ມາໃຊ້. ແຕ່ພາສາຕົວທີ່ຄົນກຸ່ມນ້ອຍກວ່າເອົາມາໃຊ້ນີ້ ກໍ່ຖືເປັນພາສາທີ່ມີຮູບແບບໃໝ່ ເຊິ່ງຕ່າງຈາກພາສາເດີມຂອງຄົນກຸ່ມໃຫຍ່. ສາເຫດກໍ່ຄື ພາສາຮູບແບບໃໝ່ນັ້ນຈະມີສຳນຽງ ແລະ ຫ້ອຍຄຳທີ່ໄດ້ຮັບອິດທິພົນຈາກພາສາເດີມຂອງຕົນ ພາໃຫ້ເກີດຄວາມຜິດພ້ຽນຫຼາຍປະການ ຈົນແຕກຕ່າງຈາກພາສາເດີມຂອງຄົນກຸ່ມທີ່ໃຫຍ່ ກໍລະນີນີ້ຈະຫາພົບໄດ້ຫຼາຍເຊັ່ນ ຄົນກຸ່ມນ້ອຍໃນຫຼາຍປະເທດ ເມື່ອປາກພາສາກາງຂອງຊາດເຊິ່ງບໍ່ແມ່ນພາສາເດີມຂອງຕົນ ກໍ່ຈະປາກົດເຫັນຄວາມແຕກຕ່າງໃນການອອກສຽງ, ການໃຊ້ຄຳ ແລະ ຫ້ອຍຄຳຢູ່ສະເໝີ. ນີ້ແມ່ນປະກົດການຂອງຄວາມສຳພັນທາງພາສາທີ່ເອີ້ນເປັນລະດັບຊັ້ນເລິກ (Substratum).

2). ລະດັບຊັ້ນຜິວ (Super stratum)[2]

ປະການນີ້ເປັນຄວາມສຳພັນທາງພາສາທີ່ເກີດອາການປົ້ນກັບປະການທີ່ໜຶ່ງຄື ໃນເບື້ອງຕົ້ນມີຄົນກຸ່ມໜຶ່ງເຂົ້າໄປຄອບຄອງຄົນອີກກຸ່ມໜຶ່ງ ເຊິ່ງຕ່າງກໍ່ມີພາສາບໍ່ຄືກັນ; ເມື່ອເຂົ້າໄປຄອບຄອງກໍ່ນຳເອົາພາສາຂອງຕົນໄປໃຊ້ ພາໃຫ້ຄົນກຸ່ມທີ່ຖືກຄອບຄອງກໍ່ໄດ້ໃຊ້ຕາມ. ແຕ່ຈາກນັ້ນມາອາດເປັນຫຼາຍພັນປີ ຄົນກຸ່ມທຳອິດໄດ້ເສຍຄວາມເໜືອກວ່າ ແລະ ເສຍອິດທິພົນ ເພາະມີຈຳນວນຄົນໜ້ອຍກວ່າ ທັ້ງເກີດສະພາບດ້ອຍຫຼາຍຢ່າງຕາມເຂົ້າມາ ແລ້ວພາໃຫ້ເກີດການປ່ຽນແປງຢ່າງສັນຕິໃນຕົວ ຈົນໃນທີ່ສຸດພາສາຂອງຄົນກຸ່ມທຳອິດກໍ່ຖືກເສຍບົດບາດໄປແລ້ວ ພາສາຂອງຄົນກຸ່ມຫຼັງກໍ່ປົ້ນກັບມາມີບົດບາດແທນທີ່ ເຮັດໃຫ້ກຸ່ມທຳອິດກໍ່ໄດ້ປົ້ນໃຊ້ພາສາຂອງຄົນກຸ່ມທີ່ຕົນມາຄອບຄອງຄືນອີກ. ພາສາທີ່ເກີດການປ່ຽນແປງໃນສອງກຸ່ມຍ້ອນການປົ້ນໄປປົ້ນມານີ້ ກໍ່ເກີດການສົມປົນຮູບແບບພາສາ, ຄຳ ແລະ ສຳນຽງສຽງເວົ້າຢ່າງໃດໜຶ່ງ ປາກົດການແບບນີ້ເອີ້ນວ່າ ເປັນສະພາບ Super stratum. ຕົວຢ່າງ ໃນປະຫວັດສາດໄດ້ໃຫ້ຮູ້ວ່າ ຄົນໄທອາຫົມໃນລັດອັດສຳ ປະເທດອິນເດຍໃນປະຈຸບັນ; ໃນເບື້ອງຕົ້ນການເຂົ້າໄປຢູ່ໃນລັດນີ້ ຊາວໄທອາ

---

[2] Robert J. Jeffers and Ilse lehiste, Principles and Methods for Historical linguistics, 1979. P 142.

ຫົມກ່ໄດ້ໄປຍຶດຄອງໂດຍຕັ້ງລາຊະວົງ ມີກະສັດປົກຄອງ ແລະ ເປັນໃຫຍ່ເໜືອດິນແດນ ແລະ ກຸ່ມຊົນແຖບນັ້ນໂດຍໃຊ້ພາສາອາຫົມ ເຊິ່ງເປັນພາສາໜຶ່ງໃນຕະກຸນໄຕ-ລາວ ໃນກຸ່ມຕົນເອງ ແລະ ກັບກຸ່ມອື່ນໆ. ແຕ່ຕໍ່ມາຫຼາຍຮ້ອຍປີ ຄົນໄທອາຫົມ ເມື່ອມີຈຳນວນໜ້ອຍ ແລະ ມີຄວາມ ສຳພັນກັບຄົນລາວ-ໄຕກຸ່ມໜຶ່ງໜ້ອຍລົງກໍ່ພາໃຫ້ສະພາບຕ່າວປັ້ນ ເຊິ່ງຊາວອາຫົມຕ້ອງກັບມາ ຮັບເອົາສາສະໜາຂອງຊາວອັດສຳ ເຊິ່ງເມື່ອກ່ອນເປັນກຸ່ມຊົນທີ່ຕົນເອງປົກຄອງ. ການຮັບຄຳ ໃໝ່ນີ້ ໄດ້ຮັບເອົາຕະຫຼອດເຖິງວັດທະນະທຳຫຼາຍຢ່າງພ້ອມທັງພາສາ, ໃນປາຈຸບັນ ຊາວໄທອາ ຫົມກໍ່ໃຊ້ພາສາອັດສຳມິດ ແລະ ນັບຖືສາສະໜາຮິນດູ. ສ່ວນພາສາຂອງຊາວໄທອາຫົມ ຍັງຄົງ ໄວ້ພຽງບາງຢ່າງເຊັ່ນ ຊື່ຄົນ, ຊື່ສະຖານທີ່, ບາງນາມສະກຸນ, ສັບພື້ນຖານເດີມໆບາງຄຳເທົ່ານັ້ນ.

ໃນຊຸມສະຕະວັດ ທີ່ 8-10 ຊາວເມັນຈູຣີ ເປັນກຸ່ມຊົນທີ່ມີອິດທິພົນ ແລະ ມີກຳ ລັງກວ່າຫຼາຍໆກຸ່ມໃນພາກອາຊີຕາເວັນອອກກາງ, ເຄີຍແຜ່ອຳນາດຄອບຄອງຊາວຈີນບາງກຸ່ມ ແລະ ຊາວມົງໂກນ ຈົນເຮັດໃຫ້ກຸ່ມຊົນເຫຼົ່ານັ້ນຕ້ອງໄດ້ຮຽນພາສາ ແລະ ໜັງສືຂອງຊາວເມັນຈູ. ສີ່ຮ້ອຍປີຕໍ່ມາ ອິດທິພົນຂອງຊາວເມັນຈູໄດ້ອ່ອນນ້ອຍຖອຍລົງເພາະບໍ່ສາມາດຄວບຄຸມຄົນກຸ່ມ ອື່ນໆ ເຊິ່ງມີຈຳນວນຫຼາຍກວ່າກຸ່ມຕົນຕັ້ງຫຼາຍເທົ່າ, ບົດບາດທາງວັດທະນະທຳ ແລະ ພາສາ ຖືກເສື່ອມເສຍ ຕໍ່ມາກໍ່ໝົດອຳນາດໄປໃນແບບປະລິຍາຍ ໃນປາຈຸບັນຊາວເມັນຈູທີ່ຍັງຄົງຕົວຢູ່ ຢ່າງຊາວພື້ນເມືອງເດີມໆ ຄົງບໍ່ມີແລ້ວ, ສິ່ງຍັງຢູ່ກໍ່ມີພຽງຫຼາມໆເຫຼັນໆ ທີ່ເປັນເຊື້ອຊາດສືບ ໄວ້ກັບເຜົ່າພັນອື່ນໆໃນແຖບທີ່ຊາວເມັນຈູເຄີຍປົກຄອງມາກ່ອນເທົ່ານັ້ນ.

3). ລະດັບຊັ້ນໃກ້ຄຽງ (Adstratum) [3]

ລະດັບຊັ້ນໃກ້ຄຽງນີ້ໝາຍເຖິງລັກສະນະບາງຢ່າງທາງພາສາ ໃນພາສາໜຶ່ງກັບອີກພາສາໜຶ່ງເຊິ່ງບໍ່ແມ່ນອັນດຽວກັນ, ເຊິ່ງມີຄວາມແຕກຕ່າງກັນສ່ວນໃດໜຶ່ງໃນເມື່ອກ່ອນ ແຕ່ເນື່ອງດ້ວຍພາສາທັງສອງເກີດຄວາມໃກ້ຊິດ ຍ້ອນສະພາບພູມສາດ ການຕິດຕໍ່ສຳພັນເປັນເວລາຍາວນານ ເຊິ່ງຕ່າງຝ່າຍຕ່າງກໍ່ໄດ້ຮັບອິດທິພົນຂອງກັນແລະກັນ ພາໃຫ້ເກີດການປ່ຽນແປງສ່ວນໃດໜຶ່ງ ຄື ຈາກສິ່ງທີ່ບໍ່ມີກໍ່ມີຂຶ້ນຍ້ອນການຮັບເອົາສິ່ງນັ້ນຈາກພາສາອື່ນເຂົ້າໄປ ແຕ່ພາສາທັງສອງຕ່າງກໍ່ຍັງຄົງຢູ່ ແລະ ໃຊ້ກັນຕາມເດີມ ພຽງແຕ່ມີການປ່ຽນແປງໃນສ່ວນໃດໜຶ່ງ ເພາະໄດ້ຮັບຜົນສະທ້ອນຈາກພາສາໃກ້ຄຽງເທົ່ານັ້ນ.

ຕົວຢ່າງ: ໃນແຕ່ກ່ອນໆ ພາສາຂະມຸ ບໍ່ພົບຄຳປະເພດລັກສະນະນາມ ເນື່ອງຈາກ ທີ່ພາສາຂະມຸກັບພາສາລາວ ຫຼື ຊາວຂະມຸກັບຊາວລາວໄດ້ຢູ່ນຳກັນມາຫຼາຍປີພາໃຫ້ພາສາຂະມຸໄດ້ຮັບຜົນສະທ້ອນຈາກພາສາລາວຫຼາຍຢ່າງ ອັນຮວມເຖິງຊະນິດຄຳທີ່ເປັນລັກສະນະນາມນຳດ້ວຍ. ດັ່ງນັ້ນ ໃນປະຈຸບັນພາສາຂະມຸ ໄດ້ເອົາຄຳລັກສະນະນາມບາງອັນຈາກພາສາລາວໄປໃຊ້. ການທີ່ວ່າຮັບຄຳຈາກພາສາລາວນັ້ນກໍ່ເພາະສັງເກດອອກໄດ້ຈາກຮູບຄຳ ແລະ ຄວາມໝາຍຂອງຄຳ ແຕ່ລະຄຳລັກສະນະນາມທີ່ນຳໄປໃຊ້ນັ້ນເປັນອັນດຽວກັນກັບຄຳເດີມໃນພາສາລາວເຊັ່ນ: ໜ່ວຍ, ໂຕ, ຄົນ, ອັນ ...

---

[3] Robert J. Jeffers and Ilse lehiste, Principles and Methods for Historical linguistics, 1979. P 142.

V. ຄວາມຮູ້ບາງປະການກ່ຽວກັບພາສາລາວ

1. ຄວາມເປັນມາ

ພາສາລາວເປັນພາສາໜຶ່ງ ທີ່ມີຄວາມເກົ່າແກ່ ເຊິ່ງປາກົດຂຶ້ນຕາມມາກັບການເກີດມີຄົນລາວ. ພາສາລາວເປັນພາສາທີ່ມີຊີວິດ ແລະ ມີຄວາມສົມບູນຄື ມີໜ່ວຍສຽງພະຍັນຊະນະ, ສະຫຼະ ແລະ ວັນນະຍຸດເປັນຂອງຕົວເອງ ມີຄັງສັບ, ມີສຳນວນຄຳເວົ້າ ແລະ ສາມາດໃຊ້ຕິດຕໍ່ສື່ສານ ຄົ້ນຄ້ວາຄວາມຄິດ ສະແດງຄວາມຮູ້ສຶກ ໄດ້ທຸກແບບທຸກກໍລະນີ. ພ້ອມນີ້ ໃນເລື່ອງຂອງຄັງສັບ ກໍ່ໄດ້ມີບັນດາຄຳໃໝ່ໆເກີດຂຶ້ນ ຫຼື ມີການຮັບເອົາຄຳອັນທີ່ຈຳເປັນຈາກພາສາອື່ນເຂົ້າມາໃຊ້ເພື່ອສະໜອງຄວາມຕ້ອງການ ດ້ານຄວາມໝາຍ ແລະ ຈຳນວນຂອງຄຳໃຫ້ແກ່ພາສາລາວ ໃຫ້ພຽງພໍກັບຄວາມຕ້ອງການໃຊ້ໃນແຕ່ລະສະໄໝ. ການທີ່ວ່າພາສາລາວເປັນພາສາທີ່ມີຊີວິດນັ້ນກໍ່ເພາະພາສາລາວມີພື້ນຖານທາງພາສາອັນຄົບຖ້ວນ, ມີການຂະຫຍາຍຕົວ ແລະ ມີການໃຊ້ຢ່າງປົກກະຕິໃນສັງຄົມຕະຫຼອດມາ.

2. ຕົ້ນກຳເນີດ

ຕາມການສຶກສາດ້ານປະຫວັດຂອງພາສາ ໂດຍນັກພາສາສາດຫຼາຍທ່ານ ແລະ ຕາມເອກະສານທີ່ໄດ້ຄົ້ນຄວ້າກ່ຽວກັບພາສາ ໃນທາງມະນຸດວິທະຍາ ໂດຍສະເພາະສ່ວນທີ່ກ່ຽວກັບເຜົ່າຊົນຕ່າງໆ ໃນເຂດອາຊີໃຕ້ພາກພື້ນອາຊີອາຄະເນ ແລະ ການຈັດແບ່ງເຜົ່າຊົນຕາມຕະກຸນພາສານັ້ນໄດ້ໃຫ້ຮູ້ວ່າ ພາສາລາວເປັນພາສາໜຶ່ງ ທີ່ນອນຢູ່ໃນຕະກຸນໄຕ (Tai language family) ດັ່ງທີ່ຈະສະເໜີໃນສ່ວນຕໍ່ໄປນີ້.

3. ການສຶກສາບາງຢ່າງກ່ຽວກັບພາສາລາວ

ພາສາລາວ ເປັນພາສາໜຶ່ງ ໃນຕະກູນພາສາໄຕ (Tai) ເຊິ່ງອີງຕາມການຈັດແບ່ງກຸ່ມທີ່ ສະເໜີມາພົບວ່າ: ພາສາລາວ ຢູ່ໃນກຸ່ມເຂດຕອນກາງຫຼັ້ງແມ່ນ້ຳຂອງ; ພາສາລາວ ເປັນພາສາ ກຸ່ມໃຫຍ່ ເຊິ່ງປະກອບດ້ວຍພາສາຖິ່ນລາວຫຼາຍຖິ່ນ. ຕາມການສຶກສາພາສາຖິ່ນຂອງພາສາລາວ ໄດ້ຈັດແບ່ງແບບກວ້າງໆ ເປັນດັ່ງນີ້: ຖິ່ນຫຼວງພະບາງ, ຖິ່ນຊຽງຂວາງ, ຖິ່ນວຽງຈັນ, ຖິ່ນຄຳມ່ວນ, ຖິ່ນສະຫວັນນະເຂດ, ຖິ່ນຈຳປາສັກ ເປັນຕົ້ນ. ພາສາລາວຖິ່ນຕ່າງໆນີ້ໄດ້ແບ່ງຕາມລັກສະນະ ທາງພາສາ ເຊິ່ງພົບວ່າມີຄວາມແຕກຕ່າງກັນ ບາງຢ່າງ. ຕົວແຕກຕ່າງທີ່ເດັ່ນ ແລະ ຖືເປັນລັກສະ ນະສະເພາະຂອງພາສາຖິ່ນນັ້ນໄດ້ແກ່ຈຳນວນສຽງວັນນະຍຸດ, ຄຳບາງຄຳ, ການໃຊ້ຄວາມໝາຍ ຂອງບາງຄຳ ແລະ ສຳນຽງເວົ້າ. ໂດຍທົ່ວໄປແລ້ວພາສາລາວບໍ່ວ່າຖິ່ນໃດໆ ກໍ່ປະກອບມີລັກສະ ນະທີ່ເໝືອນກັນ ຫຼາຍກວ່າສິ່ງທີ່ແຕກຕ່າງກັນ, ຄວາມແຕກຕ່າງດ້ານສຳນຽງນັ້ນ ບໍ່ໄດ້ເປັນອຸປະ ສັກ ທີ່ເປັນສິ່ງຂັດຂ້ອງແກ່ການຕິດຕໍ່ສື່ສານ ດ້ວຍການເວົ້າ ຫຼື ການຮັບຟັງ.

4. ລັກສະນະທົ່ວໄປຂອງພາສາລາວ

ພາສາລາວ ເປັນພາສາຄຳໂດດ (Isolating language) ໂຄງສ້າງຂອງຄຳສ່ວນ ໃຫຍ່ເປັນແບບພະຍັນຊະນະ - ສະຫຼະ(cv) ແລະ ພະຍັນຊະນະ - ສະຫຼະ - ພະຍັນຊະນະ (cvc) ມີລະບົບສຽງວັນນະຍຸດ ເຊິ່ງໃນຫຼາຍຖິ່ນເຂດວຽງຈັນໄດ້ມີສຽງວັນນະຍຸດດ້ວຍຈຳນວນ 5 ສຽງ[1], ສ່ວນຖິ່ນອື່ນໆທີ່ມີຜູ້ສຶກສາ ໄດ້ສະເໜີວ່າ ມີວັນນະຍຸດແຕ່ 5-7 ສຽງ[2] ໃນພາສາບໍ່ມີການ

---

[1] Varisa Osatananda: Tone in Vientiane Lao, University of Hawai. 1997.

[2] **ຜູ້ວິໄຈ**: The Cheeking of sometone in Vientiane Tonal system . Kasetsart University, Setp 1998.

ໃຊ້ອຸປະສັກ, ອາຄົມ ແລະ ປັດໄຈ (Prefix, Infix Suffix), ບໍ່ມີການປ່ຽນຮູບຂອງຄຳເມື່ອນຳໄປປະກອບກັບຄຳອື່ນ ເພື່ອສ້າງເປັນຄຳໃໝ່ ຫຼື ເມື່ອໃຊ້ປະກອບເປັນປະໂຫຍກຕ່າງໆ. ການສຶກສາບາງຢ່າງໃນພາສາລາວເຫັນມີດັ່ງນີ້:

1). ຕົວພະຍັນຊະນະພາສາລາວ

ໜ່ວຍສຽງພະຍັນຊະນະໃນພາສາລາວລວມມີ 20 ໜ່ວຍສຽງ ຄື

ລັກສະນະຂອງສຽງ	ຄຸນສົມບັດຂອງສຽງ	ຮິມສີບ ສອງເບື້ອງ	ຮິມສີບລຸ່ມ ແຂ້ວເທິງ	ປຸ່ມເຫືອກ	ເພດານ ແຂງ	ເພດານ ອ່ອນ	ຄໍຫອຍ
ສຽງກັກຫຼືລະເບີດ	ບໍ່ກ້ອງ, ບໍ່ມີລົມ	p		t		k	ʔ
	ບໍ່ກ້ອງ, ມີລົມ	ph		th		kh	
	ສຽງກ້ອງ	b		d			
ສຽງເຖິງ ສຽດແຊກ	ບໍ່ກ້ອງ, ບໍ່ມີລົມ				C		
ສຽດແຊກ	ສຽງບໍ່ກ້ອງ		f	s			h
ສຽງອອກທາງດັງ	ສຽງກ້ອງ	m		n	ɲ	ŋ	
ສຽງອອກຂ້າງລີ້ນ	ສຽງກ້ອງ			l			
ສຽງເຖິງ ສະຫຼະ	ສຽງກ້ອງ	w			J		

ໜ່ວຍສຽງຂອງພະຍັນຊະນະພາສາລາວ ມີ 20 ໜ່ວຍ ແຕ່ການຂຽນເປັນຕົວອັກສອນ (ໜັງສື) ນັ້ນມີຢູ່ 32 ຕົວ. ການທີ່ກຳນົດຮູບຕົວໜັງສື ມີຫຼາຍກວ່າຈຳນວນໜ່ວຍສຽງ ພະຍັນຊະນະຕົວຈິງ ໃນພາສາລາວນັ້ນ ມີຫຼາຍສາເຫດທີ່ພາໃຫ້ເປັນເຊັ່ນນັ້ນ ແຕ່ສາເຫດທີ່ສຳຄັນໄດ້ແກ່ ບາງໜ່ວຍສຽງພະຍັນຊະນະໃນພາສາລາວສາມາດຜັນສຽງໄດ້ສອງສຽງແບບຄົງທີ່, ສຽງໜຶ່ງນັ້ນ ໄດ້ໃສ່ຊື່ວ່າ: ສຽງຕ່ຳ ສຽງສອງເອີ້ນວ່າ ສຽງສູງ. ດ້ວຍຄວາມສຳນຶກ ແລະ ເຂົ້າໃຈວ່າ ແຕ່ລະສຽງ ທີ່ຜັນໄດ້ນັ້ນ ມີຄ່າເທົ່າກັບພະຍັນຊະນະໜຶ່ງຕົວ ສະນັ້ນ ຈຶ່ງໄດ້ກຳນົດຮູບຂຽນ (ຕົວໜັງສື) ໃສ່ໃຫ້ແຕ່ລະສຽງ ທັງຖືວ່າທຸກຕົວເປັນພະຍັນຊະນະ ເຊັ່ນດຽວກັນ. ການທີ່ໃນພາສາລາວມີຕົວອັກສອນ 32 ຕົວ ເຊິ່ງລົ້ນຈຳນວນຂອງໜ່ວຍສຽງພະຍັນຊະນະທີ່ມີໃນພາສາລາວນັ້ນເປັນສິ່ງທີ່ສາມາດອະທິບາຍແລະວິເຄາະໄດ້ ໃນປັດຈຸບັນຕົວພະຍັນຊະນະໃນພາສາລາວມີຮູບ ແລະ ຈຳນວນ ດັ່ງນີ້:

ກ , ຂ , ຄ , ງ , ຈ , ສ , ຊ, ຍ, ດ, ຕ, ຖ, ທ, ນ, ບ, ປ, ຜ, ຝ, ພ, ຟ, ມ, ຢ, ລ, ວ, ຫ, ອ, ຮ, ຫງ, ຫຍ, ຫນ,ຫມ, ຫຼ, ຫວ.

2) ການຈັດໝວດຕົວອັກສອນຂອງພາສາລາວ.

ຕົວພະຍັນຊະນະທີ່ສາມາດຜັນໄດ້ສອງສຽງແບບຄົງທີ່ນັ້ນ ໃນພາສາລາວມີ 12 ຕົວ ແລະ ຜັນສຽງເປັນ 24 ສຽງ. ໃນນັ້ນ ໄດ້ຮັບການຈັດແບ່ງເປັນ 2 ໝວດ ໂດຍຮຽກໃຫ້ໝວດໜຶ່ງ ເປັນອັກສອນສູງ ແລະ ອີກໝວດໜຶ່ງ ເປັນອັກສອນສຽງຕ່ຳ ເຊັ່ນ:

ໝວດອັກສອນສູງ	ໝວດອັກສອນຕ່ຳ	ອັກສອນໝາຍໜ່ວຍສຽງ
1 ຜ	ພ	/ ph /
2. ຖ	ທ	/ th /
3. ຂ	ຄ	/ kh /

4. ສ	ຊ	/ s /
5. ຝ	ຟ	/ f /
6. ຫ	ຮ	/ h /
7. ຫງ	ງ	/ ŋ /
8. ຫຍ	ຍ	/ ɲ /
9. ຫນ	ນ	/ n /
10. ຫມ	ມ	/ m/
11. ຫຼ	ລ	/ l /
12. ຫວ	ວ	/ w /

ໝວດພະຍັນຊະນະສຽງກາງ ມີ 8 ຕົວເຊັ່ນ:

1. ກ / k/
2. ຈ / c /
3. ດ / d /
4. ຕ / t /
5. ບ / b /
6. ປ / p /
7. ຢ / ɟ /
8. ອ / ʔ /

ກຸ່ມພະຍັນຊະນະທ້າຍຄຳ (ຕົວສະກົດ).

ໃນພາສາລາວມີ 8 ສຽງໄດ້ແກ່:

1. ກ / k /
2. ດ / d /

3.	ບ	/ b /
4.	ມ	/ m /
5.	ນ	/ n /
6.	ງ	/ ŋ/
7.	ຍ	/ j /
8.	ວ	/ w /

3). ພະຍັນຊະນະຄວບ

ໃນພາສາລາວ ພະຍັນຊະນະຕົວທີ່ຄວບກັບພະຍັນຊະນະຕົວອື່ນໄດ້ປະກົດມີພຽງຕົວດຽວຄື ວ / w /. ໃນໄວຍາກອນເດີມຂອງລາວບໍ່ໄດ້ກຳນົດເອົາ / w / ໃຫ້ເປັນພະຍັນຊະນະຄວບໄດ້ເພາະຖືວ່າ / w / ເມື່ອຢູ່ໃນຕຳແໜ່ງກາງຄຳບໍ່ໄດ້ຖືເປັນພະຍັນຊະນະ ໂດຍໃຫ້ເປັນສະຫຼະເຮັດໜ້າທີ່ປະສົມກັບໜ່ວຍສຽງສະຫຼະອື່ນທີ່ມາປະກອບ, ຫາກຈະຖືເປັນພະຍັນຊະນະກໍ່ຕໍ່ເມື່ອ / w / ຕ້ອງຢູ່ຕົ້ນ ຫຼື ທ້າຍຄຳເທົ່ານັ້ນ (ພູມີ ວົງວິຈິດ 1967: p 26). ໃນຫຼັກໄວຍາກອນສະໄໝໃໝ່ ເຊິ່ງນັກພາສາສາດ ໂດຍທົ່ວໄປຮັບຮອງວ່າ: / w / ເປັນ ໜ່ວຍສຽງເດ່ຶງສະຫຼະ ຈຶ່ງສາມາດເຮັດໜ້າທີ່ໄດ້ສອງທາງຄື ທາງທີ່ເປັນພະຍັນຊະນະ ແລະ ເປັນສະຫຼະໂດຍຂຶ້ນກັບຕຳແໜ່ງທີ່ຢູ່ຂອງມັນໃນໂຄງສ້າງຂອງຄຳ. ແຕ່ໃນກໍລະນີຢູ່ທ້າຍຂອງພະຍັນຊະນະຕົວໃດໜຶ່ງຈຳຕ້ອງເຮັດໜ້າທີ່ຄວບສຽງກັບຕົວຢູ່ທາງໜ້າຕາມແບບຂອງພະຍັນຊະນະ ບໍ່ແມ່ນຕາມແບບຂອງສະຫຼະ. ດັ່ງນັ້ນ ກາມຈະຖື / w / ເປັນພະຍັນຊະນະຄວບນັ້ນ ແມ່ນເລື່ອງທີ່ສາມາດຮັບຮອງໄດ້. ໃນພາສາລາວພະຍັນຊະນະ ຕົວທີ່ສາມາດ ໃຫ້ / w / ຄວບໄດ້ນັ້ນຮວມມີ 13 ຕົວ ເຊັ່ນ ຕົວຢ່າງ :

ຄວ -	ຄວາຍ	ຈວ -	ຈວ້າຍກວ້າຍ, ຈວາດໆ
ຂວ -	ແຂນຂວາ, ຂວານ	ຊວ -	ຊວ້ານ, ຊວາດໆ
ຫວ -	ຫວາຍ, ຮູຫວານ	ລວ -	ລວາດ, ຊວ້າຍລວ້າຍ

ຖວ - ຖວາຍ

ກວ - ກວ່າ, ແກວ່ງ

ຮວ - ຮວາດ, ຮວາຍ

ສວ - ສວາຍ, ສວ່ານສິນ

ງວ - ແມງງ້ວາງ, ງິ້ມງວາຍ

ອວ - ອວ່າຍໜ້າ, ອ້ວາມ

ຕວ - ຕວ້າຍ, ທຍ້ຳຕວ້າຍໆ

ທວ - ທຸ້ນທວາຍ, ທວາ.

ຍວ - ຍວ່າໆ

4). ສະຫຼະ

ສະຫຼະໃນພາສາລາວຮວມມີ 18 ໜ່ວຍສຽງ, ໃນນັ້ນ ສະຫຼະສຽງສັ້ນມີ 9 ໜ່ວຍສຽງ **ແລະ** ສະຫຼະສຽງຍາວກໍ່ມີ 9 ໜ່ວຍສຽງ ເຊິ່ງຮຽກກັນເປັນສະຫຼະຄູ່ ເມື່ອຈັດຕາມລະບົບສັດທະ **ສາດ**ເຫັນເປັນດັ່ງນີ້

x̣ - x̣́ / i - i: /

ɾxะ - ɾx / e - e: /

ɯxะ - ɯx / ɛ - ɛ: /

ẍ̣ - ẍ̣́ / ɨ - ɨ: /

ɾẍ̣ - ɾẍ̣́ / ə - ə: /

xะ - xา / a - a: /

x̣ - x̣́ / u - u: /

ɹxะ - ɹx / o - o: /

ɾxา: - x̊ / ɔ - ɔ: /

5). ສະຫຼະປະສົມ

ໃນພາສາລາວ ສະຫຼະປະສົມມີ 3 ຕົວຄື : ເxย / ia /, ัวอ / ua /, เ็ือ / ia /.

6). ສຽງວັນນະຍຸດໃນພາສາລາວ

ພາສາລາວເປັນພາສາທີ່ມີວັນນະຍຸດກຳກັບຢູ່ໃນທຸກຂະນິດຄຳ. ສຽງວັນນະຍຸດມີພາ ລະແຍກຄວາມແຕກຕ່າງດ້ານຄວາມໝາຍ ຈາກຄຳຮູບໜຶ່ງໃຫ້ເປັນຫຼາຍຄຳ ແລະ ກຳກັບລະດັບ ສຽງ ກັບຄວາມໝາຍທີ່ແຕກຕ່າງລະຫ່ວາງຄຳໄວ້.

ໃນພາສາລາວ ປະກອບດ້ວຍພາສາຖິ່ນຕ່າງໆ ທີ່ມີຄວາມແຕກຕ່າງອັນເດັ່ນຊັດອັນໜຶ່ງ ກໍ່ແມ່ນເລື່ອງຂອງສຽງວັນນະຍຸດ. ການສຶກສາເລື່ອງສຽງຂອງວັນນະຍຸດໃນພາສາລາວທີ່ໄດ້ພົບ ຂຽນເປັນເອກະສານອັນທຳອິດໃນປີ 1946 ໂດຍ: Roff, ແຕ່ກໍ່ມີສິ່ງຈຳກັດ ເພາະບໍ່ໄດ້ລະບຸເປັນ ສຽງວັນນະຍຸດຂອງລາວຖິ່ນໃດ ຫຼື ເຂດໃດແທ້. ຕໍ່ມາກໍ່ມີຫຼາຍທ່ານ ເຊິ່ງປາກົດຊື່ດັ່ງນີ້: Simmond (1965)*, ພູມີ ວົງວິຈິດ (1967), Chamberlaine (1969)*, Marcus (1970)*, D.Kerr (1972)*, Morev, Maskalev (1979), Plam (1979)*, Werner (1992)*, Crisfield (1978)*, Nilath (1995), Varisa Osatananda (1997)* ແລະ Somseng (1999)*. ຈາກນີ້ພົບວ່າມີການສຶກສາຫຼາຍສົມຄວນ ແຕ່ດ້ວຍການສັງເກດເຫັນວ່າ ຖິ່ນທີ່ໄດ້ຮັບ ການສຶກສານັ້ນໄດ້ແກ່ສຳນຽງວຽງຈັນເປັນສ່ວນຫຼາຍ, ສ່ວນສຳນຽງພາສາລາວຖິ່ນອື່ນໆ ທີ່ໄດ້ຮັບ ຄົ້ນຄວ້ານັ້ນ ກໍ່ປະກົດ ແຕ່ຫາກມີຄວາມຖີ່ດ້ານໄລຍະ ແລະ ເຂດທີ່ສຶກສາບໍ່ສຳຖິ່ນວຽງຈັນ.

ດ້ວຍຜົນຂອງການສຶກສາໃນນີ້ປາກົດວ່າ ໃນສຳນຽງພາສາຖິ່ນວຽງຈັນມີວັນນະຍຸດບໍ່ຕ່ຳ ກວ່າ 5 ສຽງ ແລະ ສູງສຸດບໍ່ເກີນ 6 ສຽງ. ຄວາມແຕກຕ່າງດ້ານຈຳນວນທີ່ເປັນຜົນໄດ້ຈາກການວິ

---

* ຂໍ້ມູນມີໃນ: ສົມແສງ ໄຊຍະວົງ. ສະເໜີການວິໄຈ ຄວາມເຫັນທີ່ຍັງແຕກຕ່າງໃນເລື່ອງສຽງວັນນະຍຸດຂອງຄຳ ໃນສຳນຽງວຽງຈັນ. ທີ່ ມ. ກະເສດສາດ ພາກພາສາສາດ ພ.ສ 2542 ໜ້າ 4-7

ເຄາະນີ້ ດ້ານໜຶ່ງອາດແມ່ນຄວາມແຕກຕ່າງລະຫວ່າງສຽງຖິ່ນຂອງວຽງຈັນ; ດ້ານສອງ ຄົງເປັນເພາະວິທີການຄົ້ນຄວ້າ, ຂໍ້ມູນທີ່ໄດ້, ເຂດທີ່ໄດ້ຮັບການຄົ້ນຄວ້າ ແລະ ເຄື່ອງມືສຳລັບໃຊ້ການວິເຄາະອາດແຕກຕ່າງກັນ. ໃນເລື່ອງຂອງສຳນຽງພາສາລາວແລ້ວ ນັກຄົ້ນຄວ້າທຸກຄົນກໍ່ຢືນຢັນວ່າ ເປັນພາສາທີ່ມີລະບົບສຽງວັນນະຍຸດອັນແໜ້ນແກ່ນ. ສຽງວັນນະຍຸດແຕ່ລະຕົວ ລ້ວນແຕ່ມີຄ່າຄວາມຖີ່ມູນຖານທີ່ແຕກຕ່າງກັນ ແລະ ກໍ່ມີຄ່າຕ່ ການຈຳແນກຄວາມໝາຍ ພາຍໃນຄຳຢ່າງເປັນລະບົບໃນພາສາຖິ່ນຕ່າງໆ, ທັງມີບົດບາດຕໍ່ທັງໝົດລະບົບໃນພາສາລາວ.

7). ລັກສະນະຂອງຄຳ

ຄຳພື້ນຖານຂອງພາສາລາວ ເປັນພະຍາງດຽວ (Monosyllabic) ຕົວຢ່າງ: ນົກ, ໜູ, ພໍ່, ແມ່, ດິນ, ນ້ຳ, ລົມ, ໄຟ...ລັກສະນະຂອງຄຳ ແລະ ຂອງພະຍາງໃນຫຼາຍກໍລະນີ ມີຮູບເປັນຢ່າງດຽວກັນ ສິ່ງນີ້ແມ່ນຈຸດພິເສດຢ່າງໜຶ່ງທີ່ເຮັດໃຫ້ການຈຳແນກເລື່ອງຄຳກັບພະຍາງໃນພາສາລາວຕ່າງຈາກການຈຳແນກລັກສະນະຂອງຄຳ ແລະ ພະຍາງໃນພາສາທີ່ມີຄຳຕິດຕໍ່ (Agglutinative) ແລະ ພາສາທີ່ມີວິພັດປັດໄຈ (Inflective).

ຄຳໃນພາສາລາວ ເມື່ອນຳມາປະກອບກັບຄຳອື່ນເກີດເປັນຄຳປະສົມ ຫຼື ປະກອບຄຳຕ່າງໆ ເຂົ້າເປັນປະໂຫຍກຕາມກໍລະນີໃດໆ ກໍ່ຕາມຮູບຄຳກໍ່ຍັງຮັກສາຕາມຮູບເດີມ.

ຕົວຢ່າງ: ໄຟ+ຟ້າ = ໄຟຟ້າ; ຢາງ+ລົບ = ຢາງລົບ; ເສື້ອ+ແຂນ+ຍາວ = ເສື້ອແຂນຍາວ; ແລະ ອື່ນໆ ຈະບໍ່ພົບວ່າ ມີການປ່ຽນແປງສ່ວນໃດໆຂອງຄຳ.

ຄຳຕ່າງໆ ໃນພາສາລາວ ໄດ້ຮັບການຈັດເປັນຊະນິດຄຳຕ່າງໆ ຄື:

1. ຄຳນາມ (ຄົນ, ນ້ຳ, ດິນ, ລົມ...).
2. ຄຳກິລິຍາ (ໄປ, ມາ, ຮ້ອງ, ໄຫ້...).
3. ຄຳບຸພະບົດ (ເທິງ, ໃນ, ນອກ...).
4. ຄຳແທນນາມ (ເຈົ້າ, ຂ້ອຍ, ທ່ານ...).

5. ຄຳຄຸນສັບ (ງາມ, ຊົ່ວ, ດີ...).
6. ຄຳວິເສດ (ໄວ, ຊ້າ, ໂປ່ງໆ, ປ່າງໆ...).
7. ຄຳຕໍ່ (ແລ້ວ, ແລະ, ກໍ່...).
8. ຄຳເຊື່ອມ (ກັບ, ນຳ, ພວມ...).
9. ຄຳລັກສະນະນາມ (ໜ່ວຍ, ອັນ, ກ້ອນ...).
10. ຄຳອຸທານ (ໂທ່, ໂອ, ອຸ່ຍ...).
11. ຄຳບົ່ງຊີ້ (ນີ້, ນັ້ນ, ທີ່...).
12. ຄຳຖາມ (ໃດ, ໃຜ, ໃສ, ຫຍັງ...).

ຄຳໃນພາສາລາວທຸກຄຳ ມີສຽງວັນນະຍຸດກຳກັບເຖິງວ່າຮູບຄຳນັ້ນຈະປະກົດເຫັນ ເຄື່ອງໝາຍສຽງໃສ່ ຫຼື ບໍ່ໃສ່ ແຕ່ຄ່າຂອງສຽງໃນຄຳນັ້ນກໍ່ມີຄ່າຂອງສຽງວັນນະຍຸດຢູ່ໃນຕົວ. ຕົວຢ່າງ: ປາ, ຄາ, ນາ... ຄຳຊຸມນີ້ ບໍ່ປາກົດມີໝາຍສຽງວັນນະຍຸດ ແຕ່ຄ່າຂອງສຽງໃນຄຳຊຸມນີ້ລ້ວນແຕ່ເປັນ: ຕ່ຳ - ສູງຂຶ້ນ (Low Rising) ສ່ວນຄຳອື່ນໆ ກໍ່ມີຄ່າແຫ່ງສຽງວັນນະຍຸດໃດໜຶ່ງກຳກັບຢູ່ເຊັ່ນກັນ.

ການສະເໜີບາງຄວາມຮູ້ກ່ຽວກັບພາສາລາວນີ້ແມ່ນເພື່ອປູພື້ນໄວ້ໃຫ້ແກ່ຄວາມເຂົ້າໃຈໃນເລື່ອງຄຳ, ເພື່ອໃຫ້ເກີດຄວາມເຂົ້າໃຈໃນອັນທີ່ເປັນຫຼັກຂອງພາສາແມ່ ແລະຈະເປັນ ຫຼັກໃຫ້ແກ່ຄຳອັນທີ່ເຮົາຮັບມາຈາກພາສາອື່ນ. ອັນຮັບມາຍາມໃດໆກໍ່ຕ້ອງເກີດການປັບປ່ຽນຕົວເພື່ອຂຶ້ນກັບພາສາຕົວທີ່ເປັນພື້ນຖານຢູ່ກ່ອນ, ອັນທີ່ຕ້ອງຖືກປັບປ່ຽນນັ້ນມີຫຍັງແດ່ກໍ່ຈະໄດ້ນຳສະເໜີໃນສ່ວນຕໍ່ໄປ.

VI. ກ່ຽວກັບຂະນິດຄຳຢືມ, ການແປງຄຳ, ວິທີ ແລະ ແບບການຮັບຄຳມາໃນພາສາລາວ

1. ກ່ຽວກັບຂະນິດຄຳ

ພາສາລາວພົບວ່າເປັນພາສາໜຶ່ງທີ່ມີການຮັບເອົາຄຳຈາກພາສາອື່ນມາໃຊ້ຢ່າງກວ້າງຫຼາຍ ແລະ ມີການຮັບຢ່າງເປັນຂະບວນທັ້ງມີໃນທຸກສະໄໝໆມາ. ຕາມການສຶກສາໂດຍຍຶດວິທີປຽບທຽບລັກສະນະຂອງຄຳ, ໜ່ວຍສຽງໃນຄຳ, ໂຄງສ້າງຂອງຄຳ ແລະ ການປະກອບທາງຄວາມໝາຍຂອງຄຳໄດ້ພົບວ່າ ໃນພາສາລາວມັກມີຄຳຢືມຫຼາຍຄຳ ແລະ ຮັບຈາກຫຼາຍພາສາ ເປັນຕົ້ນ ຄື ຈາກພາສາຈີນບູຮານ, ພາສາມອນ, ພາສາຂະແມ, ພາສາຂະມຸ, ປາລີ - ສັນສະກິດ, ພາສາລາແຕງ, ພາສາຝຣັ່ງ, ພາສາອັງກິດ, ພາສາຍີ່ປຸ່ນ, ພາສາໄທ ແລະ ອື່ນໆ.

ໃນນີ້ໄດ້ສຶກສາພົບວ່າ ຄຳທີ່ຢືມຈາກແຕ່ລະພາສານັ້ນ ເປັນລັກສະນະກຸ່ມໆ, ທີ່ກ່ຽວກັບດ້ານໃດດ້ານໜຶ່ງເປັນສຳຄັນເຊັ່ນ ຄຳທີ່ຮັບຈາກພາສາຈີນບູຮານ ໄດ້ແກ່ກຸ່ມທີ່ເປັນເລກນັບຫົວໜ່ວຍແທກນ້ຳໜັກ ແລະ ອາຫານເປັນສຳຄັນ, ສ່ວນຄຳທີ່ກ່ຽວກັບອາຫານທີ່ຮັບຈາກພາສາຈີນນັ້ນ ປະກົດວ່າມີການຢືມແບບຕໍ່ເນື່ອງໃນຫຼາຍສະໄໝ.

ຄຳທີ່ໄດ້ຮັບຈາກພາສາມອນໄດ້ພົບວ່າເປັນຄຳທີ່ກ່ຽວກັບກະສິກຳດ້ານການປູກເຂົ້າ ແລະ ຊື່ເຄື່ອງໃຊ້. ກ່ຽວກັບເຂົ້າ, ໃສ່ຂອງຕ່າງໆ ເຊັ່ນ ຊື່ຂອງເຄື່ອງໃຊ້ຕ່າງໆໃນການເຮັດນາ, ສິ່ງຂອງໃສ່ເຂົ້າ, ຄຳທີ່ຮັບຈາກພາສາຂະແມ ພົບວ່າໄດ້ແກ່ຄຳທີ່ກ່ຽວກັບການປົກຄອງ ແລະ ຄະດີທີ່ກ່ຽວກັບສານເປັນສຳຄັນ ນອກນັ້ນ ກໍ່ຍັງໄດ້ຮັບຄຳກ່ຽວກັບການຟ້ອນລຳນຳອີກ, ກຸ່ມຄຳທີ່ຮັບຈາກ ປາລີ - ສັນສະກິດ ເປັນກຸ່ມຄຳທີ່ໃຫຍ່ ມີຫຼາຍກຸ່ມຄຳ. ການຮັບນອກຈາກຄຳ, ຄວາມໝາຍແລ້ວ, ຍັງຮວມເຖິງແບບຂຽນຄຳເຂົ້າມາ. ການຮັບເປັນກຸ່ມໃຫຍ່ເຊັ່ນນີ້ ກໍ່ເພາະສາສະໜາເປັນເຫດທີ່ສຳຄັນ, ໃນເມື່ອສາສະໜາໄດ້ເປັນສິ່ງຮວມເອົາເລື່ອງຊີວິດຈິດໃຈ, ຄວາມເຊື່ອ, ບຸນວາດ-ສະໜາ ໂຊກລາບເຂົ້ານຳ ຈຶ່ງພາໃຫ້ຂອບເຂດຂອງເລື່ອງສາສະໜາກວ້າງ ແລະ ກໍ່ມີຄຳຈຳນວນຫຼາຍພຽງພໍກັບເລື່ອງນັ້ນໆ ພ້ອມດຽວກັນວິທີແຜ່ສາສະໜາໄດ້ຍຶດເອົາກະແສວັນນະຄະດີ ແລະ ວັດທະນະທຳບາງຢ່າງເປັນຕົວຊ່ວຍ ສະນັ້ນເມື່ອມີກະແສໃດໜຶ່ງໃນນັ້ນໄດ້ແຜ່ໄປເຖິງກໍ່ພາໃຫ້

ເກີດການຮັບເອົາທັງຄຳສັບທັງບົດເລື່ອງ ນິທານ ຄຳສອນ ແລະ ວັດທະນະທຳບາງຢ່າງເຂົ້າ ມາມຳໃນພາສາລາວ. ການຮັບເອົາຄຳບາງຢ່າງເຂົ້າມາຫຼວງຫຼາຍ ຮວມເຖິງເລື່ອງຕ່າງໆ ດັ່ງກ່າວ ມານີ້ ພາໃຫ້ມີຜູ້ເຂົ້າໃຈວ່າ ປາລີ - ສັນສະກິດ ເປັນເຄົ້າຂອງພາສາລາວ ແລະ ສາສະໜາພຸດ ເປັນຕົ້ນເຄົ້າຂອງວັດທະນະທຳຂອງຊາດລາວແລະອື່ນໆ ຫາກມີຄວາມເຂົ້າໃຈເຊັ່ນນີ້ຖືເປັນ ຄວາມເຂົ້າໃຈທີ່ຜິດ ເນື່ອງຈາກວ່າການຮັບເອົາຄຳປາລີ-ສັນສະກິດ ພ້ອມກັບສາສະໜາພຸດ ນັ້ນແມ່ນມີຂຶ້ນຕາມຫຼັງທີ່ມີຄົນລາວຊາດລາວຕັ້ງຫຼາຍ ໜື່ນປີ. ກ່ອນນັ້ນ ລາວກໍ່ມີພາສາຂອງຕົນ ເອງເຊິ່ງຮຽກວ່າ: " ຄວາມ " ຢູ່ກ່ອນແລ້ວເຊັ່ນ: ຄວາມລາວ, ຄວາມຂະແມ, ອັນໝາຍເຖິງພາສາ ລາວ, ພາສາຂະແມນັ້ນເອງ, ໃນພາສາລາວມີຄຳພື້ນເຫມ (basic word) ຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນຄຳທີ່ມີໃຊ້ໃນພາສາລາວ ຄຳຊຸມນັ້ນໄດ້ເກີດຂຶ້ນ ແລະ ສະສົມມາພ້ອມກັບການ ເລີ່ມມີຄົນລາວ ທັງຕິດພັນກັບຕົວເຮົາ, ຊາດເຮົາມາຈົນບໍ່ຮູ້ສຶກວ່າມັນຍາກມັນງ່າຍແນວໃດ, ຄຳ ທີ່ເຮົາວ່າຂຽນບໍ່ສູ້ຖືກ, ບໍ່ເຂົ້າໃຈຄວາມໝາຍນັ້ນ ສ່ວນຫຼາຍເປັນຄຳທີ່ຮັບມາ, ເຖິງຈະຮັບມາດົນ ແລ້ວແຕ່ບາງຄຳກໍ່ຍັງຄົງລັກສະນະຂອງການປະກອບສ້າງຄຳ, ປະກອບສ້າງທາງຄວາມໝາຍ ຂອງຄຳນັ້ນຕາມແບບໃນພາສາເດີມຂອງມັນຢູ່, ດັ່ງນັ້ນ ເຮົາຈຶ່ງຕ້ອງການຄຳແປ, ການແປກໍ່ມັກ ໃຊ້ຄຳລາວ ຫຼື ໃຊ້ຄຳທີ່ລາວຮັບມາກ່ອນ ເຊິ່ງເຄີຍຮູ້ດີກ່ວາ ເປັນຕົວແປໃຫ້ຮູ້ຄວາມນັ້ນໆ.

ກຸ່ມຄຳທີ່ຮັບຈາກພາສາຝຣັ່ງ, ອັງກິດ, ພົບວ່າເປັນກຸ່ມຄຳທີ່ກ່ຽວກັບ ການທະຫານ, ເຕັກ ນິກ ແລະ ວິຊາການດ້ານຕ່າງໆ, ການຮັບຄຳໃນກຸ່ມນີ້ ມັກຮັບມາດ້ວຍວິທີທັບສັບເປັນຈຳນວນ ຫຼາຍກວ່າ ຮັບດ້ວຍວິທີແປ ສ່ວນຄຳຈາກພາສາໄທ ມີຕົ້ນນຳເນີດຈາກແຫ່ງດຽວກັນເຊິ່ງຮຽກເປັນ ພາສາຮ່ວມຕະກຸນ (Cognate language) ແຕ່ເນື່ອງດ້ວຍພາສາທັງສອງເກີດການແຍກຍ້າຍ ແລະ ປ່ຽນແປງໄປຕາມສະພາບແວດລ້ອມອັນໃໝ່ ແລະ ໄດ້ຮັບກະແສວັດທະນະທຳທີ່ຕ່າງ ກັນຫຼາຍຢ່າງອອກໄປ ພາໃຫ້ພາສາທັງສອງກາຍເປັນຄົນລະພາສາ ຫຼື ເປັນພາສາແບບປະຕິ ພາກຕໍ່ກັນ (Correspondence) ດ້ວຍການເບິ່ງພາສາຕາມແບບນີ້ກໍ່ຈະເຫັນຄວາມຕ່າງໃນ ຫຼາຍຢ່າງລະຫວ່າງພາສາລາວ ກັບພາສາໄທ. ດັ່ງນັ້ນໃນພາສາລາວຈຶ່ງຖືວ່າ ພາສາໄທເປັນພາ ສາຕ່າງຫາກ, ເຄີຍໃຊ້ຄຳວ່ານີ້ແມ່ນ ຄຳລາວ, ນັ້ນແມ່ນ ຄຳໄທ, ຄວາມໄທ ແລະ ນຳເອົາຄຳ ຈາກພາສາໄທເຂົ້າມາໃຊ້ ດັ່ງນີ້ເປັນຕົ້ນ ແຕ່ສ່ວນພາສາໄທກໍ່ຍັງຫາບໍ່ພົບ ໃນປຶ້ມເຫຼັ້ມໃດທີ່ກ່າວ

ວ່າໄດ້ຮັບເອົາຄຳຈາກ ພາສາລາວ. ອາດເປັນເພາະການໃຊ້ແບບເບິ່ງ ແລະ ຍຶດຖືຈຸດປະສົງທີ່ຕ່າງກັນໃນການເບິ່ງພາສາ ກໍ່ເປັນໄດ້.

2. ວິທີ ແລະ ແບບການຮັບຄຳ

ການຮັບຄຳເຂົ້າມາໃນພາສາລາວນັ້ນ ມີທັງແບບໂດຍກົງ ແລະ ແບບທາງອ້ອມ. ແບບໂດຍກົງນັ້ນມີຂຶ້ນໃນກຸ່ມຊົນຕ່າງພາສາກັນ ໄດ້ມາດຳລົງຊີວິດນຳກັນ ຫຼື ໃກ້ຊິດກັນ ມີການຕິດຕໍ່ລະຫວ່າງກັນ ເປັນເວລາດົນນານ ການຮັບເອົາຄຳໃນກໍລະນີນີ້ພົບວ່າ ເປັນການຮັບທັງໂຄງສ້າງຄຳ, ໂຄງສ້າງຂອງວະລີ ຫຼື ຮັບຄວາມໝາຍ ໂດຍບໍ່ກ່ຽວກັບຕົວຂຽນ.
ຕົວຢ່າງ: ໃນພາສາລາວໄດ້ຮັບຄຳວ່າ ມາກ ຈາກພາສາຂະມຸ, ໃນປະຈຸບັນ ຄຳທັງສອງກໍ່ ອອກສຽງ ທັງມີຄວາມໝາຍ ເຊັ່ນເດີມ ແລະ ຂຽນຕາມລະບົບອັກສອນລາວ.

ການຢືມແບບທາງອ້ອມ ເປັນການຢືມໂດຍຜ່ານພາສາໃດໜຶ່ງ ຫຼື ດ້ວຍວິທີໃດໜຶ່ງ ເຂົ້າມາສູ່ພາສາຕົນ. ກຸ່ມຊົນທີ່ຮັບເອົາຄຳນັ້ນບໍ່ໄດ້ມີການຕິດຕໍ່ສື່ສານໃກ້ຊິດລະຫວ່າງກັນ ຫຼື ຕ່າງກຸ່ມຕ່າງກໍ່ຢູ່ໄກກັນ ແຕ່ເນື່ອງດ້ວຍທຸກຊາດທຸກພາສາມີການສຳພັນກັນ ໃນການສຳພັນນັ້ນມີທັງແບບໂດຍກົງ ແລະ ແບບຕໍ່ເນື່ອງກັນໄປເລື້ອຍໆ ໄດ້ພາໃຫ້ບາງຄຳເຊິ່ງຮັບເຂົ້າໃນພາສານີ້ແລ້ວ ກໍ່ມີພາສາອື່ນຮັບເອົາຕໍ່ໄປອີກ.

ຕົວຢ່າງ: ລາວໄດ້ຮັບຄຳວ່າ ອາກາເດມີ, ໂອໂຕມາຕິກ, ອາໂຕມ, ມາສເຕີ... ຈາກພາສາເກຣັກ ໂດຍທີ່ວ່າ ລາວ ແລະ ເກຣັກ ບໍ່ໃກ້ຊິດ ຫຼື ຕິດຕໍ່ສື່ສານລະຫວ່າງກັນ. ສະນັ້ນ ການເຂົ້າມາໃນພາສາລາວຂອງຄຳຊຸມນີ້ ຄົງເປັນການຮັບໂດຍທາງອ້ອມຜ່ານພາສາໜຶ່ງ ເຊິ່ງອາດແມ່ນພາສາຝຣັ່ງ ເປັນຕົວນຳມາ.

ການຢືມຄຳຈາກພາສາໜຶ່ງນັ້ນ ໃນທັດສະນະໜຶ່ງຖືວ່າເປັນການປ່ຽນທີ່ຢູ່ຂອງຄຳລະຫວ່າງພາສາ ແຕ່ບໍ່ແມ່ນການຖ່າຍໂອນຄຳ ຫຼື ຖ່າຍໂອນພາສາແບບໂດຍກົງ ເພາະການຖ່າຍໂອນພາສາມີເປົ້າໝາຍຫຼັກຢູ່ທີ່ນຳເອົາຄວາມໝາຍຈາກນີ້ໄປສູ່ນັ້ນ ດ້ວຍພາສາຕໍ່ພາສາໂດຍໃຫ້ຄວາມໝາຍລະຫວ່າງ ພາສາຕົ້ນທາງ (source language) ແລະ ພາສາເປົ້າໝາຍ (target

language) ໄດ້ເໝືອນກັນ ສ້າງໃຫ້ເກີດຄວາມເຂົ້າໃຈ ຫຼື ຄວາມຮູ້ສຶກໄດ້ເໝືອນກັນ. ແຕ່ການຢືມຄຳບໍ່ຄືການຖ່າຍໂອນຄຳລະຫວ່າງພາສາໂດຍທັງໝົດ ເປັນພຽງການນຳເອົາຄຳ, ຄວາມໝາຍຈາກທີ່ອື່ນເຂົ້າມາຢ່າງດຽວ ໂດຍບໍ່ມີກົດຄວບຄຸມໄປເຖິງຄວາມເທົ່າທຽມກັນ, ຄວາມຄືກັນ ແລະ ການຮັກສາໄວ້ໃຫ້ສະເໝີເໝືອນກັນໃນພາສາທີ່ຢືມ ແລະ ພາສາທີ່ຖືກຢືມ. ດັ່ງນັ້ນ ຈຸດປະສົງຂອງການຢືມແມ່ນເພີ່ມຈຳນວນຄຳໃຫ້ພາສາຕົນ ແລະ ໄດ້ຄຳນັ້ນມາໃຊ້ໃຫ້ເຂົ້າຕາມລະບົບພາສາຕົນ ບໍ່ແມ່ນຈຸດປະສົງຮັກສາຄວາມຄື, ຄວາມຄືເກົ່າຄວາມເທົ່າດ້ານຮູບ ແລະ ຄວາມໝາຍຂອງຄຳ ທີ່ມີໃນພາສາຢືມໄປກັບພາສາທີ່ຖືກຢືມ.

ສະນັ້ນ ຄຳທີ່ຢືມຈະປະກົດດ້ວຍຫຼາຍແບບເຊັ່ນ ແບບທີ່ຍັງມີຄວາມເໝືອນເດີມ, ແບບທີ່ຄ້າຍຄື ແລະ ແບບທີ່ປ່ຽນແປງທຸກແບບລ້ວນແຕ່ຖືກຕ້ອງ ເພາະມັນເປັນໄປຕາມກົດ. ໃນການປ່ຽນແປງອາດຮວມໄປເຖິງການປ່ຽນແປງລຳດັບທາງຄວາມໝາຍຂອງຄຳ ເຊັ່ນ ບາງກໍລະນີຄວາມໝາຍຂອງຄຳໃນພາສາທີ່ຢືມ ແລະ ພາສາທີ່ຖືກຢືມຍັງເໝືອນກັນ.

ຕົວຢ່າງ: ຄຳວ່າ piano ກໍ່ເປັນ ປີອາໂນ, Violin ເປັນ ວາຍໂອລິນ, metre ກໍ່ເປັນ ແມັດ ເຊິ່ງຍັງເປັນຄຳນາມ, ມີຄວາມໝາຍ ດັ່ງເດີມ.

ແຕ່ບາງກໍລະນີ ຄວາມໝາຍກໍ່ຖືກສັບປ່ຽນລຳດັບ, ປ່ຽນປະເພດຄື ຄວາມໝາຍຫຼັກຂອງຄຳໃນພາສາທີ່ຖືກຢືມອາດປ່ຽນໄປເປັນຄວາມໝາຍສຳຮອງໃນພາສາທີ່ຢືມ, ບາງກໍລະນີໃນພາສາທີ່ຖືກຢືມຄຳນັ້ນອາດຈະມີຫຼາຍຄວາມໝາຍ ແຕ່ໃນພາສາລາວຄຳທີ່ຢືມອາດເອົາພຽງບາງຄວາມໝາຍເທົ່ານັ້ນກໍ່ມີ. ຕົວຢ່າງ: ຄຳວ່າ ໂຣກ ແລະ ພະຍາດ ໃນປາລີເມື່ອຮັບມາສູ່ຄວາມລາວ ກໍ່ອອກສຽງເປັນ ໂລກ, ດ້ານຄວາມໝາຍທີ່ປາກົດໃນພາສາລາວພົບວ່າມີຂອບເຂດບໍ່ຄືເກົ່າ ເຮົາໃຊ້ຄຳວ່າ ໂລກ ໃນກໍລະນີທີ່ເປັນອາການຕິດເຊື້ອ, ມີເຊື້ອທີ່ຮ້າຍແຮງ, ປິວຍາກ.

ຕົວຢ່າງ: ໂລກຈິດ, ໂລກໜອງໃນ, ໂລກເອດ ດັ່ງນີ້ ເປັນຕົ້ນ.

ສ່ວນອາການທີ່ບໍ່ຮ້າຍແຮງສາມາດປິວໄດ້ຈະບໍ່ໃຊ້ຄຳວ່າ ໂລກ. ຄຳວ່າ ພະຍາດ ກໍ່ເຊັ່ນດຽວ. ຄວາມໝາຍເດີມໝາຍເຖິງເຊື້ອພະຍາດໃນລຳໄສ້ ແມ່ທ້ອງຊະນິດໜຶ່ງເທົ່ານັ້ນ, ແຕ່ເມື່ອລາວຮັບຄຳນີ້ບໍ່ໄດ້ຮັບເອົາຄວາມໝາຍຕົ້ນໆ ຫາກຮັບເອົາຄວາມໝາຍທາງຂ້າງຄຽງຄື:

ເຊື້ອ, ຕົວທີ່ພາໃຫ້ເກີດອາການທາງສຸຂະພາບເຊັ່ນນີ້ເຂົ້າມາ. ດັ່ງນັ້ນ ການໃຊ້ຄຳນີ້ໃນພາສາລາວຈຶ່ງມາຍຶດໃນຄວາມໝາຍຕາມທີ່ມີໃນພາສາລາວ ເຊັ່ນ ພະຍາດທ້ອງຖອກ, ພະຍາດປອດແຫ້ງ, ພະຍາດຕາແດງ, ພະຍາດບວມ...

ພ້ອມນີ້ ຄວາມໝາຍຂອງຄຳວ່າ ພະຍາດ ຍັງໄດ້ໄປນຳໃຊ້ທາງສັງຄົມອີກ.

ຕົວຢ່າງ: ພະຍາດອາດຍາສິດ, ພະຍາດເຫັນແກ່ຕົວ, ພະຍາດຂີ້ຄ້ານມັກງ່າຍ...

ໃນນີ້ພົບວ່າ ເມື່ອນຳເອົາຄຳວ່າ ພະຍາດໄປໃຊ້ກໍລະນີໃດກໍ່ສະແດງເຖິງວ່າ ກໍລະນີນັ້ນ ຫຼື ອາການນັ້ນທີ່ຕິດແລ້ວແກ້ໄຂຍາກ ເໝືອນກັບການມີເຊື້ອ ເຊິ່ງຈຳຕ້ອງໃຊ້ຢາ ຫຼື ຈະຕ້ອງໃຊ້ວິທີເຂົ້າຊ່ວຍຈຶ່ງຈະຕ້ອງແກ້ໄຂໄດ້, ຫາກປະປ່ອຍອາການນັ້ນ ຈະບໍ່ມີອາການດີຂຶ້ນໄດ້ດ້ວຍຕົວເອງ. ແຕ່ໃນນີ້ພາສາລາວ ບໍ່ເຄີຍໃຊ້ຄຳວ່າ ໂລກ ກັບກໍລະນີທາງສັງຄົມເລີຍເຊັ່ນ ບໍ່ເຄີຍໃຊ້ຄຳວ່າ ໂລກອາດຍາສິດ, ໂລກເຫັນແກ່ຕົວ...

ການຢືມຄຳ ແລະ ການແປງຄຳ ທີ່ຢືມ ນອກຈາກກໍລະນີທີ່ກ່າວມາບາງຢ່າງ ກໍ່ຍັງມີວິທີອື່ນໆ ທີ່ສຳຄັນເຊິ່ງກຳນົດໄດ້ດັ່ງນີ້:

1). ຄຳທີ່ຢືມແບບທັບສັບ (loan word)

ການຢືມດ້ວຍວິທີທັບສັບ ຫຼື ບາງຄັ້ງກໍ່ເອີ້ນວ່າ ເອົາທັງຮູບທັງຄຳ, ຄວາມໝາຍ ແລະ ສຽງມານຳກັນ. ການຢືມແບບນີ້ປາກົດວ່າມີມານານກວ່າວິທີອື່ນໆໃນຂະບວນການຢືມຄຳ. ການທັບສັບໝາຍເຖິງການຮັບເອົາຄຳໂດຍອອກສຽງໃຫ້ຄ້າຍ ຫຼື ໃກ້ຄຽງກັບສຽງເດີມ, ແຕ່ການຈະອອກສຽງໃຫ້ໄດ້ໃກ້ຄຽງສຳໃດນັ້ນ ແມ່ນຂຶ້ນກັບລະດັບໃກ້ຄຽງຂອງລະບົບສຽງທີ່ມີໃນພາສາທີ່ຢືມ ແລະ ພາສາຖືກຢືມ. ແຕ່ເຖິງຢ່າງໃດການຈະອອກສຽງໃຫ້ໄດ້ຄືກັບສຽງເດີມທັງໝົດ ໃນພາສາທີ່ຖືກຢືມນັ້ນແມ່ນເລື່ອງເປັນໄປໄດ້ຍາກ ເພາະວ່າເມື່ອຢືມເຂົ້າໄປສູ່ພາສາໃດຄຳນັ້ນກໍ່ຈະປ່ຽນເຂົ້າກັບລະບົບສຽງຂອງພາສາທີ່ຢືມໄປ ເພື່ອໃຫ້ການອອກສຽງງ່າຍຂຶ້ນ ແຕ່ຄວາມໝາຍຂອງຄຳຈະຮັກສາໄດ້ເຊັ່ນເດີມ. ການຢືມໃນວິທີນີ້ພົບວ່າ ມີການປ່ຽນແປງໜ້ອຍ ໂດຍສະເພາະສ່ວນທີ່ປ່ຽນແປງແດ່ ກໍ່ໄດ້ແກ່ສຽງບາງອັນໃນຄຳເທົ່ານັ້ນ.

ຕົວຢ່າງ: ໃນພາສາລາວໄດ້ຮັບຄຳຈາກພາສາຕ່າງໆເຂົ້າມາດ້ວຍວິທີທັບສັບເຊັ່ນ ຈາກ ພາສາຈີນ ມີຄຳວ່າ: ໂອລ້ຽງ, ເຕົ້າຮູ້, ສາງ, ເກົ້າອີ້... ຈາກພາສາອັງກິດໄດ້ແກ່ ເທັນນິກ (tennis) ກາຊິໂນ (casino), ກິໂລແມັດ (kilometer), ໄມໂຄຣໂຟນ (microphone) ທີມ (team), ຄລີນິກ (clinic) ຈາກພາສາຂະແມ ໄດ້ແກ່: ຂະໂມຍ, ສະເດັດ, ບ້ຽດົມ, ລະອຽງ... ແລະ ຈາກພາສາອື່ນໆກໍ່ມີຫຼາຍຄຳ. ການຢືມແບບທັບສັບນີ້ເປັນວິທີພົບຫຼາຍກວ່າວິທີອື່ນໆເຊິ່ງສາມາດສັງເກດໄດ້ຈາກບັນດາຄຳທີ່ຢືມມາ.

2). ຄຳທີ່ຢືມແບບດຶງເຂົ້າຄວາມ

ຄຳບາງຄຳຂອງພາສາອື່ນທີ່ເຮົາຮັບມາໃຊ້ ເນື່ອງດ້ວຍສຽງຄຳນັ້ນບາງຢ່າງເຊັ່ນ: ສຽງພະຍັນຊະນະຕົ້ນຄຳ, ສຽງສະຫຼະ ຫຼື ພະຍັນຊະນະກາງຄຳ ມີຄວາມແຕກຕ່າງຫຼາຍຈາກລະບົບສຽງຂອງພາສາຕົນ ເມື່ອຖືກຢືມກໍ່ຈະເກີດການປັບປ່ຽນໃນແຕ່ລະຢ່າງທີ່ຕ່າງນັ້ນ ແຕ່ກ່ອນປັບປ່ຽນແບບທີ່ເອີ້ນວ່າ ດຶງເຂົ້າຄວາມນີ້ ເປັນວິທີປັບປ່ຽນອີກແບບໜຶ່ງທີ່ຕ່າງໄປຈາກການປ່ຽນແທນສຽງກັບສຽງຢ່າງເປັນລະບົບລະຫວ່າງພາສາ ເຊິ່ງການປັບໂດຍເອົາສຽງ ແລະ ຄວາມຂອງພາສາທີ່ຢືມນັ້ນເຂົ້າມາກ່ຽວ ເພື່ອໃຫ້ຄຳທີ່ຢືມມາໃຫ້ເກີດການຈື່ງ່າຍ ໄດ້ຄວາມຄ່ອງ ແລະ ໄດ້ພາບໃຫ້ແກ່ພາສາຕົນ ຫຼື ເວົ້າແບບໜຶ່ງແມ່ນເພື່ອໃຫ້ຈື່ໄດ້ງ່າຍ ແລະ ເວົ້າກໍ່ງ່າຍສຳລັບພາສາເຮົາ.

ຕົວຢ່າງ: ຄຳໃນພາສາອັງກິດ.

Ananas	ໝາກນັດ
Ball	(ໝາກ) ບານ ແລະ ອື່ນໆ.
Captain	ກັບຕັນ
Coffee	ກາເຟ
Concord	ກອງກອດ

Email	ອີ່ແມວ
Gas	ແກ๊ດ
Golf	ก๊อบ
Insulator	(ໝາກ) ສะเลิเติ
Maney net	ມานิมิด
Pipe	ແป๊บ
Seminar	ใบพาสาลาวเป๋น ສำมะนา
sign	เซ็น

3). ภาบที่ยืมด้อยภาบแป (Calquing)

ภาบยืมคำแบบบี้เป๋นภาบรับคำจาภพาสาอื่นเข้ำมา โดยภาบใช้คำในพาสาติบปุ่บแทบ. ภาบปุ่บบั้บ ได้แก่ภาบปุ่บรูบคำ และ สุ่ง, รักสาพุ่งความหบายในส่อบที่ต้อๆภาบยืมบั้บไว้, ภาบแปอาดใช้วิทีเอ๋าคำเดิมขอๆพาสาติบ หิ เอ๋าคำที่ยืมจาภพาสาอื่บ เซิ่งใช้ในพาสาติบย่าๆดิบบานกว่าจิบมีความลึ้งเถีย ถีกับคำเดิมในพาสาติบแล้อบั้บ มาแปด้อยคำต่คำ หิ ด้อยภาบปะสิมคำตามก๊ะนิ เพื่อให้เข้ำกับความหบายที่ยืมมา.

ติอย่าๆ:

คำในพาสาอังกิด:	แปเป๋นคำลาอ:
Activity	กิดจะกำ
Birth control	คุมกำเม็ด

Cold war	ສົງຄາມເຢັນ
Ethnics	ຈະລິຍະທຳ
Frequency	ຄວາມຖີ່
Guided rocket	ລູກສອນໄຟນຳວິຖີ
Imperialism	ຈັກກະພັດນິຍົມ
Inflation	ເງິນເຟ້
Installment	ເງິນຜ່ອນ
Long wave	ຄື້ນຍາວ
Mathematics	ຄະນິດສາດ
Microscope	ກ້ອງຈຸລະທັດ
Organic chemistry	ເຄມີອິນຊີ
Point of view	ທັດສະນະ
Program	ກຳນົດການ
Short wave	ຄື້ນສັ້ນ
Stand point	ຈຸດຢືນ
Traffic	ຈາລະຈອນ
War ship	ເຮືອຮົບ
World View	ການມອງໂລກ

24 / VII
ห้ามจำหน่าย!

4) ການຢືມພຽງຄວາມໝາຍ (Semantic borrowing)

ການຢືມດ້ວຍການແປ ແລະ ການຢືມຄວາມໝາຍນີ້ ອາດພາໃຫ້ເກີດຄວາມເຂົ້າໃຈປົນເປກັນກໍ່ໄດ້; ເນື່ອງຈາກວ່າ ການແປກໍ່ເປັນການຍຶດດ້ານຄວາມໝາຍຂອງຄຳ ແລ້ວຫາເອົາຄຳໃນພາສາຕົນມາແປ ເພື່ອໃຫ້ໄດ້ຄວາມເໝືອນກັນ ແລະ ການຢືມຄວາມໝາຍກໍ່ມີສ່ວນທີ່

ຄ້າຍກັນນັ້ນ. ແຕ່ເມື່ອສຶກສາສະເພາະໃນແບບຢືມ ແລະ ສິ່ງທີ່ຢືມນັ້ນ ໄດ້ພົບວ່າ ມີຄວາມແຕກຕ່າງກັນໃນບາງຢ່າງ ທີ່ສຳຄັນໄດ້ແກ່ ສຳລັບການຢືມຄວາມໝາຍ ເປັນການຢືມສະເພາະຄວາມໝາຍທີ່ມີໃຊ້ໃນພາສານັ້ນໆ ແຕ່ໃນພາສາເຮົາບໍ່ເຄີຍມີຄວາມໝາຍນັ້ນໆມາກ່ອນ, ຄວາມໝາຍທີ່ມີໃນພາສາອື່ນອາດຢູ່ໃນລະດັບຄຳ ຫຼື ໃນລະດັບອະລິກ່ໄດ້ ແຕ່ເມື່ອເຮົາຢືມມາຄວາມໝາຍນັ້ນ ຖືກນຳມາສະແດງດ້ວຍພາສາຂອງເຮົາ ສະນັ້ນ ການສະແດງໃນພາສາເຮົາບາງກໍລະນີອາດຈະບໍ່ຄືເກົ່າ, ອາດບໍ່ເປັນຄຳຕໍ່ຄຳກໍ່ເປັນໄດ້. ທັງນີ້ ຈຸດປະສົງຫຼັກກໍ່ຄື ເພື່ອໃຫ້ຄວາມໝາຍທີ່ຢືມມານັ້ນໄດ້ຮັບການສະແດງອອກຢ່າງຈະແຈ້ງໃນພາສາເຮົາ ບໍ່ແມ່ນຈຸດປະສົງໃຫ້ເກີດຄວາມເທົ່າທຽມດ້ານຮູບຄຳ ແລະ ສຽງຂອງຄຳ. ດັ່ງນັ້ນ ການຢືມແບບນີ້ ບາງຄັ້ງບໍ່ຮຽກວ່າ ການຢືມ ແຕ່ຮຽກເປັນການບັນຍັດຄຳກໍ່ມີ.

ຕົວຢ່າງ : ຄຳໃນພາສາອັງກິດ	ໃນພາສາລາວ
Aero plane	ເຮືອບິນ
Behavior	ພຶດຕິກຳ
Electric fan	ພັດລົມ
Electric	ໄຟຟ້າ
Map	ແຜນທີ
Strain	ຄວາມຕຶງຄຽດ
Television	ໂທລະພາບ
Thesis	ວິທະຍານິພົນ
Torch	ໄຟສາຍ

3. ການແປງຄຳຢືມ

ການຮັບຄຳຈາກພາສາອື່ນເຂົ້າມາໃຊ້ໃນພາສາຕົນນັ້ນມີຫຼາຍວິທີເມື່ອກ່າວເຖິງການແປງຄຳຢືມຈະແມ່ນວິທີໃດໆເຊັ່ນ ທັບສັບ ການແປກ່ຳລ້ອນແຕ່ໃຫ້ເກີດການປ່ຽນແປງໃນຄຳໂດຍສະເພາະ ໄດ້ແກ່ຮູບຄຳ ແລະ ສຽງໃນຄຳ.

ຮູບຄຳນັ້ນ ໄດ້ຮວມມີເລື່ອງພະຍັນຊະນະຕົ້ນ, ພະຍັນຊະນະສະກົດ ຫຼື ສະຫຼະ ສ່ວນເລື່ອງສຽງນັ້ນ ຈະມີການປ່ຽນສຽງໃນຄຳໃຫ້ຕ່າງຈາກເດີມ ດ້ວຍການປັບທຳນອງສຽງ ຫຼື ຕື່ມສຽງ ວັນນະຍຸດເຂົ້າ. ການແປງຄຳຢືມເກີດຂຶ້ນກ່ຳເພື່ອ:

- ເພື່ອຕ້ອງການໃຫ້ສາມາດອອກສຽງຄຳນັ້ນໃນພາສາຕົນໄດ້ຢ່າງສະດວກ.
- ເພື່ອໃຫ້ສຽງຂອງຄຳເຂົ້າກັບລະບົບລວມຂອງສຽງ ໃນພາສານັ້ນໆ.
- ເພື່ອໃຫ້ໂຄງສ້າງ ແລະ ຄວາມໝາຍຂອງຄຳນັ້ນໆຄ່ອງຕົວກັບລະບົບຄຳໃນພາສາ.
- ເພື່ອໃຊ້ຄຳນັ້ນໃຫ້ໄດ້ຢ່າງບໍ່ເກີດການຂັດຂ້ອງໃນທາງສຽງ ແລະ ຄວາມໝາຍໃນເມື່ອນຳມາກ່າວ, ຂຽນ ກ່ຳໃຫ້ເກີດຄວາມມ່ວນ, ສິ່ງທີ່ຖືກໃຫ້ສຳຜັດ ແລະ ໄດ້ຄວາມ.

ໃນການແປງຄຳຢືມມີການແປງອັນສຳຄັນດັ່ງນີ້ :

1). ການແປງສຽງ

ການຕັດ (Ellipsis)

ໝາຍເຖິງການຕັດສຽງ ຫຼື ສ່ວນໃດໜຶ່ງໃນຄຳທີ່ຮັບມາໃຫ້ຍັງເຫຼືອສ່ວນທີ່ຕ້ອງການ ອັນທີ່ຕັດນັ້ນອາດເປັນສ່ວນໃດກ່ຳໄດ້ ເຊັ່ນ ສຽງພະຍັນຊະນະຕົ້ນຄຳ, ກາງຄຳ, ທ້າຍຄຳ, ສຽງສະຫຼະ ຫຼື ພະຍາງກ່ຳໄດ້.

ຕົວຢ່າງ:

ການຕັດພະຍາງ:	number	ເປັນ	ເບີ
ການຕັດສະຫຼະ:	pipe	ເປັນ	ແປັບ

ການຕັດພະຍັນຊະນະການຄຳ:	abhipra:ya	ເປັນ	ອະພິປາຍ
	satava	ເປັນ	ສັດ
	phla:n	ເປັນ	ຜານ
ການຕັດພະຍາງທ້າຍຄຳ:	Dynamo	ເປັນ	ໄດ
ການຕັດພະຍັນຊະນະການຄຳ:	film	ເປັນ	ຟິມ
	golf	ເປັນ	ກ໊ອບ
ການຕັດສຽງພະຍັນຊະນະທ້າຍຄຳ:	lift	ເປັນ	ລິບ
	stamp	ເປັນ	ສະແຕມ.
	pump	ເປັນ	ປ໊ຳ
	tent	ເປັນ	ເຕັນ

2). ການແປງສຽງພະຍັນຊະນະ ຫຼື ສະຫຼະ

ໝາຍເຖິງການນຳເອົາສຽງພະຍັນຊະນະ ຫຼື ສະຫຼະ ໃນພາສາຂອງຕົນໄປປ່ຽນແທນໃຫ້ພະຍັນຊະນະບາງຕົວ ຫຼື ສະຫຼະບາງຕົວໃນຄຳທີ່ຮັບມາ ເພື່ອໃຫ້ຄຳທີ່ມານັ້ນມີສຽງທີ່ຄ່ອງກັບພາສາຕົນ.

ຕົວຢ່າງ:	sign	ແປງເປັນ	ເຊັນ
	English		ອັງກິດ
	Nippon		ຍີ່ປຸ່ນ
	Shampo		ແຊມພູ
	Counter		ເຄົາເຕີ
	ta:ra:		ດາຣາ
	vipulla		ໄພບູນ ແລະອີກຫຼາຍໆຄຳ.

3). ການເພີ່ມ (adding)

ການຮັບຄຳຈາກພາສາອື່ນເຂົ້າມາໃຊ້ນັ້ນ ນອກຈາກການຕັດ ແລະ ແປງແລ້ວຍັງມີ ການເພີ່ມເຂົ້າໃນຄຳ. ອັນທີ່ນຳມາເພີ່ມນີ້ ໃນພາສາລາວໄດ້ແກ່ສຽງວັນນະຍຸດເປັນຕົ້ນຕໍ, ຈາກ ນັ້ນກໍ່ແມ່ນການເພີ່ມບາງພະຍາງເຂົ້າໄປ. ການເພີ່ມສຽງວັນນະຍຸດ ມີຈຸດປະສົງໃຫ້ສຽງໃນຄຳ ນັ້ນໄດ້ລະດັບທີ່ຄ່ອງກັບຄຳອື່ນໆໃນພາສາລາວ. ການເພີ່ມບາງພະຍາງເປັນການກຳນົດປະເພດ ຂອງຄຳໃຫ້ແຈ້ງຂຶ້ນ ຫຼື ເພື່ອໃຫ້ເປັນການບອກເຖິງຮູບຊົງ, ແບບ, ລັກສະນະ, ຂະໜາດ, ສີສັນ ແລະ ຄວາມໝາຍຂອງຄຳນັ້ນໄດ້ດີຂຶ້ນ.

ຕົວຢ່າງ:

ການເພີ່ມໜ່ວຍຄຳ

Cake	ເພີ່ມຄຳວ່າ:	ເຂົ້າໜົມ	ເປັນ	ເຂົ້າໜົມເຄັກ
Ball		ໝາກ		ໝາກບານ
Bomb		ລູກ ຫຼື ໝາກ		ໝາກບົ້ມ, ລູກບົ້ມ
Whistle		ໝາກ		ໝາກຫວີດ
Candara		ດວງ		ດວງຈັນ
ma:ta		ນ		ນາມດາ
ma:ya:		ນ		ນາມຍາ

ການເພີ່ມສຽງວັນນະຍຸດ:

Whistle	ເປັນ:	ຫວີດ	/ wi:t /
Vitamin		ວິຕາມິນ	/ vi:tamin /
Pipe		ແປັບ	/ pép /
Whisky		ວິສະກີ	/ visákî: /

sneha	ສະເໜ	/ sánè: /	ແລະ ຄຳອື່ນໆ .

4). ການແປງຕົວສະກົດ

ຕົວສະກົດໃນພາສາລາວມີ 8 ຕົວ ໄດ້ແກ່: ກ ດ ບ ມ ນ ຍ ງ ວ ໃນຄຳຢືມຫາກມີຕົວສະກົດທີ່ຕ່າງຈາກອັນ ທີ່ມີໃນພາສາລາວ ກໍຈະຖືກປ່ຽນ ດ້ວຍຕົວສະກົດໃດໜຶ່ງ ຕາມຄວາມເໝາະສົມກັບລະບົບສຽງສະກົດ ເພື່ອໃຫ້ເຂົ້າກັບສຽງຂອງຄຳໃນພາສາລາວ.

ຕົວຢ່າງ:

Boas	ເປັນ	ບວດ	/ buat /
Sacca		ສັດຈະ	/ satca /
Visamaya		ພິດສະໄໝ	/phitsamay/
Ball		ບານ	/ ba:n /
Switch		ສະວິກ	/ savik /
Mail		ເມ	/ me:/
Dinosaur		ໄດໂນເສົາ	/ dajnosaw /
Whistle		ຫວີດ	/ vi:t /
Afghanistan		ອັຟການິສະຖານ	/ ʔa:fka:nisthan /
Buddhism		ພຸດທະສາສະໜາ	/ phuthasa:sana: /

5). ภาษาแปงสงๆสะห฼วะ.

ในพาสาลาวหน่วยสงๆสะห฼วะมีอยู่ 9 คู่ คือ: สะห฼วะสงๆสั้น 9 และ สะห฼วะสงๆยาว 9 พ้อมนี้ก่ำมีสะห฼วะปะสิม เอิ่งหมายเถิงสะห฼วะเคื่อนจากจุดหนึ่งๆไปสู่จุดหนึ่งๆ คือ: เxย / ia / ; xอ / ua / และ เxือ / ɨa / ด้วยละบิบสงๆสะห฼วะในพาสาลาวเป็นเช่นนี้ พาให้สงๆสะห฼วะบางต๊อในคำที่ฮับมาได้ถืกปับปุ่งด้วยสงๆสะห฼วะขอๆพาสาลาวต๊อที่ใก้ ซึ่ ถ้ายคือกับสงๆสะห฼วะในคำยืม.

ต๊อย่างๆ :

Chanot	เป็น	ซะโนด	/ sano:t /
Camnang		จำนิงๆ	/ camnoŋ /
kɔŋwɔ:l		กังวิน	/ kaŋvon /

5. ภาษาปุ่งแปงทางๆความหมาย

ภาษาปุ่งแปงที่เกิดขึ้นในคำยืมนั้น ลวมไปเถิงภาษาปุ่งแปงทางๆความหมายขอๆบางๆคำ ภาษาปุ่งแปงทางๆความหมายในคำยืม บางๆคำสามาดค้ินหาสาเหดได้คือ:

1).เพาะภาษายืมคำเข้ามานั้นมีบางๆความหมายในคำนั้นเฮาบ่ได้ฮับเอามาหมายว่าฮับพฺงบางส่วน ขอๆความหมายทั่งหมิด.

2). ความหมายที่เฮายืมมานั้น เมื่อถืกนำมาใช้ในพาสาเฮาย่างดินนานก่ำพาให้เหมือนกับคำในพาสาขอๆเฮา. เมื่อๆจากในภานใช้นั้น ก่ำจะเข้ากับห฼ายบ๋ลิบิด (context) ในบางบ๋ลิบิดจะก่งวทางสำนวน ซึ่ ในทางบันเทิงก่ำมีเป็นเช่นนี้ ก่ำจะพาให้มีสิ่งที่เพิ่มเข้ามา ซึ่ เสิมเติมเข้า.

3). ບາງຄຳທີ່ຮັບມາໃນສະໄໝກ່ອນ ມາເຖິງປະຈຸບັນ ຄວາມໝາຍນັ້ນ, ຄວາມສຳນຶກ ນັ້ນໄດ້ປ່ຽນໄປ ຫຼື ບໍ່ ກໍ່ມີຄວາມໝາຍອື່ນທີ່ໃກ້ຄຽງ ມີຂຶ້ນມາທຽບ ຕົວຢ່າງ: ກຸ່ມຄຳ ກ່ຽວກັບຫົວໜ່ວຍແທກນ້ຳໜັກ ຄື: ບັກ, ເບ້ຍ, ເຖ, ຫຼີ , ເຊັ່ງ, ປ໋ຽ ຫຼື ຄຳກ່ຽວກັບຊື່ ຮຽກເງິນ ຄື: ອັດ, ບີ້, ຈຸກ, ໝັ່ນ, ຮາງ ເປັນຕົ້ນ ໄດ້ມີຄຳວ່າ: ມີລິກຣາມ, ເດຊິກຣາມ, ກຣາມ, ກິໂລກຣາມ, ເຂົ້າມາແທນຄຳວ່າ ບັກ, ເບ້ຍ... ບາງຄຳໃນນີ້ ຍັງເຫຼືອໃຊ້ຢູ່ ບາງບໍລິບົດ ເທົ່ານັ້ນ .

4). ຄວາມໝາຍຂອງຄຳຢືມຖືກນຳມາປະສົມຮ່ວມກັນກັບຄຳອື່ນອີກ, ທີ່ວ່າຄຳອື່ນນັ້ນ ມີທັງຄຳພື້ນຖານໃນພາສາເຮົາ ແລະ ຄຳທີ່ຢືມມາຈາກພາສາໃດໜຶ່ງ ກ່ອນແລ້ວເຊິ່ງ ເຮົາຮູ້ເຂົ້າໃຈຄວາມໝາຍນັ້ນ ເປັນຢ່າງດີ, ເມື່ອນຳມາປະສົມກໍ່ພາໃຫ້ຄວາມໝາຍ ທີ່ໄດ້ ໃນຄຳປະສົມນັ້ນ ຕ່າງຈາກຄວາມໝາຍຫຼັກຂອງຄຳເດີມກໍ່ມີ.

ສະພາບການປ່ຽນແປງທາງຄວາມໝາຍຂອງຄຳຢືມສັງເກດເຫັນລັກສະນະຂອງການ ປ່ຽນແປງມີດັ່ງນີ້:

1. ຄວາມໝາຍແຄບເຂົ້າ (narrowing)
2. ຄວາມໝາຍກວ້າງອອກ (extension)
3. ຄວາມໝາຍເຄື່ອນ (shift)

ຄວາມໝາຍແຄບເຂົ້າ (narrowing)

ກໍລະນີນີ້ໝາຍເຖິງຄວາມໝາຍຂອງຄຳນັ້ນໆທີ່ປາກົດໃຊ້ໃນພາສາລາວມີຂອບເຂດ ແຄບກວ່າຄວາມໝາຍທີ່ມີໃນພາສາເດີມ.

ຕົວຢ່າງ:

ປະລິນຍາ ຄວາມໝາຍເດີມຄື : ຄວາມຮອບຮູ້, ການກຳນົດຮູ້

ໃນພາສາລາວມີຄວາມ ໝາຍຄື: ຄວາມຮູ້ໃນຂັ້ນມະຫາວິທະຍາໄລ.

Traphok ຄວາມໝາຍເດີມ: ກິ້ນ.

ໃນພາສາລາວ: ອະໄວຍະວະສ່ວນຂອງຕົ້ນຂາທັງສອງເບື້ອງຂຶ້ນມາຕໍ່ ໃສ່ແອວ.

Vāyo ຄວາມໝາຍເດີມ: ລົມໂດຍທົ່ວໄປ.

ໃນພາສາລາວ: ລົມຮ້າຍ, ລົມແດງ.

Park ຄວາມໝາຍເດີມ : ບ່ອນຫວ່າງໄວ້ໃຫ້ຈອດລົດ ຫຼື ບ່ອນຍ່າງຫຼິ້ນ

ໃນພາສາລາວ: ສວນສາທາລະນະ.

Boy ຄວາມໝາຍເດີມ: ເດັກນ້ອຍຊາຍ.

ໃນພາສາລາວ:ຄົນຮັບໃຊ້ແກ່ຜູ້ອື່ນ.

ຈານ ຄວາມໝາຍເດີມ: ແນວໃສ່ຂອງກິນ.

ໃນພາສາລາວ: ຖ້ວຍຊະນິດເປັນໃບແບ.

ຈຳລອງ ຄວາມໝາຍເດີມ : ຂ້າມ, ຄັດແບບ, ຖອນແບບ,

ໃນພາສາລາວ: ເຮັດ ແບບຂະໜາດນ້ອຍແທນອັນໃຫຍ່ ຫຼື ອັນຈິງ.

ຄວາມໝາຍກວ້າງອອກ (extension)

ກໍລະນີນີ້ ໝາຍເຖິງຄວາມໝາຍຂອງຄຳນັ້ນໆທີ່ເຮົາໃຊ້ໃນພາສາລາວເພື່ອທຽບກັບ ຄວາມໝາຍເດີມມີຄວາມກວ້າງກວ່າ, ໃຊ້ໄດ້ກັບຫຼາຍບໍລິບົດກວ່າ.

ຕົວຢ່າງ:

Chauffeur ຄວາມໝາຍເດີມ: ຄົນຂັບລົດຮັບຈ້າງ.

ໃນພາສາລາວ: ຄົນຂັບລົດຊະນິດໃດກໍ່ໄດ້.

ເອກະພາບ ຄວາມໝາຍເດີມ: ດັ່ງດຽວກັນ (ແຕ່ໃຊ້ໃນລະດັບຊາດ-ປະເທດ)

ໃນພາສາລາວ: ເໝືອນໆກັນ, ດັ່ງກັນ, ເຫັນພ້ອມກັນ ແລະໃຊ້

ໃນລະດັບ ບຸກຄົນ ກັບບຸກຄົນກໍ່ໄດ້.

ສົງສານ ຄວາມໝາຍເດີມ: ໂລກ, ການວຸ່ນວາຍຕາຍເກີດ.
ໃນພາສາລາວ: ຮູ້ສຶກໃນຄວາມເດືອດຮ້ອນໃນຊີວິດ, ຄວາມທຸກສຸກຂອງຜູ້ອື່ນ.

ກະໄສ ຄວາມໝາຍເດີມ: ຄວາມສົ້ນ, ຄວາມເສື່ອມ.
ໃນພາສາລາວ: ພະຍາດທີ່ເຮັດໃຫ້ຈ່ອຍ ຜອມ ຊູບໂຊມ.

ຄວາມໝາຍເລື່ອນ (meaning shift)

ກໍລະນີນີ້ໝາຍເຖິງຄວາມໝາຍຂອງຄຳຢືມທີ່ປາກົດໃຊ້ໃນພາສາເຮົາປະຈຸບັນເມື່ອທຽບກັບຄວາມໝາຍເດີມພົບວ່າມີສ່ວນທີ່ຍັງກ່ຽວຂ້ອງກັນ ແລະ ມີທັງສ່ວນທີ່ຜັນປ່ຽນໄປ. ສ່ວນທີ່ກ່ຽວຂອງນັ້ນອາດໄດ້ແກ່ການຮັກສາຊະນິດຄຳ (part of speech) ໄວ້ເໝືອນເດີມ,ໃນແຕ່ກ່ອນເປັນຄຳກິລິຍາມາໃນປະຈຸບັນກໍ່ຍັງເປັນຄຳກິລິຍາ,ແຕ່ສ່ວນທີ່ຜັນປ່ຽນນັ້ນຄົງໄດ້ແກ່ຄວາມໝາຍ ແລະ ການໃຊ້ຄວາມໝາຍນັ້ນໃນບໍລິບົດທີ່ຕ່າງຈາກເດີມກໍ່ມີ.

ຕົວຢ່າງ:

ຈອງຫອງ ຄວາມໝາຍເດີມ: ນິໄສຍິ່ງ, ທະນົງ, ວາງທ່າ.
ໃນພາສາລາວ: ນິໄສມັກກໍ່ກວນ, ສ້າງຄວາມບໍ່ເປັນສຸກແກ່ຜູ້ອື່ນ.

ແກ້ງ ຄວາມໝາຍເດີມ: ຕັ້ງໃຈ.
ໃນພາສາລາວ: ກ). ຂີ້ພິ, ຕັ້ງຕິເຮັດ.
ຂ). ຕັ້ງໃຈເຮັດໃສ່, ພາງາມເຮັດ.

ສັ່ງເກດ ຄວາມໝາຍເດີມ: ກຳນົດໄວ້, ໝາຍໄວ້.
ໃນພາສາລາວ: ເບິ່ງທັງຕີລາຄາເນື້ອໃນໃຫ້ຮູ້,ໃຫ້ເຂົ້າໃຈເຖິງຄວາມລະອຽດ ຫຼື ຈຸດພິເສດ.

ອິດສາ ຄວາມໝາຍເດີມ: ຫວັ່ງ, ນິກຢາກ.

	ໃນພາສາລາວ:	ບ້ຽບ້ຽດບໍ່ຢາກໃຫ້ຜູ້ອື່ນໄດ້ດີກວ່າຕົນ.
ອານາດ	ຄວາມໝາຍເດີມ:	ບໍ່ມີທີ່ເພິ່ງ.
	ໃນພາສາລາວ:	ສັ້ງເວດໃຈ, ໜ້າສັ້ງເວດ.
Salary	ຄວາມໝາຍເດີມ:	ຄ່າຈ້າງທະຫານເຊິ່ງເອົາເກືອ ຫຼື ຄິດເປັນເກືອ ເອົາໃຫ້ (ມາຈາກຄຳ: solarium)
	ໃນພາສາລາວ:	ເງິນເດືອນ,ເງິນ ອັດຕາທີ່ໄດ້ໃນເດືອນໆ.
Dog	ຄວາມໝາຍເດີມ:	ຊື່ຂອງໝາຊະນິດໜຶ່ງ, ມາຈາກຄຳວ່າdogge
	ໃນພາສາລາວ:	ໝາຍເຖິງ ໝາໂດຍທົ່ວໆໄປ.
Meat	ຄວາມໝາຍເດີມ:	ຊີ້ນທີ່ກິນໄດ້.
	ໃນພາສາລາວ:	ໝາຍເຖິງຊີ້ນໂດຍທົ່ວໄປ.
Pill	ຄວາມໝາຍເດີມ:	ຢາຊະນິດເມັດ, ປ໋ວພະຍາດຕ່າງໆ.
	ໃນພາສາລາວ:	ຢາຄຸມກຳເນີດຊະນິດໜຶ່ງ.
	ແລະຍັງມີອີກຫຼາຍຕົວຢ່າງ.	

24 / VII

VII. ການຮັບຄຳຈາກພາສາຕ່າງໆ

1. ການຮັບຄຳຈາກພາສາຈີນ

1). ກ່າວສັ້ງເຂບກ່ຽວກັບອະລິຍະທຳບູຮານຂອງຈີນ.

ປະເທດຈີນເປັນປະເທດທີ່ມີດິນແດນກວ້າງໃຫຍ່ໄພສານ ແລະ ເປັນປະເທດເກົ່າແກ່ ເຊິ່ງມີຄວາມຮຸ່ງເຮືອງມາແຕ່ດົນ. ຈີນໄດ້ສ້າງໜັ້ງສືມາເມື່ອ 2000ປີ ກ່ອນ ຄ.ສ[1] ເປັນອັກສອນພາບສັນຍາລັກ ຫຼື ບາງທ່ານເອີ້ນວ່າ ອັກສອນພາບ (Hieroglyphic), ຮູ້ຈັກການນຳໂລຫະມາ

---

[1] ຈິນດາ ງາມສຸດທິ. ພາສາສາດ ພາສາໄທ. ພ.ສ 2524. ໜ້າ 44.

ເຮັດເປັນຫຼຽນສຳລັບໃຊ້ແລກຊື້ສິ່ງຂອງສິນຄ້າ. ໃນສະໄໝ ພ.ສ. 1161 ເຖິງ 1148[2] ເຊິ່ງເປັນ ສະໄໝລາຊະວົງຖັງ (Tang Dynasty) ກໍ່ຮູ້ຈັກພິມໜັງສືໃສ່ເຈ້ຍ ແລະ ເຮັດເປັນປຶ້ມ[3]. ຈີນ ເປັນ ຜູ້ທຳອິດ ທີ່ຮູ້ເຮັດເຂັມທິດ (Compass) ສຳລັບໃຊ້ໃນການເດີນເຮືອທາງໄກ.

ໃນປີ ພ.ສ.150 ເຖິງ 1713 ຈີນຮູ້ຈັກເຮັດໝໍ້ ແລະ ປືນ[4] ຕໍ່ມາກໍ່ຮູ້ເຮັດເຄື່ອງໃຊ້ສູນຖ້ ດ້ວຍການເອົາດິນໜຽວນຳມາປັ້ນແລ້ວເຜົາເປັນອຸ, ໂອ່ງ. ຈີນມີຄວາມລືຊື່ໃນເລື່ອງເຮັດຜ້າແພ ດ້ວຍສາຍໃຍ ເຊັ່ນ: ຝ້າຍ ແລະ ຂົນ. ຈີນມີປະຫວັດແຫ່ງການເຮັດສີ, ຍ້ອມສີ ແລະ ການ ຄ້າຂາຍ, ການແລກປ່ຽນ, ຮູ້ປະດິດລູກຄິດເພື່ອໃຊ້ຄິດໄລ່ໃນການຊື້ຂາຍ ຮູ້ຈັກປະດິດຫໍ່ຫ່ວຍ ວັດແທກນ້ຳໜັກ ແລະ ເຄື່ອງຊັ່ງ, ຈີນມີຊື່ສຽງໃນການນຳໃຊ້ສິ່ງທຳມະຊາດເຊັ່ນ: ຮາກໄມ້, ຕົ້ນ ໄມ້, ແກ່ນໄມ້, ພືດ ແລະ ສັດ ນຳມາເຮັດຢາ. ເນື່ອງດ້ວຍວ່າຈີນສາມາດປະດິດໜັງສືຂຶ້ນມາດົນ ນານເຊັ່ນນັ້ນຈີນຈຶ່ງມີການຂຽນ, ການບັນທຶກຄວາມຮູ້ຕ່າງໆໄດ້ເປັນຕຳລາ ພາໃຫ້ຈີນມີຕຳລາ ຄວາມຮູ້ຫຼາຍຢ່າງຈາກແຕ່ເມື່ອກ່ອນ ສືບທອດກັນມາ ສະນັ້ນ ຈີນເອງຈຶ່ງຖືວ່າ ປະເທດຈີນກໍ່ ເປັນສູນແຫ່ງອະລິຍະທຳແຫ່ງຄວາມຮູ້ ແລະ ຕຳລາບູຮານ ຂອງໂລກແຫ່ງໜຶ່ງ ເຊິ່ງໃນປະຫວັດ ສາດ ຈີນ ກໍ່ເຄີຍປາກົດຊື່ ນັກປາດຜູ້ສຳຄັນໄວ້ ຄື: ຂົງຟູເຊຍ (Confucius) ແລະ ເລົາຈີ້ (Lao-Tse)[5].

ການສຶກສາເລື່ອງໜ່ວຍສຽງ, ໄວຍາກອນ ແລະ ອັກສອນຂອງຈີນໄດ້ເລີ່ມມີຂຶ້ນໃນຕົ້ນ ສະຕະວັດທີ່ 18 ໂດຍນັກຄົ້ນຄວ້າຊື່ Francisco varo ແລະ J.H de Premare.

ການຮີບໂຮມຕົວໜັງສື ແລະ ເຮັດຄຳອະທິບາຍຄວາມໝາຍຂອງຄຳພາສາຈີນສະບັບ ທີ່ເກົ່າແກ່ທີ່ສຸດຊື່ວ່າ Shuowen[6] ມີຂຶ້ນເມື່ອປະມານ ຄ.ສ ທີ 2 ເຊິ່ງອັກສອນທີ່ໃຊ້ຂຽນໃນສະ ໄໝນັ້ນຍັງບໍ່ທັນເປັນລະບົບ ແລະ ຄົບຖ້ວນປານໃດ.

2;3;4;5 ວິຈິດຕຣາ ແສງພົນສິດ. ພາສາຕ່າງປະເທດໃນພາສາໄທ. ພ.ສ 2519. ໜ້າ 32.

6 ຈົນດາ ງາມສຸດທິ. ພາສາສາດ ພາສາໄທ. ພ.ສ 2524. ໜ້າ 44.

ໃນດ້ານພາສາ ຜູ້ປາກພາສາຈີນແບ່ງເປັນກຸ່ມໃຫຍ່ໆດັ່ງນີ້: ກວາງຕຸງ, ແຕ້ຈິ໋ວ, ແຄະ, ຮົກກ້ຽນ, ໄຫຫ້ຳ ແລະ ຈີນກາງ ຫຼື ຈີນຮັ້ນ ເປັນຕົ້ນ. ແຕ່ລະກຸ່ມພາສາມີຄວາມແຕກຕ່າງກັນດ້ານ ຄຳສັບ ແລະ ການອອກສຽງບາງອັນ. ແຕ່ຕົວໜັງສືນັ້ນທຸກກຸ່ມພາສາກໍ່ໃຊ້ໜັງສືອັນດຽວກັນຄື: ຕົວໜັງສືແບບຮູບພາບ (hieroglyphics).

2). ຄວາມສຳພັນລະຫວ່າງຊົນຊາດລາວກັບຈີນ.

ຊົນຊາດລາວກັບຈີນເຄີຍມີຄວາມກ່ຽວຂ້ອງດ້ານປະຫວັດສາດ, ພູມສາດ ແລະ ການ ຕິດຕໍ່ສຳພັນລະຫວ່າງກັນ.

ປະຫວັດສາດລາວຫຼາຍສະບັບໄດ້ສະເໜີວ່າ ຊົນຊາດລາວເປັນຊົນຊາດທີ່ຕັ້ງຖິ່ນຖານ ທຳມາຫາກິນຢູ່ລຸ່ມຕາມຫຼັ້ງແມ່ນ້ຳຂອງ ນັບແຕ່ຕອນເໜືອເຖິງຕອນກາງ. ປະຫວັດສາດບາງສະ ບັບສະເໜີໄວ້ວ່າ: ຖິ່ນຖານດັ້ງເດີມຂອງລາວໄດ້ແກ່ບໍລິເວນໜອງແສເຊິ່ງປະຈຸບັນຢູ່ໃນເຂດພາກ ໃຕ້ຂອງຈີນ[7]

ຫາກອີງຕາມຄຳທີ່ໃຫ້ໄວ້ໃນພິງສາວະດານລາວທີ່ກ່າວເຖິງພວກລາວໃນສະໄໝກ່ອນ ນັ້ນໄດ້ຕັ້ງຖິ່ນຖານຢູ່ນະຄອນປາກ໋ເຫັນວ່າລາວໄດ້ມີການພົວພັນກັບຈີນ ເຊິ່ງພິງສາວະດານໄດ້ ໃຫ້ຄວາມໄວ້ວ່າ ພະເຈົ້າແຜ່ນດິນຈີນໄດ້ສົ່ງລາຊະທູດມາຈະເລີນທາງພະລາຊະໄມຕີຢູ່ທີ່ນະ ຄອນປາ ແລະ ສະໄໝທີ່ລາວໄດ້ເມືອງໜອງແສກ໋ໄດ້ກ່າວເຖິງຄວາມສຳພັນທະໄມຕີກັບຈີນຄື ໃນປະມານປີ ພ.ສ 1233, ຄ.ສ 670[8]

---

[7] ພິງສາລະດານລາວ. ຄ.ສ 1957. ໜ້າ 15.

[8] ພິງສາລະດານລາວ. ຄ.ສ 1957. ໜ້າ 21.

ດ້ວຍການສຶກສາດ້ານຄວາມເຊື່ອ ແລະ ຄວາມສຳພັນແຫ່ງວົງສະກຸນໄດ້ພົບວ່າ ແຕ່ນານຄືປະມານ 3000 ກວ່າປີມາແລ້ວຊາວລາວໄດ້ຮັບອິດທິພົນຄວາມເຊື່ອກ່ຽວກັບເງືອກ[9] ຈາກຈີນພ້ອມນີ້ກໍ່ໄດ້ຮັບອິດທິພົນດ້ານການຖືຕົວເພິ່ງ (ໂດຍເອົາສັດບາງຊະນິດເປັນຕົວເພິ່ງ ແລະ ຖືສັດບາງຊະນິດເປັນສັນຍະລັກ (symbolic) ແຫ່ງເຊື້ອສາຍເຊັ່ນ ເອົາເສືອ ຫຼື ນົກບາງຊະນິດ ນອກຈາກນີ້ ການສຶກສາດ້ານພາສາໄດ້ພົບວ່າລາວໄດ້ຮັບອິດທິພົນທາງພາສາຈາກຈີນມາຢ່າງດົນນານ. ສິ່ງນີ້ໄດ້ແກ່ຄຳທີ່ກ່ຽວກັບເລກນັບໃນພາສາລາວພົບວ່າມີຫຼາຍຄຳ. ການອອກສຽງກໍ່ໃກ້ກັນ ແລະ ເປັນຄຳໂດດອັນພາໃຫ້ຮັບເອົາໄດ້ງ່າຍ. ຕາມເອກະສານສະບັບທີ່ກ່າວເຖິງເລກນັບທີ່ລາວຮັບຄຳຈາກພາສາຈີນບູຮານເຂົ້າມາໄດ້ແກ່ ສາມ, ສີ່, ເຈັດ, ແປດ, ເກົ້າ, ສິບ ແລະເອັດ. ສຳລັບການຢືມເລກນັບຈາກພາສາໜຶ່ງ ສູ່ພາສາໜຶ່ງນັ້ນ ຖືເປັນການຢືມທີ່ດົນທີ່ສຸດ ເພາະຄຳທີ່ເປັນເລກນັບນັ້ນເປັນຄຳທີ່ສະແດງຈິດສຳນຶກອັນຕົ້ນໆແລະສຳຄັນຂອງຊົນຊາດໜຶ່ງໆ, ເກີດມີການຮັບຄຳທີ່ເປັນເລກນັບຈາກພາສາຈີນບູຮານ ເຊັ່ນນີ້ ຄົງປະມານການເວລາໄດ້ວ່າ ເມື່ອສາມພັນກວ່າປີກ່ອນນີ້ຊາວລາວມີຄວາມສຳພັນ ຫຼື ໃກ້ຊິດກັບຈີນ, ສາເຫດໜຶ່ງອີກກໍ່ເພາະບາງຊົນຊາດຢູ່ໃນຂົງເຂດທະເລຈີນເຊິ່ງບໍ່ແມ່ນລາວຕ່າງກໍ່ໄດຮັບຄຳຊຸມນຈາກພາສາຈີນໄປເຊັ່ນກັນ.

ນອກນີ້ ກໍ່ຍັງພົບວ່າ ລາວໄດ້ຄຳກ່ຽວກັບໜ່ວຍວັດແທກນ້ຳໜັກ ແລະ ຊື່ສິ່ງທີ່ເຮັດສຳລັບຊັ່ງນ້ຳໜັກຈາກພາສາຈີນ. ໃນປະຈຸບັນຄຳຊຸມນີ້ໄດ້ຖືເປັນຄຳເກົ່າໄປແລ້ວຜູ້ທີ່ຮູ້ແລະໃຊ້ຄຳຊຸມນີ້ກໍ່ຈຳກັດວົງແຄບເຂົ້າ ໃນນີ້ເປັນທີ່ສັງເກດວ່າ ຄຳທີ່ກ່ຽວກັບຫົວໜ່ວຍວັດແທກນ້ຳໜັກນັ້ນເປັນຫົວໜ່ວຍ ທີ່ໃຊ້ສະເພາະກັບເງິນ ຢາຝິ່ນ ແລະຄຳ ເຊັ່ນ ປີ້, ເຊັ່ງ, ຮ່ອງ, ເຖ້, ແລະ ຄຳວ່າ: ຈຸກ*, ໝັ່ນ, ແມ່ນຊື່ເງິນທີ່ເຄີຍໃຊ້ໃນເມື່ອກ່ອນ ແລະ ຄຳວ່າ: ດ່ຽງ*, ຊິງ*, ຊັ່ງ* ເປັນຊື່ຂອງເຄື່ອງ

---

[9] ດຣ. ບັນຈົບ ພັນທຸເມທາ. ພາສາຕ່າງປະເທດໃນພາສາໄທ. ພ.ສ 2530 ໜ້າ75. ໃນພາສາຈີນແຕ້ຈິ ເອີ້ນ: ງ້ວກຮ໊ີ

* ຄຳວ່າ: ຈຸກ ພົບໃຊ້ຢູ່ໃນພາສາຫວຽດເຊັ່ນກັນ ເຊິ່ງເປັນຫົວໜ່ວຍ ສິບ

* ຄຳວ່າ: ດ່ຽງ ແລະ ຊິງ ເປັນຊື່ເຄື່ອງແທກນ້ຳໜັກທີ່ລາວເຮົາຍັງໃຊ້ຢູ່ເຖິງປະຈຸບັນ

ຊັ່ງນ້ຳໜັກດັ່ງນີ້ເປັນຕົ້ນ. ຈາກນີ້ກໍ່ໃຫ້ຮູ້ວ່າ ໃນຄາວບູຮານລາວເຄີຍມີຄວາມສຳ ພັນທາງດ້ານ ການຄ້າ, ການແລກປ່ຽນ ກັບຊາວຈີນໂດຍສະເພາະໃນສະໄໝ ທີ່ໃຊ້ເງິນ (silver) ທອງແດງ (ເງິນສ້ຽນ) ຢາຝິ່ນ ເປັນສິ່ງທີ່ໃຊ້ຊື້ຂາຍຫາກບໍ່ມີຄວາມສຳພັນກໍ່ຄົງບໍ່ມີການຮັບຄຳຊຸມນີ້ມາໃຊ້. ໃນປະຈຸບັນຄົນລາວທາງພາກເໜືອກໍ່ຍັງມີຜູ້ຮູ້ ແລະ ໃຊ້ຄຳຊຸມນີ້ຢູ່ຫຼາຍ.

3). ລັກສະນະບາງຢ່າງຂອງພາສາຈີນ.

ເປັນພາສາທີ່ປະກອບດ້ວຍພະຍາງດຽວ (mono syllable) ເປັນພື້ນຖານ ສະນັ້ນພາ ສາຈີນຈຶ່ງຖືວ່າເປັນພາສາຄຳໂດ (Isolatinglanguage) ເຊັ່ນດຽວກັບພາສາລາວພ້ອມນີ້ກໍ່ເປັນ ພາສາທີ່ມີສຽງວັນນະຍຸດ, ການປ່ຽນສຽງໃນຄຳມີບົດບາດຕໍ່ການປ່ຽນແປງທາງຄວາມໝາຍຂອງ ຄຳ, ສຽງວັນນະຍຸດທີ່ສຳຄັນກຳນົດໄດ້ 4 ສຽງ ເຊິ່ງແຕ່ລະສຽງໄດ້ກຳນົດເອົາຕົວເລກ ແຕ່ 1ເຖິງ 4 ເປັນເຄື່ອງໝາຍບົ່ງບອກລະດັບຂອງສຽງໄວ້.

ຕົວຢ່າງ:

ຄຳວ່າ	ma[1]	ໝາຍເຖິງ	ແມ່
	ma[2]		ໝາກກາ
	ma[3]		ມ້າ
	ma[4]		ດ່າ

ການສ້າງຄຳ (Word formation) ວິທີພົບຫຼາຍໄດ້ແກ່ການນຳໜ່ວຍຄຳມາປະສົມ ໂດຍແຕ່ລະໜ່ວຍຄຳຍັງຮັກສາຮູບຄຳເດີມ.

ຕົວຢ່າງ:	ຄຳວ່າ	ming[2] tian[1]	ມື້ອື່ນ
		peng[2] you[1]	ໝູ່ເພື່ອນ

---

*ຄຳວ່າ: ຊັ່ງ ແຕ່ເດີມນັ້ນເປັນເຄື່ອງສຳລັບໃສ່ສິ່ງຂອງເພື່ອແທກນ້ຳໜັກ, ແຕ່ປະຈຸບັນ ລາວໃຊ້ເປັນຄຳກິລິຍາ ເຊັ່ນ ຊັ່ງນ້ຳໜັກ, ເອົາໃສ່ຊິ່ງຊັ່ງເບິ່ງ.

niao^{3}	ນົກ
cha^{2}ye^{4}	ໃບຊາ,

ຄຳໃນພາສາໂດຍທົ່ວໄປບໍ່ມີຄຸນລັກສະນະເພດ ພິດ ແລະ ການເວລາ, ເມື່ອຕ້ອງການສະແດງເພດ, ພິດ ຫຼື ການເວລາ ຕ້ອງໃຊ້ຄຳອື່ນທີ່ກ່ຽວກັບຄວາມໝາຍນັ້ນໆ ມາປະກອບເຂົ້າ

ຕົວຢ່າງ :	ຄຳວ່າ	ren^{2}	ໝາຍເຖິງ ຄົນ, ຜູ້
	ຄຳວ່າ	nan^{2}	ໝາຍເຖິງ ຄົນ ຊາຍ
	ຄຳວ່າ	nan^{2}ren^{2}	ໝາຍເຖິງ ຜູ້ຊາຍ, ຄົນຊາຍ
	ຄຳວ່າ	nü^{3}	ໝາຍເຖິງ ເພດຍິງ
	ຄຳວ່າ	nü^{3}ren^{2}	ໝາຍເຖິງ ຜູ້ຍິງ, ຄົນຍິງ.

ກ່ຽວກັບພິດ ຫຼື ຄຳທີ່ສະແດງຄ່າແທ່ງຈຳນວນນັ້ນ ພົບວ່າມີໃນກຸ່ມທີ່ເປັນຄຳແທນນາມ ໂດຍສະເພາະທີ່ກ່ຽວກັບຄົນ, ໃນພາສາຈີນກາງ ມີຄຳທີ່ສະແດງທະວິພິດ ຄືຈຳນວນສອງຄົນນຳກັນ.

ຕົວຢ່າງ: ພາສາຈີນກາງເຊັ່ນຄຳ: lia^{3} ຫຼື liang^{3} ໝາຍເຖິງເຮົາທັງສອງ, 'lia^{3} ren^{2}-liang^{3} ren^{2} ໝາຍວ່າ ຄົ່ນທັງສອງ. ຫາກໃຊ້ເປັນຈຳນວນຫຼາຍຈະໃຊ້ men^{2} ເຊັ່ນ wo^{3} men^{2} ໝາຍວ່າ ພວກເຮົາ; ni^{3} men^{2} ພວກເຈົ້າ, ta^{1}men^{2} ພວກເຂົາ. ສຳລັບການ, ມາລາ, ຈະບໍ່ສະແດງອອກໃນຄຳກິລິຍາໂດຍກົງ, ເຊິ່ງແຕ່ລະປະການຈະມີຄຳສະເພາະໄວ້ສຳລັບເລືອກໃຊ້ຕາມກໍລະນີ.

ຕົວຢ່າງ: ຄຳວ່າ le^{4} ຫຼື liao^{3} ແປວ່າ ແລ້ວ, ສຳເລັດ. ຄຳວ່າ ໄປແລ້ວ ກໍ່ຈະວ່າ zou^{3}le^{4}; ນອນແລ້ວ ກໍ່ຈະວ່າ: shui^{4}le^{4}

ການໃຊ້ຄຳຄຸນສັບສົມທຽບກັບພາສາລາວ.ໃນພາສາສາຈີນ ຄຳຄຸນສັບໃຊ້ໄວ້ໜ້າຄຳນາມສະເໝີ.

ຕົວຢ່າງ: da^4 ໝາຍວ່າໃຫຍ່; ຫາກຈະເວົ້າວ່າ ຜູ້ໃຫຍ່ ຫຼື ຄົນໃຫຍ່ ກໍ່ຈະເວົ້າ da^4 ren^2.
ການໃຊ້ຄຳລັກສະນະນາມເຄີຍໃຊ້ຫຼັງຄຳບອກຈຳນວນສະເໝີ. (ຄຳບອກຈຳນວນ - ລັກສະນະນາມ - ນາມ).

ຕົວຢ່າງ: ຄຳວ່າ: ປາໜຶ່ງຕົວກໍ່ຈະເວົ້າ: yi^1 t'iao^2 yü^2. ໃນນີ້ yi^1 ແປວ່າ ໜຶ່ງ, t'iao^2 ແປວ່າຕົວ; yü^2 ແປວ່າ ປາ. ຄຳວ່າ ຄົນໜຶ່ງຄົນຈະວ່າ yi^1 ge^4 ren^2 ໃນນີ້ yi' ແປວ່າໜຶ່ງ, ge^4 ໝາຍເຖິງຜູ້ ແລະ ren^2 ແປວ່າ ຄົນ.

ກ່ຽວກັບການໃຊ້ຄຳບຸບພະບົດ: ການໃຊ້ຄຳບຸບພະບົດ ເຄີຍໃຊ້ໄວ້ຫຼັງຄຳນາມສະເໝີ.

ຕົວຢ່າງ: ຄຳວ່າ ເທິງເຮືອນ ກໍ່ຈະວ່າ lou^2 shang^4 ໃນນີ້ lou^2 ແປວ່າ ເຮືອນ ແລະ shang^4 ແປວ່າ ເທິງ. ຄຳວ່າ ກ້ອງເຮືອນກໍ່ຈະວ່າ lou^2 xia^4 ໃນນີ້ xia^4 ແປວ່າ ກ້ອງ ຫຼື ລ່ຳ.

ນອກນີ້ຍັງມີລັກສະນະທາງພາສາດ້ານຕ່າງໆ ເຊິ່ງສາມາດສຶກສາໃຫ້ເລິກໄດ້ກວ່ານີ້ສຳລັບຜູ້ທີ່ສົນໃຈຢາກສຶກສາສະເພາະເລື່ອງ ໃນຕໍ່ໄປ.

4). ການຮັບໂຮມຄຳທີ່ຮັບມາຈາກພາສາຈີນ

ດ້ວຍການສັງເກດຈາກຄຳທີ່ພົບວ່າຮັບຈາກພາສາຈີນໃນພາສາລາວ ເຊິ່ງຮູ້ວ່າເປັນຄຳຂອງພາສາຈີນແທ້ນັ້ນ ເມື່ອສຶກສາຢ້ອນກັບເຖິງແຫຼ່ງພາສາຈີນທີ່ເຮົາຮັບຄຳມານັ້ນກໍ່ຍັງມີຄວາມຍາກຫຼາຍທີ່ຈະໃຫ້ຄຳຕັດສິນແນ່ນອນວ່າ ເຮົາໄດ້ຮັບຄຳມາຈາກພາສາຈີນກຸ່ມໃດແດ່ ແລະ ຢືມ

ມາໃນສະໄໝໃດ. ວິທີການສຶກສາກໍລະນີນີ້ ໃນເອກະສານກ່ຽວກັບການຢືມຄຳຈາກພາສາຕ່າງໆ ມາໃນພາສາຕົນທີ່ພົບນັ້ນ ກໍ່ໃຊ້ວິທີປະມານການຄື: ເບິ່ງຊະນິດຄຳທີ່ຢືມດ້ວຍລັກສະນະຂອງຄຳ ແລະ ກຸ່ມຄວາມໝາຍຂອງຄຳທີ່ຢືມກໍ່ຈະພໍຊາບເຖິງຍຸກສະໄໝ. ເພາະສຽງຂອງຄຳ, ໂຄງສ້າງ ແລະ ຄວາມໝາຍຂອງຄຳຢືມທີ່ເຂົ້າມາປາກົດໃຊ້ໃນພາສາຂອງເຮົາເຖິງວ່າທຸກຄຳຢືມຈະມີການປ່ຽນແປງບາງຢ່າງເມື່ອມາຢູ່ໃນພາສາເຮົາ ແຕ່ໃນນັ້ນລັກສະນະພື້ນຖານບາງຢ່າງຂອງສຽງ ແລະ ໂຄງສ້າງຂອງຄຳພ້ອມກັບຄວາມໝາຍຂອງຄຳນັ້ນໆຍັງມີສິ່ງສະແດງໃຫ້ຮູ້ໄດ້ແບບໃດ ແບບໜຶ່ງຢູ່.

ສຳລັບຄຳຮັບຈາກພາສາຈີນມາສູ່ພາສາລາວນັ້ນເມື່ອເບິ່ງຕາມວິທີທີ່ສະເໜີມານີ້ຄົງ ໄດ້ແກ່ ຄຳບູຮານຈາກພາສາຈີນກາງ ແລະ ພາສາຈີນແຕ້ຈິ໋ວເປັນສຳຄັນ. ໃນນັ້ນຄຳຈຳນວນ ຫຼາຍໂດຍສະເພາະຊຸມຄຳທີ່ເຂົ້າມາໃນຍຸກມໍ່ໆນີ້ທີ່ເປັນຊື່ອາຫານບາງຊະນິດທີ່ໄດ້ຮັບມາຄົງໄດ້ ດ້ວຍການຮັບແບບຜ່ານພາສາໃດໜຶ່ງ ເຊິ່ງເບິ່ງວ່າອາດຜ່ານພາສາໄທທອດໜຶ່ງ ຈຶ່ງເຂົ້າສູ່ພາສາ ລາວກໍ່ມີຫຼາຍຄຳ. ສ່ວນຄຳທີ່ຮັບໂດຍກົງນັ້ນກໍ່ມີເຊັ່ນກັນ ໂດຍສະເພາະກຸ່ມຄຳທີ່ເປັນຄຳເກົ່າໆ ເຊິ່ງກ່ຽວກັບການຊັ່ງນ້ຳໜັກ, ສີ ແລະ ເລກນັບເປັນຕົ້ນ. ບັນດາຄຳທີ່ຮູ້ວ່າຮັບຈາກພາສາຈີນສະ ໄໝຕ່າງໆນີ້ຄົງໄດ້ແກ່ຄຳຈາກຈີນຫໍ້ແລະບາງເຜົ່າທີ່ຢູ່ພາກໃຕ້ຂອງປະເທດຈີນເຊິ່ງຕິດກັບລາວ ຄຳທີ່ຮວບຮວມໄດ້ໃນນີ້ໄດ້ເກັບກຳຈາກເອກະສານຫຼາຍເຫຼັ້ມທີ່ໃຫ້ຂໍ້ມູນວ່າ ເປັນຄຳຈາກພາສາ ຈີນເຊັ່ນ ປຶ້ມທີ່ຂຽນເປັນພາສາໄທ; ຈາກປຶ້ມວັດຈະນານຸກົມຈີນ-ລາວ ແລະ ຈີນ-ໄທແລະ ເອກະ ສານທີ່ສຶກສາຊົນເຜົ່າທີ່ກ່ຽວຂ້ອງກັບການສຶກສາເລື່ອງນີ້ ແລະ ເອກະສານທາງປະຫວັດສາດທີ່ ກ່ຽວຂ້ອງບາງສະບັບ ເຊິ່ງຈະສະເໜີໄວ້ໃນພາກເອກະສານອ້າງອີງ. ສຳລັບການຂຽນບັນດາຄຳ ທີ່ຮິບໂຮມໄດ້ນັ້ນ,ເນື່ອງຈາກວ່າການຈະຂຽນແຕ່ລະຄຳຕາມອັກສອນຂອງຈີນ ພົບຄວາມລຳ ບາກຫຼາຍ ທັ້ງຮູບຂຽນບາງຄຳກໍ່ຕັດສິນໄດ້ຍາກວ່າເປັນຮູບໃດ ຍ້ອນຍຸກສະໄໝຜ່ານມາ ບາງ ຄຳກໍ່ມີການຂຽນດ້ວຍອັກສອນໂຣມັນ ຫຼື ສັດທະອັກສອນສາກົນ ແລະດ້ານວັນນະຍຸດກໍ່ພາໃຫ້ ເກີດຄວາມພາດພັ້ງໄດ້ເລື້ອຍໃນການໃຫ້ເຄື່ອງໝາຍ ສະນັ້ນຈຶ່ງຫັນມາ ໃຊ້ການສະກົດດ້ວຍອັກ ສອນລາວ ຕາມສຽງຂອງຄຳທີ່ປາກົດໃຊ້ໃນພາສາລາວໃນປະຈຸບັນເຫັນວ່າຈະເປັນວິທີດີກວ່າ. ຄຳຈາກພາສາຈີນທີ່ລາວຮັບມາສາມາດຮວບຮວມໄດ້ຫຼາຍຄຳດັ່ງນີ້:

ຄຳຮັບຈາກພາສາຈີນ - ຄຳແປ		ຄຳຮັບຈາກພາສາຈີນ - ຄຳແປ	
ເກ້	ຂອງທີ່ເຮັດທຽມ.	ເກົ້າ	ສູງ, ເລກເກົ້າ.
ໄກ	ຊື່ຂອງເຂົ້າໜົມຊະນິດໜຶ່ງ.	ກ້ວຍຈັບ	ຊື່ອາຫານຊະນິດໜຶ່ງ.
ກຸຍເຮັ້ງ	ເສື້ອຊະນິດໜຶ່ງມີຖົງຈີກບໍ່ມີໃບຄໍ	ເກົ້າອີ້	ຕັ່ງຊະນິດໜຶ່ງມີຂາສູງນັ່ງຜູ້ດຽວ
		ເກົ້າເຫຼົ້າ	ຊື່ແກ່ງຊະນິດໜຶ່ງ
ກະຫຼຳ	ຜັກກະຫຼຳປີ	ງົ້ວ	ການຫຼິ້ນຊະນິດໜຶ່ງຂອງຊາວຈີນໃນງານບຸນ
ກວາ	ໝາກແຕງຊະນິດໜຶ່ງ		
	ເນື້ອແໜ້ນ(ແຕງກວາ)	ເຈັ້ງ	ໝົດສິ້ນ, ຫຼົ້ມຈົມ
ກວານ	ຜູ້ຄຸ້ມຄອງຮັກສາ	ເຈັກ	ຄົນຈີນ
ກວາງຕຸ້ງ	ຄົນຈີນພວກໜຶ່ງ.	ເຈ້ຍ	ເຈ້ຍ
ຂຸນ	ຜູ້ເປັນເຈົ້າແຫ່ງເມືອງ	ເຈົ້າ	ເຈົ້ານາຍ
ແຄວ້ນ	ເຂດຖິ່ນຖານ	ຕາແສງ	ເຂດປົກຄອງໃຫ່ຍກວ່າບ້ານ
ຊາ	ຊາໃສ່ນ້ຳຮ້ອນເພື່ອດື່ມ	ໄຫຫຼຳ	ຊື່ເກາະໜຶ່ງຂອງຈີນ
ເຊັ້ງ	ຂາຍອອກ ຂາຍຕາດ, ຮ້ານ ບ່ອນຄ້າຂາຍເຄື່ອງ	ຫຼາ	ຄວາມຍາວເຄິ່ງວາ
		ຢ່ີຫໍ້	ຊະນິດ, ຢ່າງ
ແສ່	ວົງສະກຸນ	ຊ່ີຫຸ່ຍ	ໂສຫຸ້ຍ, ການສົ່ນເປ່ືອງ, ສິ່ງທີ່ຈ່າຍໄປ.
ຊວຍ	ໂຊກຮ້າຍ, ເປັນຮ້າຍ		
ຊ່ີອ້ີ້ວ	ນ້ຳປຸງລົດຊາດຊະນິດໜຶ່ງແກ່ອາຫານ	ຫວຍ	ການພະນັນຊະນິດໜຶ່ງ
		ເມິກ	ນ້ຳເມິກ
ຕ໊	ປອງ, ພະຍາຍາມ (ໃຊ້ໃນ ທາ ທີ່ຍິງຊາຍຈະເຂົ້າຫາ ກັນ)	ຫຸ້ນ	ມີສ່ວນ
		ອ້ຽມ	ຜ້າບັງໜ້າເອີກເພ່ືອກັນເປ້ືອນ
		ເຮ້ັງ	ມີໂຊກ
ເຕ້ັງ	ເທ້ັງ - ເຫ້ັງ	ລ໋	ໂຕມ້າລໍ

ຕູ້	ສິ່ງສຳຮັບມ້ຽນເຄື່ອງໄວ້ໃນເຮືອນ
ຕື໋ວ	ກົ່ວ, (ໃຊ້ກັບຄວາມຂາດເຂີນ)
ເຕົ້າຫູ້	ເຕົ້າຫູ້ເຮັດດ້ວຍນ້ຳນົມຖົ່ວເຫຼືອງ.
ເຕົ້າ	ລູກ, ລູກເຕົ້າ
ເຕົ້າຮວຍ	ນ້ຳນົມຖົ່ວເຫຼືອງ
ໄຕ້	ໄຖ່, ຖົ່ງໄຖ່
ຕຸນ	ກັກໄວ້, ເກັບກັກໄວ້
ປະໝີ	ໝີ່
ປຸ໋ຍ	ປຸ໋ຍ, ຝຸ່ນທີ່ໃສ່ໃຫ້ພືດ, ຜັກໃຫ້ເຕີບໃຫຍ່ໄວ
ພະໂລ້	ຊື່ອາຫານຊະນິດໜຶ່ງ
ເພຍ	ຜູ້ເປັນເຈົ້າແຫ່ງຖ່ົນ
ຊາລີ່	ໝາກໄມ້ຊະນິດໜຶ່ງ
ຮ້ຽ	ຫ້ຽ, ຮ້ານຂາຍເຄື່ອງ
ສາມ	ຊື່ເລກນັບຫ໋ວໜ່ວຍ 3
ສີ່	ຊື່ເລກນັບຫ໋ວໜ່ວຍ 4
ຫ້າ	ຊື່ເລກນັບຫ໋ວໜ່ວຍ 5
ເຈັດ	ຊື່ເລກນັບຫ໋ວໜ່ວຍ 7
ແປດ	ຊື່ເລກນັບຫ໋ວໜ່ວຍ 8
ເກົ້າ	ຊື່ເລກນັບຫ໋ວໜ່ວຍ 9
ສິບ	ຊື່ເລກນັບຫ໋ວໜ່ວຍ 10
ສາງ	ບ່ອນມ້ຽນເຄື່ອງ

ມ່າ	ໂຕມ້າ
ໂຖ	ຖຸ, ກະຖຸ
ບວຍ	ບິນ,ໂບຍບິນ
ຊູຍ	ພັດເປົ່າ, ປົ໋ວ, ລົມພັດໂຊຍ
ປ໋ຽ	ນ້ຳໜັກປະມານ 250 ກຣາມ
ເຊ້ຽ	ນ້ຳໜັກປະມານ 50 ກຣາມ
ເຖ້	ນ້ຳໜັກປະມານ 10 ກຣາມ
ຫຼື	ນ້ຳໜັກປະມານ 1 ກຣາມ
ເຝີນ	ນ້ຳໜັກປະມານ 0,01 ກຣາມ
ຈຸກ	ຊື່ເງິນຂະໜາດ 100 ອັດ
ປ໊	ຊື່ເງິນຂະໜາດ 10 ອັດ
ອັດ	ຊື່ເງິນຫ໋ວໜ່ວຍນ້ອຍສຸດ
ຊັ່ງ	ຊັ່ງເຄື່ອງຂອງ, ແທກນ້ຳໜັກ
ຊ໋ຽ	ຊື່ເຄື່ອງຊັ່ງ.
ອົ່ວ	ໄສ້ອົ່ວ.
ຊ້າງ	ໂຕຊ້າງ.
ຕະກ໋ຽງ	ກ້ອງໄຕ້.
ໂຖ	ຂອງທີ່ປັ້ນດ້ວຍດິນໜຽວ. ຊະນິດໜຶ່ງ.
ຕ໋ຽງ	ຮ້ານທີ່ເຮັດເປັນບ່ອນນັ່ງພັກ ຫຼື ນອນ
ເອັດ-ອິດ	ໜຶ່ງ ຫຼື ທຳອິດ
ຄ້າ	ຄ້າຂາຍ

ງ້ຽງ	ຂອງສຳລັບໃສ່ເສດເປື້ອນ ທີ່ແຫຼວຂອງຄົນ	ເຄ່ມ	ຄ່ຽມມ້າ
ໂສ້	ສາຍທີ່ເຮັດດ້ວຍຕ່ອງເຫຼັກ ຫຼາຍຕ່ອງ ເກາະຕໍ່ໆກັນ	ຕ່າງ	ຕ່າງເຄື່ອງ, ບັນທຸກເຄື່ອງ
		ຜະໜັງ	ຝາທີ່ກໍ່ດ້ວຍແນວແຂງເຊັ່ນ ດິນໜຽວ, ຫີນ ຫຼື ດິນຈີ່ ແລະຄົງຍັງອີກບາງຄຳ
ສຽວ	ຕົ້ມກັ່ນເຫຼົ້າດອງໃຫ້ໄດ້ນ້ຳເຫຼົ້າ		
ສີ - ໜັງສີ	ຕົວຂຽນທີ່ໃຊ້ນ້ຳເມິກ ຫຼື ສີໃດໜຶ່ງ		

2. ການຮັບຄຳຈາກພາສາມອນ

1) ສະເໜີກ່ຽວກັບມອນໂດຍຫຍໍ້.

ຄຳວ່າ ມອນ ເປັນຊື່ໂດຍຊາວມອນ ເອີ້ນໃຫ້ຕົນເອງ. ໃນພາສາລາວ, ໄທກໍ່ຮຽກຕາມ ຊື່ນີ້ວ່າມອນ (Mon) ສ່ວນມຽນມາເອີ້ນຊາວມອນວ່າ: ຕາຫຼ່ຽງ (Talaing)[1] ໃນສະໄໝກ່ອນໆ ຕາມພາສາອັງກິດ ເອີ້ນຊົນຊາດມອນວ່າ ເພກວນ (Peguan)[2] ຕໍ່ມາຊື່ນີ້ ກໍ່ປ່ຽນດ້ວຍຊື່ອື່ນຄື ຣາມັນ (Raman) ເຊິ່ງກໍ່ໝາຍເຖິງມອນອັນດຽວກັນ. ແຕ່ລະຊື່ທີ່ຮຽກໃຫ້ຊາວມອນນີ້ ຕ່າງກໍ່ມີສາເຫດ ເຊິ່ງນັກມະນຸດວິທະຍາຫຼາຍທ່ານ ຍັງມີຄຳອະທິບາຍໄວ້ໃນແງ່ທີ່ຕ່າງກັນຢູ່.

ທີ່ຕັ້ງອັນສຳຄັນຂອງຊາວມອນຈຳນວນປະມານ 73% ໄດ້ດຳລົງຊີວິດຢູ່ທາງພາກໃຕ້ ຂອງປະເທດມຽນມານັບແຕ່ເສັ້ນຂະໜານທີ່ 15°-17° ເຊັ່ນ: ຕາມພາກຕາເວັນອອກຂອງແມ່ນ້ຳ Irrawaddy, ເມືອງThaton, Twante, Dala ແລະ Pegu[3]. ຊາວມອນມີປະຫວັດຂອງການ

---

[1] Frank M. Lebar and The staft: Ethnic Groups of Maindland Southeast Asia. 1964 p.95.

[2] Frank M. Lebar and The staft: Ethnic Groups of Maindland Southeast Asia. 1964 p.95.

[3] Frank M. Lebar and The staft: Ethnic Groups of Maindland Southeast Asia. 1964 p.95.

ສ້າງຄວາມຈະເລີນຮຸ່ງເຮືອງຫຼາຍດ້ານໃນຄາວບູຮານ, ຄວາມຈະເລີນຄາວນັ້ນໄດ້ແກ່ວັດທະນະທຳການປະດິດສ້າງສິ່ງຂອງ, ສາສະໜາ ແລະ ການແລກປ່ຽນຊື້ຂາຍ, ການປູກຝັງໂດຍສະເພາະການເຮັດນາ. ຕາມປະຫວັດສາດໃຫ້ຮູ້ວ່າ ກ່ອນນີ້ ມອນ ກໍ່ເຄີຍເປັນອານາຈັກ ເຊິ່ງມີດິນແດນກວ້າງຂວາງຢູ່ໃນພາກພື້ນອາຊີອາຄະເນ, ການເປັນອານາຈັກຂອງມອນໄດ້ຖືກສູນເສຍໄປໃນປີ ພ.ສ 1600[4] ດ້ວຍການເຂົ້າຍຶດຄອງຂອງ ພະມ້າ ຕໍ່ມາມອນ ກໍ່ມີການຮວມຕົວເພື່ອຈະຟື້ນຟູອານາຈັກຄືນອີກ ແຕ່ກໍ່ຟື້ນບໍ່ໄດ້ ຈຶ່ງເຮັດໃຫ້ດິນແດນຂອງມອນຖືກແບ່ງແຍກອອກເປັນສ່ວນໆ ແລະ ຂຶ້ນກັບຫຼາຍປະເທດ.ໃນຖານະເປັນເຜົ່ານ້ອຍຂອງປະເທດນັ້ນໆ.

ປະຈຸບັນຊາວມອນ ນອກຈາກກຸ່ມທີ່ຕັ້ງຖິ່ນຖານຢູ່ພາກໃຕ້ມຽນມາ ແລ້ວຍັງຕັ້ງຖິ່ນຖານຢູ່ທີ່ປະເທດໄທໃນເຂດແຂວງຊະເຊິງເຊົາ, ສຸພັນບູລີ, ນົນທະບູລີ, ປະທຸມທານີ, ທົນບູລີ, ສະມຸດສົງຄາມ, ເພັດສະບູລີ, ນະຄອນປະຖົມ, ນະຄອນລາດຊະສີມມາ, ນະຄອນສະຫວັນ ແລະ ປາຈີນບູລີ.

2) ລັກສະນະບາງຢ່າງຂອງພາສາມອນ.

ພາສາມອນຢູ່ໃນຕະກູນ ມອນ-ຂະແມ (Mon-khmer) ມີຕົວອັກສອນຂຽນ ແລະ ການແບ່ງໝວດໝູ່ຂອງພະຍັນຊະນະມີຄວາມຄ້າຍກັບຂະແມຫຼາຍເຊັ່ນ:ແບ່ງພະຍັນຊະນະເປັນກຸ່ມໂຄສະ (Voiced) ແລະ ອະໂຄສະ (Voiceless) ການແບ່ງກຸ່ມພະຍັນຊະນະນີ້ມີຄວາມສຳຄັນຕໍ່ການທີ່ຈະນຳສະຫຼະມາປະສົມເຊັ່ນດຽວກັບລະບົບຂຽນຂອງພາສາຂະແມ. ຄຳໃນພາສາມອນຫຼາຍໆຄຳຄືກັບຄຳໃນພາສາຂະແມ ສະນັ້ນ ການຈະຮູ້ໄດ້ວ່າລະຫວ່າງ ມອນ ແລະ ຂະແມ ໃຜຮັບຄຳຈາກໃຜນັ້ນກໍ່ມີຄວາມລຳບາກທີ່ຈະຊີ້ຂາດໄດ້.

---

[4]ສຸຈະຣິດລັກ ດີຜະດຸງ: ມອນ ພ.ສ 2542 ໜ້າ 2.

ตามหัวกถานทางปะหวัดสาดให้รู้ว่าแต่เดิมมอนได้รับเอ๋าอักสอนคริมทะของอินเดยมาเป้นต้นแบบสำลับเร้ดแบบอักสอนให้พาสาต้น อักสอนนี้ฮูงกว่าอักสอนมอนบูราน พิบกามจาลึกไว้ในสิลาจาลึก เซิ่งมีบันทึกสะไหมไว้ในละหว่าๆ พ.ส 12-14[5] ต่ำมาอักสอนมอนก่ำมีกามปับปุงรูบแบบ โดยฮูงกว่าอักสอนใหม่เซิ่งเร้ดขึ้นในละหว่าๆ พ.ส 2100 หื เมื่อ 400 ก่วาปี ก่อนนี้[6].

ในพาสาลาว ด้วยกามสึกสาปฺบหฺบด้านหน่วยคำ, โถงส้างคำ, พะยาๆ และความหมายของคำพ้อมกับกามสึกสาเอกะสานต่างๆที่ก่าวเกิ่ง พาสา และ อิดทิพิน ของคำพาสามอนที่มิต่ำพาสาต่างๆที่ยู่อ้อมแอ้มกับมอนในนั้นรวมมิพาสาลาวก่ำเคียมิ กามพ้อพันกันในยุกหนึ่งมาสะนั้นได้พิบว่า ในพาสาลาวมิคำที่ฮับจากพาสามอนจำนอนหนึ่ง.

กามฮับคำเข้ามาหากอิงตามปะหัวดสาดลาวก่ำจะปะมานกาละในละหว่าๆ สะตะวัดที่ 6 หา 8 หื ปะมาน ค.ส (600 - 800) เนื่องว่า มอนเคียเป้นชาดที่ได้ตั้งถิ่นถานยู่ในพากพื้นอาชิอาคะเมมานาน และ ต่ำมามอนก่ำมิความจะเล้นทางด้านกะสิกำกามเร้ดนาเป้นสำคัน. สะนั้นคำของพาสามอนเช่น ชื่พืดบางฉะนิดที่ใช้เป้นอาหานจิ่งหูงเหื่อไว้ และ ยังถูกฮับเข้าในพาสาลาว.พ้อมนี้ก่ำยังมิคำก่วกับกามเร้ดนาเถื่องสำลับใส่สิ่งของ ที่เป้นสิ่งจักสานด้วยไม้ป่องหื่หวายหูายๆฉะนิด ก่ำได้เข้ามาใช้ในพาสาลาว. ดั่งคำที่เก็บ กำได้ในนี้ เป้นคำที่ฮับมาจาก พาสามอน. เซิ่งกามเก็บกำได้จากวัดจะนานุกมพาสามอน, เอกะสานก่วกับกามสึกสามอน และ ข้อมูนกามเก็บกำคำสับพื้นถานของพาสามอนจากปื้ม คำมอนที่พิบใช้ในพาสาไท และ อิกปื้มจำนอนหนึ่งนี้สามาดพิบคำได้เป้นส่วนฮูาย, แต่บางคำที่ ฮับมาจากมอนคิงหูงเหื่อไป

---

[5] วิจิดตรา แสงพินสิด: พาสาต่างปะเทดในพาสาไท. พ.ส 2519 หน้า 16.

[6] ในปื้มและหน้าดวกัน.

จากการเก็บคำในครั้งนี้ในการสึกสาค้นคว้าของท่านที่ก่ยวกับพาสาม่อมนั้น หากพ็บเห็นคำใดอีกข่จ่งเก็บคำไว้เพื่อช่วยให้การแก้ไขเพิ่มเติมในพายหน้าจะได้มีข้มูนอันใหม่ติ่ม. บันดาคำที่รับจากพาสาม่อมที่เก็นคำได้มีดั่งนี้:

คำลาว	คำม่อม
ผักกะเพิา	/ kaphraw/
กะต่าย	/ kratāj /
กะอาย, กะวินกะอาย	/ krawāj /
กะซาก	/ krasāk /
กะจอก	/ kracɔ̄k /
กาบ้	/ kā /
กะดูกหิวที่ห้อม	/ kralōk /
เกาะ เกาะดอม	/ kɔ /
กวยน	/ kwian /
กาด ร้ายกาด	/ kāc /
ขะหนาบ	/ k^{h}nāp /
ขาม เสือ	/ khān /
ขยบ	/ kriap /
หาม	/ lām /
ขอก	/ k^{h}ɔ̄k /
คะลำ	/ klam /
คิว, คอบคิว	/ khruā /
คอบ , คอบคุม	/ khɔ̄p /
คอบ	/ khwap/
คาด , หวิ	/ khrāt/
โตล่าง	/ khāŋ/
โคมไฟ	/ khōm /
จูม ค้จูม	/ cūn /
ซ่าง	/ sāŋ/
เซือก	/ suak /
เซิง, เซิงเสื้อ	/ sɔ̄ŋ/
ซ้อม	/ sɔ̄n /
ด๊ง	/ doŋ/
ถิง	/ thoŋ/
โบก	/ bōk /
บยด	/ biat /
แบะ , ขี้แบะ	/ bæ/
เสิก	/ sɔk/
ปาม, ปาบปาม	/ prām/
แปง	/plæŋ/
พาน	/prān /
พอย	/plɔ̄j /
พู , ใบพู	/phlū/

ພົ້ງ	/phoŋ/
ພາຍ, ຊ້າງພາຍ	/phlāj /
ພາຍ , ຜີພາຍ	/phlāj /
ໝາກນາວ	/nāw/
ໝາກກອກ	/kɔ̄k/
ໝາກພ້າວ	/phrāw/
ລ້າງ	/lāŋ/
ລາມ	/lām/
ລຸຍ	/lūj /
ເລິກ	/lɔ̄k/
ວົ້ງ	/woŋ/
ສະອຶກ	/saʔɯk/
ສາດນ້ຳ	/sāt/
ແຫຼກ	/læk /
ໂຕທ່ານ	/hān/
ກະຕ່າ	/kratā/
ກະບຸງ	/kraboŋ/
ກະລາ	/klā/
ລານ	/lān/
ຮົ້ນ ໃສ່ເຂົ້າ	/hīn/
ກວຍ	/kluoj /
ຂີ້ແກບ	/kǣp/
ກະເຊາະ	/kasɔ/
ດຳນາ	/dām/

ເຂົ້າກ້າ, ຕົ້ນກ້າ	/kā /
ສາງ, ຜີສາງ	/sāŋ/
ບານສະພັ້ງ	/saphaŋ/
ພຸ້ງ	/phuŋ/
ພັ້ງ, ເພພັ້ງ	/phaŋ/
ລາດ , ປູລາດ	/lāt/
ຄາດນາ	/khāt/
ລະ , ແຕ່ລະ	/la/
ບາມື້ , ບາເດືອນ	/bā/
ເຂັ້ນ, ແກ່ໄປ	/khen/
ແດກ, ຍັດເຂົ້າແໜ້ນ	/dǣk/
ບຶ້ນ	/bɯ:n/
ຮຽງ , ຮຽງກັນ	/hiaŋ/
ກະບ້ັງ	/krabaŋ/
ກະທິບ	/kratīp/
ກະບວຍ	/krabuoj /
ຄອ້ງ, ຄອ້ງນ້ຳ	/kʰlɔ̄ŋ
ສອກ, ສອກຫຼີກ	/sɔ̄k /
ພວກ	/phuak/
ຫາດ	/hāt/
ຄອນ	/khɔ̄n/
ຄາ, ຄ້າງຄາ	/khā/
ປົດ	/plot/
ອີ້ວ	/ʔīw/

ສັບສ່ໍ, ສ່ໍຄວາມໃຫ້ເຫັນ	/sɔ̄ /	ຊົນ, ຄວາຍຊົນ	/son/
ຂ່ໍ(ດອກໄມ້)	/ sɔ̄ /	ຮຸດ , ໄຖຮຸດ	/hut/
ເຖືອ	/ thɯa /	ສີໄຄ	/sə̄krə̄ /
ຫຼາ	/ lā /	ປີ , ໝາກປີ	/pĺi/
ປ່ັນ	/pan/	ກ້ວຍ	/kluoj /
ອາຍ, ໜ້າອາຍ	/ʔāj /	ຮົ້ວ	/rua/
ວຽນ, ວົງວຽນ	/wian/	ກະສວຍ	/kasuoj /
ມອດ,ໂຕມອດ	/mɔ̄t/	ກ່ີ	/kî /

3. ການຮັບຄຳຈາກພາສາຂະແມ

1) ຄວາມເປັນມາຂອງຄວາມສຳພັນລະຫວ່າງລາວກັບຂະແມໂດຍຫຍໍ້.

ໃນປະຫວັດສາດລາວທີ່ກ່າວເຖິງຄວາມສຳພັນລະຫ່ວາງລາວກັບຂະແມ ເຊິ່ງແຕ່ເດີມ ເອີ້ນວ່າຂະເໝນນັ້ນ ແມ່ນນັບແຕ່ສະໄໝທີ່ເຈົ້າຟ້າງຸ່ມ ກະສັດລາວຜູ້ທີ່ໄດ້ທ້ອນໂຮມຊົນຊາດລາວ ແລ້ວສ້າງເປັນອານາຈັກລ້ານຊ້າງ, ໃນຄວາມນີ້ໄດ້ໃຫ້ຮູ້ວ່າແຕ່ກ່ອນນັ້ນດິນແດນຂະເໝນໄດ້ມີສາສະໜາພຸດແຜ່ເຂົ້າມາຈົນເກີດຄວາມຈະເລີນ. ອະລິຍະທຳເດີມປະສົມຄວາມຈະເລີນທາງພຸດທະສາສະໜາໄດ້ເຮັດໃຫ້ຂະເໝນກາຍເປັນແຫ່ງທີ່ສຳຄັນ ເຊິ່ງບັນດາຊາດໃນແຫຼມນີ້ໄດ້ໄປຮຽນຮູ້ນຳ ແລະ ໄປນຳເອົາຄວາມຈະເລີນນັ້ນມາສູ່ປະເທດຕົນ. ໃນປະຫວັດສາດລາວທີ່ກ່າວເຖິງເຈົ້າຟ້າງຸ່ມກໍ່ໄດ້ກ່າວເຖິງການໄປຮຽນເອົາວິຊາຄວາມຮູ້ທາງການປົກຄອງບ້ານເມືອງ ພ້ອມກັບຄວາມຮູ້ທາງພຸດທະສາສະໜາຈາກປະເທດຂະເໝນ. ກ່ອນນັ້ນ ເຖິງວ່າລາວໄດ້ຖືສາສະໜາພຸດນິກາຍອື່ນ ມາແລ້ວ ແຕ່ສຳລັບການປົກຄອງບ້ານເມືອງ ແລະ ໃຊ້ບົດບາດຂອງສາ

ສະໜາໃຫ້ມີຕໍ່ສັງຄົມ, ຕໍ່ການປົກຄອງຂອງລະບອບສັກດິນາໃນລາວກ່ອນນັ້ນຍັງບໍ່ເປັນທີ່ປາ ກົດເດັ່ນຊັດຂຶ້ນ. ເມື່ອມາເຖິງສະໄໝທີ່ມີການພົວພັນກັບຂະເໝນນີ້ບົດບາດດັ່ງກ່າວ ໄດ້ເດັ່ນຊັດ ຂຶ້ນ. ອັນທີ່ສະແດງອອກໃນພາສາລາວກໍ່ຄື ຄຳທີ່ລາວຮັບມາຈາກພາສາຂະເໝນ ໂດຍສ່ວນ ຫຼາຍໄດ້ແກ່ຄຳກ່ຽວກັບການປົກຄອງ,ລາຊາສັບ ຕໍ່ມາກໍ່ໄດ້ແກ່ຄຳທາງສາສະໜາເປັນສຳຄັນ.

ນອກຈາກຄວາມສຳພັນ ທາງປະຫວັດສາດ ໃນເລື່ອງທີ່ກ່າວມານີ້ ລາວ ແລະ ຂະ ເໝນຍັງມີດ້ານພູມສາດຮວມນຳດ້ວຍ. ລາວ ແລະ ຂະເໝນມີຊາຍແດນຕິດກັນເກືອບ 500 ກິ ໂລແມັດ, ຊາວທ້ອງຖິ່ນທີ່ຢູ່ຕາມຊາຍແດນຂອງແຕ່ລະປະເທດຕ່າງກໍ່ມີການຕິດຕໍ່ໄປມາຫາສູ່ ກັນ ແລະ ຕ່າງກໍ່ໃຊ້ພາສາຂອງກັນແລະກັນ ສຳລັບຕິດຕໍ່ສື່ສານ. ຊາວລາວກັບຊາວຂະເໝນມີ ຄວາມສຳພັນອັນດີ ຕໍ່ກັນຢູ່ສະເໝີ ມາຕະຫຼອດຫຼາຍຮ້ອຍປີ.

ກ່າວເຖິງຄຳຮັບມາຈາກພາສາຂະແມນັ້ນ ອັນເປັນທີ່ຈະແຈ້ງກໍ່ຄື ສະໄໝເລີ່ມຕົ້ນຂອງ ການກໍ່ຕັ້ງອານາຈັກລ້ານຊ້າງຄືສະຕະວັດທີ່ 13 ເປັນຕົ້ນມາ[1]. ຖືວ່າຍຸກນີ້ມີການຮັບຫຼາຍໆຢ່າງທີ່ ເປັນຂະບວນ ເຊິ່ງຮວມມີສາສະໜາພຸດນິກາຍເຖລະວາດ ແລະ ລັດທິການປົກຄອງສັງຄົມ ຕາມລະບອບສົມບູນຍາສິດທິລາດ ສະນັ້ນ ຄຳທີ່ກ່ຽວກັບສາສະໜາ, ລາຊາສັບ ຈຶ່ງມີການຮັບ ມາຫຼາຍ. ໃນນັ້ນ ສັງເກດເຫັນວ່າໄດ້ມີ ຄຳປາລີ - ສັນສະກິດ ທີ່ກ່ຽວກັບສາສະໜາ ວັນນະຄະດີ ສັງຄົມ[2]. ພ້ອມດຽວກັນຫຼາຍໆຄຳທີ່ມີໃນພາສາລາວ ແມ່ນລາວໄດ້ຮັບໂດຍຜ່ານພາສາຂະແມ ເຂົ້າມາ.

---

[1]ກະຊວງຖະແຫຼງຂ່າວແລະວັດທະນະທຳ:ປະຫວັດສາດລາວ ເດີກດຳບັນ-ປະຈຸບັນ. ຄ.ສ 2000 ໜ້າ 122-123 .

[2] ວິຈິດຕຣາ ແສງພົນສິດ: ຄວາມຮູ້ເລື່ອງພາສາຕ່າງເທດໃນພາສາໄທ. ພ.ສ 2519 ໜ້າ 52.

2) ບາງລັກສະນະຂອງພາສາຂະແມ

ກ. ກ່ຽວກັບພາສາ

ພາສາຂະແມ ເປັນພາສາທີ່ຢູ່ໃນຕະກຸນມອນ-ຂະແມ (Mon–Khmer) ລະບົບຄຳໃນພາສາເປັນລັກສະນະຄຳຕິດຕໍ່ (Agglutinative Language) ເຖິງວ່າໄດ້ຈັດເຂົ້າໃນກຸ່ມນີ້ ແຕ່ໃນພາສາຂະແມກໍ່ປະກອບດ້ວຍຄຳທີ່ເປັນພະຍາງດຽວຫຼືເອີ້ນວ່າ ຄຳໂດດຢ່າງຫຼວງຫຼາຍ. ສຳລັບການຈັດລຽງລຳດັບຄຳໃນໂຄງສ້າງປະໂຫຍກ ກໍ່ຄ້າຍກັບຫຼັກການຈັດລຽງລຳດັບຂອງຄຳໃນໂຄງສ້າງປະໂຫຍກຂອງພາສາອື່ນໆ ທີ່ຢູ່ໃນຕະກູນພາສາຄຳໂດດ ດັ່ງພາສາໃນຕະກູນໄຕ.

ພາສາຂະແມ ເປັນພາສາກຸ່ມໃຫຍ່ ແລະ ສຳຄັນໃນຕະກຸນ ມອນ - ຂະແມ. ໃນຕະກຸນນີ້ນອກຈາກພາສາຂະແມ ຍັງມີພາສາມອນ (Mon) ຊຶ່ງຍັງໃຊ້ປາກເວົ້າກັນຢູ່ທາງພາກໃຕ້ຂອງມຽນມ້າ ພ້ອມນີ້ ກໍ່ມີ ພາສາປາລອງ (Paluang), ພາສາວ້າ (Wa), ພາສາຣຽງ (Riang). ນອກຈາກໃນພະມ້າກໍ່ມີພາສາຂະມຸ (Khmu), ພາສາໂຊ (So) ແລະ ພາສາລະແມດ (Lamet) ຫາກກ່າວໄປເປັນວົງກ້ວາງກໍ່ຈະຮວມເຖິງພາສາຍຸຣຸ, ອັນມີ, ລະແວ, ລະເວນ, ໂອຍ ເຈັ໋ງ, ອາຣັກ, ຕະລຽງ... ພາສາເມືອງອັນມີຕູມ, ສລາ, ມະແລງ, ລີຮາ, ທາວົງ, ກຣີ... ແລະ ພາສາມາກອງອັນມີກະຕາງ, ສ່ວຍ, ກະຕູ, ຕະໂອຍ, ແງະ, ປະໂກະ ແລະອື່ນໆໃນລາວ ແລະ ພາສາກຸຍ (Kuy), ຊອງ (Chong) ແລະ ລາວ້າ (Lawa) ໃນໄທ[3].

ໃນພາສາຂະແມປະກອບມີຄຳພື້ນຖານ ແລະ ຄຳທີ່ຮັບຈາກປາລິເປັນຄຳຈຳນວນຫຼາຍ ແລະ ສ່ວນໜຶ່ງຈາກສັນສະກິດໂດຍສະເພາະກຸ່ມຄຳທີ່ກ່ຽວກັບການປົກຄອງ, ການຮົບເລວເສິກ

---

[3] Frank M. Lebar, Gerald C. Hickey, John. Musgrave:

Ethnic Group of Mainland Southeast Asia. New Haven 1964.p 98-146.

ແລະ ທາງວັນນະກຳ. ການຮັບຄຳເຫຼົ່ານີ້ມາໃນພາສາຂະແມເດັ່ນທີ່ສຸດຄື ໃນສະໄໝຕົ້ນພຸດທະສາສະໜາ ສະຕະວັດທີ 20-21[4] ເຊິ່ງເປັນສະໄໝທີ່ພຸດທະສາສະໜາລັດທິເຖລະວາດເຜີຍແຜ່ເຂົ້າມາແຮງໃນດິນແດນຂະແມ. ນອກນີ້ ກໍ່ມີຄຳທີ່ຮັບຈາກພາສາຝຣັ່ງ ລາແຕັ່ງ ແລະ ຄຳຈາກພາສາອັງກິດ, ຄຳຈາກພາສາຕະກູນໄຕ. ສ່ວນຄຳຈາກພາສາອື່ນໆກໍ່ມີເຊັ່ນກັນ ແຕ່ຈະມີຈຳນວນບໍ່ຫຼາຍເທົ່າກັບຄຳຈາກພາສາທີ່ກ່າວມານີ້.

ດັ່ງທີ່ສະເໜີມາ ໂຄງສ້າງປະໂຫຍກພື້ນຖານຂອງພາສາຂະແມເປັນແບບ SVO. ກ່ຽວກັບສ່ວນຂະຫຍາຍ ຫລື ກິລິຍາຈະຢູ່ທາງຫຼັງຂອງຄຳນາມ ຫຼື ກິລິຍາທີ່ຖືກຂະຫຍາຍ, ກ່ຽວກັບຄຳທີ່ມີສອງພະຍາງ ແລະ ຄຳຫຼາຍພະຍາງນັ້ນພົບວ່າ ກຸ່ມໜຶ່ງເປັນຄຳປະສົມລະຫວ່າງຄຳມູນພື້ນຖານ (basic word) ດ້ວຍກັນ ແລະ ກຸ່ມໜຶ່ງເປັນຄຳຢືມຈາກພາສາອື່ນ. ໃນນີ້ ເມື່ອກ່າວເຖິງຄຳສອງພະຍາງພາສາຂະແມກໍ່ສາມາດແຍກເປັນສອງກຸ່ມຄື ກຸ່ມປະສົມດ້ວຍໜ່ວຍຄຳພື້ນຖານກັບໜ່ວຍຄຳພື້ນຖານຂອງພາສາຂະແມເອງ ແລະ ອີກກຸ່ມໜຶ່ງເກີດຈາກການຕື່ມດ້ວຍໜ່ວຍຄຳໃດໜຶ່ງໃສ່ດ້ານໜ້າຂອງຄຳ ຫຼື ບາງກໍລະນີ ຕື່ມເຂົ້າສ່ວນກາງຂອງຄຳກໍ່ມີ. ສຳລັບວິທີການຕື່ມໜ່ວຍຄຳແຕ່ລະຢ່າງທີ່ວ່ານີ້ ຍັງປະກອບມີກົດຕ່າງໆກຳກັບຢູ່ຕາມແຕ່ລະກໍລະນີ.

ອັກສອນທີ່ໃຊ້ຂຽນພາສາຂະແມໃນປັດຈຸບັນເອີ້ນວ່າ ອັກສອນຂອມຫວັດ ເຊິ່ງໄດ້ເຄົ້າແບບມາຈາກອັກສອນພາມຂອງອິນເດຍຕອນໃຕ້ ເຊິ່ງຮຽກວ່າ ອັກສອນປັນລະວະ. ດັ່ງຕໍ່ໄປນີ້ ຈະເປັນການສະເໜີກ່ຽວກັບລັກສະນະບາງຢ່າງຂອງພາສາຂະແມໂດຍອີງຕາມເອກະສານພາສາຂະແມຫ້ອງທີ່ 8 ທີ່ພິມໃນປີ 1986 ແລະ ວັດຈະນານຸກົມຂະແມ-ຣັດເຊຍ, ປຶ້ມການປ່ຽນແປງຂອງພາສາຄຳຢືມໃນພາສາໄທເຊິ່ງສັງເຂບໄດ້ດັ່ງນີ້. ຕິວອັກສອນທີ່ໃຊ້ຂຽນພາສາຂະແມ ຮວມມີ 33 ຕິວ ແຕ່ໜ່ວຍສຽງພະຍັນຊະນະທັງໝົດຮວມມີພຽງ 20 ໜ່ວຍເຊັ່ນ

---

[4] ກະຊວງຖະແຫຼງຂ່າວແລະວັດທະນະທຳ:ປະຫວັດສາດລາວ ເດີກດຳບັນ-ປະຈຸບັນ. ຄ.ສ 2000 ໜ້າ 120-121 .

/ p, ph, t, th k, kh, c, b, d, m, ɳ, ŋ, f, r, s, l, w, j, h, ʔ /.

ໜ່ວຍສຽງສະຫຼະ ທັງໝົດມີ 19 ສຽງ ໃນນີ້ແບ່ງເປັນກຸ່ມສະຫຼະສຽງຍາວ 10 ແລະ ກຸ່ມ ສະຫຼະສຽງສັ້ນ 9 ສຽງ.

ກຸ່ມສະຫຼະສຽງຍາວມີ / i̱, e̱, ɛ̱, ɨ̱, ə̱, a̱, u̱, ɔ̱, o̱, ɒ̱ /
ກຸ່ມສະຫຼະສຽງສັ້ນມີ / i, e, ɒ, ɨ, ə, a, u, ɔ, o /
ກ່ຽວກັບສະຫຼະປະສົມສຽງຍາວ ມີ 5 ຮູບຄື: / i̱a, ɨ̱a, a̱i, ə̱i, u̱a /.
ສະຫຼະປະສົມສຽງສັ້ນ ມີ 3 ຮູບ ຄື: / ia, əi, oi /

ຂ. ລັກສະນະບາງຢ່າງ ໃນການຈັດກຸ່ມ ພະຍັນຊະນະ ແລະ ສະຫຼະ

ກ່ຽວກັບ ພະຍັນຊະນະຄວບ

ໃນພາສາຂະແມ ການປ່ຽນແປງຄຳ ແລະ ຄວາມໝາຍຄຳນັ້ນມີເລື່ອງຂອງການຕື່ມ ໜ່ວຍສຽງເຂົ້າພາຍໃນຄຳດັ່ງທີ່ສະເໜີໃນເທິງນີ້. ສະນັ້ນ ກົດດັ່ງກ່າວໄດ້ເຮັດໃຫ້ພະຍັນຊະນະ ຕົ້ນຄຳເກີດຜັນເປັນໜ່ວຍຍ່ອຍອອກໄປຫຼາຍໜ່ວຍພາໃຫ້ຈຳນວນພະຍັນຊະນະຄວບທີ່ມີສອງ ໜ່ວຍສຽງນັ້ນມີເຖິງ 85 ຕົວ, ພະຍັນຊະນະຄວບທີ່ມີ 3 ໜ່ວຍສຽງກໍ່ມີຈຳນວນຫຼາຍ, ໃນບາງກໍ ລະນີໃນເມື່ອຕ້ອງການປ່ຽນຊະນິດຂອງຄຳເຊັ່ນ ຈາກກິລິຍາໃຫ້ກາຍເປັນຄຳນາມກໍ່ຈະນຳໜ່ວຍ ສຽງໃດໜຶ່ງມາຕື່ມເຂົ້າພາໃຫ້ເກີດການປ່ຽນຮູບຂອງຄຳເດີມ.

ດັ່ງບາງຕົວຢ່າງ: ສຽງ / kh, ch, th, ph / ທັງໝົດນີ້ ຖືເປັນພະຍັນຊະນະຄວບ. ໃນ ບາງກໍລະນີພະຍັນຊະນະຄວບຊຸດນີ້ກໍ່ຈະປ່ຽນຮູບເມື່ອຕື່ມໜ່ວຍສຽງບາງອັນເຂົ້າເພື່ອສ້າງຄຳ ໃໝ່, ຄວາມໝາຍໃໝ່ຈາກຄຳເດີມຄື / chan / (ສັນ) ແປວ່າ ກິນ ເພື່ອປ່ຽນເປັນຄຳນາມກໍ່ຕື່ມ ໜ່ວຍສຽງ / ŋ/ ທີ່ເປັນ (Infix) ເຂົ້າໃນກາງຄຳໃຫ້ເປັນ / cɒŋhan / (ຈ໋ງຫັນ) ແປວ່າ ຂອງກິນ ເຊິ່ງເປັນຄຳນາມ.

ການທີ່ພາສາຂະແມມີສຽງພະຍັນຊະນະຄວບໝາຍເຖິງ 85 ຕົວນັ້ນ ກໍ່ເພາະບາງສາເຫດເຊັ່ນນີ້: ເພາະການຈັດກຸ່ມພະຍັນຊະນະໂດຍປົກກະຕິພາສາຂະແມຈັດພະຍັນຊະນະທັງໝົດອອກເປັນສອງກຸ່ມຄື ກຸ່ມອະໂຄສະ ແລະ ກຸ່ມໂຄສະ. ກຸ່ມອະໂຄສະຈະ (voiceless) ໃຊ້ສະຫຼະ / ā / ເປັນສຽງຊ່ວຍເພື່ອອ່ານ.

ຕົວຢ່າງ :

/ kā/	/ tā /	/ lā /	/chā /	/ phā /
/ cā /	/ bā /	/ mā /	/ thā /	/ hā /
/ dā /	/ bā /	/ khā /	/ phā /	/ pā /

ກຸ່ມພະຍັນຊະນະ ໂຄສະ (voiced) ໃຊ້ສະຫຼະ / ɔ̄ / ເປັນສຽງເພື່ອຊ່ອຍອອກສຽງ.

ຕົວຢ່າງ:

/ kɔ̄ /	/ khɔ̄ /	/ ŋɔ̄ /
/ cɔ̄/	/ chɔ̄ /	/ ɲɔ̄ /
/ dɔ̄ /	/ thɔ̄ /	/ nɔ̄ /
/ tɔ̄ /	/ phɔ̄ /	/ mɔ̄ /
/ yɔ̄ /	/ rɔ̄ /	/ lɔ̄ /

24 / VII
ห้ามจำหน่าย

ການແບ່ງກຸ່ມພະຍັນຊະນະນີ້ ເປັນການແບ່ງຕາມການອອກສຽງຂອງແຕ່ລະຕົວເຊິ່ງຕົວໃດເມື່ອອອກສຽງມີ / ā / ປະກົດຮ່ວມ (Inherent vowel) ກໍ່ຈະຈັດໄວ້ໃນກຸ່ມອະໂຄສະ ແລະ ມີສຽງ / ɔ̄ / ກໍ່ຈະຈັດໄວ້ໃນກຸ່ມໂຄສະ.

ແຕ່ລະກຸ່ມພະຍັນຊະນະຈະມີບົດບາດຕໍ່ກັບສະຫຼະອື່ນທີ່ມາປະກອບເຂົ້າ. ສະຫຼະຕົວທີ່ນຳມາປະກອບນັ້ນ ກໍ່ຈະມາຟ້ອງໃຫ້ປະສົມກັບສຽງພະຍັນຊະນະທີ່ມີ / ā / ຫຼື / ɔ̄ / ຢູ່ກ່ອນນັ້ນນຳ. ສະນັ້ນ ສະຫຼະຕົວດຽວກັນ ເມື່ອນຳມາປະກອບກັບພະຍັນຊະນະໃນແຕ່ລະກຸ່ມ ກໍ່ຈະພາ

ໃຫ້ໄດ້ສຽງອ່ານຕ່າງກັນຕາມແຕ່ລະກຸ່ມ. ການແບ່ງກຸ່ມນີ້ໄດ້ຖືເປັນຄວາມສຳຄັນຫຼາຍຕໍ່ກັບຫຼັກ ຂອງອັກຂະຫຼະວິທີຂອງພາສາຂະແມ.

ບາງວິທີການສ້າງຄຳໃນພາສາຂະແມ.

ການສ້າງຄຳໃນພາສາຂະແມ ໃຊ້ສາມວິທີຫຼັກ ຄື
ກ). ໃຊ້ໜ່ວຍຄຳໃດໜຶ່ງຕື່ມເຂົ້າໃນຄຳ.
ຂ). ໃຊ້ການຊ້ຳຄຳ.
ຄ). ໃຊ້ວິທີປະສົມຄຳ.

ການໃຊ້ໜ່ວຍຄຳໃດໜຶ່ງຕື່ມເຂົ້າໃນຄຳມີວິທີດັ່ງນີ້: ໜ່ວຍຄຳທີ່ຕື່ມເຂົ້າໃນຄຳແຍກ ເປັນສອງຊະນິດຄື ອຸປະສັກ (prefix) ແລະ ອາຄົມ (infix). ຄຳເດີມເຊິ່ງເປັນຄຳພະຍາງດຽວ ເມື່ອຖືກຕື່ມໜ່ວຍສຽງໃດໜຶ່ງເຂົ້າໄປ ຈະພາໃຫ້ເປັນຄຳໃໝ່ສອງພະຍາງ, ຄຳໃໝ່ນັ້ນບາງກໍລະ ນີກໍ່ຈະປ່ຽນຈາກນາມເປັນກິລິຍາ ຫຼື ຊ່ວຍບົ່ງບອກເຖິງຕົວກະທຳໃຫ້ ຫຼື ບໍ່ກໍ່ເພີ່ມຄວາມໜັກ ແໜ້ນທາງຄວາມໝາຍໃນຄຳຂຶ້ນ.

ຕົວຢ່າງ:

ການຕື່ມມອຸປະສັກ (prefix) ປ່ຽນຈາກ ກິລິຍາໃຫ້ເປັນນາມ.

ຄຳ	ຄວາມໝາຍ	ໜ່ວຍສຽງຕື່ມ	ຄຳທີ່ໄດ້	ໄດ້ຄວາມໝາຍ
/bang/	ບັ້ງ	/k /	/kbang/	ຂອງບັ້ງ
/chaj /	ຈ່າຍ	/kh /	/khcāj/	ກະຈາຍ
/pen/	ເຕັ້ມ	/b /	/ampen /	ເຮັດໃຫ້ເຕັ້ມ
/lān/	ອອດວາຍ	/ph /	/phlān /	ເຮັດໃຫ້ອອດວາຍ

ການສ້າງຄຳດ້ວຍວິທີຊ້ຳຄຳ (Reduplication)

ການຊ້ຳຄຳປາກົດດ້ວຍສອງວິທີ ຄື ຊ້ຳທັງໝົດ (Complet) ຫຼື ດ້ວຍການຊ້ຳບາງສ່ວນ ກໍລະນີໃດກໍ່ຕາມ ເມື່ອມີການຊ້ຳກໍ່ຈະພາໃຫ້ຄວາມໝາຍປ່ຽນແປງຕາມ.

ຕົວຢ່າງ :

ຄຳ	ຄວາມໝາຍ	ການຊ້ຳ	ຄວາມໝາຍໃໝ່.
/srej /	ສາວ	/srey srej /	ສາວ ສາວ.
/tou /	ນ້ອຍ	/touc touc /	ນ້ອຍໆ.
/cah /	ແກ່	/cah cah /	ແກ່ໆ.
			ແລະ ອື່ນໆ.

ການສ້າງຄຳດ້ວຍວິທີປະສົມຄຳ (Compound)

ກໍລະນີນີ້ໄດ້ແກ່ວິທີການປະສົມຄຳພື້ນຖານ ຫຼືໜ່ວຍຄຳອິດສະຫຼະ (free morpheme) ນັບແຕ່ສອງຕົວຂຶ້ນໄປມາປະສົມເຂົ້າກັນເພື່ອສ້າງຄວາມໝາຍໃໝ່.

ຕົວຢ່າງ :

ຄຳ	ຄວາມໝາຍ	ໜ່ວຍປະສົມ	ຄວາມໝາຍ	ຄຳໃໝ່ຄວາມໜ່ວຍໃໝ່.
/tɨk /	ນ້ຳ	/cət /	ນ້ຳໃຈ	/tɨcət / ນ້ຳໃຈ
/mɔ̆ɔn/	ໄກ	/ʔaŋ/	ປີ້ງ	/mɔ̆ən ʔaŋ / ໄກ່ປີ້ງ
/praʔ/	ເງິນ	/khǣ/	ເດືອນ	/praʔ khǣ / ເງິນເດືອນ
/nĕəʔ/	ຄົນ-ຊາວ	/rǣ /	ນາ	/nĕəʔsrǣ / ຊາວນາ

ແລະ ອື່ນໆ.

ນອກນີ້ລັກສະນະຂອງພາສາຂະແມຍັງມີສິ່ງລະອຽດຫຼາຍຢ່າງເຊິ່ງສາມາດຫາຄົ້ນຄວ້າ

ເພີ່ມເຕີມໄດ້. ສ່ວນທີ່ສະເໜີມາໃນນີ້ເປັນພຽງເພື່ອໃຫ້ຄວາມຮູ້ຂັ້ນພື້ນຖານເທົ່ານັ້ນ.

3). ການຮັບຄຳຂະແມເຂົ້າມາໃນພາສາລາວ.

ຄຳຂະແມທີ່ຮັບເຂົ້າມາໃຊ້ໃນພາສາລາວນັ້ນມີມານານແລ້ວ ແຕ່ການກຳນົດເວລາວ່າເລີ່ມແຕ່ເມື່ອໃດນັ້ນກໍ່ບໍ່ທັນພົບເອກະສານໃດບົ່ງໄວ້, ດັ່ງທີ່ໄດ້ສະເໜີມາໃນສ່ວນຕົ້ນຂອງເລື່ອງນີ້ເມື່ອອີງໃສ່ປະຫວັດສາດກໍ່ພົບວ່າສະໄໝທີ່ມີການຮັບຄຳຂະແມເຂົ້າມາຫຼາຍນັ້ນໄດ້ແກ່ສະໄໝພຸດທະການທີ່ 21 ຫຼື ປະມານປີ ຄ.ສ 1300 ເລື່ອງນີ້ກໍ່ຍັງສາມາດນຳມາສຶກສາໄດ້ອີກ ເພາະຂະບວນການຢືມຄຳ ບໍ່ແມ່ນຈະຂຶ້ນກັບຂະບວນການສຳພັນທາງການເມືອງຫຼືດ້ານການປົກຄອງເທົ່ານັ້ນ, ການຮັບຄຳອາດມີມາກ່ອນກໍ່ເປັນໄດ້ ເພາະການກະຈາຍຂອງຄົນແຕ່ລະຊາດໃນສະໄໝນັ້ນຍັງບໍ່ມີຂອບເຂດອັນແນ່ນອນ; ໂດຍສະເພາະກຸ່ມຄຳທີ່ເປັນຊື່ພືດ, ຜັກຕ່າງໆ, ຊື່ນ້ຳ, ພູ ຫຼື ໜອງບຶງໃນຖິ່ນນັ້ນ ເຊິ່ງແມ່ນພວກທີ່ເຄີຍຢູ່ມາກ່ອນຕັ້ງໄວ້ໃຫ້, ເມື່ອມີຜູ້ເຂົ້າໄປຢູ່ຕໍ່ກໍ່ຄົງຮັບເອົາບາງຄຳ ການຮັບຄຳນັ້ນຄົງມີມາກ່ອນສະໄໝ ຄ.ສ 1300[5]

ຄຳຂະແມທີ່ໄດ້ຮັບເຂົ້າມາໃນພາສາລາວນັ້ນ ເປັນການຮັບພຽງໂຄງສ້າງຄຳ ຫຼື ເອີ້ນວ່າ ຮູບຄຳ (word form) ສຽງ ແລະ ຄວາມໝາຍເທົ່ານັ້ນ, ບໍ່ໄດ້ຮັບຮູບຂຽນ, ສະນັ້ນ ການທີ່ຄຳຂະແມທີ່ປະກົດໃຊ້ໃນພາສາລາວຈຶ່ງໄດ້ຮັບການອອກສຽງ ແລະ ສະກົດຕາມລະບົບຂອງພາສາລາວ. ເພາະເປັນຕາມລະບົບນີ້ ຄຳຂະແມໃນພາສາລາວເມື່ອທຽບກັບສຽງ ແລະ ຮູບຄຳ, ບາງຄຳກໍ່ຈະຄ້າຍຄື ແລະ ຫຼາຍຄຳກໍ່ຈະແຕກຕ່າງອອກໄປຈາກພາສາຂະແມ.

ຕົວຢ່າງ:

ກຸ່ມຄຳທີ່ຮັບມາ	ທີ່ມີການປ່ຽນແປງທາງສຽງຂອງຄຳ
ຄຳຂະແມ	ເປັນຄຳລາວ ໝາຍສຽງ

---

[5] ວິຈິດຕຣາ ແສງພິນສິດ: ພາສາຕ່າງເທດໃນພາສາໄທ. ໜ້າ 101.

/rɔbam /	ລະບຳ	/labam /
/ɔbiəp /	ລະບຽບ	/labiap /
/cɔmnoŋ /	ຈຳນົງ	/camnoŋ/
/khcəj /	ຂະຈີ - ກະຈີ	/khacī/
/cɒmnəl /	ຊຳນານ	/amnān /
/tɒmləj /	ທຳລາຍ	/thamlāj /
/nɒw /	ເນົ່າ	/naw / ແລະ ອື່ນໆ.

ກຸ່ມຄຳທີ່ປ່ຽນຮູບຄຳໂດຍການຕັດບາງໜ່ວຍສຽງພະຍັນຊະນະ ແລະ ປ່ຽນບາງສຽງສະຫຼະ.

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ prəj /	ໄພ	/ phaj /
/ prnəh /	ເພາະ	/ phɔʔ/
/ khup /	ຄົບ	/ khop /
/ krāp /	ກາບ- ຂາບ	/kāp khāp /
/ crēk /	ແຊກ-ແຊກແຊງ	/ sɛk, sɛksēŋ/

ແລະ ອື່ນໆ.

ການເພີ່ມສຽງສະຫຼະເຂົ້າໃນຄຳ

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ sbaj /	ສະໄບ - ເຫຼັກສະໄບ	/ sabaj /
/ kbāl/	ກະບານ	/kabal /
/ smiən /	ສະໝຽນ	/ samian /
/ sʔāt /	ສະອາດ	/ saʔāt /

/ khnāt /	ຂະໜາດ	/ anāt/
/ khtih/	ກະທິ	/ kathi?/

ການຕັດໜ່ວຍສຽງບາງອັນ (loss of sound)

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/sapbej /	ສະບາຍ	/ sabāj /
/ srec /	ເສັດ	/ set /
/ sruəj /	ສວຍ	/ sūaj/
/ srunok /	ສະນຸກ	/ sanuk /
/ sɒrlop/	ສະລົບ	/ salop /
/ ʔaŋsəːn /	ເຊີນ	/ sān / ແລະ ອື່ນໆ.

ການປ່ຽນສຽງພະຍັນຊະນະຕົ້ນຂອງຄຳ.

ດ້ວຍການສຶກສາພົບວ່າ ໜ່ວຍສຽງພະຍັນຊະນະຕົ້ນຄຳທີ່ໃຊ້ໃນພາສາຂະແມ ເມື່ອຖືກຮັບເຂົ້າມາໃນພາສາລາວກໍ່ຈະເກີດການປ່ຽນ ໂດຍສະເພາະໜ່ວຍສຽງພະຍັນຊະນະຕົວທີ່ບໍ່ມີໃນພາສາລາວກໍ່ຈະຖືກປ່ຽນແທນດ້ວຍໜ່ວຍສຽງພະຍັນຊະນະໃດໜຶ່ງທີ່ໃກ້ຄຽງ ເຊິ່ງມີໃນພາສາລາວ.

ຕົວຢ່າງ:

ການປ່ຽນໜ່ວຍສຽງ ກ / k / ໃນພາສາຂະແມເປັນ / kh / ໃນພາສາລາວ.

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ krāp /	ຄອບ, ຄອບຄົວ	/ khāp /, /khāp khua /
/ kūəl /	ຄວນ	/ khuən /
/ kumnŏəp /	ຄຳນັບ	/ khamnap /
/ krōŋ/	ຄອງ	/khāŋ /

/ krɔ̄ŋ /	ໂຄງ	/ khōŋ /

ການປ່ຽນສຽງຈ / c / ເປັນ ສ ຫຼື ຊ /s /

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ chumnum/	ຊຸມນຸມ	/ sumnum /
/ cɒmraw /	ສຳເລົ່າ	/ samlaw /
/ cɒmrĕəh /	ຊຳລະ	/ samla / ແລະ ອື່ນໆ

ການປ່ຽນສຽງ ຕ / t / ເປັນ ທ ຫຼື ຖ / th /.

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ tuənlē /	ທະເລ	/ thalē /
/ tɒmiəj/	ທຳນາຍ	/ thamnāj /
/ tɒmniam /	ທຳນຽມ	/ thamniam /
/ tɒmnɔ:ŋ /	ທຳນອງ	/ thamnɔ:ŋ/ ແລະ ອື່ນໆ.

ການປ່ຽນສຽງ ປ / p / ເປັນ ພ ຫຼື ຜ / h /

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ kamprə̄/	ຄຳພ້າ	/ khamphā /
/ pin /	ເພນ	/ phēn /
/ priək /	ພາກ- ພັດພາກ	/ phāk /, / phat phāk /
/ prūm /	ພົມ- ພົມແດນ	/ phom / ແລະ ອື່ນໆ .

ການປ່ຽນສຽງ ດ / d / ເປັນ ຕ / t /

ຄຳຂະແມ	ເປັນຄຳລາວ	ໝາຍສຽງ

/ drāp /	ตาบ - ตาบใด	/ tāp /, / tāpdaj /
/ dbāŋ/	ตะบอๆ	/ tabɔ̄ŋ/
/ dahtɨən /	ตักเตือน	/ taktɨən / ແລະ ອື່ນໆ.

ການປ່ຽນສຽງພະຍັນຊະນະອື່ນໆ ທີ່ພົບວ່າເປັນກຸ່ມຍ່ອຍ:

ສຽງ ມ / m / ເປັນ ພ / ph /

ຄຳຂແມ	ເປັນຄຳລາວ	ໝາຍສຽງ
/ mlū /	ພູ- ພູຄ້ຽວ	/ phū /.

ສຽງ ມ / m / ເປັນ ລ / l /.

ຄຳຂະແມ	ຄຳລາວ	ໝາຍສຽງ
/ məmɔ̄ /	ລະເມີ	/ lamɔ̄ /

ສຽງ ກ / k / ເປັນ ຕ / t /.

ຄຳຂະແມ	ຄຳລາວ	ໝາຍສຽງ
/ krom /	ຕົມ - ອົກຕົມ	/ tom / - / ʔoktom/
ແລະ ອື່ນໆ.		

ສ. ການປ່ຽນແປງ ພະຍັນຊະນະທ້າຍຄຳບາງຕົວ

(Changing of some final consonant)

ພະຍັນຊະນະທ້າຍຄຳ ຫຼື ຕົວສະກົດທີ່ໃຊ້ໃນພາສາຂະແມ ແລະ ລາວມີຄວາມແຕກຕ່າງກັນບາງຕົວນີ້ເປັນເພາະລະບົບສຽງສະກົດໃນແຕ່ລະພາສາມີອັນບໍ່ຄືກັນ. ກໍລະນີຄຳໃດທີ່ສຽງຕົວສະກົດຄືກັນກໍ່ຈະບໍ່ມີການປ່ຽນແປງຢ່າງໃດ. ຄຳທີ່ຮັບເຂົ້າມາໃນພາສາລາວກໍ່ລະນີທີ່

ສຽງຕົວສະກົດນັ້ນມີໃນພາສາຂະແມ່ແຕ່ບໍ່ມີໃນພາສາລາວຕົວນັ້ນກໍ່ຈະຖືກປ່ຽນແທນດ້ວຍສຽງ ສະກົດຕົວທີ່ມີສຽງໃກ້ຄຽງສະເໝີ. ໃນພາສາຂະແມ່ມີສຽງຕົວສະກົດ / c /, / l /, / h / ເຊິ່ງພາສາ ລາວບໍ່ມີໜ່ວຍສຽງນີ້ ຈະເກີດການປ່ຽນແທນດ້ວຍສຽງສະກົດຂອງພາສາລາວເຊັ່ນ:

ຕົວຢ່າງ :

ສຽງສະກົດ / c / ປ່ຽນແທນດ້ວຍ / t /.

ຂະແມ	ເປັນຄຳລາວ	ໝາຍສຽງ
/ phadec /	ຜະເດັດ	/ phadet /
/ kāc /	ກາດ- ຮ້າຍກາດ	/ kāt / - / hāikāt /
/ srēc /	ເສັດ- ເສັດສິ້ນ	/ set /
/ baŋʔāc /	ບ້ງອາດ	/baŋʔāt /
/ ʔamnāc /	ອຳນາດ	/ ʔamnāt / ແລະ ອື່ນໆ.

ສຽງສະກົດ / l / ປ່ຽນແທນດ້ວຍ / n /

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ phcāl /	ປະຈານ	/ pacān /
/ khāl /	ຂານ- ປີຂານ	/ khān /
/ pramūl /	ປະມູນ	/ pamūn /
/ kandāl /	ກັນດານ	/ kandān /
/ trakāl /	ຕະການ	/ takān / ແລະ ອື່ນ ໆ.

ສຽງຕົວສະກົດ / h / ປ່ຽນແທນດ້ວຍ / t - ʔ/

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ kruəh /	ກວດ	/ kuot /
/ lməh /	ລະເມີດ	/ lamēt /

/ lə̄h /	ເລ̄ດ	/ lə̄t /

ສຽງສະກົດ / ʔ / ປ່ຽນແທນດ້ວຍ / k /

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ samnaʔ /	ສຳນັກ	/ samnak/
/ cɒmpuʔ/	ຈຳພວກ	/ camphuak /
/ chlaʔ/	ສະລັກ	/ salak/ ແລະ ອື່ນໆ.

ຊ. ການປ່ຽນແປງສະຫຼະ.

ຄຳທີ່ຮັບຈາກພາສາຂະແມ ນັບວ່າມີການປ່ຽນແປງຫຼາຍຢ່າງ ໂດຍສະເພາະສຽງ ແລະ ຮູບຄຳ. ໃນນີ້ຮວມມີການປ່ຽນແປງສຽງສະຫຼະພາຍໃນຄຳ ເຊິ່ງມີດັ່ງນີ້:

ປ່ຽນສຽງສະຫຼະ / ɯə / ເປັນ / ə̄ /.

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ snɯəŋ /	ສະໜອງ	/ sanə̄ŋ /
/ camlɯəŋ /	ຈຳລອງ	/ camlə̄ŋ/
/ thnɯəm /	ຖະໜອມ	/ thanə̄m /
/ chlɯəŋ/	ສະຫຼອງ	/ salə̄ŋ / ແລະ ອື່ນໆ.

ປ່ຽນສຽງສະຫຼະ / ɔ / ເປັນ / a / .

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ rɔŋɔ̆p /	ລະງັບ	/ laŋap /
/ rɔbiəŋ/	ລະບຽງ	/ labiaŋ /
/ rɔbiəp /	ລະບອບ	/ labɔ̄p /

ປ່ຽນສຽງສະຫຼະ/ ə̄i / ເປັນ / ā / ຫຼື / āi /

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ nijə̄i/	ນິຍາຍ	/nijnāi/
/ tumnəi /	ທຳນາຍ	/ thamnāi /
/ thlə̄i /	ທະລາຍ	/thalāi/

ປ່ຽນສຽງສະຫຼະ / ə / ເປັນ / a /

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ bancə̄ /	ບັນຊາ	/ bansā/
/ təhiən /	ທະຫານ	/ thahān/
/ rien /	ຮຽນ	/ hian/
/ smiən/	ສະໝຽນ	/ smian/

ຕັດສຽງສະຫຼະປະສົມ / ao / ເປັນ / ō/

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ chaot/	ໂຈດ	/ cōt /
/ chanaot/	ສະໂນດ	/ sanōt /

ປ່ຽນສຽງສະຫຼະ / u / ເປັນ / o /

ຄຳຂະແມ	ເປັນຄຳລາວ	ໝາຍສຽງ
/ krup /	ຄົບ	/ khop/
/ lup /	ລົບ	/ lop /

24 / VII
ห้ามจำหน่าย

/ rɔŋum /　　ละงุ้ม　　/ laŋom /

ແລະ ອື່ນໆ.

ຍ. ການປ່ຽນແປງຄວາມໝາຍຂອງບາງຄຳ

ການຮັບຄຳຈາກພາສາອື່ນເຂົ້າມາໃຊ້ນັ້ນ ທີ່ພົບຫຼາຍກໍ່ຄື ການຮັບທັ້ງຄຳ, ສຽງ ແລະ ຄວາມໝາຍຢ່າງຄົບທຸກແນວມາໃຊ້ ແຕ່ຫຼາຍກໍລະນີເປັນການຢືມພຽງແຕ່ໂຄງສ້າງຄຳ ແລະ ສຽງ ສ່ວນຄວາມໝາຍກໍ່ຮັບເອົາບາງອັນທີ່ຕ້ອງການ; ພ້ອມນີ້ການນຳເອົາຄຳຂອງພາສາອື່ນມາໃຊ້ເມື່ອດົນໄປກໍ່ຈະເກີດການປ່ຽນແປງທາງຄວາມໝາຍຄື: ພາໃຫ້ເກີດຄວາມໝາຍ ກວ້າງອອກ ຫຼື ແຄບເຂົ້າ ປ່ຽນແປງເລີຍ ຫຼື ເລື່ອນ. ການປ່ຽນແປງເຊັ່ນນີ້ມີຂຶ້ນເພາະມັນໄດ້ຮັບຜົນສະທ້ອນຈາກລະບົບພາສາ, ອັນມີລະບົບຄວາມໝາຍ ຫຼື ລະບົບສຽງຂອງພາສາເຮົາ. ຕໍ່ໄປນີ້ຈະເປັນການສະເໜີການປ່ຽນແປງຄວາມໝາຍຂອງບາງຄຳ ທີ່ຮັບຈາກພາສາຂະແມໃນພາສາລາວເຮົາ.

ຄວາມໝາຍຍ້າຍທີ່ .

ຄຳຂະແມ	ຄວາມໝາຍເດີມ	ຄຳລາວ	ຄວາມໝາຍທີ່ໃຊ້ໃນພາສາລາວ
/ tɒpouk /	ກົ້ນ	ກະໂພກ	ຮ່າງທັ້ງໝົດພ້ອມກັບຊິ້ນຂອງສ່ວນກົກຂາສອງເບື້ອງຕໍ່ໃສ່ແອວ.
/ rɔhə̄i /	ເຢັນສະບາຍ	ລະເຫີຍ	ແຫ້ງຫາຍໄປສູ່ອາກາດ.
/ cɒmruəc /	ເຮັດໃຫ້ແຫຼມ	ສຳຫຼວດ	ກວດກາໃຫ້ຮູ້.
/ cɒmniəm /	ຈົດຈຳໄວ້	ຈຳນຳ	ມອບຮັບໃຫ້ໃຜຜູ້ນຶ່ງເພື່ອປະກັນການສຳລະໜີ້.
/ wɑŋwə̄ŋ /	ຫຼົງ , ລືມລາ	ວັ່ງເວ	ເປົ່າປ່ຽວດຽວດາຍ.
/ slə̄t /	ຕົກໃຈ, ໃຈວູບ	ສະຫຼົດ	ເສົ້າໃຈ, ໃຈເຫງົາຫງອຍ
/ bɔmpeːn /	ເຮັດໃຫ້ເຕັມ	ບຳເພນ	ເກັບມ້ຽນໄວ້ດ້ວຍດີ

/ cɔmnaek /	ແບ່ງ, ສ່ວນແບ່ງ	ຈຳແນກ	ແບ່ງອອກເປັນສ່ວນ

ຄວາມໝາຍແຄບເຂົ້າ.

ຄຳຂະແມ	ຄວາມໝາຍເດີມ	ຄຳລາວ	ຄວາມໝາຍທີ່ໃຊ້.
/ bɔmrəj/	ຮັບໃຊ້, ຜູ້ຮັບໃຊ້	ບຳເລີ	ຮັບໃຊ້ທາງເພດສຳພັນ
/ phlēŋ/	ຕົນຕີ, ທຳນອງເສບ	ເພງ	ບົດແຕ່ງທີ່ໃຫ້ທຳນອງກຳກັບໄວ້ເພື່ອຮ້ອງຕາມ.
/ cān /	ຖ້ວຍ	ຈານ	ຖ້ວຍຂະນິດໃບແບກົ້ນຕື້ນ
/ sot /	ໃສ, ແຈ່ມ	ສິດ	ໃໝ່ອ່ຽມ, ບໍ່ມີແນວປົ່ນ
/ snɔ̄ŋ/	ໄຊ້ໜີ້, ຕອບແທນ	ສະໜອງ	ໃຫ້ຕາມທີ່ຕ້ອງການ
/ trɔm /	ຮ່າງກາຍຊຸດໂຊມ	ໂຕມ	ລະທົມໃຈ
/ chlɔŋ /	ຂ້າມ, ບູຊາສິ່ງໃດໜຶ່ງ	ສະຫຼອງ	ຈາລຶກເຫດການທີ່ສຳຄັນອັນເກີດມາແລ້ວໃຫ້ຄຶກຄື້ນ

ຕໍ່ໄປນີ້ເປັນການຮວບຮວມບັນດາຄຳທີ່ຮັບຈາກພາສາຂະແມ ເຊິ່ງມີຄຳພື້ນຖານ ແລະ ຄຳທີ່ຄາດວ່າຂະແມຮັບມາຈາກພາສາອື່ນທີ່ຖືເປັນຄຳຂະແມ ແລ້ວລາວຮັບຈາກພາສາຂະແມ ມາອີກທອດໜຶ່ງ. ຄຳຂະແມແຕ່ລະຄຳຈະສະກົດຕາມຕົວອັກສອນບັນທຶກສຽງທີ່ສາກົນໃຊ້ ແລະ ຈະຂຽນຄຳອ່ານດ້ວຍອັກສອນລາວ. ຄຳຂະແມທີ່ຮວບຮວມໄດ້ໃນນີ້ເຖິງໄດ້ຈຳນວນຫຼາຍສົມຄວນ, ແຕ່ກໍ່ຄົງບໍ່ສາມາດຮວບຮວມເອົາໃຫ້ໄດ້ໝົດທຸກຄຳ. ໃນໂອກາດຕໍ່ໄປຄຳທີ່ຍັງຂາດຫາຍຈາກການຮວບຮວມໃນນີ້ ກໍ່ຍັງຈະເກັບເຂົ້າມາເພີ່ມເພື່ອຄວາມສົມບູນຕໍ່ໄປ.

ກ

ກະບາມ	/ kbāl /	ກະໂຕ່ງຫົວ	/ kbōŋ /
ກະດາດ	/ krɒdāt /	ກະສູນ	/kasūn/

ກະໂພກ.	/ tɒpo:k /	ກະຈາຍ	/ khcaj /
ກະເດື່ອງ	/ kdüəŋ /	ກະດອນ	/kdol/
ກະບະ	/ kɒba /	ກະໄສ	/ krasai /
ກາມ	/ kān /	ເກນ	/ ken /
ກອງ	/ kɔ̄ŋ/	ກົນ	/ koŋ/
ກົນ	/ kol/	ກະຈອນ	/ khcɔɒn /
ກະຈັດ	/ khcat /	ກະໂຈມ	/ khco:m /
ກະດັດ	/ khdat /	ກະໂດນ	/ kdɔ̄n /
ກະເດົາ	/ kdɒw /	ກະແສ	/krɒsae/
ກະສີ	/ ksü /	ກະຈຽວ	/ khciew /
ກັນດານ	/kɒndāl/	ກະດານ	/kdāl/
ກະວົນກະວາຍ	/ kawonkawāi/	ເກສອນ	/ kəjsɔ̄n /
ເກດສະໜາ	/ ketsanā /	ເກງຂາມ	/ kēŋkhɒ̄m /
ໂກຍ ກອບໂກຍ	/ kōi /	ກຳພ້າ	/ kɒmprɔ̄ /
ກຳບັງ	/kɒmbaŋ/	ກຳໄລ	/kɒmrai/
ກຳຈັດ	/kɒmcat/	ກຳແພງ	/kɒmphaeŋ/
ກະເທີຍ	/ khtɔ̄j /	ກັ໋ງວົນ	/ kɒŋwol /
ກວດ	/ truot /	ກາບ, ຂາບ	/ krāp /

ຂ

ຂານ	/ khān /	ຂະບວນ	/kbuən/
ຂະຫຍາຍ	/ khɲāi /	ຂະໜາບ	/ khnɒ̄p /
ຂະຫຍັນ	/ khɲan /	ຂະໜານ	/ khnān /
ຂະໜາດ	/ khnāt /	ຂະແໜງ	/ khnaeŋ/

ขะโหฆๅ /khnōŋ/

ขะหฆอๅ สะหฆอๅ/ khmɔ̄ŋ /

ขะโยม / khɲōm /

ขาม,ปีขาม / khāl /

ขันทะ / khantaʔ /

เขื่อน / khüən/

แข /khǣ/

ค

คะแนน / khnɛ:n /

คะเน /khnę:/

คาด, ภะ /kha:t/

ค้าน, คัดค้าน /khān/

คะนอๅ /khnɔ̄ŋ/

คูน / khūn /

คุน / khun /

โคก / khōk /

โคด / khōt /

คำนับ / khrɔ̄mnɒp /

โคลิบ /kourup/

คิบ, คิบถ้วน / khrop /

เคหา / khēhā /

โคสะนา / khosɒnā/

คัๅ / khaŋ /

กวดแก้ว /khɔɒt/

จ

จังหัน / cɒŋhan /

จๅ / cɔ̄ /

จัด / cɔt /

แจ้ / cǣ /

จักกะวาน / cakhwān /

จ่าย / cāj/

จังไร / cɒŋrai/

จำปา / cɒmpā /

จำปี / cɒmpī /

จำเลีย /cɒmlɔi/

จำหน่าย / cɒmnāj/

สันจอน / cɔ̄n / จอน

เจละจา / cērcā /

สะเมียน / chnęən/

จอบ / cuap /

จวน /cuan/

จอๅหอๅ / cɒŋhɔ̄ŋ /

โจด,โจดทาน / cōt /

โจน / cōl /

โจละกำ / cōlakam /

จำแนก / cɒmnæk /

ຈຳນວນ	/ cɒmnuən /
ຈຳນຳ	/cɒmnam/
ຈຳແລງ	/cɒmlæŋ/
ແຈກ	/ caək/
ເຈີດ	/ cə̄t /
ຈະເລີນ	/craən/
ຈິນດາ	/ cindā /
ຈາລຶກ	/ cɒrək /
ຕະກຽງ	/cɒŋkiəŋ/

ส

สามาด	/ sɒmɒ̄t/
สะໝຽน	/ sɒmiən /
สัน	/ san /
สาบ	/ sāp /
สิง, หิดสิง	/ soŋ /
สุน, ผีสุน	/ sun /
สำสา, ติ้นสำสา	/ sɔmsā /
สะแໜง	/ snæŋ /
สะโนด	/ chnō̄t /
สำเม็า	/ sɒmnaw /
สำเล็ด	/ sɔmrec /
เสัด	/ srüəc/
สะหว่า	/ swā /

สะໝอง	/ smɔ̄ŋ /
สะพาน	/ spaən /
สะໜ่ำละพูม	/ smɔrphūm /
สะอาด	/ sʔā̄t /
สำอาง	/ sɒmʔā̄ŋ /
สำนัก	/ sɒmnak /
เสยดาย	/sdā̄j/
สะดวง	/ sdə̄ŋ /
สะบาน	/ sbān /
สะบัด	/ sbɒt /
สะบั้น	/ sban /
สะหมุด	/ smut /
สะหมาน	/ smān /
สะหลอง	/ chluəŋ /
ฉะเลีย	/ chlə̄̀j /
สะหลิบ	/ slop /
สะเหวี่ย	/ swə̀̄i/
สิก สิกปี	/ sok /
สะแหวง	/ swæŋ /
สะดา	/ strā /
สะหลาก	/ slāk /
สาขา	/ sākhā /
สะหลัก	/ slak /
สำคัน	/ sɒmkhan /

ສາກ ສາກລະອຽ/ sɔ̄k /
ສຳລັບ / sɒmrəp /
ສັງຫານ / sɒŋhān /
ສັງສັນ / sɒŋsan /
ສົງການ / soŋkān /
ສະຫຼຸບ / sɒrɔ̄p /
ສຳຫຼວດ / sɒmruọc /
ສະຫຼົດ / slot /
ສະເໜີ / snaə̄ /
ສະດວກ / sduok /
ເສກ / sēk /
ເສບ, ເສບຕິດ / sēp/
ໂສກາ / sɔkā/
ສຳນຶກ / sɔmnüək /
ສຳເນົາ / sɔmnaw /
ສຳນວນ / sɔmnual /
ສະກັດ / skat /
ສະຫງັດ / sŋat /
ສະຫງວນ / sŋuan /
ສະເດັດ / sdec /
ສະຫາວ / sɒmhāw/
ສຳນຶກ / sɒmnüək /
ສອນ, ໄຕ່ສອນ / suan /
ສົມເດັດ / sɔmdec /

ສະຖານ / sthān/
ສຸກເສີນ / suksüən /
ສາທັດ / sɒ̄hat /
ສຸນທະລີ / sontrī /
ໂສພາ / sophā /
ສ່ວຍ / suojsā /
ສຳນຽງ / sɒmniaŋ /
ສະໜາມ / sɒnām /
ສະໜົມ / sɒnɔ̄m /
ສະບ້ຽ / sbaɔŋ /
ສະບ່ຽງ / sbiæŋ /
ສະເໝີ / smaə̄ /
ສະນ້ຳ, ໜອງນ້ຳ / sraʔ /
ໂສກ / sōkā /
ສະອາດ / sɒʔā/
ສະອ້ຽ / sʔāŋ /
ສະພັ້ງ / sphaŋ /
ສະບັ້ນ / sban /
ສົ້ງເກດ / saŋkēt /
ສ້ຽ / srāŋ /
ສາດນ້ຳ / sāc /
ສາທຸ / sathu /
ສາບານ / sabāl /
ສາມັນ / saman /

ສາລິກາ / sarikā /
ສາລີ / sli /
ສັກກະຫຼາດ / saklāt /
ສັງເກດ / saŋkēt /
ສັງຂານ / saŋkān /
ສັງເຂບ / saŋkhēp/
ສັງຄົມ / saŋkhɔ̄m /
ສົງຄາມ / sɔŋkhrām /
ສັງເວກ / saŋwēk /
ສັງຫານ / saŋhān /
ສັນຖານ / santhān /
ສັນດານ / sɒndɑ:l /
ສະບານ / sbān /
ສຳລັບ / sɔmrɒp /
ສຳອອຍ /sɒmʔɔ̄i/
ສ້ອຍ / srɔ̄j /
ສວຍ /suoj/
ສະດວງ /sadɔŋ/
ສະເກັດ /sket/
ສະກັດ /skɑt/
ສະຫວາດ /swāt/
ສັງເວ໊ຍ /sɒŋwɔ̄i/
ສັງກາດ /sɒŋkāt/
ສັງຫອນ /sɒŋhɔ̄n/

ສະຫຼຽງ /sɒliaŋ/
ສະບັ້ນ /sbɒn/
ສັນລະເສີນ / sɔrsēn /
ສະຫຼ່ຽງ (ຕຽງຫາມ)/ sɑliaŋ /

ຊ
ຊວຍ, ບໍ່ມີໂຊກ / suoj /
ຊົນ / sōn /
ຊົນລະປະທານ / cholpathān /
ຊະລາ / chlā /
ຊ່ຽວຊານ / chieuchān /
ຊຳນານ / chɒmnā̰n /
ຊຳລະ / chɒmlaʔ /
ຊິນ / chin /
ຊຸມນຸມ / chumnum /
ຊະນິດ / chnit /
ຊະນວນ / chnɔɒn /
ຊຳຊາ / sɒmsā /
ເຊິ່ງ, ເຊິ່ງເສື້ອ / cɔ̄ŋ /

ຍ
ເຍົ້າ / ɲaw /
ຍາມ, ເຝົ້າຍາມ /ɲām/

ɗ

ɗຳເນີນ	/ ɗɒmniəl/
ɗຳບັນ	/ɗɒmbɒn/
ɗ່ານ	/ɗān/
ɗວງ, ສະຕາ	/ɗuəŋ/
ເດີມ	/ɗɑəm/
ɗຳລົງ	/ɗɒmrɒŋ/
ɗຽວ	/ɗiəw/
ແດນ	/dæn/
ໂດຍ	/ɗɑoj/

ต

ຕິ	/ ti?/
ຕາລາງ	/tārāŋ/
ຕາບ, ຕາບໃດ	/ trāp /
ເຕືອນ	/ tiə̯n /
ຕຳນານ	/ tɔ̆mnāl /
ຕຳນິ	/ tɔ̆mni? /
ຕຳນັກ	/ tɔ̆mnak/
ຕັນຫາ	/tanhā/
ໄຕ່, ໄຕ່ສວນ	/ trəj /
ຕຳລຶງ	/ tɔ̆mlüŋ /
ຕາ, ພໍ່ຕາ	/ tā /
ຕາງ	/ tāŋ /
ຕາມແຕ່	/ tɒmtɛ̄ /
ຕະການ	/ trɒkāl/
ໂຕມ, ອີກໂຕມ	/trɔ̄m/
ຕະກູນ	/trakūl/
ຕະຫຼອດ	/tlɔ̄t/
ตะลุมบอน	/trumbɔ̄n/
ตะห฼ก	/thlok/
ตุลา	/ tulā /
แต่ง	/ tǣŋ /
ตอง, ก้ันตอง	/ trɔ̄ŋ /
ไตมาด	/ trəjmāt/
ตะเวน	/ trə̯wēl /
ฦม, ตฺม	/triəm/

ถ

ถิด , สะถิด	/ sthit /
เถาะ, ปีเถาะ	/ thɔ? /
ถะแหลง	/ thlæŋ /
ถวาย	/ thwāj/
ทักสิน	/ taksin /
ถะหลา (ปืน)	/ thɒlā/
ทะยาน	/thɲān/

ທາລຸນ / tɒrun /
ທ່ານ /thān/
ທະແນມແຕ /thnɒm/
ທຳນຽບ / tɔmniəp/
ທຽນ / tiən /
ເທບ / tēp /
ເທດສະໜາ / tesanā /
ທຳນອງ / tɔmnɔ̄ŋ /
ທຳນາຍ / tɔmnẹ̄əj /
ທຳນຽມ /tɔmniəm/
ທຳນຽບ / tɔmniəp /
ທະເລ / təlē/

ນ
ນາຍ / nẹ̄əj /
ນິເທດ / nittesa /
ນິງຄານ / noŋkhān/
ນິຍົມ / nijum /
ນິຍາຍ / nijẹ̄əj/
ເນົ່າ / nɒw /

ໝ
ໝ້າຍ, ແມ່ໝ້າຍ/ māi/

ຝ
ເຝິກຫັດ / bɔŋhat /

ຜ
ຜາສຸກ / phāsuk /
ຜູກ / phūk /
ຜະເດັດ / phadec /
ຜະແນກ / phnæk /

ບ
ບັນດານ / bɔ̆ndāl /
ບັນຈຸ /bañcou/
ບັນຈົບ /bañchɔp/
ບັ້ງເກີດ / bɒŋkaət /
ບັ້ງອອນ /bɒŋʔōn/
ບາດານ / bādāl/
ບາດ (ວັກຂອງກາບກອນ)/ bāt /
ບາບ / bāp /
ບາສີ / bɛisrē̄j/
ບູລີ / būr̄ī /
ບ່າວ (ຄົນໃຊ້) / bāw /
ບິວລະບັດ / bɛibac /
ບີສາດ / bisāc /
ປ່ຽນປ່ຽນ / biətbiən/

ບູຮານ	/ burɔ̄n /	ປະກັນ	/prɒkan/
ບຸດສະບາ	/ bosabā /	ປະດັບ	/prɒdap/
ໂບ	/ bō /	ປະຕິເສດ	/padesaet/
ເບີກ	/ bēk /	ປະມວນ	/prɒmōl/
ແບບ	/ bæp /	ປະເມີນ	/ prɔ̄mɒəl/
ບຳເນັດ	/ bɒmnac /	ປະກາຍ	/phkāj/
ບຳບັດ	/bɒmbət/	ປະສູດ	/ prɒsūt /
ບ້ຽອາດ	/ bɒŋʔāt /	ປະເຊີນ	/prɒsɔn/
ບ້ຽສາດ	/ bɒŋsāc /	ປະກອບ	/ prɒkɔp/
ບັນດົນ	/bɒndōl/	ປະຄອງ	/prɒkɔ̄ŋ/
ບັນດາ	/bɒndā/	ປະທະ	/prɒthaʔ/
ບ້ຽເອີນ	/ bɒŋʔɒn/	ປະທານ	/ prɒthān /
ບັນເລ້ງ	/bɒnlæŋ/	ປະນອມ	/prɒnɒm/
ບ້ຽ(ປາກສາຍນ້ຳ)	/bāŋ/	ປະຍັບ	/prɒɲap/
ແບ່ງ	/bæŋ/	ປະກວດ	/prɒkuət/
ບຳລຸ້ງ	/bɒmruŋ/	ປະຈັນບານ	/ pracalbān/
ບ້ຽກາມ	/boŋkān/	ແປກ	/ prɛ̄k /
		ປອມ	/ plɔm /

ป

ปะจิบ	/prɒcop/	พ	
ปะแจ้ง	/prɒcæŋ/	พะยา	/ phɲiā /
ปะจำ	/prɒcam/	พะลัง	/ phlaŋ /
ปะจวบ	/prɒcuəp/	พาหะนะ	/ phānaʔ/
ปะจักร	/prɒcak/	พิจิด	/ phicɛt /

24 / VII
ชำนาญจำหน่าย

ພິດານ	/ pidāl /
ເພິ່ງ	/ phtəŋ /
ໄພລິ	/ phaiĺi /
ພະຍາງ	/ phaɳāŋ /
ພະຍາບານ	/ phaɲābāl /
ພະຍາຍາມ	/ phaɲāɲām/
ພະນອມ	/phnɔ̄m/
ໄພ, ພິງໄພ	/ phraj/
ພິມ(ແດນ)	/ phrūm /

ມ

ມະຫາດເລັກ	/ məhallik /
ມະເຫສີ	/ məhēsɛi /
ມະໂຫລິ	/məhaorī/
ມະໂຫລະທຶກ	/məhaorəthɯk/
ເມືນ	/muən/
ແມ່ມົດ	/mę̄mɔt/

ລ

ລະງັບ	/ rɔŋap /
ລໍຄອຍ	/rɔ̄/
ຮອງ	/rɔ̄ŋ/
ລະບຽງ	/rəbiəŋ/
ລະບຽບ	/rəbiəp/

ລະບາຍ	/rɔbaj/
ລະບຳ	/rɔbam/
ລະເມີ	/rɔmɔɒh/
ລະເມີດ	/rɔmę̄ət/
ລະຫວ່າງ	/rɔvę̄əŋ/aa
ລະແວງ	/rɔvɛ̄ŋ/
ລະເຫີຍ	/rɔhaəj/
ລະອຽດລະອໍ	/rɔʔiɛh rɔʔoh/
ລະບົມ	/rɔbom/
ລະບຳ	/rɔbam/
ລະບອບ	/rɒbɔ̄p/
ຮຽມ	/rę̄əm/
ລາຍງານ	/raiŋān/
ຮຽນ	/riən/
ລຳດັບ	/rɔmdap/
ຮຽບ	/riəp/
ຮຽງ	/riəŋ/
ເລໄລ(ຮ້ອງຮ່ຳ)	/rie rāj /
ລຽບ ລຽບລ້ອຍ	/ riap /
ເລື່ອງ	/ rüəŋ /
ລຳຄານ	/ rɔmkhān/
ລ້ຳລຶກ	/rɔmlę̄k/
ລຳດວນ(ດຳດວນ)	/ rɔmduəl/
ລຶດສະດວງ	/ rüsadɔ̄ŋ/

ຮູບ	/rūp/
ຮຸ່ງເຮືອງ	/ruŋrɛəŋ/
ເຮຮາ	/hēhā/
ລວມ	/ruəm/
ເລື່ອງ	/rɯəŋ/
ລຳລຽງ	/rɔmliəŋ/
ລ້ຳເລີດ	/rɔmlęt/
ລ່ຳໄລ	/ramraj/
ລະງຶມ	/rɔŋum/
ລະກຳ	/rɔkam/
ລຳໄຍ	/rɒmyaj/
ລວຍ	/ruoj/

ລ

ລະອໍ່ອ	/ lɔ:mʔɔ:ŋ/
ລະອຽດ	/lʔuət/
ລາມົກ	/ ləhmuk/
ລວງໜ້ອກ	/ luaŋ /
ໂລເລ	/ lōlia /
ລະໄມ, ລະມຸນລະໄມ	/ lamɒj /

ฝ

ເຝິກ	/fək/

ห

ຫ	
ຫານຸມານ	/hanumān/
ຫານ(ແບ່ງ)	/hān/
ຫຼຽນ	/ riəl /
ຫຸ່ງ, ໝາກຫຸ່ງ	/ lahuŋ /
ຫັດ	/ hat /
ຫາບ	/hāp/
ຫາລຶ	/hārūn/
ແຫນ	/ hǣn /
ຫວຍ	/ huoj /
ເຫີ້ນ	/ hę̣ən /
ເຫາະ	/ hɔʔ /
ແຫວກ, ລົມແຫວກ	/ wǣk/
ແຫ່	/hǣ/

ล ฬ

ฬุ่	/ lɔ̄́/
ເລີດ	/ lə̄t /
ລິເກ	/ likē /

อ

ອ້ອນວອນ	/ ʔɔŋwɔ̄n /
ອຸປະສັກ	/ʔupasak/

ອົ໋ງສາ	/ ʔaŋsā/	ອິດສາ	/ ʔichā /
ອັນດັບ	/ ʔɒndap /	ອຸທອນ	/ ʔutɔ̄n /
ອັດຕະຄັດ	/ ʔɒtakhat /	ອຸທານ	/ ʔutian /
ອຳພອນ	/ ʔɔmpɔ̄n /	ອຸດອນ	/ ʔudɔ̄n /
ອາດ	/ ʔāc /	ອຸບາຍ	/ ʔubāi/
ອາຈົ໋ມ	/ ʔācom /	ອູລາ	/ ʔurā /
ອາດຍາ	/ ʔāsaɲā /	ອວດ	/ ʔuat /
ອາຍັດ	/ ʔaɲat /	ອົ໋ງການ	/ ʔɔŋkān /
ອາວຸດ	/ ʔāwut /	ອຳນາດ	/ ʔɔmnāc /
ອັນຕະລາຍ	/ʔɒntarāi/	ອົ໋ງອາດ	/ʔɔŋʔāt/

ອ

ອາສາ / ʔāsā /

ອາໄສ / ʔāsrəj /

ອາຫານ / ʔāhān /

ຮ

ໂຮຍ, ຮ່ອງໂຮຍ /rōj/

4. ການຮັບຄຳຈາກ ປາລີ - ສັນສະກິດ

1). ກ່ຽວກັບ ປາລີ ແລະ ສັນສະກິດ

ການຮັບເອົາຄຳປາລີ ສັນສະກິດ ເຂົ້າມາໃນພາສາລາວນັ້ນເປັນທີ່ຮູ້ຈັກກັນວ່າ ມີຈຳນວນຫຼວງຫຼາຍເມື່ອທຽບກັບຄຳທີ່ຮັບຈາກພາສາອື່ນໆ. ຄຳປາລີ- ສັນສະກິດ ໄດ້ພົບຫຼາຍໃນກຸ່ມທີ່ກ່ຽວກັບ ສາສະໜາ, ປະເພນີ, ວັນນະຄະດີ ແລະ ການປົກຄອງ. ຫາກເບິ່ງເລິກເຂົ້າກໍ່ຈະເຫັນວ່າ ຄຳປາລີ-ສັນສະກິດ ນອກຈາກມີຄຳຈຳນວນຫຼາຍແລ້ວ ຍັງມີບົດບາດຕໍ່ຄວາມເຊື່ອຄວາມ

ນຶກຄິດ, ຄວາມມຸ່ງມາດປາຖະໜາ ແລະ ໂຊກລາບ. ສະນັ້ນ ຄຳຂອງປາລີ- ສັນສະກິດຈຶ່ງ ເປັນທີ່ນິຍົມໃຊ້ຢ່າງກວ້າງຂວາງໂດຍສະເພາະໃນການຕັ້ງຊື່, ນາມສະກຸນ, ການອວຍພອນ ແລະ ອີກບາງຢ່າງ. ດ້ວຍສາເຫດນີ້ ຄຳປາລີ ແລະ ສັນສະກິດຈຶ່ງໄດ້ຮັບການຂະຫຍາຍໄປດ້ວຍ ທອດຕໍ່ທອດຂອງພວກທີ່ຢືມ. ການຮັບຄຳປາລີ ແລະ ສັນສະກິດເຂົ້າມານັ້ນ ກໍ່ມີທັງຄຳທີ່ຮັບມາ ໂດຍທາງກົງ ແຕ່ສ່ວນຫຼາຍເປັນການຮັບໂດຍຜ່ານພາສາອື່ນໃດໜຶ່ງຈຶ່ງມາສູ່ພາສາລາວ.

ເມື່ອກ່າວເຖິງການຮັບຄຳປາລີ- ສັນສະກິດ ເຮົາກໍ່ມັກຈະເວົ້ານຳກັນສະເໝີ, ເໝືອນເປັນ ຄຳຄູ່ກັນ, ສາເຫດທີ່ພາໃຫ້ເອີ້ນແນວນີ້ກໍ່ມີຄື: (1) ປາລີ ແລະ ສັນສະກິດ ຕ່າງກໍ່ມາຈາກອິນ ເດຍ, (2) ປາລີ ແລະ ສັນສະກິດຕ່າງກໍ່ມີຄຳທີ່ມີຮູບຄືກັນ ແລະ ຄ້າຍກັນຫຼາຍ, (3) ຮູບ ຂຽນຄຳກໍ່ມີຄວາມຄ້າຍຄືກັນ (4) ປາລີ ແລະ ສັນສະກິດຕ່າງກໍ່ເປັນພາສາມີວິພັດປັດໄຈ, ມີ ການປ່ຽນຮູບຄຳໃນເມື່ອນຳຄຳມາປະສົມ, ມາສະໜາດ ຫຼື ສົນທິເພື່ອສ້າງຄຳໃໝ່, (5) ທັ້ງສອງ ລ້ວນແຕ່ເປັນພາສາທີ່ໃຊ້ໃນທາງສາສະໜາພຸດເປັນສຳຄັນມາແຕ່ຕົ້ນ. ແຕ່ໃນຕົວຈິງປາລີ ກັບ ສັນສະກິດຕ່າງກໍ່ມີຄວາມເປັນມາທີ່ບໍ່ແມ່ນອັນດຽວກັນເຊິ່ງສາມາດສຶກສາ ແລະ ວິເຄາະໃຫ້ ເຫັນໄດ້. ໃນທີ່ນີ້ ເພື່ອເປັນການໃຫ້ຄວາມຮູ້ເບື້ອງຕົ້ນສຳລັບຊ່ວຍໃຫ້ເຂົ້າໃຈໃນເລື່ອງການຮັບ ຄຳປາລີ-ສັນສະກິດເຂົ້າມາໃນພາສາລາວຈະໄດ້ສະເໜີບາງເລື່ອງທີ່ເຫັນວ່າມີຄວາມກ່ຽວຂ້ອງ ທີ່ສຳຄັນເພື່ອຈຸດປະສົງນີ້ ດັ່ງນີ້:

ຕາມເອກກະສານທາງປະຫວັດສາດໃຫ້ຮູ້ວ່າ ພະພຸດທະສາສະໜາລັດທິເຖລະວາດເຊິ່ງ ໃຊ້ພາສາປາລີໄດ້ແຜ່ເຂົ້າມາສູ່ລາວໃນສະໄໝຂອງພະເຈົ້າອະໂສກມະຫາລາດ ໃນສໄໝຕໍ່ມາ ພຸດທະສາສະໜານິກາຍມະຫາຍານເຊິ່ງໃຊ້ພາສາສັນສະກິດ ເປັນຄຳທີ່ໄດ້ຈາກອິນເດຍແຜ່ມາ ສູ່ປະເທດຕ່າງໆ. ໃນພາກພື້ນນີ້ເຊັ່ນ: ກຳປູເຈຍໃນລະຫວ່າງ ປີ ພ.ສ. 1303[1], ເມື່ອລາວໄດ້ມີ ຄວາມສຳພັນກັບຂະແມ ແລະ ໄດ້ຮັບອິດທິພົນທາງສາສະໜານີ້ຈາກຂະແມ ພາໃຫ້ເກີດການ ຮັບເອົາຄຳສັນສະກິດທີ່ໄປຕາມກັບຄຳພີຊາດົກ ທີ່ເປັນເຄື່ອງເຜີຍແຜ່ສາສະໜາເຂົ້າມາໃນພາ ສາລາວ, ເຮັດໃຫ້ພາສາລາວມີຄຳສັນສະກິດເພີ່ມເຂົ້າມາຕື່ມໃສ່ ຄຳປາລີເຊິ່ງຮັບມາກ່ອນອັນມີ

---

[1] ວິຈິດຕຣາ ແສງພົນສິດ. ຄວາມຮູ້ເລື່ອງພາສາຕ່າງປະເທດໃນພາສາໄທ. ພ.ສ 2519 ໜ້າ 101.

ຈຳນວນຫຼາຍແລ້ວນັ້ນ ຕໍ່ມາການນັບຖືສາສະໜາພຸດນິກາຍມະຫາຍານໄດ້ເສື່ອມລົງ ແຕ່ຄຳສັນສະກິດທີ່ຮັບເຂົ້າມາກໍ່ຍັງໃຊ້ຄຽງຄູ່ກັບຄຳປາລີຢູ່, ສະນັ້ນ ໃນພາສາລາວປະຈຸບັນຈະພົບຄຳປາລີມີຈຳນວນຫຼາຍກ່ວາຄຳສັນສະກິດ[2].

2). ຄວາມເປັນມາຂອງ ປາລີ ແລະ ສັນສະກິດ

ປາລີ ແລະ ສັນສະກິດນອນໃນກຸ່ມພາສາທີ່ມີວິຜັດປັດໄຈ (inflectional langguage) ຢູ່ໃນຕະກູນອິນດູ ຢູຣົບ (Indo Europe), ໃນຕະກູນນີ້ ຍັງປະກອບມີພາສາເກຣັກ, ລະແຕ້ງ ແລະ ສັນສະກິດ. ກ່ຽວກັບພາສາສັນສະກິດໄດ້ມີປະຫວັດການສຶກສາຄວາມເປັນມາບາງຢ່າງໄວ້ດັ່ງນີ້:

ອິນເດຍເປັນຊາດທີ່ມີຄວາມສົນໃຈສຶກສາພາສາເພື່ອສ້າງຕົວອັກສອນມາດົນກ່ວາ 3000 ປີແລ້ວ. ພາສາເກົ່າແກ່ທີ່ໄດ້ຮັບການສຶກສາກ່ອນໄດ້ແກ່ພາສາອາລະຍັນ, ພາສານີ້ໄດ້ຮັບການ ຄົ້ນຄວ້າ ແລະ ໃຊ້ເປັນຄຳພີພະເວດ ທີ່ຖືເປັນຄຳສອນຂອງສາສະໜາພາມ, ສະນັ້ນ ພາສາອາລະຍັນຈຶ່ງໄດ້ເອີ້ນເປັນພາສາພະເວດອີກຊື່ໜຶ່ງ (Vedic language)[3] ນັກຄົ້ນຄວ້າພາສາຄົນສຳຄັນຂອງອິນເດຍທີ່ປະກົດຊື່ມາເຖິງປະຈຸບັນຄື ປານີນີ (Panini)[4] ທີ່ໄດ້ຂຽນໄວຍາກອນສັນສະກິດຂຶ້ນ ແລະ ແບ່ງເປັນ 8 ໝວດຊື່ວ່າ ອັດສະກາທະຍານີ [5]. ຄວາມໝາຍຂອງຄຳນີ້ຄື ໄວຍະກອນແປດບົດ ເຊິ່ງເປັນໄວຍະກອນເຫຼັ້ມທຳອິດທີ່ຖືວ່າສົມບູນແບບສຳລັບໃຫ້ຄົນໃຊ້ເພື່ອຮຽນຮູ້ ແລະ ປະຕິບັດຕາມ. ໄວຍາກອນທີ່ ປານີນີ ຂຽນຂຶ້ນນີ້ ມີຜູ້ເອີ້ນໃຫ້ວ່າ " ສັນສະກິດ"

---

[2] ສຳລິດ ບົວສີສະຫວັດ. ບາງທັດສະນະກ່ຽວກັບພາສາລາວປະຈຸບັນ. ກອງປະຊຸມໂຕະມົນວິທະຍາສາດກ່ຽວກັບພາສາລາວ, ທີ່ວຽງຈັນ. 1990 ໜ້າ 119.

[3] ອານັນ ຊິງວິທະຍາ. ພາສາສາດເບື້ອງຕົ້ນສຳລັບຄູ. ພ.ສ 2523 ໜ້າ 25.

[4] ດຣ ວິໄລວັນ ຂະນິດສະຖານັນ. ພາສາ ແລະ ພາສາສາດ. ພ.ສ 2533 ໜ້າ 155.

[5] ອານັນ ຊິງວິທະຍາ. ພາສາສາດເບື້ອງຕົ້ນສຳລັບຄູ. ພ.ສ 2523 ໜ້າ 25.

ເຊິ່ງແປຄວາມວ່າ: ສິ່ງທີ່ໄດ້ຊຳລະສະສາງຈັດໃຫ້ເປັນລະບຽບຮຽບຮ້ອຍດີແລ້ວ[6]. ສິ່ງທີ່ຊຳລະ ແລະ ຈັດລະບຽບນັ້ນ ກໍ່ໝາຍເຖິງ ພາສາອາລະຍັນນັ້ນເອງ. ສະນັ້ນ ຄວາມໝາຍຂອງຄຳວ່າ ສັນສະກິດບໍ່ໄດ້ໝາຍເຖິງພາສາທີ່ມີຊື່ວ່າ ສັນສະກິດ ເປັນພຽງຄວາມທີ່ເອີ້ນໃຫ້ພາສາອາລະຍັນ ທີ່ໄດ້ຄົ້ນຄວ້າ ແລະ ຂຽນຈັດແຈງແບບແຜນຂອງມັນອອກມາເປັນປຶ້ມ.

ການເຂົ້າມາຂອງຄຳສັນສະກິດໃນພາສາລາວນັ້ນ ເຫດຜົນສຳຄັນແມ່ນເພາະສາສະໜາ ແລະ ວັດທະນະທຳ [7], ເປັນພາສາທີ່ໃຊ້ຈາລຶກຄາພີພະເວດ ອັນເປັນຄຳພີທີ່ສັກສິດຂອງພວກ ພາມ, ເປັນພາສາຫຼັກໃນພຸດທະສາສະໜານິກາຍມະຫາຍານ ດັ່ງໂມເນຍ ວິລລຽມ (Monier Willian) ໄດ້ກ່າວເຖິງສັນສະກິດວ່າ: ເປັນພາສາປະຈຳສາສະໜາຮິນດູ, ວັນນະຄະດີຮິນດູໄດ້ ຂຽນພາສາສັນສະກິດທັງນັ້ນ ແລະ ສັນສະກິດຍັງມີອິດທິພົນຕໍ່ພາສາຖິ່ນທັງຫຼາຍໃນອິນເດຍ[8].

ກ່ຽວກັບພາສາປາລີ:

ປາລີກໍ່ມີຄວາມເປັນມາເຊັ່ນດຽວກັນກັບສັນສະກິດ ແຕ່ປາລີໄດ້ມາຈາກພາສາ ມະຄະທີ ຫຼື ເອີ້ນວ່າ ມະຄິດ ເຊິ່ງເປັນພາສາພື້ນເມືອງ ທີ່ໃຊ້ໃນແຄວ້ນມະຄິດ[9] ໃນຕອນກາງຫາໃຕ້ຂອງ ອິນເດຍ ພະພຸດທະເຈົ້າ ໄດ້ຊົງໃຊ້ພາສານີ້ ສຳລັບເຜີຍແຜ່ ພຸດທະສາສະໜາເປັນສຳຄັນ. ສະ ນັ້ນ ພາສາມາຄະທີ ກໍ່ໄດ້ຮັບການເລືອກເຟັ້ນ ແລະ ປັບປຸງເພື່ອໃຫ້ໄດ້ຄຳທີ່ມີຄວາມພິເສດຈາກ ພາສາທີ່ໃຊ້ປາກເວົ້າທົ່ວໄປ, ພາສາທີ່ໄດ້ຮັບການເລືອກເຟັ້ນແລະປັບປຸງນີ້ໄດ້ກາຍເປັນພາສາທີ່ ມີແບບແຜນ, ມີ ຫຼັກການສຳລັບສ້າງຄຳ ແລະ ໃຊ້, ພາສານີ້ໄດ້ຮຽກວ່າປາລີ ເຊິ່ງກໍ່ເປັນພາສາທີ່ ຜ່ານການກັ່ນຕອງ. ໃຊ້ໃນຖານະທີ່ເປັນພາສາສັນສະກິດເປັນພຸດພະບິດໃນພຸດທະສາດສະໜາ.

---

[6] ເຮືອງອຸໄທ ກຸດສະລາໄສ. ພາຣະຕະວິທະຍາ. ໜ້າ 131.

[7] ປະຫວັດສາດລາວ. ຄ.ສ 2000 ໜ້າ 120-122.

[8] Monier William, Practical Grammar of the sanskrit. ບົດນຳ

[9] Robert C. Childer. Pali- English Dictionary. ຄຳນຳ

ສະນັ້ນ ຄຳວ່າປາລີຈຶ່ງບໍ່ໝາຍເຖິງຊື່ພາສາ ແຕ່ແມ່ນຊື່ທີ່ຄົນທົ່ວໄປເອີ້ນໃຫ້ຕຳລາ ພະຄຳພີອັນເດີມໆຂອງພຸດທະສາສະໜາຄື ພະໄຕປິດົກ ແຕ່ໃນປະຈຸບັດຄົນທົ່ວໄປມັກເຂົ້າໃຈວ່າ ປາລີເປັນພາສາຮຸ່ງກວ່າ ພາສາປາລີ ເຖິງຂັ້ນວັດຈະນານຸກົມບາງ ສະບັບກໍ່ໃຫ້ຄຳວ່າ ແມ່ນພາສາ.

ກ່ຽວກັບພາສາມາຄົດກໍ່ມີ ສອງປະເພດຄື: ສຸທົດມະຄົດ ແລະ ເທສິຍາ ຫຼື ປາກົດ. ພາສາທີ່ໄດ້ຖານະເປັນພາສາທາງການ ຫຼື ພາສາປະຈຳວັນນະໄດ້ແກ່ ສຸທົດມະຄົດ. ພະພຸດທະເຈົ້າໄດ້ໃຊ້ພາສານີ້ ເພື່ອເຜີຍແຜ່ປະກາດສາສະໜາຂອງຕົນ, ສ່ວນເທສິຍາໃຫ້ເປັນພາສາທີ່ໃຊ້ຕາມບ້ານເມືອງປະຈຳຖິ່ນກ່ຽວກັບຄວາມໝາຍຂອງຄຳວ່າ ປາລີ ທີ່ອ້າມາເປັນຊື່ເອີ້ນ ໃຫ້ພະໄຕປິດົກນັ້ນກໍ່ມີຜູ້ໃຫ້ຄຳອະທິບາຍໃນຄວາມໝາຍນີ້ໄວ້ເຊັ່ນການຫຼາຍຢ່າງຄື :

1. ຄຳວ່າ ປາລີ ແປວ່າ ພາສາທີ່ມີປົກກະຕິ ຮັກສາພຸດທະພົດໄວ້ດັ່ງເດີຍ ບໍ່ມີຄວາມໝາຍປົ້ນແປໄປທາງອື່ນ, ບໍ່ມີຄວາມຂາດຕົກບົກພ່ອງ.
2. ໝາຍເຖິງຄຳທີ່ດີ ແລະ ມ່ວນພ້ອມດ້ວຍອະນຸພາບຂອງພະພຸດທະເຈົ້າ. ນອກນີ້ ໃນບາງຕຳລາກໍ່ມີຄຳອະທິບາຍທີ່ແຕກຕ່າງໄປເລັກໆນ້ອຍໆດັ່ງນີ້ ພົດຈະນານຸກົມລາຊະບັນດິດສະຖານຂອງໄທໃຫ້ຄວາມໝາຍໄວ້ວ່າ: ບາລີ (ປາລີ). (1) ໝາຍເຖິງພາສາທີ່ໃຊ້ເປັນຫຼັກໃນພຸດທະສາສະໜາແຕ່ເດີມມາ. (2) ພຸດທະພົດ.

ໃນປະທານຸກົມປາລີ-ອັງກິດ ຂອງສະມາຄົມປາລີປະກອບຂອງອັງກິດໄດ້ອະທິບາຍໄວ້ເປັນ 2 ຂໍ້ຄື: 1. ໝາຍເຖິງແຖວ, ລະບຽບ. 2. ໝາຍເຖິງປະລິຍັດຕິທຳຄື: ຕຳລາຂອງພຸດທະສາສະໜາ. ນອກນີ້ກໍ່ຍັງມີຄຳອະທິບາຍອື່ນອີກ ແຕ່ກໍ່ເຫັນວ່າມີຄຳອະທິບາຍໄປໃນສິ່ງດຽວກັນ.

ເນື່ອງຈາກວ່າ ປາລີ ແລະ ສັນສະກິດ ຕ່າງກໍ່ໝາຍເຖິງພາສາທີ່ກັ່ນກອງຂຶ້ນມາໃຊ້ໃນທາງສາສະໜາເຊິ່ງເນັ້ນຄວາມມີກົດ ແລະ ແບບແຜນຕາຍຕົວໄວ້ສຳລັບໃຫ້ປະຕິບັດຕາມໂດຍບໍ່ມີຈຸດປະສົງໃຫ້ຮຽນຮູ້ແລ້ວນຳໄປສຶກສາຄົ້ນຄວ້າ ແລະ ປະດິດສ້າງໃໝ່ ຫຼື ແກ້ໄຂໄປຕາມຍຸກສະໄໝເພື່ອໃຫ້ສອດຄ່ອງຕາມກາລະສະໄໝ. ດັ່ງນັ້ນ ຕໍ່ມາປະເທດອິນເດຍເອງພາສາທັ້ງສອງນີ້ຈຶ່ງຂະຫຍາຍບໍ່ໄດ້ ປະກອບກັບສາສະໜາອິນດູ ແລະ ອິສະລາມໄດ້ມີອິດທິພົນຫຼາຍຂຶ້ນແລ້ວແຜ່ຜາຍກັນໄປ. ຊາວອິນເດຍເລີຍໃຫ້ຄວາມສົນໃນສຶກສາຮ່ຳຮຽນພາສາຮິນດີ ແລະ ພາສາອຸນດູຫຼາຍຂຶ້ນ. ຕໍ່ມາພາສາປາລີ ແລະ ສັນສະກິດກໍ່ກາຍເປັນພາສາຕາຍ (dead Language)

[10] ຂາດກຸ່ມຄົນທີ່ເປັນເຈົ້າຂອງ, ສິ່ງທີ່ຄົງຢູ່ກໍ່ພຽງເລື່ອງຄຳສັບ ແລະ ສັບເຫຼົ່ານັ້ນ ເມື່ອແຜ່ຜາຍເຂົ້າສູ່ພາສາຂອງຊາດອື່ນຕ່າງກໍ່ເກີດການປັບປ່ຽນທາງຮູບຄຳພ້ອມກັບບາງຄວາມໝາຍໄປຕາມລະບົບຂອງພາສາຕ່າງໆຕາມກົດເກນຂອງການຢືມຄຳ. ສະນັ້ນ ແຕ່ລະຄຳທີ່ມີໃນພາສາຕ່າງໆ ກໍ່ຈະມີຄວາມເໝືອນ ຫຼື ເກີດຄວາມແຕກຕ່າງກັນໄດ້.

3). ສະເໜີໂດຍສັງເຂບສາເຫດທີ່ພາໃຫ້ຮັບຄຳປາລີ ແລະ ສັນສະກິດມາໃນພາສາລາວ

ການທີ່ຄຳປາລີ ແລະ ສັນສະກິດໄດ້ຮັບເຂົ້າມາໃຊ້ໃນລະບົບພາສາລາວນັ້ນ ຄົນທົ່ວໄປກໍ່ຄົງຊາບວ່າ ເພາະຮັບເອົາສາສະໜາພຸດເຂົ້າມາ, ພາສາປາລີ ແລະ ສັນສະກິດຕ່າງກໍ່ເປັນພາສາຫຼັກຂອງສາສະໜານີ້ເຖິງຈະໃຊ້ເປັນພາສາສຳຄັນ ໃນນິກາຍທີ່ຕ່າງກັນກໍ່ຕາມແຕ່ໂດຍທົ່ວໄປຄຳໃນພາສາທັງສອງ ສາມາດໃຊ້ຄຽງຄູ່ກັນໃນທາງ ປະຕິບັດກິດຈະການທາງສາສະໜາເຊັ່ນ ການສະແດງພະທຳມະເທສະໜາ, ການສູດພົບວ່າໃຊ້ຄຳປາລີເປັນສຳຄັນ. ນອກນີ້ໃນບົດທາງວັນນະຄະດີປະເພດຊາດົກ ຕຳນານ ກໍ່ຈະພົບມີຄຳປາລີເປັນຈຳນວນຫຼາຍ ການຮັບຄຳປາລີ ແລະ ສັນສະກິດເຂົ້າມານັ້ນຄົງມາຈາກສະພາບແວດລ້ອມ ແລະ ອິດທິພົນທີ່ສຳຄັນບາງຢ່າງດັ່ງນີ້:

ເພາະອິດທິພົນທາງສາສະໜາ.

ເຄື່ອງທີ່ສຳຄັນສຳລັບໃຊ້ເຜີຍແຜ່ ແລະ ປະຕິບັດກິດຈະກຳທາງສາສະໜານັ້ນກໍ່ຄືພາສາ ແຕ່ສິ່ງພິເສດຖ້ອຍຄຳທີ່ໃຊ້ໃນສາສະໜາ ໂດຍທົ່ວໄປຕ້ອງມີຄຳເຊິ່ງຕ້ອງຄັດ ແລະ ເຟັ້ນເອົາໃຫ້ໄດ້ອັນທີ່ຕ່າງໄປຈາກຖ້ອຍຄຳທີ່ໃຊ້ປາກເວົ້າໃນປະຈຳວັນ ໃຫ້ມີຄວາມ ເລິກເຊິ່ງໃນສິ່ງທີ່ກ່າວເວົ້າ ມີຄ່າທາງປະຊະຍາມີຄວາມດຶງດູດໃຈ ແລະ ມີເລື່ອງຈິດຕະສາດຕິດພັນໄປນຳ.

ກ່ຽວກັບສາສະໜາ ໃນດ້ານໜຶ່ງຍັງໝາຍເຖິງລະດັບຂອງການຂະຫຍາຍຕົວດ້ານຄວາມ

---

[10] ອານັນ ຊີງວິທະຍາ. ພາສາສາດເບື້ອງຕົ້ນສຳລັບຄູ. ພ.ສ 2523 ໜ້າ 26.

ຄິດຄວາມເຊື່ອ, ຄວາມຮັບຮູ້ ແລະ ຄວາມສາມາດທີ່ສ້າງທິດສະດີກ່ຽວກັບສິ່ງຕ່າງໆ ນັ້ນອອກ ມາ ແຕ່ລະຊາດໃນໂລກບໍ່ໝາຍວ່າຈະເກີດມີເຊັ່ນນີ້ດັ່ງກັນ. ສະນັ້ນຊາດທີ່ມີຄວາມຂະຫຍາຍຕົວ ດ້ານນີ້ກ່ອກໍ່ຈະສົ່ງອິດທິພົນເຖິງຊາດທີ່ຍັງດ້ອຍກວ່າ. ໃນສາສະໜາເມື່ອມີຄວາມກ່ຽວຂ້ອງເຖິງ ຄວາມຄິດ, ຄວາມປາຖະໜາ, ຊີວິດ ແລະ ຂະນົບທຳນຽມຫຼາຍຢ່າງ, ແຕ່ລະຢ່າງນີ້ ກໍ່ຈະສົ່ງຜົນ ສະທ້ອນໄປນຳກັນ, ສະນັ້ນ ການຮັບເອົາສາສະໜາໃດໜຶ່ງເຂົ້າມາຈຶ່ງມີຄວາມທີ່ໝາຍເຖິງການ ຮັບເອົາຫຼາຍໆຢ່າງມາພ້ອມໃນນັ້ນກໍ່ມີພາສາໄດ້ເປັນຕົວ ທີ່ເຮັດໜ້າທີ່ໃຫ້ແກ່ສາສະໜາແຜ່ຜາຍ ເຊື່ອຖື ແລະ ເກີດຄວາມນິຍົມ.

ການທີ່ລາວໄດ້ຮັບເອົາສາສະໜາພຸດເຂົ້າມາແຕ່ຕົ້ນນັ້ນ ກໍ່ຮັບເອົາເທື່ອລະເລັກລະ ນ້ອຍແລ້ວຈຶ່ງຄ່ອຍແຜ່ຜາຍອອກໃນຫຼາຍສະຕະວັດຕໍ່ມາ, ການຂະຫຍາຍທາງສາສະໜາມີ ຄວາມຕິດພັນກັບການຂະຫຍາຍທາງດ້ານສິນລະປະກຳ ປະຕິມາກຳ ແລະ ການເຊື່ອມສານ ລະຫ່ວາງຄວາມເຊື່ອ, ປະເພນີເກົ່າກັບອັນທີ່ເຂົ້າມາໃໝ່ນັ້ນໄດ້. ດ້ວຍເຫດນີ້ສາສະໜາພຸດເຖິງ ຈະຖື ແລະ ປະຕິບັດກັນຢູ່ໃນຫຼາຍປະເທດນັບທັ້ງລາວ ແຕ່ກໍ່ພົບວ່າມີຄວາມແຕກຕ່າງກັນຫຼາຍ ຢ່າງໃນແຕ່ລະສິ່ງເຊັ່ນ: ສິລະປະ, ປະຕິມາກຳ, ຄວາມເຊື່ອ ແລະ ປະເພນີ. ສະນັ້ນໃນລາວສາ ສະໜາໃດໆກໍ່ລ້ວນແຕ່ມີຮ່ອງຮອຍດ້ານພາສາສະທ້ອນໄວ້ເຊັ່ນ: ຜີ, ສາງຕ່າງໆ ຕາມແບບສາ ສະໜາພາມ, ສາສະໜາພຸດເຊິ່ງຮວມເອົາຄວາມເຊື່ອ ຄວາມນຶກຄິດຫຼາຍຢ່າງຕາມມາກໍ່ພາໃຫ້ ມີຄຳສັບປາລີສັນສະກິດຕາມເຂົ້າມາ, ເມື່ອຄຳຕ່າງໆນີ້ໄດ້ຮັບການນຳໃຊ້ໃນພາສາລາວຢ່າງດົນ ນານກໍ່ພາໃຫ້ເກີດຄວາມຊິນເຄີຍນິຍົມ ແລະ ດ້ວຍຄວາມນິຍົມນີ້ລາວກໍ່ນຳຄຳຕ່າງໆນັ້ນມາຂະ ຫຍາຍການໃຊ້ໃຫ້ກວ້າງຂວາງ ແລະ ເຄື່ອນໄຫວໄດ້ດັ່ງກັນກັບຄຳທົ່ວໄປໃນພາສາລາວ[11] ຈາກ ນີ້ຈຶ່ງສາມາດໃຫ້ຄວາມເຫັນວ່າຄຳ ປາລິ ສັນສະກິດທີ່ຮັບເຂົ້າມາໃຊ້ໃນພາສາລາວທີ່ມີຈຳນວນ ມາກມາຍນັ້ນ ກໍ່ເພາະສອງສາເຫດຄື: (1) ເພາະແມ່ນເຄື່ອງມືຕາມຕົວທຸກພາກສ່ວນຂອງສາ ສະໜາພຸດ ເຊິ່ງຮວມມີຄຳທີ່ໄວ້ໃຊ້ສະເພາະໃນສາສະໜາ, ຄຳພີ, ຄຳເທດ, ຊາດົກຕ່າງໆ ແລະ

---

[11] ສຳລິດ ບົວສີສະຫວັດ. ບາງທັດສະນະກ່ຽວກັບພາສາລາວປະຈຸບັນ. ກອງປະຊຸມໂຕະມົນວິທະຍາສາດກ່ຽວກັບ ພາສາລາວ. 1990 ໜ້າ 119-120.

ຄຳທີ່ໃຊ້ໄດ້ທົ່ວໄປ. (2) ເພາະການໃຊ້ມານານຈົນເກີດຄວາມຊິນເຄີຍ ແລະ ນິຍົມດ້ວຍຕົວຜູ້ໃຊ້ເຊິ່ງແມ່ນຄົນລາວແລ້ວຂະຫຍາຍການໃຊ້ອອກຢ່າງກວ້າງຂວາງ ເໝືອນກັບຄຳທົ່ວໄປໃນພາສາລາວ.

ເພື່ອເພີ່ມຈຳນວນຄຳ ໃຫ້ແກ່ການຕິດຕໍ່ສື່ສານ

ເນື່ອງຈາກອິນເດຍເປັນແຫ່ງໜຶ່ງທີ່ມີແຫຼ່ງຂອງຄວາມຈະເລີນທາງວັດທະນະທຳແຕ່ຄາວກີ້ສະນັ້ນອິນເດຍຈຶ່ງເປັນແຫຼ່ງສະໜອງຄວາມຈະເລີນຕ່າງໆນັ້ນໃຫ້ແກ່ຊາດອື່ນທີ່ຕ້ອງການ. ລາວເຮົາກໍ່ເປັນຊາດໜຶ່ງທີ່ໄດ້ຮັບອິດທິພົນຈາກຄວາມຈະເລີນນັ້ນແລະເກີດຄວາມຕ້ອງການຕາມມາ. ຄຳທີ່ມີໃນປາລີ-ສັນສະກິດຫຼາຍໆຄຳໄດ້ເປັນຄຳໃໝ່, ມີຄວາມໝາຍໃໝ່, ມີຄວາມຄິດໃໝ່ໆໃນສະໄໝນັ້ນ ເຊິ່ງໄດ້ມີສິ່ງແປກໃໝ່ຫຼາຍອັນທີ່ພາໃຫ້ລາວຕ້ອງການຮັບພ້ອມດຽວກັນການປະກອບສ້າງທາງຄວາມໝາຍຂອງຄຳພົບວ່າມີຄວາມລະອຽດຈະແຈ້ງ, ມີຂອບເຂດທີ່ກຳນົດທາງດ້ານຄວາມໝາຍອັນຄັກແນ່ພາໃຫ້ສະດວກໃນເມື່ອນຳມາໃຊ້. ເພື່ອເວົ້າກັບອັນສະເພາະ, ໄດ້ຄວາມໝາຍຮັດກຸມສື່ຄວາມໄດ້ໄວແລະກົງເລື່ອງ. ບາງຄຳມີທັງຄວາມໝາຍ ແລະ ມະໂນພາບທີ່ສະຫຼັບ, ພາໃຫ້ເກີດຄວາມຮູ້ສຶກດີມີສ່ອງແສງແວວວາວ, ເດັ່ນ ຫຼື ອ່ອນຊ້ອຍ. ສິ່ງທັງໝົດນີ້ແມ່ນໝາກຜົນ ແລະ ຄວາສາມາດຂອງຜູ້ປະດິດຄຳປາລີ-ສັນສະກິດທີ່ສ້າງຂຶ້ນໄວ້ເພື່ອທາງສາສະໜາແລະເພື່ອວັດທະນະທຳຈົນເກີດ ເປັນສິ່ງຍອມຮັບຂອງຫຼາຍຊາດວ່າປາລີ- ສັນສະກິດມີຄຳທີ່ອຸດົມສົມບູນ, ມີຄວາມຈະແຈ້ງ, ມີມະໂນພາບໃຫ້ຄ່າແກ່ຄວາມຮູ້ສຶກເໜືອມີສີສັນ, ສັກສີ ແລະ ແວວວາວ, ສະນັ້ນ ຈຶ່ງຮັບຄຳຕ່າງໆນັ້ນເຂົ້າໄປໃຊ້ໃນພາສາຕົນຢ່າງຫຼວງຫຼາຍ,ດ້ວຍເຫດນີ້ໃນພາສາລາວ ຫຼື ບາງພາສາເຖິງມີຄຳເດີມຢູ່ແລ້ວ ບາງຄຳແຕ່ກໍ່ຮັບຄຳ ຊະນິດດຽວກັນນັ້ນຈາກ ປາລີ ຫຼື ສັນສະກິດ ເຂົ້າມາເພີ່ມແລ້ວແບ່ງລະດັບການໃຊ້ ແລະ ກໍລະນີທີ່ໃຊ້ໃຫ້ແຕກຕ່າງກັນໄປ ແຕ່ຄຳເດີມ ແລະ ຄຳທີ່ຮັບມາຈາກປາລີ ຫຼື ສັນສະກິດຕ່າງກໍ່ຍັງຄົງມີໃນພາສາຕົນ. ຕົວຢ່າງຄຳວ່າ: ຄົນ, ນ້ຳ, ປາ, ລົມ, ໄຟ, ຕາຍ. ເປັນຄຳເດີມທີ່ມີຢູ່ກ່ອນ ແຕ່ເຮົາກໍ່ຮັບຄຳວ່າ: ມະນຸດ, ທາລາ, ອຸທົກ, ປະປາ, ມັດສາ, ວາໂຍ, ອັກຄີ, ມໍລະນະເຂົ້າມາ. ທີ່ຜ່ານມານີ້ ກໍ່ເປັນສາເຫດພາໃຫ້ຄຳໃນພາສາລາວມີເພີ່ມຂຶ້ນຢ່າງຫຼວງຫຼາຍ.

4) ຄວາມແຕກຕ່າງບາງປະການຂອງປາລິ ແລະ ສັນສະກິດ

ປາລິ ແລະ ສັນສະກິດ ມີລັກສະນະທາງພາສາທີ່ຄືກັນຫຼາຍຢ່າງເຊັ່ນ: ມີວິພັດປັດໄຈມີ ຄຳທີ່ມີຫຼາຍພະຍາງ (Polisyllable) ເປັນຈຳນວນຫຼາຍ. ແຕ່ໃນນີ້ ສິ່ງທີ່ແຕກຕ່າງທີ່ເຫັນໄດ້ລະ ຫວ່າງປາລິກັບສັນສະກິດກໍ່ມີເຊັ່ນກັນຄື: ໜ່ວຍສຽງ ແລະ ລະບົບສຽງ ເຊິ່ງໜ່ວຍສຽງຂອງພາ ສາສັນສະກິດມີຈຳນວນຫຼາຍກ່ວາ ແລະ ມີລະບົບສຽງ ທີ່ສະຫຼັບຊັບຊ້ອນກວ່າປາລິເຊັ່ນ: ກ່ຽວກັບໜ່ວຍສຽງສະຫຼະ.

ພາສາປາລິ: ໜ່ວຍສຽງສະຫຼະມີ 8 ໜ່ວຍ ໃນນັ້ນມີສະຫຼະດ່ຽວ 6 ແລະ ປະສົມ 2 ໜ່ວຍສຽງ[12].

ຕົວຢ່າງ: ສະຫຼດ່ຽວ / a, ā, i, ī, u, ū /

ສະຫຼະປະສົມ / ai / ສຽງຍາວ

/ au /

ພາສາສັນສະກິດ: ໜ່ວຍສຽງສະຫຼະມີ 14 ໜ່ວຍ ສະຫຼະດ່ຽວ10 ໜ່ວຍ, ສະຫຼະປະ ສົມ 4 ສຽງ

/ ei / / ai:/

/ oi / / au:/

ໃນນີ້ມີສະຫຼະດ່ຽວສະເພາະທີ່ອອກສຽງໃນຖານປຸ່ມເຫືອກ (glot stop) ເຊິ່ງສະ ແດງດ້ວຍຮູບຕົວຂຽນຄື / r / ສຽງສັ້ນ ແລະ / r̄ / ສຽງຍາວ.

ສຽງສະຫຼະດ່ຽວທັງສອງນີ້ເຖິງໄດ້ກຳນົດຮູບຂຽນໄວ້ໃຫ້ແຕ່ການໃຊ້ຈະພົບໜ້ອຍທີ່ສຸດ. ສະນັ້ນໃນໄວຍາກອນສັນສະກິດບາງສະບັບຈຶ່ງບໍ່ໄດ້ນັບເຂົ້າ ເຊິ່ງຖືເປັນສິ່ງໝົດໄປຈາກຫຼັກສຳ ຄັນການຂຽນແລ້ວ.

---

[12] ປຣະຍູຣ ຊິງສິນ. ການປ່ຽນແປງຂອງພາສາ-ຄຳຢືມໃນພາສາໄທ. ພ.ສ 2526 ໜ້າ 88.

ຄວາມຕ່າງດ້ານໜ່ວຍສຽງພະຍັນຊະນະ

ໃນພາສາປາລິ ມີໜ່ວຍສຽງພະຍັນຊະນະ 33 ໜ່ວຍ, ໃນສັນສະກິດມີ 35 ໜ່ວຍ. ໃນນີ້ 2 ໜ່ວຍສຽງ ທີ່ມີລົ້ນຈາກປາລິໄດ້ແກ່ສຽງ / ɾ / ແລະ ສຽງ / ɾ̥/ ເຊິ່ງໃນສຽງ / ɾ / ນີ້ສາມາດ ຜັນເປັນສຽງຍ່ອຍທີ່ຕ່າງກັນໄດ້ອີກ 2 ສຽງ, ໃນຮູບຂຽນຈຶ່ງກຳນົດເປັນຕົວ ɾ ແລະ ɹ ໄວ້ [13].

ກ່ຽວກັບການແບ່ງກຸ່ມພະຍັນຊະນະ

ໃນໄວຍາກອນເດີມຂອງ ປາລິ ແລະ ສັນສະກິດຕ່າງກໍ່ສຶກສາເລື່ອງພະຍັນຊະນະຕາມວິທີດຽວກັນ, ສະນັ້ນ ພະຍັນຊະນະທັງໝົດກໍ່ໄດ້ຮັບການແບ່ງເປັນ 2 ກຸ່ມ.ໃນການແບ່ງນີ້ ໄດ້ຍຶດຖືເລື່ອງຖານກອນ (articulation) ເຊິ່ງໃຊ້ຜັນສຽງແຕ່ລະຕົວນັ້ນແມ່ນໄດ້ໃຊ້ຖານກອນໃດເປັນສຳຄັນຈາກນັ້ນກໍ່ເບິ່ງວ່າ ພະຍັນຊະນະຕົວທີ່ມີລັກສະນະທາງສຽງເຊິ່ງເກີດຂຶ້ນໄດ້ກັບທຸກຖານກອນໃນປາກທີ່ແບ່ງເປັນ 5 ຖານຫຼັກນັ້ນໄດ້ຈັດເປັນກຸ່ມໜຶ່ງ ເອີ້ນວ່າ ກຸ່ມພະຍັນຊະນະວັກ ແລະ ກຸ່ມທີສອງ ເອີ້ນເປັນກຸ່ມພະຍັນຊະນະເສດວັກ. ກຸ່ມນີ້ ໄດ້ແກ່ພະຍັນຊະນະທີ່ເກີດຂຶ້ນໂດຍບໍ່ຄົບທຸກຖານກອນ ຫຼື ເກີດຂຶ້ນໄດ້ກໍ່ຕໍ່ເມື່ອມີສຽງອື່ນເກີດແລ້ວຈຶ່ງເກີດຕາມ (approximant).

ກຸ່ມພະຍັນຊະນະວັກທີ່ມີຄືກັນໃນພາສາທັງສອງມີດັ່ງນີ້ : / k, kh, g, gh, ṅ, c, ch, j, jh, ñ, ṭ, ṭh, ḍ, ḍh, ṇ, t, th, d, dh, n, p, ph. b, bh, m /

ກຸ່ມພະຍັນຊະນະເສດວັກ ໃນພາສາປາລິ ມີ: / h, ɲ, r, l, w, s /

ກຸ່ມພະຍັນຊະນະເສດວັກ ໃນພາສາສັນສະກິດມີ: / h, y, r, l, v, s, ṣ /

ຄວາມແຕກຕ່າງບາງປະການດ້ານຮູບຄຳ

---

[13] ສຸທິວົງ ພົງໄພບູນ. ບາລິ-ສັນສະກິດທີ່ສຳພັນກັບພາສາໄທ. ໜ້າ 22.

ຄຳປາລິ ແລະ ສັນສະກິດທີ່ມີລັກສະນະ ແລະ ຮູບຄຳທີ່ກົງກັນ, ຄ້າຍຄືກັນນັ້ນມີຈຳນວນຫຼາຍ, ແຕ່ກໍ່ມີຄຳຈຳນວນໜຶ່ງມີຮູບຄຳຕ່າງກັນ, ຄວາມຕ່າງນີ້ເພາະລະບົບໜ່ວຍສຽງພະຍັນຊະນະ, ສະຫຼະບາງຕົວມີຄວາມຕ່າງກັນ. ຈຸດທີ່ໃຫ້ເຫັນຄວາມແຕກຕ່າງທີ່ເດັ່ນຊັດຄື ໜ່ວຍສຽງສະຫຼະປະສົມ ແລະ ສະຫຼະ/ ṛ / ທີ່ອອກສຽງໃນປຸ່ມເຫືອກ ເຊິ່ງມີໃນສັນສະກິດ ແຕ່ປາລິບໍ່ມີ. ສະນັ້ນ ຄຳໃດທີ່ສັນສະກິດ ອອກເປັນ / ai / ໃນປາລິ ຈະອອກເປັນ / ē/ ຫຼື / ī /.

ຕົວຢ່າງ :

ສັນສະກິດ	ປາລິ	ເປັນຄຳລາວ
/ vair /	/ vēr /	ເວນ
/ maithun /	/ me:thun /	ເມຖຸນ ໆ
/ maitri /	/ mētil /	ໄມຕີ
/maiṭr /	/ mētta/	ເມດຕາ. ແລະ ອີກບາງຄຳ

ແຕ່ຄຳທີ່ອອກສຽງຜິດພ້ຽນກັນນີ້ ມີຈຳນວນບໍ່ຫຼາຍປານໃດ.

ສະຫຼະປະສົມ / au / ຫຼື / a / ຕາມດ້ວຍຕົວສະກິດ / v / ໃນສັນສະກິດຈະປ່ຽນເປັນ / ō / ໃນປາລິ.

ຕົວຢ່າງ:

ສັນສະກິດ	ປາລິ	ເປັນຄຳລາວ
/ aurosa /	/ ōrosa/	ໂອລົດ
/ osatha/	/ ausadh /	ໂອສົດ
/ ottappa/	/ auttrāpya /	ໂອດຕັບປະ (ຄວາມຢ້ານການເຮັດຊົ່ວ)

ແລະ ອື່ນໆ.

ແຕກຕ່າງສຽງສັ້ນ-ຍາວຂອງສະຫຼະໃນຄຳ

ຕົວຢ່າງ :

ຄຳສັນສະກິດ	ຄຳປາລິ	ຄຳລາວ
/ sūtra /	/ sutta /	ສູດ
/ irṣyā /	/ issā /	ອິດສາ
/ kīrti /	/ kitti /	ກິດຕິ
/ pūrṇa /	/ puṇṇa /	ບູລະນະ ແລະອື່ນໆ.

ແຕກຕ່າງໃນລະບົບສຽງພະຍັນຊະນະ.

ໃນພາສາສັນສະກິດໜ່ວຍສຽງພະຍັນຊະນະ /s/ ຈະມີສາມໜ່ວຍສຽງທີ່ອອກສຽງຕ່າງກັນ ແຕ່ໃນປາລິມີພຽງສຽງດຽວ, ສະນັ້ນ ທຸກຄຳໃນສັນສະກິດທີ່ມີພະຍັນຊະນະຕົ້ນຄຳເປັນ /s/ ຊະນິດໃດກໍ່ຕາມ ມາໃນປາລິ ຈະປ່ຽນເປັນຮູບດຽວນັ້ນ.

ຕົວຢ່າງ:

ຄຳສັນສະກິດ	ຄຳປາລິ	ເປັນຄຳລາວ
/ śaṅkā/	/ saṅkā/	ສົງກາ
/ śkuna/	/ sakuna/	ສັກກຸນາ (ນົກ)
/ śata /	/ sata /	ສະຕະ(ຮ້ອຍ)
ແລະ ອື່ນໆ		

ແຕກຕ່າງກັນໃຊ້ຕົວສະກິດ.

ຕົວຢ່າງ:

ຄຳສັນສະກິດ	ຄຳປາລິ	ເປັນຄຳລາວ
/ virūdha /	/ viruḷha /	ງອກງາມ, ຮຸ່ງເຮືອງ
/ krīḍā /	/ kiḷā /	ກິລາ
/ rājan /	/rājā/	ລາຊາ

ແລະ ອື່ນໆ

ການຕັດສຽງສະກົດບາງຕົວ.

ຕົວຢ່າງ:

ຄຳສັນສະກົດ	ຄຳປາລິ	ເປັນຄຳລາວ
/ āyus /	/ ayu /	ອາຍຸ
/ yaśas /	/ yasa /	ຍົດ
/rāgin/	/rāgī/	ລາຄີ

ແລະ ອື່ນໆ

ການປ່ຽນສຽງສະຫຼະບາງສຽງ.

ຄຳທີ່ມີສຽງສະຫຼະ /a/ ທີ່ມີການອອກສຽງເບົາເຊິ່ງໃນພາສາສັນສະກົດເມື່ອ ຂຽນຄຳຊຸມ ນີ້ເຄີຍໃຊ້ຕົວການັ, ເມື່ອຄຳນັ້ນຢູ່ໃນພາສາປາລິ ຈຸດທີ່ໃຊ້ການັກ່ຈະປ່ຽນເປັນສຽງ / o:/ ຫຼື /a:/

ຕົວຢ່າງ :

ຄຳສັນສະກົດ	ຄຳປາລິ	ເປັນຄຳລາວ
/ manas /	/ mano: /	ມະໂນ
/ śuāna/	/ soṇa/	ໂສນະ (ໝາ)
/ avakūsa/	/ ōkāsa /	ໂອກາດ
/vāc/	/ vācā /	ວາຈາ.

ການແຊກສຽງສະຫຼະໃນຄຳ

ບາງຄຳໃນສັນສະກົດເປັນສຽງຄວບເມື່ອຢູ່ໃນປາລິຈະເປັນໄດ້ທັ້ງສຽງຄວບ ຫຼື ຈະແຊກສຽງສະຫຼະເຂົ້າແຍກສຽງຄວບນັ້ນອອກພົບວ່າມີຫຼາຍຄຳ ສ່ວນຄວາມໝາຍຍັງເໝືອນເດີມ.

ຕົວຢ່າງ :

ຄຳສັນສະກິດ	ຄຳປາລິທີ່ແຊກສຽງ	ຄຳລາວ
/ kriyā /	/ kiriyā /	ກິລິຍາ
/ sneha /	/ sineha /	ສະເໜ
/ ḍvāra/	/ dvāra/	ທະວານ
/ dvipa/	/ dvipa/	ທະວີບ.

ການປ່ຽນສຽງຕົວສະກິດໃນທ້າຍຄຳບາງຄຳ

ໃນສັນສະກິດສຽງ / r/ ສາມາດປະກິດໃນທ້າຍຄຳ ແລະ ໃຊ້ເປັນຕົວປະກອບຕາມກັບ ພະຍັນຊະນະຕົວອື່ນໄດ້ແຕ່ໃນປາລິມີກິດສອງຢ່າງນີ້. ສະນັ້ນຄຳໃດທີ່ມີສຽງດັ່ງກ່າວນີ້ ໃນສັນ ສະກິດເມື່ອຢູ່ໃນປາລິ ຈະເກີດການແຊກສຽງ ຫຼື ກົນສຽງພາໃຫ້ຄຳເກີດເປັນສຽງອື່ນໄປ.

ຕົວຢ່າງ:

ຄຳສັນສະກິດ	ຄຳປາລິ	ເປັນຄຳລາວ
/ maitra /	/ mettā /	ເມດຕາ
/ mitra /	/ mitta /	ມິດ, ເພື່ອນມິດ
/ praya:ya/	/ pariyāya/	ປະລິຍາຍ

ແລະອື່ນໆ*

ຄວາມແຕກຕ່າງລະຫວ່າງ ປາລິ ແລະ ສັນສະກິດນັ້ນ ຍັງມີຫຼາຍຢ່າງທີ່ລະອຽດສະ ເພາະໄປກວ່າທີ່ສະເໜີໃນນີ້, ມີຄຳບາງຄຳທີ່ເຫັນວ່າມີຄວາມກ່ຽວຂ້ອງກັບການຮັບຄຳຈາກພາ ສາທັງສອງເຂົ້າມາລາວເຊິ່ງນຳມາສະເໜີໂດຍຫຍໍ້ໆຫາກສົນໃຈ ໃນສ່ວນລະອຽດ ຂອງຄວາມແຕກຕ່າງກໍ່ຈະຫາສືບຕໍ່ສຶກສາໄດ້ໃນປຶ້ມທີ່ໄດ້ສຶກສາປຽບທຽບ ລະຫວ່າງພາສາປາລິ ແລະ ສັນສະກິດໃນຫຼາຍເຫຼັ້ມຕໍ່ໄປ.

---

* ວິສັນຕິ ກິດແກ້ວ. ທີ່ມາຂອງຄຳບາລີສັນສະກິດໃນພາສາໄທ; ຄຳໄວພິດໃນບາລີ- ສັນສະກິດ. ພ.ສ 2486.

5). ການປຽບທຽບຄຳຢືມຈາກປາລິ ແລະ ສັນສະກິດໃນພາສາລາວ

ຄຳຈາກພາສາໃດກໍ່ຕາມເມື່ອເຮົາຮັບມາສູ່ພາສາຂອງຕົນຈະຕ້ອງເກີດການປ່ຽນແປງ ບໍ່ແມ່ນທັງໝົດຮູບຄຳກໍ່ແມ່ນສ່ວນໃດສ່ວນໜຶ່ງ, ຕະຫຼອດເຖິງຄວາມໝາຍກໍ່ເຊັ່ນດຽວກັນ ເມື່ອຄວາມໝາຍນັ້ນມາຢູ່ໃນພາສາເຮົາ ບາງກໍລະນີກໍ່ຈະຮັກສາຕາມເດີມແຕ່ຫຼາຍກໍລະນີ ໄດ້ເກີດການປັບດ້ວຍວິທີຕັດບາງສ່ວນປະກອບກັບຄວາມໝາຍ (feature) ອອກໂດຍເລືອກເອົາສ່ວນທີ່ຈຳເປັນ ແລະ ຕ້ອງການໄວ້ ນອກນີ້ກໍ່ຈະເກີດການເຕີມສ່ວນປະກອບໃໝ່ ໃຫ້ແກ່ຄວາມໝາຍທີ່ເຮົາປັບນັ້ນກໍ່ມີການເປັນໄປເຊັ່ນນີ້ແມ່ນເປັນໄປຕາມກົດທາງພາສາເຊິ່ງອາດກ່ຽວຂ້ອງຫຼືບໍ່ກ່ຽວຂ້ອງກັບຄວາມທີ່ຄິດກໍ່ເປັນໄດ້.

ຄຳປາລິ ແລະ ສັນສະກິດທີ່ຮັບມາໃຊ້ໃນພາສາລາວນັ້ນ ດ້ວຍການສຶກສາພົບວ່າມີປະກິດການຂອງການປ່ຽນແປງທີ່ເປັນລະບົບຢ່າງນີ້:

ການກາຍສຽງສະຫຼະ

ໃນການກາຍສຽງປະກອບດ້ວຍຫຼາຍຢ່າງເຊັ່ນ: ກາຍສຽງສະຫຼ;ສຽງພະຍັນຊະນະ ແລະ ຮວມເຖິງສຽງວັນນະຍຸດຄື ຈາກທີ່ຄຳປາລິ ສັນສະກິດບໍ່ໃຊ້ວັນນະຍຸດແຕ່ເມື່ອເຂົ້າມາໃນພາສາລາວກໍ່ຈະມີສຽງວັນນະຍຸດເຂົ້າໄປກ່ຽວຂ້ອງ ເຖິງວ່າໃນຮູບຂຽນຄຳຈະສະແດງໃຫ້ເຫັນເຄື່ອງໝາຍສຽງວັນນະຍຸດ ຫຼື ບໍ່ກໍ່ຕາມ.

ສຽງສະຫຼະ / i / ຫຼື / ī / ໃນບາງຄຳຂອງປາລິ ສັນສະກິດກາຍເປັນສຽງ ສະຫຼະ/ e / ຫຼື / ü / ໃນພາສາລາວ.

ຕົວຢ່າງ :

/ sīmā /	ເປັນ	ເສມາ	/ sēmā /
/ vitān /	ເປັນ	ເພດານ	/ phēdān /
/ siksā /	ເປັນ	ສຶກສາ	/ süksā /

ແລະອື່ນໆ

ການຕື່ມສຽງສະຫຼະ.

ຄຳປາລິ ສັນສະກິດຫຼາຍຄຳສຽງສະຫຼະ /a/ ຈະຕິດຢູ່ກັບພະຍັນຊະນະແຕ່ລະຕົວສຳລັບການຜັນສຽງ. ສະນັ້ນໃນຮູບຄຳຫຼາຍໆຄຳກໍ່ຈະບໍ່ຂຽນຮູບສະຫຼະຕົວນີ້ໃສ່ມີແຕ່ເອົາອັກສອນແຕ່ລະຕົວມາຈັດລຽງກັນໄປ. ຄຳໃດທີ່ເປັນກໍລະນີນີ້ ເມື່ອເຂົ້າມາໃນພາສາລາວກໍ່ຈະເກີດການເຕີມສຽງສະຫຼະ. ເນື່ອງຈາກວ່າໃນພາສາລາວການອອກສຽງໃນຄຳຈະບໍ່ມີອັກສອນລຽນກັນສອງຕົວ ເວັ້ນເສຍແຕ່ອັກສອນຄວບຫາກຈະອອກສຽງໄດ້ຕ້ອງມີສະຫຼະໃດໜຶ່ງປະກອບເຂົ້າ. ສະນັ້ນ ຄຳຈາກປາລິ ສັນສະກິດຫຼາຍໆຄຳທີ່ມີແຕ່ສຽງອັກສອນລຽນກັນກໍ່ຈະເກີດການຕື່ມສະຫຼະແກນໃດໜຶ່ງເຂົ້າ.

ຕົວຢ່າງ :

/ mhussr/	ມະໂຫລະສົບ	/ mahɔ̄lasop /
/ udr /	ອຸທອນ	/ ʔuthɔ̄n/
/ spn/	ສາບານ	/ sābān /
/ vyādhi /	ພະຍາດ	/ phaɲa:t /
/ sāsn /	ສາສະໜາ	/ sāsanā /
/ vr /	ພອນ	/ phɔ̄n /
/patthnā /	ປາຖະໜາ	/pāthanā /

ແລະ ອື່ນໆ.

(ສະຫຼະແກນ ທີ່ວ່ານີ້ ໝາຍເຖິງສະຫຼະ ທັງ 9 ໜ່ວຍ ຮວມທັງສຽງສັ້ນ ແລະ ຍາວມີ 18 ໜ່ວຍ ໃນພາສາລາວ)

ການກາຍສຽງພະຍັນຊະນະ.

ໜ່ວຍສຽງພະຍັນຊະນະຂອງພາສາລາວກັບປາລິ ສັນສະກິດ ພົບວ່າບໍ່ກົງກັນຫຼາຍສຽງໂດຍສະເພາະແມ່ນພະຍັນຊະນະຄວບ. ໃນນີ້ພາສາລາວພະຍັນຊະນະບາງຕົວມີລະດັບສຽງກຳກັບຢູ່ ສະນັ້ນ ການອອກສຽງມັກແບ່ງເປັນສອງລະດັບຕະຫຼອດຄື: ລະດັບຕ່ຳແລະສູງ.

ໂດຍອີງຕາມລັກສະນະນີ້ ຈຶ່ງເອີ້ນວ່າ ພະຍັນຊະນະຕ່ຳ, ພະຍັນຊະນະສູງ. ກຸ່ມທີ່ບໍ່ມີການແຍກລະດັບສຽງເອີ້ນພະຍັນຊະນະກາງ.

ຄວາມແຕກຕ່າງຂອງລະບົບພະຍັນຊະນະໃນພາສາລາວ ກັບປາລິ ສັນສະກິດ ກໍ່ເປັນຜົນທີ່ກໍ່ໃຫ້ເກີດການປ່ຽນແປງທາງສຽງໃນຄຳທີ່ລາວຮັບມາ. ໂດຍພາສາລາວຈະປ່ຽນແທນໜ່ວຍສຽງອັນໃກ້ຽງກັບສຽງ ທີ່ຄຳຮັບເຂົ້າມາ.

ຕົວຢ່າງ :

ການກາຍສຽງ / p / ໃນປາລິ ສັນສະກິດເປັນ / ph / ໃນພາສາລາວ.

/ prakaṭa /	ຜາກົດ, ປະກົດ	/ pakot // phākot /
/ peta /	ເຜດ, ຜີເຜດ	/ phēt /

ການກາຍສຽງ /d/ ເປັນ / t /.

/ canda /	ເປັນ	ຈັນຕາ	/ cantā /
/ inda /		ອິນຕາ	/ ʔintā /

ການກາຍສຽງ / p / ເປັນ / b /.

/ pitā /	ເປັນ	ບິດາ	/ bidā /
/ pañji /		ບັນຊີ	/ bansi /
/ sappaːya /		ສະບາຍ	/ sabaːj /
/ puññа /		ບຸນ	/ bun /
/ pripuṇṇa /		ບໍລິບູນ	/ bɔlibuːn /

ແລະອື່ນໆ

ການກາຍສຽງ /d / ເປັນ / th /

/ dvīpa /	ທະວີບ ເປັນ	ທີບ	/ thīp /

/ devia /		ເທວາ	/ thevā /
/ dina /		ທິນ, ທິນະ	/ thina /

ການຕັດສຽງພະຍັນຊະນະສະກົດບາງຕົວ.

ຕົວສະກົດຫຼືພະຍາງທ້າຍຄຳທີ່ມີໃນພາສາປາລີ ສັນສະກົດ ເມື່ອເຂົ້າມາໃນພາສາລາວສ່ວນຕ່າງໆທີ່ຕ່າງຈາກລະບົບພະຍາງທ້າຍຄຳຫຼືສຽງສະກົດໃນພາສາລາວກໍ່ຈະຖືກຕັດອອກເພື່ອໃຫ້ສະດວກ ແລະ ເຂົ້າກັບລະບົບການອອກສຽງໃນຄຳຕາມພາສາລາວ.

ຕົວຢ່າງ :

/ buddha /	ເປັນ	ພຸດ, ພຸດທະ	/ phut phuttha /
/ caksus /		ຈັກສຸ	/ caksu /
/ ātaman /		ອາຕະມາ	/ ʔatamā /
/ sneha /		ສະເໜ	/ sanē /
/ candrā /		ຈັນ	/ can /
/ kṣīra /		ກະສຽນ	/ kasian /
/ arahatta/		ອໍລະຫັນ	/ ʔɔlahan /

ແລະ ອື່ນໆ.

24 / VII
ห้ามจำหน่าย

ການຕັດສຽງສະຫຼະທ້າຍຄຳ.

ຕົວຢ່າງ :

/ maryādā /	ເປັນ	ມາລະຍາດ	/ mālaɲāt /
/ vyādhi /		ພະຍາດ	/ phaɲāt /
/ buddha /		ພຸດ	/ phut /
/ karkḍa /		ກໍລະກົດ	/ kɔlakot /
/ kīrti /		ກຽດ	/ kiat /

ແລະ ອື່ນໆ.

ການສອດແຊກສຽງພະຍັນຊະນະເຂົ້າກາງຄຳ.

ຄຳບາງຄຳທີ່ຮັບມາຈາກປາລິສັນສະກິດ ຕາມເດີມຈະບໍ່ມີສຽງພະຍັນຊະນະທີ່ເປັນຕົວສະກົດຕົວໃດໜຶ່ງໃນຄຳນັ້ນມາກ່ອນ ແຕ່ເມື່ອຮັບເຂົ້າມາກໍ່ຈະເກີດການສອດແຊກສຽງຂອງພະຍັນຊະນະບາງຕົວເຂົ້າເພື່ອໃຫ້ສອດຄ່ອງໃນພາສາລາວ.

ຕົວຢ່າງ :

/ mata /	ເປັນ	ມານດາ	/ māndā /
/ maya: /		ມານຍາ	/ mānɲā /
/ drsli /		ທິດສະດີ	/thitsādi /

ການໃຫ້ສຽງວັນນະຍຸດໃນຄຳ.

ເນື່ອງຈາກຄຳໃນພາສາລາວທຸກຄຳລ້ວນແຕ່ມີສຽງວັນນະຍຸດກຳກັບຢູ່ສິ່ງນີ້ເປັນກົດໃນລະບົບຄຳຂອງພາສາລາວ ສະນັ້ນ ຄຳຈາກພາສາອື່ນເມື່ອເຂົ້າມາໃນພາສາລາວກໍ່ຈະເປັນຕາມກົດນີ້ຄື ຕ້ອງເກີດການຕື່ມສຽງວັນນະຍຸດໃຫ້ຈຸດທີ່ໄດ້ຮັບການຕື່ມສຽງວັນນະຍຸດນັ້ນ ໄດ້ແກ່ສຽງສະຫຼະໃນພະຍາງຫຼືຄຳເປັນສຳຄັນສຽງວັນນະຍຸດທີ່ວ່ານີ້ ບາງກໍລະນີກໍ່ສະແດງດ້ວຍເຄື່ອງສຽງວັນນະຍຸດ, ບາງກໍລະນີ ກໍ່ສະແດງດ້ວຍຕົວອັກສອນຕ່ຳ ຫຼື ສູງທີ່ມີໃນພາສາລາວ. ສ່ຽງວັນນະຍຸດທີ່ຕື່ມໃຫ້ນີ້ຈະເປັນໄປຕາມສຽງຖ່ຳລາວແຕ່ລະຖ່ຳ ແຕ່ໃນລະບົບສຽງວຽງຈັນສະແດງໄດ້ດັ່ງນີ້:

/ silpa /	ສິນ	/ sĭn /
/ dhatu /	ທາດ	/ thât /
/ gotra/	ໂຄດ	/ khō̂t /
/ sīhā /	ສິງ	/ sĭŋ/
/ caryā /	ຈັນຍາ	/ canɲā̆ /

ແລະ ອື່ນໆ.

ການປ່ຽນສຽງເບົາໃຫ້ເປັນສຽງສະຫຼະ /a/.

ຄຳປາລິ ສັນສະກິດ ຫຼາຍຄຳມີບາງພະຍັນຊະນະຈະມີສຽງເບົາ (voiceless) ເວລາ ຂຽນເຄີຍໃຊ້ເຄື່ອງໝາຍຈຳເພາະໄວ້ດ້ານລຸ່ມ ເພື່ອບອກໃຫ້ຮູ້ວ່າເປັນສຽງເບົາ, ບາງຄຳທີ່ມີສຽງນີ້ ເມື່ອມາສູ່ ພາສາລາວໄດ້ເກີດການປ່ຽນເປັນສຽງ /a/ ເຂົ້າເພື່ອໃຫ້ ອອກສຽງສະດວກ ຕາມລະບົບ ການຜັນສຽງຂອງ ພາສາລາວ.

ຕົວຢ່າງ:

/ varga/	ເປັນ	ວັກ / wak /
/ dharma /	ທຳ	/ tham /
/ satya/	ສັດຈະ	/ satca? /
/ strī /	ສະຕິ	/ satī /
/prtimā /	ປະຕິມາ ປະຕິມາກຳ	/ patimā /

ແລະ ອື່ນໆ.

6). ການເລືອກໃຊ້ຄຳ ປາລິ ແລະ ສັນສະກິດ.

ປາລິ ແລະ ສັນສະກິດເຖິງວ່າການສະກິດຄຳມີຫຼັກການທີ່ຄືກັນຫຼາຍຢ່າງດັ່ງທີ່ສະເໜີ ມາ ແຕ່ລັກສະນະຂອງຄຳກໍ່ມີຄວາມແຕກຕ່າງກັນບາງຢ່າງໂດຍສະເພາະແມ່ນສຽງສະຫຼະພາຍ ໃນຄຳບາງພະຍັນຊະນະ ແລະ ການອອກສຽງໃນຄຳ. ອາດເປັນເພາະຄວາມແຕກຕ່າງດັ່ງກ່າວນີ້ ການທີ່ລາວຮັບເອົາຄຳພຈາກພາສາທັງສອງນີ້ເຂົ້າມາໃຊ້ຈິ່ງເຫັນວ່າ ຄຳທີ່ຮັບມາມີຈຳນວນຕ່າງ ກັນເຊິ່ງພົບວ່າມີຄຳຂອງປາລິຫຼາຍກ່ວາ. ຈາກນີ້ຈິ່ງເບິ່ງວ່າການທີ່ພາສາລາວມີຄຳປາລິຫຼາຍ ກວ່ານັ້ນ ອາດເປັນເພາະສຽງໃນຄຳປາລິສາມາດອອກສຽງໄດ້ສະດວກກວ່າໃນພາສາລາວ ນີ້ຄົງ ເປັນສາເຫດໜຶ່ງທີ່ສຳຄັນນອກນີ້ກໍ່ມີສາເຫດອື່ນໆເຊິ່ງສັງເກດເຫັນມີດັ່ງນີ້:

(1) ສາເຫດທີ່ຄຳປາລີໄດ້ເຂົ້າມາມີບົດບາດໃນລາວພ້ອມກັບສາສະໜາພຸດນິກາຍເຖລະ ວາດກ່ອນທີ່ຄຳສັນສະກິດທີ່ເຂົ້າມາກັບສາສະໜາພຸດນິກາຍມະຫາຍານ.

(2) ສາເຫດທີ່ໜ່ວຍສຽງໃນພາສາປາລີ ເຫັນວ່າມີຄວາມໃກ້ກັບໜ່ວຍສຽງໃນພາສາລາວ ຫຼາຍໆໜ່ວຍ ພາໃຫ້ການອອກສຽງສະດວກກວ່າ.

(3) ເພາະສຽງໃນຄຳປາລີບໍ່ມີສຽງສະຫຼະປະສົມພາໃຫ້ອອກສຽງຍາກ ໂດຍໃຫ້ສະຫຼະ ແທນເປັນຫຼັກໃນການຜັນຄຳເມື່ອທຽບກັບພາສາລາວ ພົບວ່າເຮົາມີສະຫຼະປະສົມ ດ້ວຍຫຼາຍສະຫຼະນັ້ນເຫັນໄດ້ຈະແຈ້ງກວ່າພາສາປາລີ ແລະ ສັນສະກິດ.

(4) ສຳລັບສຽງທ້າຍຄຳໃນພາສາລາວກໍ່ມີທັງສະຫຼະ, ມີພະຍັນຊະນະ 8 ຕົວເຊິ່ງພຽງພໍທີ່ ຈະປ່ຽງສຽງຂອງຄຳ ປາລີ ສັນສະກິດໃຫ້ເຂົ້າມາໃນລະບົບສຽງຂອງພາສາລາວ.

(5) ບາງຄຳທີ່ມີທັງສັນສະກິດ ແລະ ປາລີ ພົບວ່າໃນສັນສະກິດມີສຽງ /r/ ແຕ່ໃນປາລີ ສຽງນີ້ກໍ່ຫາຍໄປ ແລະ ແທນດ້ວຍສຽງອັກສອນອື່ນ, ຄຳໃດທີ່ເປັນໄປຕາມກໍລະນີນີ້ ເຫັນວ່າລາວຈະຮັບເອົາຕາມຄຳ ປາລີ ເພາະພາສາລາວແຕ່ເດີມມາກໍ່ບໍ່ມີສຽງ / r /.

(6) ສາເຫດເພາະແຕ່ໃດມາໃນພາສາ ແລະ ໃນການສະກິດຄຳລາວເຮົາໄດ້ມີຫຼັກການ ສະເພາະຂອງຕົນທີ່ເອົາສຽງຂອງພາສາລາວເປັນຫຼັກ ແລະ ຂຽນຕາມສຽງທີ່ເວົ້າ ອອກຢ່າງທຳມະຊາດ. ສະນັ້ນ ຈຶ່ງນິຍົມການຮັບຄຳຕາມຫຼັກການຕັດ, ປ່ຽນ ຫຼື ສອດ ແຊກໜ່ວຍສຽງຂອງພາສາລາວເຂົ້າເປັນສຳຄັນ. ດ້ວຍວິທີຮັບທີ່ໃຊ້ກົດເຊັ່ນນີ້ ການ ເລືອກຮັບຄຳຈາກປາລີ ແລະ ສັນສະກິດ ເຂົ້າມາໃຊ້ຈຶ່ງພົບ ດັ່ງນີ້:

ຄຳປາລີ ຫຼື ສັນສະກິດທີ່ຮັບມີຄຳຕ່າງກັນ ລາວກໍ່ຈະເລືອກເອົາຄຳຈາກໜຶ່ງ ໃນສອງຈະເປັນພາສາໃດກໍ່ໄດ້ທີ່ເຫັນວ່າຕົວໃດທີ່ອອກສຽງໄດ້ສະດວກກວ່າໃນພາ ສາລາວ.

ຫາກສຽງຂອງຄຳໃນປາລີ ແລະ ສັນສະກິດມີຄວາມຕ່າງພຽງເລັກນ້ອຍຈະ ເປັນສະຫຼະ ຫຼື ພະຍັນຊະນະກໍ່ຕາມໃນພາສາລາວຈະເລືອກເອົາຄຳປາລີມາໃຊ້.

ຕົວຢ່າງ :

สันสะกิด	ปาลิ	ลาว	ໝายสญ
/ sveta /	/ seta /	เสด	/ sēt /
/ sūkṣama/	/ sukhuma/	สุขุม	/ sukhum /
/ sāmāññña /	/ sāmaññña /	สามัน	/ sāman /
/ pratimā/	/patima /	ปะติมา	/ patimā /

ແລະ ອື່ນໆ.

ໃນເມື່ອຮູບຄຳໃນປາລິ ແລະ ສັນສະກິດອອກສຽງຕ່າງກັນພຽງເລັກໜ້ອຍ. ແຕ່ໃນພາສາລາວສາມາດອອກສຽງໄດ້ສະດວກທັງຄູ່ພົບວ່າເຮົາກໍ່ຮັບເອົາຄຳມາທັງຄູ່ມາ ແຕ່ຫາກແຍກໃຊ້ໃນກໍລະນີຕ່າງກັນບາງຢ່າງ.

ຕົວຢ່າງ :

สันสะกิด	ปาลิ	ຄຳลาว	ความหมาย
/ sthavara /	/ thapr /	สะถาพอน ถาวอน	(ສ້າງເສີມອັນດີ) (ໝັ້ນຄົງ).
/ sunya/	/suññña /	สูน	จุดสูน, บ่อนเป้นจุดรวม สูน สูนเสย, สูนหาย.
/kriyā /	/ kririya: /	กิลิยา	(ใช้ในไวยะกอนหมาย เถิงคำที่บอกอาการ, เคื่อนไหว); กิลิยา (ใช้กับคนมีความหมายค้าย กับมาละยาดหมายเถิงวาด, ท่าทีที่สะแดงออกของคนใดหนึ่ง)

ນອກຈາກທີ່ສະເໜີມານີ້ກໍ່ຄົງຍັງມີບາງເງື່ອນໄຂກ່ຽວກັບພາສາລາວສຳລັບເລືອກຄຳ ປາລິ ຫຼື ສັນສະກິດເຂົ້າມາໃຊ້ຈຶ່ງຫວັງວ່າທ່ານທີ່ສົນໃຈຢາກສຶກສາເລິກໃນເລື່ອງນີ້ກໍ່ສາມາດຫາ ເອກະສານທີ່ກ່ຽວກັບເລື່ອງນີ້ໂດຍສະເພາະມາສຶກສາເພີ່ມເຕີມຕໍ່ໄປ.

7). ການກາຍຄວາມໝາຍ

ການກາຍຄວາມໝາຍໝາຍເຖິງຄວາມໝາຍຂອງຄຳທີ່ເຮົາຮັບມາຈາກພາສາອື່ນມາ ໃຊ້ໃນພາສາເຮົາ ເມື່ອເຂົ້າມາສູ່ລະບົບຄວາມໝາຍໃນພາສາຂອງເຮົາກໍ່ຈະເກີດການປ່ຽນຈາກ ຄວາມໝາຍເດີມ, ການປ່ຽນນັ້ນອາດເປັນໄປຕາມໜຶ່ງໃນສີ່ທາງຄື:

-ຄວາມໝາຍຍ້າຍ.
-ຄວາມໝາຍເຄື່ອນ,
-ຄວາມໝາຍແຄບເຂົ້າ.
-ຄວາມໝາຍກ້ວາງອອກ.
ນີ້ເປັນກົດທາງພາສາເຊິ່ງມີສິ່ງຈະຕ້ອງປ່ຽນແປງຢູ່ໃນຕົວຂອງພາສາ.

ຄວາມໝາ\ຍຍ້າຍບ່ອນ.
ຕົວຢ່າງ :

ຄຳລາວ	ຄວາມໝາຍເດີມ	ຄວາມໝາຍໃນພາສາລາວ
ອະພິປາຍ	ສັນສະກິດ /abhiprāiya/ ຮ່ວມກັນ ຊາວຍກັນເວົ້າແກ້ບັນຫາ	ຊີ້ແຈງເພື່ອໃຫ້ເຂົ້າໃຈບັນຫາ.

ອະພິປາຍ	ຄຳປາລີ /abhippāya/ ໝາຍເຖິງ ຄວາມມຸ່ງໝາຍ.	ບອກຂໍ້ຄວາມເພື່ອໃຫ້ເຂົ້າໃຈ, ເວົ້າ ເພື່ອໃຫ້ເຂົ້າໃຈໂດຍໃຊ້ຂໍ້ຄວາມ, ເຫດຜົນຕ່າງໆ
ອາໄລ	ປາລີ /ālaya/ ໝາຍເຖິງຕັນຫາ, ຄາວມ ຢາກໄດ້ແກ່ຕົວ. ສັນສະກິດ ໝາຍເຖິງບ່ອນຢູ່, ເຮືອນ	ໝາຍເຖິງ ຄິດຫ່ວງຫາດ້ວຍໃຈເສົ້າ.
ອາສາ	ປາລີ: /āssā/ ໝາຍເຖິງຄວາມຢາກ ໄດ້	ໝາຍເຖິງສະມັກໃຈ, ຂາມໃຈ.
ປະລິຍາຍ	ປາລີ: /pariyāya/ ໝາຍເຖິງຄວາມ ເວົ້າຊ້ຳຫຼືລຳດັບ, ຕາມແບບ	ໝາຍເຖິງໂດຍເປັນໄປຕາມຂະບວນ ອື່ນທີ່ພາເປັນ, ໄປນຳ ແລະ ອື່ນໆ

ຄວາມໝາຍ ແຄບເຂົ້າ.

ຕົວຢ່າງ:

ຄຳລາວ	**ຄວາມໝາຍເດີມ**	**ຄວາມໝາຍໃນພາສາລາວ**
ທຳ, ທຳມະ	ປາລີ /dhamma/ ໝາຍເຖິງສະພາບ ຄວາມສະເໝີເໝືອນ	ໝາຍເຖິງ ຄວາມສັດທ່ຽງຄາວມເປັນ ໄປຕາມທີ່ມັນຕ້ອງເປັນຄວາມຖືກຕ້ອງ
ນິທານ	ສັນສະກິດ /nidāna/ ໝາຍເຖິງກິກ, ເຄົ້າ, ມູນ, ເຫດ.	ໝາຍເຖິງເລື່ອງເລົ່າ, ພື້ນແຜ່ນທີ່ເປັນ ມາ.
ນິຍົມ	ປາລີ /niyama/ ໝາຍເຖິງຄວາມທີ່ ກຳນົດອັນຄັກແນ່ ມັກຢ່າງແຜ່ຫຼາຍ.	ໝາຍເຖິງຄວາມມັກໂດຍເປັນຂະບວນ ການທີ່ເຮັດ.
ພິມ	ປາລີ /bimba/ ໝາຍເຖິງຮູບປຽບ ທຽບແບບ	ໝາຍເຖິງອອກຕາມແບບທີ່ງາມ, ເຮັດ ອອກມາດ້ວຍແບບງາມທີ່ມີແລ້ວ

ວິຫານ	/ vihāra/ ເດີມໝາຍເຖິງຄວາມຢູ່ຢ່າງເທອະດາ, ຢູ່ຢ່າງສູງ.	ໝາຍເຖິງທີ່ຢູ່ຂອງເຈົ້າຫົວ; ສິ່ງກໍ່ສ້າງອັນໜັ້ນຄົງສວຍງາມໃຫ້ຜູ້ເປັນເຈົ້າຫົວຢູ່ ແລະ ອື່ນໆ

ຄວາມໝາຍກ້ວາງອອກ.

ຕົວຢ່າງ:

ຄຳລາວ	ຄວາມໝາຍເດີມ	ຄວາມໝາຍໃນພາສາລາວ
ໂລຫະ	ຄຳເດີມ / loha / ໝາຍເຖິງແນວແຂງທົ່ວໄປ.	ທາດແຂງທີ່ມີຄວາມແຂງ ແລະ ໜຽວ ສາມາດຊັກນຳໄຟຟ້າໄດ້.
ວາດສະໜາ	ຄຳເດີມ / vāsana / ໝາຍເຖິງ ບອກສອນຈົນເຄັຍໃນທາງດີ ຫຼື ທາງຮ້າຍກໍ່ໄດ້.	ແນວຄວາມດີ, ຄວາມມີສຸກມີບຸນສົມພານ.
ລີລາ	ຄຳເດີມ /lilā / ໝາຍເຖິງ ສະພາບ, ອາການທີ່ເກີດເປັນ.	ໝາຍເຖິງວາດວິທີຂອງການເວົ້າ, ຂຽນ, ວາດ, ວິທີການໃຊ້ພາສາສະແດງອອກໃນບົດຂຽນ.
ເວທີ	ຄຳເດີມ /vedi/ ໝາຍເຖິງທີ່ບູຊາ, ພູມທີ່ບູຊາ	ໝາຍເຖິງຮ້ານທີ່ຢູ່ຕໍ່ໜ້າຂອງຜູ້ຟັງຜູ້ຊົມ, ບ່ອນອອກຕົວສະແດງຕໍ່ຄົນຫຼາຍຄົນ ແລະ ອື່ນໆ.

ຄວາມໝາຍເຄື່ອນ

ຕົວຢ່າງ :

ຄຳລາວ	ຄວາມໝາຍເດີມ	ຄວາມໝາຍໃນພາສາລາວ

ພะยายาม	/vyāyāma/ ໝายเถิง: จินอิด เมื่อยจินเต้มแรๆ, สุดแรๆ.	ໝายเถิง: อิดทิน, เร้ดด้วยความอิดทิน.
วิติภา	/ vitakka/ ໝายเถิง: ภานคิด ก่อนที่จะเว้า หิ จะวิจาน.	ໝายเถิง: เป้นห่วๆใยนำจะมิแนอร้ายเกิดใส่.
มาลา	/ mālā / ໝายเถิง: พวๆดอกไม้	ดอกไม้.
เขด	/khetta / ໝายเถิง: ทิๆ, รูบที่สังเขบ	ໝายเถิง: แดน, วิๆที่กำนิด.
คาถา	/gāthā/ ໝายเถิง: คำปะพันที่เว้า ผูกกัน.	ໝายเถิง: สิๆที่เป้นเวดมินสา มาดปาบ หิ ป้อๆกันสิ่ๆอื่นๆ ได้.
คิๆคา	/ gangā / ໝายเถิ ซื่แม่นำ้ใหย่ หิ ซื่หาๆซ้าๆเผือกที่มอๆเห้นยู่ฟ้า.	ໝายเถิงแม่นำ้ที่ก้วางให่ย และยู่ไกจากเริา.

8). บันดาคำปาลิที่รับมาในพาสาลาว.

ຄำปาลิที่ลาวรับเข้ามาใช้ในพาสาติมนั้นมิจำนอมเท่าใดนั้น บ่มินักค้นค้วา ได้บิๆบอกได้ พยๆแต่รู้ว่ามิจำนอมหายกว่าคำที่รับจากพาสาอื่นใดหนึ่ๆ. ปะกามหนึ่ๆ ในนี้คำบาๆคำก่มิความลำบากที่จะชี้บอกว่า เป้นปาลิย่างแม่แท้ เพาะว่าในปาลิ และสันสะกิดก่พิบคำนั้นทังมิความหมาย และ รูบคำย่างดุงกัน. สะนั้น ในบันดาคำต่ไปนี้ ก่คิๆมิบาๆคำที่ต้อๆปะสิบตามกำละนิที่ว่านี้ เกิๆย่างใดผู้ค้นคว้า ก่จะพะยายามเลือก เอาคำที่มิเอกะสานอ้างอิๆเกิๆแหล่งทิมา และ จะเลือกเอาคำที่พิบใช้ในชิวิดสังคม ท่อไปมาให้ได้หายเท่าที่จะหายคำได้ เพื่อเป้นเอกะสานพื้นถานด้านคำยืมไว้ให้แก่ ผู้สินใจจะสึกสาค้น คว้าต่ไป.

ຄຳຕ່າງໆທີ່ມາໃນນີ້ໄດ້ຈາກບັນດາເອກະສານຄື: ວັດຈະນານຸກົມໄທ-ບາລີ; ພາສາຕ່າງປະເທດໃນພາສາໄທ; ທີ່ມາຂອງຄຳບາລີ-ສັນສະກິດໃນພາສາໄທ; ວັດຈະນານຸກົມພາສາລາວ; ແບບຮຽນອັກສອນທຳຂອງລາວ ແລະ ອີກຫຼາຍສະບັບ ດັ່ງຈະສະເໜີໄວ້ໃນພາກທ້າຍຄື ພາກເອກະສານອ້າງອີງ.

ຄຳຮັບຈາກປາລີ:

ຄຳໃນພາສາລາວ	ຄຳເດີມ	ຄຳແປຄວາມໝາຍ
ກະຕິກາ	/ katikā/	ຂໍ້ຕົກລົງໄວ້, ເງື່ອນໄຂທີ່ວາງໄວ້.
ກິມມະລາ	/ komlā /	ນາງງາມ.
ກອນ	/ karṇa /	ຜູ້ເຮັດ, ຄົນ, ມີ.
ກິເລດ	/ kilesa /	ຄວາມເສົ້າໝອງ, ຕ່ຳຊ້າ.
ກະຖາ	/ kathā/	ຖ້ອຍຄຳ, ພື້ນ.
ກະມົນ	/ kamala /	ບົວ.
ກະລຸນາ	/ karuṇā /	ຄວາມສົງສານ.
ກະວີ	/ kavi /	ບົດປະພັນ,ຜູ້ປະພັນຄຳໃຫ້
ກັນຍາ	/ kaññā/	ຍິງງາມ, ສາວງາມ.
ກະສິກອນ	/ ksikara/	ຜູ້ປູກ, ຜູ້ເຮັດນາ.
ກາມ	/ kāma/	ຄວາມຕ້ອງການ, ຄວາມຢາກ.
ກາຍ	/ kāya /	ຕົວ.
ກາລິກ	/ kāraka /	ປະທານ, ຜູ້ນຳໜ້າ.
ກິດຈະການ	/ kiccakāra/	ວຽກງານທີ່ປະກອບ.
ກິດຕິ	/ kitti /	ຄຳຍ້ອງຍໍ, ຄຳສັນລະເສີນຊ່ຳລື.
ກາມະໂລກ	/ kāmaroga/	ພະຍາດທາງກາມຂອງເພດຊາຍ.
ການ	/ kāraṇa /	ເຫດ, ມູນ, ຕົ້ນ.

ກາລະ	/ kāla/	ການເວລາ, ຄາວ, ຍາມ.
ກິລິຍາ	/ kīliya /	ອາການ, ເຮັດ, ສະແດງອອກ.
ກິລາ	/ ki:la:/	ການແຂ່ງຂັນຄວາມສາມາດທາງແຮງກາຍ ຫຼື ສະໝອງ.
ກຸຕິ	/ kuṭi/	ເຮືອນສຳລັບໃຫ້ພະສົງຢູ່.
ກຸມາລີ	/ kumārī /	ເດັກຍິງ.
ກຸສົນ	/ kusala /	ຄວາມດີ,ຄວາມປະເສີດ.
ກຸມານ	/ kumāra /	ເດັກຊາຍ.
ເກສາ	/ kesā /	ຜົມ.
ໂກສີ	/ kə:si: /	ພະອິນ.
ຂະນະ	/ khana/	ຄາວນັ້ນໆ, ໃນເວລານັ້ນ
ຂັນຕິ	/ khanti /	ຄວາມອົດ, ຄວາມທົ້ນ
ເຂດ	/ khetta /	ແດນ,ແວດວົງ, ທີ່
ຂັດຕິຍະ	/ khattiya /	ເຈົ້າແຫ່ງແຜນດິນ
ຄົງຄາ	/ gongā /	ແມ່ນ້ຳໃຫ່ຍ,ນ້ຳທະເລ
ຄະນະ	/gaṇa /	ໝູ່, ພວກ, ຝູງ
ຄຸນ	/ guṇa /	ທະວີຕົວດ້ວຍຈຳນວນເທົ່າຕົວ.
ຄະດີ	/ gadi: /	ເລື່ອງ, ຄວາມ.
ຄະຕິ	/ gati/	ວິທີ, ແບບ, ແນວທີ່ດຳເນີນ.
ຄຳພີ	/ gambhira/	ເລິກເຖິງ, ຄຳທີ່ເລິກ.
ຄາລະວະ	/gārava/	ຄວາມນັບຖື.
ເຄຫາ	/ geha /	ເຮືອນ.
ໂຄຈອນ	/gocara/	ທາງເດີນ, ການໄປຕາມທາງ
ຈັກຂຸ	/ cakkhu /	ຕາ.

24 / VII
ทลุจุฬาลงกรณ์มหาวิทยาลัย

จัดตะอา	/ catvā/	ອັນທີ່ສີ່, ໝາຍໄຂ່ວຕົນກາ.
จาริด	/ cārīta /	ທຳນຽມທີ່ປະຕິບັດມາ.
จินตะนากาม	/cintanākara /	ຄວາມຄິດ.
จะตุ	/ catu /	ສີ່.
จะตุปัดไจ	/ catupaccaya/	ປັດໄຈສີ່ຢ່າງສຳລັບການລ້ຽງ ແລະ ຄ້ຽຊີບ.
จอม	/ cara /	ໄປ, ທ່ຽວໄປ.
จันทา	/ canda/	ຈັນ, ດວງເດືອນ.
จารุ	/ caru/	ຄຳ.
จีวอม	/ cīvara/	ຜ້າຄຸມຂອງພະສົງ.
เจตะนา	/ cetanā /	ຄວາມຕັ້ງໃຈ, ຄວາມມຸ້ງໝາຍ.
เจดิ	/ cetiya /	ທີ່ບູຊາ
ชินละ	/ jala/	ນ້ຳ.
ชะลาไล	/ jalālaya/	ແມ່ນ້ຳ.
ชิน	/ jana /	ຄົນ.
ไช	/ jaya /	ແພ້, ຊະນະ.
ชะลา	/ jarā /	ຄວາມແກ່, ເຖົ້າ.
ชาด	/ jāti/	ຕະກູນ, ທີ່ເກີດມາ.
ชิด	/ jita /	ຊະນະແລ້ວ, ໄດ້ໄຊ.
ชิน	/ jina /	ຜູ້ໄດ້ໄຊ.
ชีวิด	/ jīvita /	ຄວາມເປັນຢູ່.
ชุติมา	/ sutimā /	ຜູ້ມີຄວາມຮຸ່ງເຮືອງ.
ชาดิก	/ jātaka /	ພື້ນແຜ່ນ ຂອງພະພຸດທະເຈົ້າ.
ชีบ	/ jīva /	ຄວມເປັນຢູ່.
โชด	/ joti/	ສະຫວ່າງ, ເຮືອງຮຸ່ງ

ดาลา	/ tara/	ดาว, ดวงดาว.
ดุริยางฺ	/ turiyani/	วิงฺของเคื่องเสบ.
ดุล	/ tulā /	ชิง, ถันชั่ง, ตาชั่ง.
ตันหา	/ taṇhā/	ถวามยาก.
ตุลา	/ tulā /	อันแพก, อันชั่ง
ตักกะ	/ takka /	ถวามติกตอง, ติกตองด้วยเหดผิม
ถาวร	/ thāvara /	ถวามพั้นคิง.
เถระ	/ thera /	เจ้าหิว.
ทะวาน	/ davāna/	รู, ป่อง
ทะวิ	/ dvi /	สอง
ทักขิน	/ dakkhin/	ทิดใต้
ทายาด	/ thiyat /	ผู้สืบเชื้อสาย.
ทาด	/ dāsa/	ผู้รับใช้.
ทิวา	/ diva/	มื้สวาย.
ทุก	/ dukkhata /	ถวามขาด, ถวามยาก, จินไร้.
ทุจะลิด	/ ducarita/	เรัด แมวบ่ดิ.
เทบ	/ deva /	เทวะดา.
ทะนะ	/ dhana /	สับสิม.
ทะนู	/ dhanu /	หน้าทะนู
ทันยาหาน	/ dhaññāhāra/	อันที่เป็นอาหานทั้งมวม
ทาด	/ dhātu /	
ทาม	/ dha:raṇa /	ต้ามหาม, สู้ถ้ำไว้
ทายิกา	/ dāyika /	ผู้ให้ (ที่เป็นเพดยิง)
ทาลิก	/ dāraka /	ลูกน้อย

ทาลุน	/ daruna/	ทำร้าย, ร้ายกาด
ทินะกอน	/ dinakara /	แห่งพะอาทิด
ทิบ	/ dvipa /	แสงแจ้ง, แสงไฟ
ทำละนิ	/ dharaṇī /	แผ่นดิน
ทานิ	/ dhāṇī/	เมือง
ทาลา	/ dhāra /	สายน้ำ
นันทา	/ nandana/	ความสุก.
นาลิก	/ nāraka /	หมื้นาลิก,บ่อนแห่งความทุกทำละมาน.
นายิก	/ nayaga/	ผู้นำที่สูง, ผู้นำหน้า.
นาวา	/ nāvā /	เรือ.
นาลิกา	/ nāḷikā /	เถื่องนับเวลา.
นิกาย	/ nikāya/	หมู่, พวก.
ทิดา	/ dhīta /	ลูกยิง.
ทิละ	/ dhīra /	นักปาด.
ทูบ	/ dhūpa/	ของสำลับจูดให้เกิดกิ่นหอมเพื่อบูชา.
นะคอน	/ nagara /	เมืองใหย่.
นะที	/ nadī /	แม่น้ำใหย่.
นาก	/ nāga/	งูใหย่, นาก.
นานา	/ nānā /	ความต่างๆ, อันต่างๆ .
นาม	/ nāma/	ชื่.
นารี	/ nārī /	นางสาว.
นิกอน	/ nikara /	หมู่, พวก, วิงวาน.
นิคม	/ nigama /	คุ้ม, ชุมนุม.
นิติ	/ niti /	กิดหมาย.

ນິທານ	/ nidāna /	ເຫດ, ພື້ນ, ເລື່ອງ.
ນິບພານ	/ nibbāna /	ຄວາມດັບກິເລດ, ດັບແນວຕັນຫາໄດ້
ນິມົນ	/ nimanta/	ການເຊີນ ພະສົງ.
ນິຍົມ	/ niyama /	ການກຳນົດເອົາ.
ນິນ	/ nila /	ສີດຳ.
ນິວອນ	/ nivara/	ສິ່ງຫ້າມໃຈຄິດບໍ່ໃຫ້ເຮັດ.
ນິໄສ	/ nissaya/	ທີ່ເພິ່ງ, ທີ່ຢູ່ກັບ
ນິນທາ	/ nindā/	ຈົ່ມຂ້ວນລັບຫຼັງ
ນິພົນ	/ nibandha /	ຂຽນເລື່ອງເປັນປຶ້ມ, ສ້າງເລື່ອງ.
ນິມິດ	/ nimitta /	ແປງ, ສ້າງໃຫ້ເກີດ.
ນິຍາມ	/ niyāma /	ກຳນົດຄວາມ.
ນິວັດ	/ nivattana /	ກັບ, ຄືນ.
ບໍດີ	/ pati/	ນາຍ.
ບໍລິຈາກ	/ paricāga /	ການສະຫຼະ.
ບໍລິເວນ	/ parivena /	ເຂດວົງ, ຂອບ.
ບໍລິຫານ	/ parihāra /	ດູແລ, ຈັດໃຫ້ເດີນການ.
ບັນດິດ	/ pandita /	ມີປັນຍາຄວາມຮູ້.
ບາດານ	/ pādāla /	ພື້ນດິນ.
ບາດ	/ pāda /	ຕີນ.
ບານ	/ pāla /	ກຳກັບ, ດູແລ.
ບຸລີ	/ purī /	ເມືອງ.
ບໍລິໂພກ	/ paribhoga /	ກິນ.
ບໍລິສຸດ	/ parisuddhi /	ປອດໃສ.
ບັນຍັດ	/ paññatti /	ການຕັ້ງຂຶ້ນ.

ບາບ	/ pāpa /	ຄວາມຊົ່ວ.
ບຸຄະລິ	/ puggalika /	ສະເພາະ ບຸກຄົນ.
ບູຮານ	/ porāna /	ເກົ່າກ່ອນ.
ປົກກະຕິ	/ pakati /	ຄວາມເປັນເຊັ່ນນັ້ນ, ຢູ່ຢ່າງນັ້ນ.
ປະການ	/ prakāna /	ຢ່າງ, ອັນ, ຊະນິດ.
ປະຕິການ	/ paṭikāra /	ການຕອບຄືນ.
ປະຕິທິນ	/ paṭidina /	ແບບສຳລັບເບິ່ງການປ່ຽນ. ວັນ ເດືອນ ປີ.
ປະຕິພາກ	/ patibhāga /	ທຽບ, ຄຽງ, ໃກ້.
ປະຕິມາກອນ	/ patimākara /ຮູບປຽບທຽບ.	
ປະຕິຮູບ	/ patirupa /	ປັບປຸງແປງ.
ປະຕິວັດ	/ pativatti /	ການປິ່ນກັບ, ຫັນກັບຄືນ.
ປະຕິສົນທິ	/ patisandhi /	ເກີດອັນໃໝ່.
ປະຖະພີ	/ pathavī /	ແຜ່ນດິນ.
ປະຫານ	/ prahāra /	ຂ້າລ້າງ, ເຮັດໃຫ້ຕາຍ.
ປັດຈຸບັນ	/ paccupanna/ດຽວນີ້.	
ປະຕິກິລິຍາ	/patikiraya /	ຜົນທີ່ສະແດງຂອງການເຮັດ.
ປະຕິພານ	/ patibhāna /	ຕອບຄືນໂດຍໄວ.
ປະຕິເສດ	/ patisedha /	ບໍ່ຮັບ.
ປະຖົມ	/ pathama /	ຂັ້ນຕົ້ນ, ຂັ້ນທຳອິດ.
ປະສູດ	/ pasūti /	ເກີດ, ອອກລູກ.
ປະລິນຍາ	/ pariññā /	ຄວາມຮອບຮູ້, ຮອລດ້ວຍຄວາມຮູ້.
ປັດໄຈ	/ paccayā /	ເງື່ອນໄຂທີ່ພາໃຫ້ກໍ່ເກີດ.
ປັນຍາ	/ paññā /	ຄວາມຮູ້.
ປັດສະວະ	/ passāva /	ນ້ຳຍ່ຽວ.

ปิฎิก	/ pitaka /	ຄຳສອນຂອງພະພຸດທະເຈົ້າ.
ปิตา	/ pitā /	ພໍ່.
ผาสุก	/ phasuka /	ຄວາມສຸກສຳລານ.
เผด	/ peta /	ເຜດ, ຜູ້ຕາຍໄປແລ້ວ.
ผะลิด	/ phalita /	ເຮັດອອກເປັນ.
พิด	/ vaccana/	ຄຳເວົ້າ, ຖ້ອຍຄຳ.
พะเนจอม	/ vanecara /	ທ່ຽວໄປຕາມປ່າ.
พะยาบาด	/ vayāpādha /	ອາຄາດ, ເກັບຄວາມແຄ້ນໃຈໄວ້.
พะยาด	/ vayādhi/	ເຊື້ອທີ່ພາໃຫ້ເກີດຄວາມເຈັບ.
พอม	/ vara /	ໃຫ້ຄຳທີ່ດີຕໍ່.
พะหิน	/ bahara/	ໃຫ່ຍ, ຫຶກຫື້ນ, ໂຕ.
พาม	/ bāla/	ສັດຮ້າຍ.
พิฆาด	/ vighāta /	ຂ້າ, ທຳລາຍ.
พิจาละนา	/ vicāraṇa /	ໄຕ່ຕອງຄິດງ່ຳ.
พิจิด	/ vicitta /	ຕ່າງໆ, ງາມ
พิชิด	/ vijita /	ຊະນະ, ປາບ.
พิพาด	/ vivāda /	ຜິດຄວາມກັນ, ຂໍ້ຄວາມກັນ.
พิม	/ bimba/	ຖ່າຍຖອນແບບ.
พันทะนาการาม	/ bandhanākāra/	ການຈອງຈຳ.
พัน	/ bandhu/	ເຊື້ອແມວ.
พิไช	/ vijaya /	ຄວາມຊະນະ.
พิบัด	/ vipatti /	ຄວາມຈິບຫາຍ.
พิบูน	/ vipula /	ກ້ວາງຂວາງ, ຫຼາຍ.
พะคะวา	/ bhagavanta /	ພະຜູ້ເປັນເຈົ້າ, ນາມພະພຸດທະເຈົ້າ.

ພາລະ	/ bhāra /	ຂອງໜັກ, ນ້ຳໜັກ
ພາຊະນະ	/ bhājana /	ເຄື່ອງສຳລັບໃສ່ສິ່ງຂອງ
ພິໄສ	/ visaya /	ເຂດແຄ້ວນ, ແດນ, ວິງ, ຂັ້ນຂີດ.
ພຸດທະ	/ buddha /	ຜູ້ຕື່ນແລ້ວ, ຜູ້ຕັດສະຮູ້.
ພານຸ	/ bhānu /	ແສງສະຫວ່າງ, ພະອາທິດ.
ພາວະ	/ bhāva /	ທີ່ເປັນ, ທີ່ປະກົດ, ສະພາບ.
ເພດ	/ vesa /	ການແບ່ງ, ແຍກຊະນິດ.
ໂພຊະນາ	/ bhojana /	ແນວກິນໄດ້, ອັນກິນໄດ້.
ມົງກຸດ	/ makuta/	ເຄື່ອງຖືໃສ່ຫົວເພື່ອປະດັບ.
ມະຍຸລາ	/ mayūra /	ນົກຍູງ.
ມະໂຫລານ	/ maholāra /	ຍິ່ງໃຫ່ຍ.
ມົງຄຸນ	/ maṁgala /	ມົງຄຸນ.
ມັດສາ	/ maccha /	ປາ.
ມະເຫສີ	/ mahesī /	ຊາຍາຂອງພະເຈົ້າແຜ່ນດິນ.
ມັດຈຸລາດ	/ maccurāya /	ຄວາມຕາຍ.
ມະຕິ	/ mati /	ຄຳເຫັນ.
ມົນ	/ manta /	ຄຳສັກສິດ.
ມະຫິງສາ	/ mahinisa /	ໂຕຄວາຍ.
ມາດາ	/ mātā /	ແມ່.
ມາຕຸ	/ mātu /	ແມ່.
ມານະ	/ māna /	ຄວາມພະຍາຍາມ.
ມານ	/ māra /	ຜູ້ກີດກັນການສ້າງຄວາມດີ, ຜູ້ໃຈບາບ
ມາລີ	/ mālī /	ຜູ້ແຕ່ງດ້ວຍດອກໄມ້, ເອ້ດ້ວຍດອກໄມ້.
ໂຍນີ	/ yonī /	ມົດລູກ, ທີ່ໃຫ້ກຳເນີດລູກ.

ยันต	/ yanta/	ເຄື່ອງຈັກ.
ยุตฺติ	/ yutti /	ຖືກຕ້ອງ, ຊອບທຳ.
รัตตะนะ	/ rattana/	ແກ້ວ.
รัฏ	/ raṭṭha /	ແຄ້ວນ, ເຂດແດນ.
รัสสะฆิ	/ rasmi /	ແສງພະອາທິດ ໃນຕອນເຊົ້າ.
โรหิต	/ rohita /	ເລືອດ.
โรจะนา	/ rocana /	ຮຸ່ງເຮືອງ.
โลภ	/ lobha /	ຄວາມຍາກໄດ້ບໍ່ຮູ້ພໍ.
ลามิก	/ lāmaka/	ຄວາມເປື້ອນເປິ, ຊົ່ວ.
ลีลา	/ līlā /	ແບບການເວົ້າທີ່ງາມ.
เลขา	/ lekhā /	ຮອຍຂຽນ, ລາຍມື.
วาทะ	/ vāda/	ຄຳເວົ້າ, ເວົ້າ.
วะนิดา	/ vanitā /	ຍິງສາວ.
วัฑฒนา	/ vaḍḍnana/	ຄວາມຈະເລີນ.
วันทา	/ vanda /	ໄຫວ້.
วาจิก	/ vācaka /	ຜູ້ກ່ວາ, ຜູ້ບອກ.
วัจจะนะ	/ vacana /	ຄຳສັບ.
วะนะ	/ vana /	ປ່າ.
วัตถุ	/ vatthu /	ສິ່ງຂອງ, ເຄື່ອງ.
วาจา	/ vācā /	ຄຳເວົ້າ.
วาปี	/ vāpī /	ໜອງນ້ຳ.
วาโย	/ vāyo /	ລົມ.
วิพัต	/ vibatti /	ການຈັດພວກ, ຈັດກຸ່ມ.
วิไจ	/ vicaya /	ການຄົ້ນໃຫ້ຮູ້ລະອຽດ.

ວິນຍານ	/ viññāṇa /	ຄວາມຮູ້ແຈ້ງ, ຈິດ.
ວິນິດໄສ	/ vinicchaya /	ໃຫ້ຄຳຈະແຈ້ງ, ຊີ້ຂາດ.
ວິໄລ	/ vilaya /	ການມຸ່ນ, ການລະອຽດລະອໍ.
ວິພາດາ	/ vibhātā /	ສະຫວ່າງແຈ້ງ.
ວິສາສະ	/ visāsa /	ຄວາມແກ່ນ, ຄຸ້ນ, ເຄີຍ.
ວຸທິ	/ vuḍḍhi /	ຄວາມຈະເລີນ, ສວຍງາມ.
ເວລະມະນີ	/ veramaṇi /	ການງົດ, ອົດກັ້ນໄວ້.
ເວຫາ	/ vehā /	ຟ້າ, ກາງຫາວ.
ສະກຸນາ	/ sakunā /	ນົກ.
ສະພາບ	/ sabhāva /	ຄວາມເປັນ, ທີ່ເກີດ.
ສະຫາຍ	/ sahāya /	ເພື່ອນຮ່ວມເປັນຮ່ວມຕາຍ.
ສົງ	/ saṅgha /	ພະພິຊຸໃນພຸດທະສາສະໜາ.
ສົງສານ	/ saṁsāra /	ການວຽນຕາຍວຽນເກີດ.
ສົມບັດ	/ sampatti /	ຄວາມທີ່ພ້ອມແລ້ວ, ຄວາມເຕັມທີ່.
ສົງໄສ	/ saṁsaya /	ຄວາມບໍ່ເຊື່ອ.
ສະມັດຊາ	/ samajjā/	ການຮ່ວມກັນເພື່ອສ້າງປະໂຫຍດໃດໜຶ່ງ.
ສັດຈະ	/ sacca /	ຄວາມຊື່ຈິງ, ຕາມຊື່.
ສັນຖານ	/ saṇṭhāna /	ຊອດຊົງ, ແບບ.
ສັນຕິ	/ santi/	ງຽບ, ສະຫງົບ.
ສຳປະຊັນຍະ	/ sampajañña/	ການຮູ້ຕົວຢູ່ສະເໝີ ມີສະຕິ.
ສັບປະດາ	/ saptāha/	ເຈັດ.
ສັກຂີ	/ sakkhī /	ເປັນພະຍານໃຫ້, ຮູ້ເຫັນນຳ.
ສັງເຂບ	/ saṅkhepa /	ການຫຍໍ້, ເຮັດຢ່າງສັ້ນ.
ສັນຍາ	/ saññā /	ຄວາມຕົກລົງ ເຂົ້າໃຈກັນ.

ສັດຕະ	/ satta/	ເຈັດ.
ສັດທາ	/ sadda /	ຄວາມເຫື້ອມໃສ.
ສັນຖະວະ	/ sathava /	ຄວາມຮູ້ຈັກກັນ, ເຄີຍກັນ.
ສາບານ	/ sapana /	ເວົ້າໃຫ້ຄຳປະຕິຍານ.
ສາມັກຄີ	/ sāmaggī /	ຄວາມຮ່ວມກັນ, ພ້ອມພຽງກັນ.
ສາມີ	/ sāmī /	ຜົວ.
ສຸກ	/ sukha /	ຄວາມສະບາຍ.
ສຸບິນ	/ supina /	ຄວາມຝັນ.
ສຸພອນ	/ subhara /	ລ້ຽງງ່າຍ.
ສາທິດ	/ sādhita /	ສະແດງເປັນຕົວຢ່າງ, ສຳເລັດ
ສາຍັນ	/ sāyanha /	ຍາມແລງ.
ສຶກສາ	/ siksā /	ການຮ່ຳຮຽນ, ການເຮັດໃຫ້ຮູ້.
ສິລິ	/ siri/	ຄວາມເປັນດີ.
ໂສຕະ	/ sota /	ຫູ.
ຫາຍະນະ	/ hāyana /	ຄວາມສູນເສຍ.
ອະພິນິຫານ	/ abhinihāra /	ອຳນາດແຫ່ງລາບະມີ, ມີຄວາມເກ່ງ.
ອັກຄີ	/ aggi /	ໄຟ.
ອັດຊະລາ	/ acchārā /	ນາງຟ້າ.
ອາຈານ	/ ācāraya /	ຜູ້ສອນ.
ອະນຸພາບ	/ anubhāva /	ອຳນາດ, ລິດເດດ.
ອາພັບ	/ abhabba /	ບໍ່ສົມຄວນ, ບໍ່ສາມາດ.
ອະນາຄົດ	/ anāgata/	ພາຍໜ້າ.
ອະນຸມັດ	/ anumati /	ເຫັນດີໃຫ້.
ອະພິນຍາ	/ abhiññā /	ຄວາມຮູ້ແທ້.

24/VII
ห้ามเอ็กซเคย

ອະເວຈີ	/ avīci /	ສູ່ຄວາມມອດມ້ວຍ.
ອະນິສົງ	/ ānisaṁsa /	ຜົນຈາກບຸນ.
ອາລົມ	/ arammaṇa /	ສິ່ງທີ່ຍຶດຈິດໃຈ.
ອາຫານ	/ āhārā /	ຂອງກິນ.
ອຸນຫະພູມ	/ uṇhabhūmi /	ຄວາມຮ້ອນຄວາມອົບອຸ່ນ.
ອຸດອນ	/ uttara /	ທິດເໜືອ.
ອຸບາດ	/ upādava /	ອັບປີ, ຈັ່ງໄຮ.
ອຸເບກຂາ	/ upekkha /	ຄວາມໃຫ້ໃຈເປັນກາງ.
ອຸປະຖຳ	/ uptthambha /	ການຄ້ຳຈູນ.
ອຸລາ	/ ura/	ເອິກ, ອົກ.
ອຸຕຸ	/ utu /	ລະດູ, ຍາມ.
ໂອວາດ	/ ovāda/	ຄຳແນະນຳ.
ໂອສົດ	/ osatha /	ຢາ.

9). ຄຳສັນສະກິດທີ່ຮັບເຂົ້າມາໃນພາສາລາວ

ເນື່ອງຈາກຮູບຄຳຂອງປາລີ ແລະ ສັນສະກິດມີຫຼາຍຄຳຄ້າຍກັນສະນັ້ນພາໃຫ້ການຕັດສິນວ່າຄຳທີ່ຮັບມາໃນພາສາລາວນີ້ແມ່ນຮັບຈາກພາສາໃດແທ້ນັ້ນມີຄວາມຍາກພໍຄວນນອກຈາກເລື່ອງນີ້ ກໍ່ມີເລື່ອງວິທີການຮັບນັ້ນພົບວ່າຫຼາຍໆຄຳເຮົາໄດ້ຮັບຜ່ານພາສາອື່ນໃດໜຶ່ງເຂົ້າມາໂດຍເອົາສຽງຂອງຄຳກັບຄວາມໝາຍເປັນສຳຄັນບໍ່ແມ່ນເອົາຮູບຂຽນເປັນສຳຄັນ. ພ້ອມດຽວກັນນີ້ລະບົບການອອກສຽງຂອງຄຳໃນພາສາລາວກໍ່ມີກົດແຫ່ງການຕັດ, ຕື່ມ ຫຼື ແປງສ່ວນປະກອບໃດໜຶ່ງຂອງຄຳຄວບຄຸມຢູ່ນີ້ຖືວ່າເປັນກົດເຊິ່ງຮຽກວ່າກົດຂັດສີສ້ອມແຊມແກ່ສັບທີ່ຮັບມາ

จากพาสาอื่นและกิดนี้พาให้เลือกเอ๋าคำขอๆพาสาอื่นที่เห้นว่าออกสูงได้สะดวกกว่าในพาสาติน.

ด้วยสิ่งที่ก่าวมานี้จะให้เห้นว่า ทานที่คำสันสะกิดถืกรับมาสู่พาสาลาวมีจำนวนหน้อยกว่าคำปาลินั้นอาดมีเสื่องสูงในคำก่วงข้องนำ เพาะว่าคำปาลิหูายคำเมื่อออกสูงจะใก้กับสูงพาสาลาวหูาย ส่วนคำสันสะกิดหูายๆสูงก่บ่มีในพาสาลาว จิ่งพาให้คินลาวออกสูงยาก. นอกจากนี้เหดผินทางสาสะหนา และ วัดทะนะทำ ก่คิงมีบิดบาดบ่หน้อยต่กับการรับคำจากสันสะกิดเข้ามาในพาสาลาว. ในต่ไปนี้จะเป็นการสะเหมิบันดาคำที่รวบรวมได้โดยพิบว่าเป็นคำสันสะกิด. บันดาคำในนี้อาดกวมบ่ได้ทั่งหมิดทุกคำที่รับมาแต่ก่คิงได้จำนวนหูายสิมควน, คำใดที่ยังขาดหายในนี้จะได้เกับกำ และ ปะกอบเข้าต่ไปในพายหน้า.

คำลาว	รูบคำสันสะกิด	ความหมายที่แป.
กาละกินิ	/ kālakiṇī /	โຊกร้าย.
กะเสิม	/ ksema /	สะบายใจ.
คะลิหัด	/ gṛhastha /	ผู้คองเรือน.
โคด	/ gotra /	เชื้อสายุ, จุ่น, ลายลอๆ.
จักกิ	/ cakī /	พะลาชา, ผู้ปกคอๆ.
จันยา	/ caryā /	ความปะพิดออก.
เจดิ	/ cetiya /	ที่เคิาลิบนับถิ.
ซับ, ซับสิน	/ dravya /	สิ่งที่มิค่า.
เชดถา	/ jyeṣṭha /	ผู้กิก, ผู้เป้นใหย่, อ้าย.
ดินติ	/ tantrin/	สูงที่ได้ยินม่วน, สูงออมซอม จากเคื่องให้สูง.
ติกตอๆ	/ tarka /	นึก, คิด.

ທໍລະມານ	/ dama /	ຂົ່ມ, ເຮັດໃຫ້ລຳບາກຫຼືເຈັບ,ເຝິກຫັດ.
ທິບ	/ divya /	ເປັນຂອງເລີດ, ຂອງເທວະດາ.
ທຳ	/ dharma/	ຄວາມຊອບທຳ,ຄວາມເປັນກາງແກ່ ທຸກຝ່າຍ.
ນະພາ	/ nabhas/	ທ້ອງຟ້າ.
ນະຄະລິນ	/ nagara /	ເຈົ້າແຫ່ງນະຄອນ, ເຈົ້າເມືອງ.
ນໍລະນາດ	/ naranadh /	ນັກສູ້, ຄົນເກ່ງ
ນະລິນ	/ narindra/	ພະລາຊາ, ຜູ້ປົກຄອງ.
ນາລົນ	/ nārin /	ເຮືອ.
ນິທັດ	/ nidassana/	ສິ່ງທີ່ນຳມາໃຫ້ເຫັນ, ເປັນຕົວຢ່າງ ໃຫ້ເຫັນ.
ນິຕິສາດ	/ nitiśāstra/	ວິຊາກົດໝາຍ.
ນິເທດ	/ nirdeśa/	ຄຳສະແດງໃຫ້ຍິນເພື່ອຮູ້.
ນິຕິ	/ neti /	ແບບແຜນ.
ເນດ	/ netra /	ຕາ.
ບໍລິບູນ	/ paripūrṇa/	ເຕັມທີ່, ຄົບ, ຖ້ວນ.
ບໍລິວານ	/ parivāna/	ຜູ້ທີ່ເປັນແວ້ດວົງຮັບໃຊ້, ລູກມືອ້ອມ ຂ້າງ
ບັດ	/ patra /	ໃບ, ກີບດອກໄມ້, ງ່ຳດອກໄມ້.
ປະຕິປັກ	/ patipakṣa/	ສັດຕູ, ຜູ້ມີຄວາມແຄ້ນຕໍ່.
ປົກກະຕິ	/ prakṛti /	ຄວາມເປັນຢ່າງສະເໝີໆ, ຄົງທີ່.
ປາກົດ	/ prakaṭa /	ໃຫ້ເຫັນ, ເຫັນອອກມາ.
ປານີ	/ praṇīn/	ຜູ້ທີ່ມີຊີວິດ.
ປາໂມດ	/ prāmukhaya/	ຄວາມລື່ນເລີງ ທາງໃຈ.

ปาไส	/ prasraya /	ท่าอเว้าด้วยความดี,ด้วยความห่วงใย.
ปิสะหา	/ praṣna/	คำที่มีความเลิกเซิ่ง, คำถาม.
ปิชา	/ prijjhā /	ความรอบรู้.
เปิกสา	/ prtśā /	โฮ้ฉิมให้คำเห็นมำกัม.
พิทัก	/ bidakśa /	รักสา, ปกปัก.
พินาด	/ vināśa/	ความจิบหาย.
พิพาก	/ vivakṣa /	ตัดสินคะดีความ.
เพด	/ veśa /	รูบ.
ไพจิด	/ vicitra /	งามเด่ม, รูบทางใจว่าเด่มงาม.
ไพสาม	/ viśala/	ก้วางใหย, ทั่งปวง.
พันละยา	/ bhārya /	เมย.
มะนุด	/ manuṣya /	คิม, ก่วงกับคิม.
มิมติ	/ mantrin /	ที่ปึกสา, ผู้แมะนำ.
มัดสา	/ matsya /	ปา.
มะหัดสะจัม	/ mahatsacaya /	แปกปะหาด.
มัดทะยัด	/ madhyaṣt /	ใช้ย่างยอมๆ. ยอมใช้
มุกดา	/ mukta /	ไข่มุก.
เมขะลา	/ mekhalā /	นางเทบทิดาบิมฟ้า.
ยัก	/ yakṣa /	ติวร้าย, ผียัก.
ลาชะวิ่ง	/ rājavaṃśa /	เชื้อสาย แห่งลาชา.
ลาสะดอม	/ rāṣṭra /	ปะชาชิม, ชาวไพ่
วัก	/ varga /	ตอม, หมวดหมู่.
วันนะ	/ varṇa /	สี, ผิว.

ວັດສະດຸ	/ vāstu /	ສິ່ງຂອງສຳລັບໃຊ້ງານ.
ວິພາກ	/ vibhāga /	ແຍກ, ແບ່ງເປັນໝວດໝູ່.
ວິສະຫວາດ	/ viṣvās /	ຄວາມຮູ້ເຄີຍ, ຄຸ້ນເຄີຍ.
ສະກຸນີ	/ śakuni/	ນົກ (ໂຕແມ່).
ສົງກາ	/ śaṁkā /	ສົງໄສ.
ສັກດາ	/ śakti /	ອຳນາດ.
ສັດຕູ	/ śatru /	ຂ້າເສິກ, ພວກເປັນປໍລະປັກ.
ສາສະດາ	/ śastṛ/	ຜູ້ສອນ, ຜູ້ໃຫ້ຄວາມຮູ້.
ສາສະໜາ	/ śāsana/	ລັດທິແຫ່ງຄວາມເຊື່ອຂອງຄົນ.
ສິລະປະ	/ śilpa /	ສີມື, ລວດລາຍຈາກສີມື.
ສຶກສາ	/ śikṣa /	ການຮຳຮຽນ.
ສົງເຄາະ	/ saṃgraha /	ການຊ່ວຍເຫຼືອ, ອຸດໜູນ.
ສະຖາປັດຕິຍະກຳ	/ sthāpattayakarma /	ການກໍ່ສ້າງ.
ສະຕິ	/ satī /	ນາງທີ່ມີຄວາມຊື່ສັດຕໍ່ຜົວ.
ສົມເພດ	/ smbeja /	ຄວາມເສົ້າໃຈນຳ.
ສົມພົບ	/ smbhoba /	ການເກີດ.
ສາມາດ	/ samartha /	ເຮັດໄດ້, ເປັນ.
ສະຫວັນນະຄົດ	/ svanagota /	ໄປສູ່ສະຫວັນ, ຕາຍ.
ສະຫວາດ	/ svāda /	ໜ້າມັກ, ສະໃສ.
ສັດຕະວະ	/ sattva /	ສິ່ງທີ່ໄປເອງໄດ້.
ສາມານ	/ sāmānya /	ໂຫດຮ້າຍ, ຕ່ຳຊ້າ.
ອຸທິດ	/ uddiśya /	ເຈາະຈົງ, ເບິ່ງເຫັນໃນສິ່ງນັ້ນໆ.
ອັດສະດົງ	/ ʔastoŋ /	ຕົກໄປ.
ອານົງ	/ ʔnoŋga /	ນາງ.

ອັບປີ	/ ʔupriya /	ຊື່ອ, ໂງ່, ເຫງີກ.

5. ການຮັບຄຳຈາກພາສາຝຣັ່ງ

1).ຄວາມເປັນມາໂດຍຫຍໍ້ຂອງການຮັບຄຳຈາກພາສາຝຣັ່ງສູ່ ພາສາລາວ.

ປະຫວັດສາດລາວໃຫ້ຮູ້ວ່າລວມເວລາທີ່ລາວຕົກເປັນອານານິຄົມໃຫ້ແກ່ຝຣັ່ງນັ້ນເປັນ ເວລາ 60 ປີ ໂດຍເລີ່ມແຕ່ ປີ ຄ. ສ. 1893[1]. ເພາະກ່ອນນີ້ຍັງບໍ່ພົບເອກະສານໃດທີ່ສະແດງໃຫ້ ເຫັນວ່າ ລາວໄດ້ມີຄວາມສຳພັນກັບຝຣັ່ງໃນສະຖານໃດໆຈົນພາໃຫ້ເກີດການຮັບເອົາ**ຄຳຈາກພາ** ສາຝຣັ່ງເຂົ້າມາໃຊ້. ຝຣັ່ງໄດ້ເຂົ້າມາລາວໃນສະໄໝທີ່ລາວໄດ້ເສຍຄວາມເປັນເອກະລາດ **ແລະ** ຕົກເປັນເມືອງສ່ວຍໃຫ້ສະຫຍາມມາແລ້ວ. ສະນັ້ນ ຄວາມເສື່ອມໂຊມທາງການສຶກສາ, ວັດທະ ນະທຳສັງຄົມຈຶ່ງເປັນທີ່ເຫັນໄດ້ຢ່າງຈະແຈ້ງ ໂດຍສະເພາະການສຶກສາກໍ່ຍັງອາໄສວັດພຽງບາງ ແຫ່ງເປັນທີ່ສິດສອນ ແລະ ຮ່ຳຮຽນ. ການສອນກໍ່ຈຳກັດໂດຍເນັ້ນການຮຽນໃຫ້ຮູ້ເລື່ອງທຳມະອັນ ພື້ນຖານ, ການເທດກໍ່ໃຊ້ຄຳປາລີ ສັນສະກິດເປັນສຳຄັນ. ປີ 1902 ຢູ່ລາວມີໂຮງຮຽນພຽງສອງ ແຫ່ງທີ່ວຽງຈັນ ແລະ ຫຼວງພະບາງສຳລັບສອນພາສາຝຣັ່ງ; 1915 ທົ່ວປະເທດມີໂຮງຮຽນພຽງ 12 ຫຼັງນັກຮຽນ 260 ຄົນ ເຊິ່ງສ່ວນຫຼາຍແມ່ນຄົນຕ່າງດ້າວ[2]. ດ້ວຍສະພາບການສຶກສາເຊັ່ນນີ້ ເຮັດໃຫ້ຄົນລາວປະມານ 96% ບໍ່ຮູ້ໜັງສື[3]. ການທີ່ລາວເກີດຄວາມເສື່ອມໂຊມທາງການສຶກສາ ຮ່ຳຮຽນນີ້ກໍ່ພາໃຫ້ການຈັດຕັ້ງການປົກຄອງ ແລະ ການບໍລິຫານປົກຄອງຝຣັ່ງໃນລາວກໍ່ພົບ

---

[1] ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ. ປະຫວັດສາດລາວເດີ່ມດຳບັນ-ປະຈຸບັນ. ຄ. ສ 2000 ໜ້າ 506.

[2;3] ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ. ປະຫວັດສາດລາວເດີ່ມດຳບັນ-ປະຈຸບັນ. ຄ. ສ 2000 ໜ້າ 563-564.

ຄວາມຫຍຸ້ງຍາກເຊັ່ນກັນ, ໃນຂະນະດຽວກັນນັ້ນການປົກຄອງນັ້ນ ການຂຽນກໍ່ພົບບັນຫາຫຍຸ້ງຍາກຫຼາຍເຊັ່ນວ່າພິມດິດໜັງສືລາວເດີມບໍ່ມີຈົ່ງອາໄສແຕ່ການຂຽນຈຶ່ງມີຄວາມຊັກຊ້າ ແລະ ຄວາມຫຍຸ້ງຍາກທາງໄວຍາກອນການຂຽນພາສາລາວສະໄໝນັ້ນກໍ່ເປັນອຸປະສັກພາໃຫ້ການຮຽນໜັງສືລາວໄດ້ຊ້າທັງໄດ້ໜ້ອຍຄົນ.ຄວາມລຳບາກທາງການຂຽນກໍ່ເປັນເງື່ອນໄຂຢ່າງໜຶ່ງທີ່ເຮັດໃຫ້ຝຣັ່ງຕ້ອງນຳເອົາໜັງສື ແລະ ພາສາຝຣັ່ງເຂົ້າມາໃຊ້ ແລະ ຕໍ່ມາວຽກງານການປົກຄອງ ສັງຄົມທຸກດ້ານໄດ້ໃຊ້ພາສາຝຣັ່ງເປັນຫຼັກ. ພາສາຝຣັ່ງໄດ້ເລີ່ມມີບົດບາດຫຼາຍຂຶ້ນໃນລາວນັບ ແຕ່ປີ ຄ.ສ 1930 ເປັນຕົ້ນມາ[4]. ໂຮງຮຽນໄດມີ 66 ແຫ່ງການຮຽນພາສາຝຣັ່ງກໍ່ເປັນທີ່ນິຍົມກັນ ເພີ່ມຂຶ້ນ. ຈາກນັ້ນມາເມື່ອໂຮງຮຽນໄດ້ເລີ່ມມີຂຶ້ນກໍ່ມີການນຳເອົາພາສາຝຣັ່ງເຂົ້າສອນ, ວິຊາ ຮຽນຫຼາຍວິຊາກໍ່ໃຊ້ພາສາຝຣັ່ງ ອິດທິພົນພາສາຝຣັ່ງໄດ້ກວມໄປທົ່ວລາວ, ຊຸມປະເທດໃນແຫຼມ ອິນດູຈີນ ແລະ ມີບົດບາດຕໍ່ກັບຄວາມກ້າວໜ້າຂະຫຍາຍຕົວຂອງການສຶກສາຂອງລາວກໍ່ຄືອະ ນາຄົດຂອງບຸກຄົນໃນສະໄໝນັ້ນນຳດ້ວຍ. ຈາກສະໄໝກາງຂອງສະຕະວັດທີ່20 ຢູ່ໃນລາວພາ ສາຝຣັ່ງໄດ້ໃຫ້ເປັນມາດຖານດ້ານຄວາມສາມາດຂອງບຸກຄົນທີ່ຈະສືບຕໍ່ຮ່ຳຮຽນສູງຂຶ້ນຕໍ່ ຫຼື ຈະ ໄດ້ຮັບເຂົ້າເປັນລັດຖະກອນຮັບໃຊ້ຝຣັ່ງ. ສະນັ້ນ ພາສາຝຣັ່ງ ຈຶ່ງມີບົດບາດທີ່ສຳຄັນຕໍ່ທາງສັງ ຄົມ ແລະ ລັດຖະການຂອງລາວຢູ່ມາຫຼາຍທົດສະວັດ, ບົດບາດ ແລະ ອິດທິພົນນີ້ໄດ້ພາໃຫ້ຄົນ ລາວຫຼາຍຄົນທີ່ໄດ້ເຂົ້າໂຮງຮຽນຕ້ອງຈຳເປັນຮຽນຮູ້ຢ່າງກ້ວາງຂວາງ.

2). ຜົນສະທ້ອນຈາກການເຂົ້າມາຂອງຄຳພາສາຝຣັ່ງໃນພາສາ ລາວ

ການນຳເອົາພາສາຝຣັ່ງເຂົ້າມາຮຽນມາສອນໃນລາວນັ້ນບໍ່ແມ່ນເລື່ອງດຽວກັບການ ຮັບຄຳຝຣັ່ງເຂົ້າມາໃນພາສາລາວ ມັນເປັນສອງເລື່ອງທີ່ຕ່າງຫາກ. ໃນນີ້ຈະສຶກສາເບິ່ງໃນສ່ວນທີ່ ລາວເຮົາຮັບເອົາຄຳຈາກພາສາຝຣັ່ງເຂົ້າມານັ້ນ ເກີດມີຜົນຢ່າງໃດຕໍ່ພາສາລາວ.

---

[4] ປະຫວັດສາດລາວເດີກດຳບັນ-ປະຈຸບັນ. ຄ.ສ 2000 ໜ້າ 565.

ການທີ່ຮັບຄຳຈາກຄຳຈາກກພາສາຝຣັ່ງເຂົ້າມາສູ່ລາວນັ້ນ ອັນທຳອິດເຫັນວ່າເປັນ ການຮັບເພາະປະຫວັດສາດ, ສະພາບສັງຄົມ, ການປົກຄອງເປັນສຳຄັນ, ສະນັ້ນ ອິດທິພົນຂອງ ພາສາຝຣັ່ງທີ່ມີຕໍ່ພາສາລາວກໍ່ຄືໄດ້ຄຳ ກ່ຽວກັບສັງຄົມ, ການເມືອງ ແລະ ການປົກຄອງຫຼາຍໆ ຄຳມາເພີ່ມໃຫ້ພາສາລາວ.

ອັນທີ່ສອງ ພ້ອມດຽວກັບການຮັບຄຳຂອງພາສາຝຣັ່ງລາວເຮົາກໍ່ໄດ້ຄຳຂອງພາສາອື່ນ ທີ່ຕາມມາກັບພາສາຝຣັ່ງເຊັ່ນ: ຄຳພາສາລາແຕ້ງ, ເກຣັກ ແລະ ອື່ນໆ.

ອັນທີ່ສາມ ເປັນການເພີ່ມປະເພດຄຳທີ່ກ່ຽວກັບວິທະຍາສາດເຕັກນິກການທະຫານ, ເສດຖະກິດຕ່າງໆເຂົ້າສູ່ພາສາລາວເຊິ່ງເປັນການຂະຫຍາຍຄວາມຮູ້, ຄວາມຄິດດ້ານນີ້ ເພີ່ມຂຶ້ນ ໃຫ້ແກ່ລາວເຮົາ.

ອັນທີ່ສີ່ ຜົນທີ່ຖືວ່າດີກໍ່ຄື: ເປັນການເປີດຕົວສູ່ໂລກພາຍນອກ ໂດຍພາສາເປັນຕົວພາ ເປັນຄືວ່າເຮັດໃຫ້ຄົນລາວໄດ້ມີໂອກາດໄດ້ໄປຮຽນໄປຮູ້ຄວາມຈະເລີນເຕີບໂຕຂອງປະເທດ ອື່ນໆ, ຈາກທີ່ເມື່ອກ່ອນເຄີຍຢູ່ແຕ່ໃນວົງຈຳກັດ ແລະ ການຮຽນຮູ້ພາສາກໍ່ຈຳກັດຢູ່ພຽງແຕ່ການ ຮຽນໄວຍາກອນປາລີ ສັນສະກິດ.

3). ບາງລັກສະນະພາສາຝຣັ່ງ.

ພາສາຝຣັ່ງເປັນພາສາໜຶ່ງທີ່ນອນຢູ່ໃນຕະກູນ Indo europain, ເປັນພາສາທີ່ມີວິ ພັດປັດໄຈ (inflectional Language). ລັກສະນະຂອງຄຳມີຫຼາຍແບບຄຳນັບແຕ່ຄຳທີ່ມີພະ ຍາງດຽວເຖິງຫຼາຍພະຍາງຮວມກັນ. ລັກສະນະທີ່ບວກເຖິງການຈຳແນກຄວາມຕ່າງທີ່ໃສ່ຊື່ວ່າ ເພດ (gender) ເຊັ່ນ ເພດຜູ້, ເພດແມ່ ຖືວ່າເປັນພາສາແຫ່ງເພດ. ການສ້າງຄຳມີວິທີຫຼາຍຢ່າງ ທີ່ຄ້າຍກັບພາສາອັງກິດ, ການໃຊ້ຄຳໃນປະໂຫຍກ ຈະມີກົດສຳລັບການປ່ຽນຕາມຈຳນວນ ເພດ ແລະ ການເວລາ, ການໃຊ້ຄຳຢ່າງນີ້ເຫັນວ່າມີຄວາມເປັນອັນສະເພາະຂອງພາສາຝຣັ່ງ ເຊິ່ງໃນນັ້ນ ຍັງປະກອຍດ້ວຍກົດຕ່າງໆທີ່ສະລັບສັບຊ້ອນ. ຫາກນຳພາສາອັງກິດມາປຽບທຽບກໍ່ ຈະເຫັນວ່າຫຼາຍກົດບໍ່ມີໃນລະບົບພາສາອັງກິດ. ສ່ວນໃນພາສາລາວເຊິ່ງຢູ່ໃນຕະກູນຕ່າງກັນກໍ່

ຍິ່ງຈະພົບຄວາມແຕກຕ່າງຢ່າງມາກມາຍ.ໃນຄວາມແຕກຕ່າງນີ້ ສາມາດນຳມາສຶກສາໃຫ້ເລິກ ລະອຽດໄດ້ຕໍ່ໄປ. ເນື່ອງຈາກວ່າເອກະສານທີ່ໄດ້ສຶກສາສິ່ງເຫຼົ່ານີ້ມີຢູ່ທົ່ວໄປ ແລະ ຕາມສະຖາ ບັນຫຼາຍແຫ່ງຍັງມີການໃຊ້ ແລະ ການຮຽນຮູ້ພາສາຝຣັ່ງຢູ່. ສະນັ້ນຈຶ່ງຖືວ່າຈະມີຄວາມສະດວກ ຫຼາຍຢ່າງໃຫ້ແກ່ທ່ານທີ່ສົນໃຈສຶກສາປຽບທຽບໃນຂັ້ນຕໍ່ໄປ.

4). ຊະນິດຄຳທີ່ຮັບຈາກພາສາຝຣັ່ງສູ່ພາສາລາວ.

ຄຳທີ່ລາວຮັບຈາກພາສາຝຣັ່ງ ພົບວ່າໄດ້ແກ່ຄຳທີ່ກ່ຽວກັບການທະຫານ, ພາຫະນະສິ່ງ ຄົມບາງຊະນິດ ແລະ ຄຳສັບວິຊາການທີ່ໃຊ້ໃນທາງເຄມີສາດ, ວິທະຍາສາດອື່ນໆຈຳນວນໜຶ່ງ ໃນນັ້ນມີບາງຄຳທີ່ຮັບມາຍັງພົບວ່າເປັນຄຳຈາກພາສາອື່ນໂດຍຜ່ານພາສາຝຣັ່ງເຂົ້າມາກໍ່ມີ. ແຕ່ ຄຳຈາກພາສາອື່ນນັ້ນໝາຍເຖິງພາສາໃດກັນແດ່ກໍ່ຍັງເປັນຄວາມລຳບາກທີ່ຈະບົ່ງບອກໃຫ້ກົງ ຕົວໄດ້ສະນັ້ນການສະເໜີຄຳທີ່ຮັບຈາກພາສາຝຣັ່ງໃນນີ້ກໍ່ຈະນຳທຸກຄຳທີ່ຫາພົບໄດ້ໂດຍຜ່ານ ພາສາຝຣັ່ງ, ຫາກຄຳໃດທີ່ສາມາດຮູ້ໄດ້ແຫຼ່ງທີ່ມາຄັກແນ່ກໍ່ຈະໄປສະເໜີໃນພາກກ່ຽວກັບການ ຮັບຄຳ ຈາກພາສາກຸ່ມ ຍ່ອຍອື່ນໆໃນພາກຕໍ່ໄປ.

ວິທີການຮັບຄຳຂອງພາສາຝຣັ່ງສູ່ພາສາລາວນັ້ນ ພົບວ່າໃຊ້ວິທີທັບສັບ ແລະ ວິທີຕື່ມ ບາງຄຳຂອງພາສາລາວເຂົ້າ, ຄຳທີ່ຕື່ມນັ້ນສ່ວນຫຼາຍໄດ້ເປັນຄຳກ່ຽວກັບການບອກກຸ່ມ, ບອກ ຊະນິດເປັນຄຳ. ພ້ອມນີ້ກໍ່ເລືອກເອົາຄຳ ແລະ ຄວາມໝາຍເປັນຈຸດໜັກບໍ່ກ່ຽວກັບໄວຍາກອນ ແຫ່ງການປະກອບຫຼືປ່ຽນແປງຮູບຄຳມາມຳ. ສະນັ້ນບາງຄຳເຮົາຍັງຮັບເອົາແຕ່ຄວາມໝາຍມາ ແລ້ວຫາເອົາຄຳລາວເອີ້ນໃຫ້ເຊັ່ນ: ເຮົາຮັບຄຳວ່າ ກາເຟ (cafe) ທີ່ໝາຍເຖິງໝາກ ແຕ່ cafeler ເຊິ່ງໝາຍເຖິງຕົ້ນກາເຟນັ້ນລາວບໍ່ຮັບເຂົ້າມາ, ລາວໃຊ້ຄຳແບບປະສົມໂດຍໃຊ້: ຕົ້ນ ແລະ ເອົາຄຳວ່າກາເຟມາປະກອບເປັນຕົ້ນກາເຟໃຫ້ເປັນຄຳລາວແບບນີ້ ກາຍເປັນລະບົບຂອງ ການຮັບຄຳ. ເຊິ່ງນອກຈາກພາສາຝຣັ່ງກໍ່ສາມາດພົບໃນພາສາອື່ນທີ່ເຮົາຮັບເຂົ້າມາດັ່ງຄຳຕໍ່ໄປນີ້ ເປັນຕົວຢ່າງຂອງຄຳທີ່ຮັບມາຈາກພາສາຝຣັ່ງເຊິ່ງເກັບກຳໄດ້ຈາກແຫຼ່ງຂໍ້ມູນຕ່າງໆ ຈຳນວນໜຶ່ງ

ເຊັ່ນ: ວັດຈະນານຸກົມລາວ-ຝຣັ່ງ ເຫຼັ້ມໜຶ່ງ ແລະ ສອງ; ວັດຈະນານຸກົມ ຣັດເຊຍ-ຝຣັ່ງ ມົດສະກູ 1997; ເອກະສານກ່ຽວກັບຄຳຢືມ, ແບບຮຽນຫຼາຍເຫຼັ້ມເຊິ່ງສາມາດຮວມຮວມຄຳໄດ້ດັ່ງນີ້:

ຄຳລາວ	ຄຳພາສາຝຣັ່ງ	ຄຳແປ
ກົງສູນ	Consul	ການຄຸ້ມຄອງການເຂົ້າອອກ ປະເທດ.
ກອມມັ່ງດັ່ງ	Commandant	ນາຍພັນຕີ
ບາໂລ	Baleau	ຖົງໃສ່ເຄື່ອງສຳລັບເປ.
ບີດົງ	Bidong	ກ້ອງໃສ່ນ້ຳດື່ມ.
ເບີ	Beurre	ເນີຍ.
ແບ່ກເຊ	Berchee	ໝາຊະນິດໜຶ່ງທີ່ໃຫ່ຍ.
ບາລີແຍ	Baliere	ສິ່ງກັ້ນກາງເຂດແດນ.
ການົງ	Canon	ຊື່ປືນຊະນິດໜຶ່ງທີ່ຍິງສິ່ງລູກແຕກ.
ເກີ້ບໂຊ	Choo	ເກີບທີ່ມີໂບກ.
ກອມມູນິດ	Communist	ລັດທິຢູ່ເປັນກຸ່ມ, ເປັນໝູ່ກອງ.
ກາປີແຕນ	Capitaine	ນາຍຮ້ອຍເອກ.
ໂຊເຟີ	Chauffeur	ຄົນຂັບລົດ.
ກາເຟ	Café	ກາເຟ.
ກະບີ	Caby	ມົດແຫຼມຕິດປາຍປືນ.
ກາບິນ	Cabin	ຫ້ອງບັນຊາ.
ຊັ່ງຕິແມດ	Centimet	ຂະໜາດວັດແທກອັນໜຶ່ງ.
ໂຊຟາ	Sofa	ຕັ່ງນວມ.
ກາກາວ	Cacao	ໝາກກາກາວ.
ແລ້ນ	Laine	ຜ້າທີ່ເຮັດດ້ວຍຂົນສັດ.
ບີສະກວິດ	Bisquit	ເຂົ້າໜົມປັ້ງຊະນິດອ່ອນ.

24/VH
ห้องจำหน่าย

ບຸນໂນແອນ	Noél	ບຸນຂຶ້ນປີໃໝ່
ແກຣມ	Cream	ແກຣມ.
ເດີມີ	Demi	ກາງ(ໃຊ້ໃນການກິລາ).
ເຄມີ	Chimie	ສຶກສາກ່ຽວກັບທາດຕ່າງໆ.
ໂຊໂກລາ	Chocolat	ເຂົ້າໜົມທີ່ເຮັດຈາກການາກາວ.
ສັກ	Sac	ຖົງພາຍຊະນິດໜຶ່ງ.
ປົດ	Port	ຄ້າຍ, ທ່າເຮືອ.
ແອດຊັ່ງ	Essence	ນ້ຳມັນແອດຊັ່ງ.
ກຣາວັດ	Cravate	ກຣາວັດ.
ຟຣໍມາ	Fromage	ເນີຍແຂງຊະນິດໜຶ່ງ.
ບີລ່ງດ	billard	ໝາກບີລ່ງດ.
ເບຍ	Bière	ເບຍ.
ປີອາໂນ	Piano	ເຄື່ອງເສບຊື່ປີອາໂນ.
ຄາດ(ກັກດກາກ)	Carte	ບັດ.
ວີໂອລ໋ິງ	Violon	ເຄື່ອງເສບຊື່ວີໂອລ໋ິງ.
ອາກອກເດອ໋ິງ	Accordéon	ເຄື່ອງເສບຊື່ອາກອກເດອ໋ິງ.
ລິດ	Litre	ຊະໜາດທີ່ວັດແທກທາດແຫຼວ ຈຳນວນພັນມີລີລິດ.
ອາຊິເຕັກ	Architecte	ນັກອອກແບບການກໍ່ສ້າງ
ສະບູ	Savon	ສິ່ງສຳລັບໃຊ້ຊັກເຄື່ອງ.
ເສື້ອເຊມ໋ີ	Chemise	ເສື້ອມີຄໍແຂນຍາວ.
ຊໍ່ຊີ	Saucisse	ໃສ້ອົ່ວຊະນິດໜຶ່ງ.
ປັດສະປໍ	Passport	ໜັງສືຜ່ານແດນ.
ເອເຊັກ	Echecs	ໝາກເສິກ.

ກາຣິດ	Carotte	ຫົວກາຣິດ.
ແກັດ	Paquet	ຫີບຫໍ່, ຂອງຫໍ່.
ໂອໂຕມາຕິກ	Automatique	ເຄື່ອນໄຫວດ້ວຍຕົວເອງ.
ໂມໂຕ	Motor	ຫົວຈັກ.
ມີລີແມັດ.(ມ.ມ)	Milimetrage(mm)	
ຊັ້ງຕີແມັດ(ຊ.ມ)	Centimet(cm)	
ເດຊີແມັດ(ດ.ມ)	Decimetre (dm)	
ແມັດ (ມ)	Metre (m)	
ເດກາແມັດ(ດ.ມ)	Dekametre (dm)	
ເຮັກໂຕແມັດ(ຮ. ມ	Hektometre (hm).	
ກຣາມ	Gramme (g)	
ກິໂລແມັດ(ກ ມ)	Kilometre(km).	
ກິໂລກຣາມ(ກລ)	Kilogramm (kg).	
ໂຕນ	Ton (T).	
ກູປ໋ງ	Coupon	ບັດຮັບເຄື່ອງ.
ກີຕາ	Quitare	ເຄື່ອງເສບຊິ່ກີຕາ.
ກາໂຕລິກ	Catholique	ສາສະນາກາຕູລິກ.
ໂກຍັກ	Cognac	ເຫຼົ້າໂກຍັກ.
ຊຳປາຍ	Champagne	ເຫຼົ້າຊຳປາຍ.
ຄຣິດຕຽນ	Christien	ຄຣິດຕຽນ.
ຄິວ	Queue	ຄິວ, ແຖວ.
ບີໂອລິກ	Bioloque	ກ່ຽວກັບຊີວະສາດ.
ປ້	Billet	ບັດຊະນິດໜຶ່ງ.
ລິດໂອໂຕ	Autobus	ລົດບັນທຸກ.

ອັກໂກຣບັດ	Acrobatique	ວິຊາທາງກາຍະພາບ.
ອາມຟາ	Alpha	ກ່ຽວກັບມູນຫວາ.
ອຳແປ	Amper	ກ່ຽວກັບຄວາມເຂັ້ມຂອງກະແສໄຟຟ້າ
ໂວນ	Volt	ຫົວໜ່ວຍແທກປະລິມານຂອງໄຟຟ້າ.
ອາກາເດມີ	Academe	ແຫ່ງການຄົ້ນຄວ້າວິທະຍາສາດ.

6. ການຮັບຄຳຈາກພາສາອັງກິດ

1). ຄວາມເປັນມາໂດຍຫຍໍ້: ການເຂົ້າມາຂອງພາສາອັງກິດໃນພາສາລາວ.

ພາສາອັງກິດໄດ້ເລີ່ມເຂົ້າມາມີບົດບາດຫຼາຍຂຶ້ນໃນລາວນັບແຕ່ກາງຊຸມປີ 50 ຂອງ ສະຕະວັດທີ່ 20 ເຊິ່ງເປັຍໄລຍະຫຼັງຂອງການສິ້ນສຸດສົງຄາມໂລກຄັ້ງທີສອງ. ການເຂົ້າມາ ຂອງພາສາອັງກິດໃນລາວນັ້ນເປັນເພາະການແຜ່ຂະຫຍາຍຂອງອິທິພົນທາງການຄ້າ. ເຕັກນິກ ແລະ ວິທະຍາສາດຢ່າງກວ້າງຂວາງ ພ້ອມນັ້ນການຕິດຕໍ່ສຳພັນລະຫວ່າງຊາດກັບຫຼາຍປະເທດ ໃນໂລກກໍ່ໃຊ້ພາສາອັງກິດເປັນພາສາສຳຄັນໃນການຕິດຕໍ່ສື່ສານ. ລາວເຖິງວ່າເມື່ອກ່ອນມີພາ ສາຝຣັ່ງ ແລະ ມີບົດບາດຢູ່ກ່ອນແລ້ວແຕ່ພາຍຫຼັງການຖອຍໜີຂອງຝຣັ່ງຈາກອິນດູຈີນໃນປີ 1954 ແລະ ການລົ້ມເລີກລະບອບການປົກຄອງແບບທີ່ຝຣັ່ງໃຊ້ກ່ອນນັ້ນໄດ້ພາໃຫ້ບົດບາດ ການຄົງຢູ່ ແລະ ການຂະຫຍາຍຂອງພາສາຝຣັ່ງຫົດຖອຍລົງ ເຊິ່ງຕໍ່ມາພາສາອັງກິດກໍ່ໄດ້ມີບົດ ບາດເດັ່ນຂຶ້ນທັງໄດ້ສ້າງຄວາມນິຍົມການຮຽນກໍ່ຫຼາຍຂຶ້ນ. ຈາກທ້າຍຊຸມປີ 50 ມາໃນລະບົບໂຮງ ຮຽນຫຼາຍແຫ່ງຊັ້ນມັດທະຍົມໃນລາວກໍ່ໄດ້ມີການນຳເອົາພາສາອັງກິດເຂົ້າສອນຄຽງຄູໄປກັບ ການສອນພາສາຝຣັ່ງ. ດ້ວຍການສັງເກດເຫັນພຽງ 20 ປີ ນັບແຕ່ປີ ຄ.ສ 1955 ເຊິ່ງເປັນປີ ແຫ່ງຂີດໝາຍທີ່ຈະແຈ້ງຂອງການເຂົ້າມາຂອງພາອັງກິດ. ໃນລາວໄດ້ພົບວ່າຄົນທີ່ຮູ້ພາສາຝຣັ່ງ ທັ່ງພາສາອັງກິດໄດ້ມີຈຳນວນຫຼາຍເກືອບເທົ່າກັນ. ນັບແຕ່ປີ ຄ.ສ 1975 ເຊິ່ງເປັນປີທີ່ລາວປ່ຽນ

ລະບອບການປົກຄອງ, ການປ່ຽນແປງນີ້ມີຜົນສະທ້ອນສູ່ນະໂຍບາຍທາງພາສາເຊັ່ນກັນຄື ໄດ້ຍຸດເຊົາການຮຽນພາສາທັງສອງນີ້ໃນຊົ່ວໄລຍະ ແລະ ຕໍ່ມາກໍ່ມີການຮຽນແຕ່ມີຂອບເຂດຈຳກັດ. ຕໍ່ມາ ໃນປີ 1978 ກໍ່ມີການຮຽນພາສາຕ່າງປະເທດຂຶ້ນທີ່ວິທະຍາໄລສ້າງຄູວຽງຈັນດົງໂດກ ເຊິ່ງພາສາທີ່ນຳມາຮຽນໄດ້ແກ່ ພາສາຣັດເຊຍ, ພາສາແອັສປາຍ, ຝຣັ່ງ ແລະ ອັງກິດ. ແຕ່ສຳລັບພາສາອັງກິດ, ຝຣັ່ງ ແລະ ແອັສປາຍມີການເປີດໃຫ້ຮຽນໃນຂອບເຂດ ແລະ ຈຳນວນຈຳກັດເຊິ່ງພາໃຫ້ສະພາບການຮຽນຂອງພາສາອັງກິດກໍ່ບໍ່ເປັນທີ່ແຜ່ຂະຫຍາຍປານໃດ. ຈາກນັ້ນມາເຖິງຍຸກປີ ຄ.ສ 1985 ການຮຽນພາສາຕ່າງປະເທດໃນລາວໄດ້ຮັບການຟື້ນຟູ ແຕ່ມີຈຸດ ແລະ ເປົ້າໝາຍໃນໂຮງຮຽນບາງແຫ່ງເທົ່ານັ້ນ. ປີ ຄ.ສ 1989 ເປັນປີທີ່ລາວມີນະໂຍບາຍເປີດປະເທດໃຫ້ໄປສູ່ໂລກພາຍນອກ, ການຮຽນພາສາຕ່າງປະເທດໄດ້ເປັນຂະບວນນີ້ຢ່າງກ້ວາງຂວາງ. ຈົນມາເຖິງປະຈຸບັນຂະບວນນີ້ຍິ່ງກ້ວາງຂວາງ. ໃນຂະບວນການທີ່ຂະຫຍາຍຢ່າງກວ້າງຂວາງເປັນຂະບວນ. ການຮຽນພາສາອັງກິດນີ້ເຫັນວ່າເປັນສຳຄັນ. ພ້ອມນີ້ການເປີດໃຫ້ມີການຕິດຕໍ່ຄ້າຂາຍຮ່ວມການທຸລະກິດກັບພາຍນອກນັ້ນໃນລາວກໍ່ໄດ້ມີການນຳເອົາບົດຮຽນ, ວິຊາຄວາມຮູ້ຕ່າງໆ ກ່ຽວກັບຄ້າ, ການຕະຫຼາດ, ເຕັກນິກຕ່າງໆເຂົ້າມາອັນເປັນການນຳເອົາພາສາ ແລະ ຂໍ້ມູນຕ່າງໆທີ່ກ່ຽວກັບຈິດສຳນຶກທາງພາສາອັນໃໝ່ເຂົ້າມາໃນລາວ, ປຶ້ມວິຊາການທີ່ເປັນພາສາອັງກິດໄດ້ກາຍເປັນເອກະສານທີ່ສຳຄັນໃຊ້ກັນຢ່າງກວ້າງຂວາງໃນໂຮງຮຽນທົ່ວໄປ. ພາສາອັງກິດໄດ້ຂຶ້ນມາມີບົດບາດຢ່າງນຳໜ້າຢ່າງເດັ່ນຊັດ ແລະ ໄດ້ສ້າງອິດທິພົນໃໝ່ໃນໄລຍະທ້າຍຊຸມປີ 90 ຫາໄລຍະປີ 2000 ທີ່ເຮັດໃຫ້ຄົນລາວຜູ້ທີ່ຕ້ອງການປະກອບການງານທີ່ໃຊ້ປັນຍາມັນສະໝອງຕ້ອງທຸ່ມເທຄວາມສາມາດ ແລະ ຫຼາຍຢ່າງເຂົ້າໃສ່ເພື່ອຮຽນຮູ້.

2). ລັກສະນະບາງຢ່າງຂອງພາສາອັງກິດ.

ພາສາອັງກິດເປັນພາສາໜຶ່ງໃນຕະກູນພາສາອິນດູຢຸຣົບ (indoeurope) ເມື່ອນຳພາສາຝຣັ່ງ, ປາລິ, ສັນສະກິດເຊິ່ງຢູ່ໃນຕະກູນດຽວກັນມາທຽບກໍ່ເຫັນວ່າພາສາອັງກິດຍັງມີຫຼາຍຢ່າງທີ່ບໍ່ຄືກັບພາສາເຫຼົ່ານັ້ນແລະຈະພົບວ່າມີບາງລັກສະນະຈະມີຄວາມເໝືອນກັບພາສາລາວ

ເຊັ່ນ ຄຳໃນພາສາອັງກິດຫຼາຍຄຳເປັນຄຳພະຍາງດຽວເຊັ່ນ : food, man, boy, pen, car ... ພ້ອມນີ້ ສຽງສະຫຼະໃນພາສາອັງກິດທັງ ໝົດກໍ່ເປັນຕົວທີ່ມີໃນພາສາລາວ, ການອອກສຽງໃນຄຳ ກໍ່ເປັນທີ່ອອກໄດ້ສະດວກໃນຫຼາຍໆຄຳ. ກ່ຽວກັບໄວຍະກອນກໍ່ມີຕົວຫຽບທີ່ສາມາດໃຊ້ກັນໄດ້ ສະດວກຫຼາຍຕົວອັນພາໃຫ້ການຮຽນຮູ້ສະດວກໃນຫຼາຍຈຸດໄດ້.

(1). ລັກສະນະສະເພາະຂອງພາສາອັງກິດອັນເດັ່ນຊັດຄື: ການສ້າງຄຳ. ໃນນັ້ນມີບາງ ວິທີທີ່ສຳຄັນໄດ້ແກ່: ໜຶ່ງຕາມແບບຂອງພາສາອື່ນໆທີ່ມີວິພັດປັດໄຈ; ແບບທີ່ສອງເປັນການ ສ້າງຄຳດ້ວຍການໃຊ້ prefix, suffix ແລະ ປະການທີ່ສາມພາສາອັງກິດເປັນພາສາທີ່ໃຊ້ການ ເວລາເຂົ້າມາກ່ຽວຂ້ອງຢ່າງສຳຄັນ ໂດຍມີຄຳກິລິຍາຊ່ວຍຈຳນວນໜຶ່ງສຳລັບເຮັດໜ້າທີ່ດັ່ງກ່າວ ນີ້. ໃນພາສາອັງກິດມີການເນັ້ນສຽງ (stress). ເຊິ່ງມີຄວາມສຳຄັນຕໍ່ການປ່ຽນໜ້າທີ່ຂອງຄຳ ແລະ ການໄດ້ມາຂອງຄວາມໝາຍ.

ລະບົບສຽງພາສາອັງກິດ: ໜ່ວຍສຽງພະຍັນຊະນະໃນພາສາອັງກິດມີ 24 ໜ່ວຍເຊັ່ນ a. b. c. d. e. f. g. h. i. j. k. l. m. n. o. p. q. r. s. t. u. v. w. x. y. z. ໃນນີ້ ທຸກໜ່ວຍສຽງ ສາມາດເກີດໃນຕຳແໜ່ງພະຍັນຊະນະຕົ້ນດ່ຽວໄດ້, ສ່ວນໜ່ວຍສຽງ / ŋ / ແລະ / ʒ / ເຄີຍປະ ກົດແຕ່ໃນຕຳແໜ່ງທ້າຍຄຳໄດ້[1]. ໜ່ວຍສຽງພະຍັນຊະນະທ້າຍດ່ຽວມີ 21 ໜ່ວຍ. ໃນນັ້ນ ມີ 2 ໜ່ວຍສຽງ ເຊັ່ນ : / j / ແລະ /w / ຖືເປັນ ເຄິ່ງສະຫຼະ(Semi vowel) ແລະ ໜ່ວຍສຽງ / h / ເຊິ່ງເປັນ glot stops. ທັງສາມນີ້ບໍ່ເປັນ ສະກົດສຽງທ້າຍດ່ຽວໄດ້[2].

(2). ໜ່ວຍສຽງພະຍັນຊະນະຄວບ

---

[1] ດຣ. ວິທະຍາ ນາທອງ. ການປຽບທຽບພາສາອັງກິດກັບພາສາໄທ. ພ.ສ 2536 ໜ້າ 10.

[2] ປຣະຍູຣ ຊິງສິນ. ລະບົບສຽງພາສາອັງກິດ. ໜ້າ 188.

ໜ່ວຍສຽງພະຍັນຊະນະທີ່ໃຊ້ຄວບກັນໃນພາສາອັງກິດມີຫຼາຍໆໜ່ວຍ ແລະ ມີການຄວບນັບແຕ່ 2 ສຽງ 3 ສຽງຫາ 4 ສຽງ[3]. ບັດດາພະຍັນຊະນະຄວບນີ້ ສາມາດປະກົດທັງຕົ້ນຄຳ ຫຼື ທ້າຍຄຳໄດ້. ຈຳນວນສຽງພະຍັນຊະນະຄວບຮວບຮວມຕາມແຕ່ ລະກຸ່ມໄດ້ດັ່ງນີ້

ກຸ່ມທີ່ມີສອງໜ່ວຍສຽງມີ 75 ຕົວ.

ຕົວຢ່າງ: crush, black, slow, snow ...etc.

ກຸ່ມທີ່ມີສາມໜ່ວຍສຽງມີ 9 ຕົວ.

ຕົວຢ່າງ: screw, spring, string...etc.

ພະຍັນຊະນະທ້າຍ ທີ່ຄວບ 2 ສຽງ ມີ 74 ຕົວ: past. stemp, test, best, etc.

ພະຍັນຊະນະທ້າຍ ທີ່ຄວບສາມສຽງ ມີ 80 ຕົວ ຕົວຢ່າງ: first, stright, etc

ພະຍັນຊະນະທ້າຍ ຄວບ 4 ສຽງມີ 8 ຕົວ. ນອກນັ້ນຍັງມີພະຍັນຊະນະທີ່ປະກົດລຽນກັນຢູ່ກາງຄຳນັບແຕ່ 2 ຫາ 4 ຕົວມີຈຳນວນຫຼວງຫຼາຍ.

ຕົວຢ່າງ: complex, extra, completely, etc

3). ວິທີການຮັບຄຳຂອງພາສາອັງກິດ ມາໃນພາສາລາວ.

ການຮັບຄຳຈາກພາສາອັງກິດເຂົ້າມາໃນພາສາລາວໂດຍທົ່ວໄປກໍ່ເປັນໄປຕາມຂະບວນການຢ່າງດຽວກັນກັບການຮັບຄຳຈາກພາສາອື່ນໆເຊັ່ນ: ເກີດການຕັດສ່ວນຂອງຄຳ, ຕື່ມບາງສຽງ, ຕື່ມສຽງວັນນະຍຸດ, ແປງພະຍັນຊະນະຕົ້ນຄຳ ຫຼື ຕົວສະກົດດັ່ງນີ້ເປັນຕົ້ນ.

---

[3] ດຣ. ວິທະຍາ ນາຫອງ. ການປຽບທຽບພາສາອັງກິດກັບພາສາໄທ. ພ.ສ 2536 ໜ້າ 12-17.

ສຳລັບຄຳຈາກພາສາອັງກິດ ການຮັບເຂົ້າມາສັງເກດເຫັນ 3 ປະການດັ່ງນີ້ ການທັບສັບ, ການແປສັບ ແລະ ການບັນຍັດຄຳ, ໃນສ່ວນຂອງການບັນຍັດຄຳນັ້ນພົບວ່າເປັນການບັນຍັດຂຶ້ນໂດຍອາໄສຈິດສຳນຶກທີ່ຍືມຈາກພາສາອັງກິດ.

(1). ວິທີຮັບໂດຍການທ່ຽງສຽງ.

ວິທີນີ້ ພົບຫຼາຍກວ່າວິທີອື່ນໆໃນສາມວິທີທີ່ກ່າວມາ. ການທ່ຽງສຽງນັ້ນບໍ່ໝາຍວ່າຈະໃຫ້ໄດ້ທຸກສຽງທຸກສ່ວນຂອງຄຳເດີມໃນພາສາອັງກິດແຕ່ໂດຍທົ່ວໄປຈະໃຫ້ໄດ້ ຮູບຄຳ (word form) ຕາມເດີມ, ສ່ວນທີ່ດັດນັ້ນ ອາດດັດດ້ານສຽງຕົວທີ່ອອກໄດ້ແຕ່ບໍ່ສະດວກໃນພາສາລາວ ຫຼື ໃຊ້ສຽງທີ່ໃກ້ຄຽງທີ່ມາອອກແທນການທັບສັບນີ້ເປັນເລື່ອງທາງສຽງຂອງຄຳເພື່ອໃຫ້ອອກໄດ້ສະດວກໃນພາສາຕົ້ນ.

ຕົວຢ່າງ:

ອອກສຽງໃນພາສາລາວ	ຄຳພາສາອັງກິດ
ເຈມ	Jame
ສະມິດ	Smith
ກະຕະລ໋ອກ	Catalogue
ເລມ໋ນັດ	Lemonade
ມາກາຊີ໋ນ	Magazine
ມາແກັດ	Market
ປ໋ອກຕຸຍການ	Portugal
ມາດາມ	Madam
ເກຣດິດ	Credit
ຟິດຟ໋ໍ	Phosphorus
ຟອມ	Form
ໂມໂຕ	Motor
ເທເລກຣາມ	Telegram

ຄອມພິວເຕີ	Computer
ດິສະແກັດ	disket
ແລະ ອື່ນໆ	Etc

(2). ການຮັບແບບເອົາແຕ່ຄວາມໝາຍຂອງຄຳ. (Semantic borrowing)

ການຮັບຄຳຕາມລັກສະນະນີ້ ມີນັກຄົ້ນຄວ້າພາສາບາງຄົນເອີ້ນເປັນການຮັບແບບແປ ຄວາມໝາຍ. ການຮັບເອົາຄວາມໝາຍແບບນີ້ ເປັນປະກົດການໜຶ່ງຂອງພາສາເຊິ່ງຕ້ອງພົບມີ ໃນເມື່ອໂລກມີຄວາມຈະເລີນກ້າວໜ້າໄປ, ສິ່ງໃໝ່ກໍ່ເກີດຂຶ້ນມາ ແລະ ຈຳຕ້ອງຮັບເອົາສິ່ງນັ້ນ ຄວາມຄິດນັ້ນເຂົ້າມາເມື່ອເກີດການຮັບສິ່ງໃໝ່ກໍ່ໝາຍເຖິງການນຳອັນໃໝ່ເຂົ້າມາເພີ່ມໃຫ້ພາສາ ຕົນ. ການເພີ່ມເຂົ້າຂອງສິ່ງໃໝ່ບາງກໍລະນີກໍ່ມີຊື່ມີຄຳນັ້ນຕາມຕົວເຂົ້າມານຳ ແຕ່ເມື່ອໃດຄຳນັ້ນ ຫາກເກີດຄວາມຈະເຂົ້າໃຈຍາກເພາະເປັນຄຳຍາວເກີນໄປ, ເປັນຄຳທີ່ຫາສິ່ງແປຍາກເຊັ່ນນີ້ ກໍ່ຈະເກີດການຮັບພຽງສ່ວນຄວາມໝາຍມາ ແລ້ວເຈົ້າຂອງພາສາກໍ່ຈະຫາຄຳໃນພາສາຕົນອັນ ທີ່ມີ, ທີ່ໄກ້ຄຽງມາແປໃຫ້ເຂົ້າໃຈ. ການຫາຄຳໃໝ່ຕັ້ງໃຫ້ນີ້ໃນທາງວິຊາການເອີ້ນວ່າບັນຍັດຄຳ. ແຕ່ການບັນຍັດ ກໍ່ມີຫຼັກອັນສຳຄັນເພື່ອໃຫ້ສິ່ງທີ່ບັນຍັດນີ້ບໍ່ຕື່ມເຕີມ, ບໍ່ຕັດຮອນຄວາມໝາຍ ເດີມ, ໂດຍມຸ່ງການບັນຍັດໃຫ້ເກີດຄວາມເໝາະເຈາະຫັ້ງຄວາມໝາຍ ແລະ ເຂົ້າໃຈໄດ້ກົງກັນ ໃນທາງດ້ານພາສາຕ້ອງຄວບຄຸມດ້ວຍບາງກົດທີ່ຈຳເປັນເຊັ່ນ ບໍ່ໃຫ້ຍາວເກີນ, ຟັງງ່າຍບໍ່ຂັດຫູ, ໃຫ້ພາບ, ໃຫ້ຮູ້ໝວດໝູ່, ໃຫ້ຄວາມໝາຍ ທັ້ງໝົດນີ້ ເປັນຫຼັກທາງພາສາສາດ ເຊິ່ງການບັນຍັດ ຕ້ອງມີຄະນະໜຶ່ງທີ່ຖືເປັນການເປັນງານ, ມີວິຊາຄວາມຮູ້ຫຼາຍຈຶ່ງຈະເຮັດໃຫ້ເກີດຄວາມສຳເລັດ ທີ່ດີ. ເຊັ່ນບາງຄຳຕໍ່ໄປນີ້ເປັນຄຳທີ່ບັນຍັດ ໂດຍໃຊ້ຄຳລາວແປໃຫ້ແກ່ຄຳອັງກິດທີ່ລາວຮັບ ຄວາມໝາຍເຂົ້າມາ. ເຊິ່ງເຮົາໄດ້ໃຊ້ຄຳລາວເດີມ ແລະ ຄຳຈາກພາສາອື່ນທີ່ຮັບມາກ່ອນໃນພາ ສາລາວເປັນຕົວບັນຍັດໃນພາສາລາວ. ຄຳທີ່ບັນຍັດຈາກພາສາອັງກິດ, ຝຣັ່ງ ແລະ ລາແຕັ້ງ ພົບວ່າມີຈຳນວນຫຼາຍດັ່ງຕໍ່ໄປນີ້ :

ກາຍະວິພາກສາດ	Anatomy
ແຫ່ງກຳເນີດ, ແຫ່ງຂໍ້ມູນ	Source
ສິລະທຳ	Morality
ປະຕິຮູບ	Reform
ນະໂຍບາຍ, ກາມເມືອງ	Policy
ປະຊາທິປະໄຕ	Democracy
ສັກດິນາ	Feudal
ມະນຸດສາດ	Humanity
ໂຫລາສາດ	Astrology
ເສລີພາບ	Freedom
ວັດທະນະທຳ	Culture
ປະເພນີ	Tradition
ກາມປະຕິວັດ	Revolution
ກາມຂ່າວ	Formation
ໂທລະທັດ	Television
ພັດລົມ	Electric fan
ຕູ້ເຢັນ	Refrigerator
ຫິມະ	Snow
ຢືມຄຳ	Load word
ລ່ວງເວລາ	Overtime
ຕະຫຼາດມືດ	Black market
ເລື່ອງສັ້ນ	Short story
ກຳລັງທັບອາກາດ	Air force
ແຮງມ້າ	Horse power

ແຜນທີ່	Map
ວາລະສານ	Magazine
ໂທລະສັບ	Telephone
ວິທະຍຸ	Radio
ໄຟຟ້າ	Electric
ຈຸດຢືນ	Stand point
ຢືນຢັນ, ຢັ້ງຢືນ	Confirm
ຄື້ນ	Wave
ຄື້ນສຽງ	Sound wave
ໄປສະນີ	Post
ທະນາຄານ	Bank
ໂອນ	Transfer
ວຽກບ້ານ	Home work
ແລະອື່ນໆ	etc

24 / VII

(3). ການແປງຄຳ ທີ່ຮັບຈາກພາສາອັງກິດ

ການປ່ຽນແປງຄຳທີ່ວ່ານີ້ໝາຍເຖິງການປ່ຽນແປງກ່ຽວກັບຮູບຂອງຄຳດ້ວຍວິທີຕ່າງໆ ເຊັ່ນປ່ຽນແທນພະຍັນຊະນະຕົ້ນຄຳຕັດສ່ວນຂອງຄຳ, ຕື່ມສຽງວັນນະຍຸດ, ປ່ຽນຕົວສະກົດ... ເພື່ອການອອກສຽງໃນຄຳທີ່ຮັບມາໃຫ້ສະດວກ ແລະ ຄ່ອງກັບລະບົບສຽງພາສາຕົນ ແບບການປ່ຽນແປງທີ່ກ່າວເຖິງນີ້ພໍສະຫຼຸບໄດ້ຄື:

ການຕັດສຽງ (loss of sound).

ຄືການຕັດສິ່ງໃດໜຶ່ງ ຫຼື ບາງສິ່ງເຊັ່ນ ພຽງພະຍັນຊະນະຕົ້ນ ຫຼື ທ້າຍ, ທັ້ງພະຍັນຊະນະຕົ້ນ ແລະ ທ້າຍ, ພະຍັນຊະນະທີ່ມີສຽງຄວບຫຼາຍຕົວກ່ວາທີ່ມີໃນພາສາລາວດັ່ງທີ່ຈະນຳສະເໜີຕໍ່ໄປນີ້

ກ. ການປ່ຽນພະຍັນຊະນະຕົ້ນຄຳ

ຕົວຢ່າງ:

ຄຳພາສາອັງກິດ	ເປັນຄຳພາສາລາວ	
Game	ເກມ	/ kēm/
Whisky	ວິສະກີ	/ visakī /
Show	ໂຊ, ສະແດງ	/ sō/
Gases	ແກັສ	/ kɛs /
Golf	ກອບ	/ kɔp /

ແລະອື່ນໆ

ຂ. ການຕັດສຽງພະຍັນຊະນະທ້າຍຄຳ (loss of final consonant)

ສຽງພະຍັນຊະນະທ້າຍຄຳຂອງພາສາອັງກິດມີຄວາມຕ່າງຈາກພາສາລາວທີ່ເດັ່ນຊັດຄື ມີສຽງພະຍັນຊະນະຄວບແຕ່ 2 ຫາ 3 ສຽງເປັນຈຳນວນຫຼາຍ. ຄຳທີ່ມີສຽງຄວບເຊັ່ນນີ້ ໃນພາສາລາວຈະມີການຕັດ ແລະ ນຳເອົາສຽງສະກົດຕົວທີ່ໃກ້ຄຽງມາແທນໃຫ້.

ຕົວຢ່າງ:

ຄຳພາສາອັງກິດ	ເປັນຄຳໃນພາສາລາວ	
Lens	ເລັນ	/ len /
Tent	(ຜ້າ), ເຕັນ	/ ten /
Lift	ລິບ	/ lip /

Pump	ປ໊ຳ	/ pam /
Film	ຟິມ	/ fim /
Tank	ຖັງ	/ thaŋ /

ແລະອື່ນໆ

ຄ. ການຕື່ມສຽງວັນນະຍຸດ (add of sound)

ຕົວຢ່າງ:

ຄຳພາສາອັງກິດ	ເປັນຄຳລາວ	
Asia	ອາຊີ	/ ʔāsī/
Apple	ເອເປີ້ນ	/ʔēpən/
Meeting	ມິດຕິ້ງ	/ mīttiŋ /
Copy	ໂກປີ	/ kōpī/
Lotion	ໂລຊັນ	/ lōsan /

ແລະອື່ນໆ

ງ. ການປ່ຽນສຽງພະຍັນຊະນະ

ພະຍັນຊະນະໃນພາສາລາວກັບ ພາສາອັງກິດມີບາງໜ່ວຍສຽງແຕກຕ່າງກັນ ແລະ ຈຳ ນວນໜຶ່ງບໍ່ມີໃນພາສາລາວເຊັ່ນ / g, θ, ʃ, dʒ, v, ʒ / ການປ່ຽນສຽງກໍ່ເກີດຂຶ້ນ ກັບສຽງໃດໜຶ່ງຊຸມນີ້ ດ້ວຍວິທີ ທີ່ຫາເອົາສຽງໃດໜຶ່ງທີ່ໃກ້ຄຽງມາໃຊ້ແທນ .

ຕົວຢ່າງ:

ສຽງ / g / ປ່ຽນເປັນ / k / ຫຼື / kh /; / t / ປ່ຽນເປັນ / th /

ຄຳພາສາອັງກິດ	ຄຳພາສາລາວ	
Gallon	ແຄລອນ	/ khēlɔ̄n /
Game	ເກມ	/ kēm /

Gram	ກຣາມ	/ krām /
Gas	ແກ๊ส	/ kɛs /
Tape	เทับ	/ thep /
ແລะอื่นๆ		

ส๎ยง / ʃ, ch / ปฺ่ยนเป๋น / s /

Shirt	(เส๊ื้อ) เซ๊ิด	/ sāt /
Cheek	เซ๊ก	/ sek /
Show	โซ	/ sō /
	Etc	

ส๎ยง / dʒ, j ปฺ่ยนเป๋น c ห๎ื s /

Jam	แจม	/ cɛ̄m /
Jeep	(ลิด) จิบ	/ cip /
Zipper	ซิบ	/ sip /
Amazon	อามาโซน	/ ʔāmāsōn /
Magazine	มากาซิน	/ mākāsin /
	etc	

จ. การปฺ่ยนส๎ยงสะห฼ะ.

ส๎ยงสะห฼ะที่ปฺ่ยนนั้นได้แก่บ่างสะห฼ะปะสิมเป๋นสำคัน เพาะลักสะนะของ่างสะห฼ะปะสิมในพาสาอังกิดบ่างต๋อมีคว่ามแตกต่างกับสะห฼ะปะสิมในพาสาลาว พาให้ออกส๎ยงลำบากในบ่างกำละนี. สะนั้น จิ่งต้อง่มีการปฺ่ยนแปง่ในส่อนนี้.

ต๋อย่าง่:

ປ່ຽນ / ea / ເປັນ / c /.

ຄຳອັງກິດ	ຄຳລາວ
Steak	ສະເຕັກ / satek /
Tape	ເທັບ / thep /

ປ່ຽນ / iu / ກາຍເປັນ / ia /

ຄຳອັງກິດ	ເປັນຄຳລາວ	
Sodium	ໂສດຽມ	/ sōdiam/
Petroleum	ປີໂຕລຽມ	/ pitōliam/
Uranium	ອູລານຽມ	/ ulāniam/
Potassium	ໂປຕາສຽມ	/ pōtāsiam/

4). ການປ່ຽນແປງ ທາງຄວາມໝາຍ ຂອງຄຳທີ່ຮັບຈາກພາສາອັງ ກິດ.

ການປ່ຽນແປງທາງຄວາມໝາຍນອກຈາກພົບກັບຄຳຈາກພາສາອື່ນໆ ແລ້ວຄຳທີ່ຮັບມາຈາກພາສາອັງກິດກໍ່ມີ ກໍລະນີທີ່ເກີດການປ່ຽນແປງເຊັ່ນກັນໃນທາງຄຳ ເຊິ່ງພາຍຫຼັງຮັບຄຳມາໃຊ້ໃນພາສາລາວກໍ່ຈະເກີດການຂະຫຍາຍຄວາມໝາຍ ແຍກສ່ວນຄວາມໝາຍ ເລືອກ ແລະ ໃຊ້ຄວາມໝາຍສ່ວນທີ່ຕ້ອງການດັ່ງນີ້ເປັນຕົ້ນ. ສະນັ້ນ ຄວາມໝາຍທີ່ພົບໃຊ້ໃນປະຈຸບັນ ເມື່ອປຽບທຽບກັບຄວາມໝາຍທີ່ມີໃນເມື່ອກ່ອນບາງຄຳພົບວ່າ ຄວາມໝາຍເກີດຍ້າຍທີ, ແຄບ ເຂົ້າ ຫຼື ກ້ວາງດັ່ງຕໍ່ໄປນີ້ :

(1). ຄວາມໝາຍກ້ວາງອອກ.

ຕົວຢ່າງ:

ຄວາມໝາຍເດີມ	ຄວາມໝາຍທີ່ໃຊ້ໃນພາສາລາວ	ຄຳພາສາອັງກິດ

ໂຕະຍາວໃນຮ້ານທີ່ຂັ້ນເປັນຄືຄວກໂຕະຈ່າຍ ຫຼື ຮັບເງິນ.	ສຳລັບໃຊ້ຂາຍເຄື່ອງ ແລະ ຮັບເງິນ.	Counter
ໂຮງແຮມຂະໜາດໃຫ່ຍ	ໂຮງແຮມທຸກຂະໜາດ.	Hotel
ໜ່ວຍແທກທາດແຫຼວ	ກະປຸກທີ່ເຮັດດ້ວຍເຫຼັກສຳລັບໃສ່ນ້ຳມັນຂະຂະໜາດບັນຈຸ 10 ລິດ	Gallon
ເຮືອນຊັ້ນດຽວ	ເຮືອນຫ້ອງແຖວສຳລັບໃຫ້ຄົນມາພັກ	Bungalow
ສຳເນົາ, ຕົ້ນສະບັບ	ຖອດຕົ້ນສະບັບອອກໃຫ້ເປັນສະບັບໜຶ່ງອີກຫຼາຍອັນ.	Copy
ກຸ່ມໂຈນໜຶ່ງຂອງພວກອັງຢີ່ໃນອາເມລິກາ, ອິຕາລີ	ກຸ່ມຄົນທີ່ກ້າເຮັດສິ່ງທີ່ລະເມີດກົດໝາຍ, ກຸ່ມທີ່ກ້າສ່ຽງໂສຕາຍເພື່ອຄ້າຂາຍຂອງເຖື່ອນ.	Mafia

ແລະ ອື່ນໆ.

(2). ຄວາມໝາຍແຄບເຂົ້າ.

ຕົວຢ່າງ:

Goal	ຈຸດໝາຍ, ຈຸດທີ່ຫ້ອງໃຈໃສ່.	ປະຕູສຳລັບ ເຕະບານເຂົ້າ.
Film	ຝ້ານ້ຳມັນທີ່ຟູເຄືອບໜ້ານ້ຳ ຫຼື ນ້ຳຢາທາແກ້ວແວ່ນ.	ສິ່ງໃຊ້ຖ່າຍຮູບ.
Farm	ນາ ຫຼື ໄຮ່ທີ່ສຳລັບປູກລ້ຽງສັດ.	ສູນສຳລັບເຮັດໄວ້ລ້ຽງສັດ.
Note	ຈົດໃຊ້ເຄື່ອງໝາຍໄວ້ດ້ວຍການຂີດ, ຂຽນເພື່ອໃຫ້ຈື່.	ໝາຍສຽງດົນຕີ.

Cake	ອາຫານທັງແນວຄາວແນວຫວານ.	ເຂົ້າໜົມຊະນິດອ່ອນເຮັດດ້ວຍແປ້ງ, ນົມ, ເນີຍ ແລະ ແປ້ງຟູ

(3). ຄວາມໝາຍປ່ຽນແປງ.

ຕົວຢ່າງ:

Fit	ພໍເໝາະ, ເຮັດໃຫ້ພໍດີຕົວ.	ຄັບ, ແໜ້ນໂດຍໃຊ້ກັບເຄື່ອງນຸ່ງ
Clinic	ເອົາໃຈໃສ່ດູແລ ຫຼື ບຍກສອນຄົນເຈັບ ໃນເວລາຍັງປ່ວຍຢູ່,	ບ່ອນກວດພະຍາດທີ່ສ່ວນຕົວເຮັດ ຂຶ້ນ.
Gigolo	ຜູ້ຊາຍທີ່ຮັບຈ້າງເຕັ້ນລຳ ຫຼື ຕິດຕໍ່ສາວ ທີ່ບໍ່ມີຜົວ, ແມ່ຮ້າງໃຫ້ແກ່ຜູ້ອື່ນ ທີ່ຕ້ອງ ການ.	ຜູ້ຊາຍທີ່ເລງ, ມັກໃນການປະທະ ຕ່ອຍຕີ (ຂີ້ໂກະ ນັກເລງ)
Safari	ການທ່ຽວເລາະຍິງສັດ.	ເສື້ອສັດຊະນິດໜຶ່ງທີ່ຖືເປັນເຄື່ອງ ແບບທັງສັ້ງ ແລະ ເສື້ອ

5). ບັນດາຄຳທີ່ຮັບຈາກພາສາອັງກິດໃນພາສາລາວ.

ຄຳທີ່ຮັບຈາກພາສາອັງກິດສູ່ພາສາລາວນັ້ນ ເປັນສິ່ງທີ່ຫາພົບໄດ້ສະດວກເນື່ອງຈາກວ່າ ເອກກະສານທີ່ໃຫ້ຂໍ້ມູນກ່ຽວກັບຄຳພາສາອັງກິດກໍ່ມີຫຼາຍປະການຕາມມາກໍ່ຄື ການຮັບອັງກິດ ເຂົ້າມານັ້ນປະຈຸບັນ ກໍ່ຍັງມີຂະບວນການຮັບເຂົ້າມາຢ່າງຕໍ່ເນື່ອງ ບໍ່ວ່າທາງດ້ານວິທະຍາສາດ, ເຕັກນິກ ແລະ ວິຊາການຕ່າງໆກໍ່ມີການຮັບ. ດ້ວຍການຄົ້ນຄວ້າສະເພາະແຕ່ວິຊາພາສາສາດ ຢ່າງດຽວກໍ່ມີຄຳວິຊາການຈາກພາສາອັງກິດເຂົ້າມາໃຊ້ກ່ວາ 500 ຄຳ. ໃນທາງຄອມພິວເຕີ, ການຄ້າ, ເສດຖະສາດ, ການປ່າໄມ້... ກໍ່ຕ້ອງຮັບຄຳຂອງພາສາອັງກິດເຂົ້າມາໃຊ້ຫຼາຍເຊັ່ນກັນ.

ຄຳຈາກພາສາອັງກິດທີ່ຮັບເຂົ້າຮວບຮວມໄດ້ໃນນີ້ຄົງເປັນສ່ວນໃດໜຶ່ງເທົ່ານັ້ນ, ສ່ວນທີ່ຍັງຂາດຫາຍຈາກການເກັບກຳນີ້ຍັງສາມາດຊອກ ແລະ ເກັບກຳຕໍ່ໄປ, ເມື່ອໃດມີການແກ້ໄຂເພີ່ມຕື່ມກໍ່ຈະນຳມາຈັດພິມສະເໜີຕໍ່ໄປ.

ການສະເໜີຄຳຈາກພາສາອັງກິດ ຈະຈັດເປັນສອງກຸ່ມໃຫ່ຍຄື: ກຸ່ມທີ່ຮັບແບບທັບສັບ ແລະ ກຸ່ມທີ່ຮັບທາງຄວາມໝາຍ ແລ້ວນຳມາບັນຍັດຄຳຂຶ້ນ ຫຼື ແປຄວາມໝາຍອອກສຳລັບຄຳທີ່ຮັບຈາກພາສາອັງກິດມາໃຊ້ໃນວິຊາການດ້ານຕ່າງໆ ນັ້ນຖືເປັນຄຳຢືມທາງວິຊາການສ່ວນທີ່ຈະສະເໜີໃນນີ້ ຈະມາເລືອກບັນດາຄຳ ທີ່ປະກົດໃຊ້ຫຼາຍໃນສັງຄົມທົ່ວໄປເປັນສຳຄັນ.

(1). ຄຳທີ່ຮັບແບບກ່າຍສຽງຂອງຄຳ. (ທັບສັບ)

ຄຳລາວກ່າຍສຽງຈາກ	ຄຳຂອງພາສາອັງກິດ
ອາຊີ	Asia
ເອເປີ້ນ	Apple
ອັດສະຟານ	Asphalt
ໂອໂຕມາຕິກ	Automatic
ເບຍ	Beer
ບາ, ໂຮງດື່ມເຫຼົ້າ	Bar
ໂບນັດ	Bonus
ບິນ	Bill
ບັງກາໂລ	Bungalow
ບັດເຕີຣີ	Battery
(ລົດ) ບັດ	Bus
ໄບເບີ້ນ	Bible
ປຳ	Bump
ກ໋ອກ	Cock

ໝວກແກັບ	Cap
ຄຣິດຕຽນ	Christian
ໂຊໂກແລັດ	Chocolate
ໃບເຊັກ	Check
ກເຣດິດ	_Credit
ຄອນກຣີດ	Concrete
ແຄນຊຽມ	Calcium
ທາດກາກບອນ, (ຖ່ານ)	Carbon
ເຄັກ	Cake
ຫົວກະລົດ	Carrot
ກາຊີໂນ	Casino
ເສຣາມິກ	Ceramics
ແຊ້ມ	Champ
ຄລີນິກ	Clinic
ກອກໄຕ	Cock tail
ເຄົາເຕ້	Counter
ຄອມພິວເຕ້	Computer
ຄອມມຸນິດ	Communist
ຊີເນມາ, (ຮູບເງົາ)	Cinema
ການິ້ງ	Canon
ກາຕາລົກ	Catalogue
ຄາດ	Card
ກົ້ງຕຣອນ	Control
ກົ້ງເຕ້	Counter

ຄອນເສີດ	Concert
ຄອມເປັຣກ	Complex
ແຄ້ມ	Camp
ໂກປີ	Copy
ຄໍລຳ	Column
ຄາບິວເຣເຕ້	Carburetor
ຄຣິດສມັດ	Christmas
ແກຣມ	Cream
ເຊັກ	Cheque
ເອເລັກຕໂຣນ	Electron
ເອຕີໂອບີ	Ethiopia
ເອເລັກໂຕຣນິກ	Electronic
ອັງກິດ	English
ເອດິເຕ	Editor
ເອັກສປອດ	Export
ແຟັກ	Fax
ຟາມ	Farm
ຟອມ	Form
ໄຟເບີ	Fiber
ຟີຊິກ	Fizipue
ແກ๊ส	Gas
ก๊อบ	Golf
ภาธา	Garage
เกม	Game

ເກຍ (ລົດ)	Gear
ກາຍເດ້	Glider
ກີຕາ	Guitar
ໂກນ	Goal
ຈີໂກະ (ນັກເລງ)	Gigolo
ກຣາມ	Gram
ຢິມນາສະຕິກ	Gymnastic
ແກ້ງ	Gang
ແຄລອນ	Gallon
ເຈເນຣານ ນາຍພົນ	General
ກຣຳມາ	Grammar
ຮິບປີ	Hippy; Hippie
ໂຮເຕັນ	Hotel
ແຈມ	Jam
(ເສື້ອ) ແຈກເກັດ, ເສື້ອກັນລົມ.	Jacket
ຊາວຢິວ	Jew
ຄີບອດ	Keyboard
ຫ້ອງລາໂບ, ຫ້ອງທົດລອງປະຕິບັດງານ.	Laborator
ເລັນ (ໜ້າແກ້ວກ້ອງຖ່າຍຮູບ)	Lens
ລິບ	Lift
ລິດ	Liter
(ໄຂ້) ມາລາເລຍ, ໄຂ້ຍຸງ.	Malaria
ມາຣາທອນ (ການແຂ່ງຂັນຢ່າງໜຶ່ງ)	Marathon
ເມຕາຟໍ (ຄຳປຽບທຽບ)	Methaphore

24 / VII
ห้องเจ้อหม่าอุย

ມິສເຕີ	Mister
ໂມດ	Mode
ໂມນິເຕີ	Monitor
ໂມແດວ (ຕົວຢ່າງ)	Model
ໂມດິຟາຍ	Modify
ມໍລະສຸມ	Monsoon
ໂມໂນໂທນ, (ສຽງຊ້ຳແນວເກົ່າ ຊ້ຳຊາກ)	Monotone
ມໍຣານ, (ສິລະທຳ)	Moral
ມອກຟີນ	Morphine
ໂມຕິບ	Motif
ມໍເຕີ	Motor
ມາວສ໌	Mouse
ມູຊຽນ. (ຫໍພິດຕະພັນ)	Museum
ມິດຕິ້ງ	Meeting
ໂນດ	Note
ນຳເບີ	Number
ອໍເປຣາ (ຟ້ອນອໍເປຣາ)	Opera
ອໍເປຣາເຕີ (ຜູ້ເຮັດ)	Operator
ອິບຕິກ	Optic
ອໍລິຈິນ (ອັນກຳ, ອັນເດີມ)	Origin
ອໍແກນ	Organ
ອົກຊີເຢນ	Oxygen
ໂອໂຊນ	Ozone
ປາຊີຟິກ	Pacific

ปลัง	Plan
ปลาสติก	Plastic
แปับ	Pipe
ปอม	Pound
ปิด (ไปสะนี)	Post
ปโธเจ๊ก, (โถงกาม)	Project
ปธิม (พิม)	Print
ปโธกธาม	Program
ปโธโมด (สิ่งเสิม)	Promote
ทาดฟิดสะฟ์	Phosphorous
ฟิซิก	Physics
โกตา	Quota
คิว	Queue
ซ้อด, (นำ้แจ่วจุ)	Sauce
สะแต็ม	Stamp
โสดยม	Sodium
สะตาด	Start
สะแล็ก	Slack
โซ, สะแดง	Show
สะแต็ก	Steak
เสิบ	Serve
แซ้นวิก	Sandwich
เสื้อเชิด	Shirt
ซุด	Suit

ສະปิด	Speed
ສะปาย	Spy
โซฟา	Sofa
สะลัด	Salute
สะกิ	Ski
1) สะโน. 2) หิมมะ	snow
โสดา	Soda
สะเปักตรำ	Spectrum
ซิน่นิม	Synonym
ซิมโบน	Symbol
ซิมโพนิ	Symphony
แท๊กซิ	Taxi
ตรักเติ	Tractor
ถัง	Tank
ยูนิด	Unit

(2). **ภาษารับคำด้วยวิทีภาษาแป หื** บันยัดคำ.

คำที่รับด้วยภาษาแปได้พิบว่า เป็นคำวิชาภาษ, วิทะยาสาด, สังคิมเป็นสำคัน เห็นว่า **ความหมาย**ของคำสามาดหาคำ ที่มีแมวใม พาสาลาวมำเอิามาแป. คำที่ใช้แปนั้น**อาด**เป็นคำเดิมของพาสาลาว หื คำที่รับเอิามาจาภพาสาอื่นก่ได้เชิ่งคิมลาวเคียรู้ และ ใช้คำนั้นจินลิ้ง หื เกิดความแจ่มแจ้งภว่า, หาภคำใดหาคำแปบ่ได้ ก่ใช้วิทีก่ายสงของคำที่ได้สะเหนิมานั้น. ต่ไปนี้เป็นภาษสะเหนิบันดาคำที่รับด้วยภาษแปที่สามาดรอบรอมมาได้.

ຄຳແປໃນພາສາລາວ	ຄຳພາສາອັງກິດ
ສະຖາບັນຄົ້ນຄວ້າວິທະຍາສາດ	Academy
ການເຂົ້າເຖິງ	Access
ບັນຊີ	Account
ດັດແປງ	Adapt
ກ້າວໜ້າ	Advance
ຄຳແນະນຳ	Advice
ທີ່ປຶກສາ	Adviser
ກິດຈະການ, ການທຳງານ	Affair
ການກະສິກຳ	Agriculture
ແຫ່ງກະສິກຳ	Agronomy
ສາຍການບິນ	Air line
ເດີນເຮືອບິນ	Airport
ຕົວອັກສອນ, ຕົວໜັງສື	Alphabet
ເອກອັກຄະລັດຖະທູດ	Ambassador
ໜ່ວຍແທກຄວາມເຂັ້ມຂອງ ກະແສໄຟຟ້າ	Ampere
ວິໄຈ	Analyze
ສ່ວນປະກອບຂອງຮ່າງກາຍ	Anatomy
ກິດຈະກຳ	Activity
ແຕ່ງຕັ້ງ	asign
ຄົບຄ້າສະມາຄົມ	Associate
ຜູ້ຊ່ວຍ	Assistant
ປຶ້ມແຜນທີ່	Atlas

ເດືອນສິງຫາ, ເດືອນ 8	August
ຜູ້ຟັງ	Audience
ສິລະປະ	Art
ທ່າທາງ, ທ່າທີ	Attitude
ການປົກຄອງ	Autonomy
ເບື້ອງຫຼັງ, ພື້ນຖານ	Background
ໝາກ ປູມເປ້	Balloon
ທະນາຄານ	Bank
ພື້ນຖານ	Base
ຖ່ານໄຟຟ້າ, ໝໍ້ໄຟຟ້າ	Battery
ຊີວະປະວັດ	Biography
ຊີວະສາດ	Biology
ຫ້ອງຂັບ, ຫ້ອງບັນຊາ	Cabin
ປະຕິທິນ	Calendar
ກ້ອງຖ່າຍຮູບ	Camera
ບໍລິເວນຂອງຄ້າຍ, ຂອງໂຮງຮຽນ	Campus
ຕະຄອງນ້ຳ	Canal
ມະເລງ	Cancer
ທຶນ, ແຫ່ງທຶນ	Capital
ລັດທິທຶນນິຍົມ	Capitalism
ລົດ	Car
ບັດ, ໄພ້	Card
ເງິນສົດ	Cash
1) ຕົວລະຄອນ. 2)ອຸປະນິໄສ	Character

ພົນລະເຮືອນ	Civil
ບໍລິການມວນຊົນ	Civil service
ສົງຄາມພາຍໃນ	Civil war
ວົງເລັບ	Comma
ຄ່າສິນຈ້າງ	Commission
ສາມັນ.	Common
ບໍລິສັດ.	Company
ເຂັມຊີ້ທິດ.	Compass
ຄວາມເຂົ້າໃຈ ທາງວິຊາການ.	Comprehension
ຢືນຢັນ	Confirm
ພະຍັນຊະນະ	Consonant
ຄວບຄຸມ	Control
ເນື້ອໃນ	Content
ຈິດສຳນຶກ	Concept
ວັດທະນະທຳ	Culture
ຮູບເງົາ	Cinema
ລະບອບປະຊາທິປະໄຕ	Democracy
ຮູບແບບ	Diagram
ໃບປະກາດສະນິຍະບັດ	Diploma
ເສດຖະກິດ	Economics
ໄຟຟ້າ	Electricity
ພະລັງງານ	Energy
ການສົ່ງອອກ	Export
ຜູ້ຊ່ຽວຊານ	Expert

ການກາຍຍະກຳ	Gymnastic
ວຽກບ້ານ	Homework
ໂຮງໝໍ	Hospital
ສົມມຸດຕິຖານ	Hypothesis
ລາຍໄດ້	Income
ລົງທຶນ	Invest
ພາສາສາດ	Linguistics
ວັນນະຄະດີ	Literature
ຕູ້ໃສ່ເຄື່ອງ	Locker
ຂັ້ນສູງສຸດ	Maximum
ລະບຽບວິທີ	Method
ເຄື່ອງຂະຫຍາຍສຽງ	Microphone
ກ້ອງຈຸລະທັດ	Microscope
ສ່ວນໜ້ອຍ	Minority
ລູກສອນໄຟນຳວິຖີ.	Missile
ຕາໜ່າງ	Network
ແຫ່ງສາຍຕາ	Optic
ໜັງສືເດີນທາງ	Passport
ສ່ວນຮ້ອຍ	Percent
ປັດຊະຍາ	Philosophy
ວິທະຍາກ່ຽວກັບສຽງເວົ້າ	Phonetics
ລະດັບສຽງ	Pitch
ໂຄງການ	Project
ແຜນ, ແຜນຜັງ	Plan

ຫົວສຽບ (ໄຟຟ້າ)	Plug
ເຄື່ອງພິມ	Printer
ໄປສະນີ	Post
ມັນຝຣັ່ງ	Potato
ເຝິກ, ຫັດ	Practice
ການອະນຸລັກ	Preservation
ລາຍການ	Program
ກ້າວໜ້າ	Progress
ຈິດຕະວິທະຍາ	Psychology
ສາທາລະນະ	Public
ວິທະຍຸ	Radio
ລົງທະບຽນ	Register
ປະຕິຮູບ	Reform
ຄົ້ນຄວ້າ	Research
ສະຖານທີ່ພັກຜ່ອນຂອງຜູ້ທ່ຽວ	Resort
ຄວາມເພີ່ນໃຈ,ຄວາມຊຸດຊົ້ງໃຈໃນຮັກ	Romantic
ຜູ້ໄດ້ຮັບທຶນການສຶກສາ	Scholar
ແຜນແບບ	Scheme
ຈໍພາບ	Screen
ສຳມະນາ	Seminar
ກະໂປ່ງ	Skirt
ຄຳພາສາຕະຫຼາດ	Slang
ມາດຕະຖານ	Standard
ສະຖານີ	Station

ການເນັ້ນສຽງ	Stress
ພະຍາງ	Syllable
ປະໂຫຍກ	Sentence
ໂຄງສ້າງ	Structure
ສັນຍາລັກ, ເຄື່ອງໝາຍ	Symbol
ເຄິ່ງຄື, ກ້ຳເກິ່ງ.	Symmetry
ຄຳທີ່ມີຄວາມໝາຍ ຄ້າຍຄືກັນ.	Synonym
ວາກຍາສຳພັນ	Syntax
ລະບົບ	System
ຫວ່ງຫ້າມ	Taboo
ເຄື່ອງສົ່ງໂທລະເລກ	Telegraph
ໂທລະສັບ	Telephone
ໂທລະທັດ	Television
ພາກຮຽນ	Term
ສອບເສັງ, ທົດລອງ	Test
ປຶ້ມແບບຮຽນ	Textbook
ວິທະຍານິພົນ	Thesis
ສະຫະ	Union
ລີ້ນໄກ່	Uvula
ເຮືອຮົບ	Warship
ການສ່ອງໄຟຟ້າ	X ray
ແລະອີກບາງຄຳ	

7. ການຮັບຄຳຈາກພາສາໄທ

1). ຄວາມສຳພັນທາງ ພາສາລາວ ແລະ ໄທ

ພາສາລາວ ແລະ ໄທ ມີຕົ້ນກຳເນີດມາຈາກແຫ່ງດຽວກັນຄືພາສາຕະກູນໄຕ (Tai family language). ແຕ່ໃດໆມາພາສາລາວ ແລະ ພາສາໄທຕ່າງກໍ່ເຄີຍໄດ້ຮັບອິດທິພົນທາງ ພາສາພາຍນອກມາຄ້າຍໆກັນຄື: ແຕ່ເດີມເຄີຍໄດ້ຮັບອິທິພົນຈາກພາສາຈີນ, ຕໍ່ມາກໍ່ມີອິດທິພົນ ຂອງພາສາມອນ, ຂະແມ, ສັນສະກິດ ແລະ ປາລີ. ໃນຍຸກສະໄໝນີ້ກໍ່ມີພາສາລາເຕັ້ງ, ຝຣັ່ງ, ອັງກິດ ແລະ ອີກບາງ ພາສາ. ສະນັ້ນ ໃນພາສາທັ້ງສອງ ຈຶ່ງເກີດມີການຮັບຄຳ ຈາກພາສາ ຕ່າງໆທີ່ກ່າວມານີ້. ນອກນີ້ຂະບວນແຫ່ງການຢືມຄຳກໍ່ພົບວ່າມີຄວາມຄ້າຍກັນຄື: ໃນພາສາ ລາວມີຄວາມຕ້ອງການຄຳຈາກພາສາອື່ນຢ່າງໃດໃນພາສາໄທກໍ່ພົບວ່າມີຄວາມຕ້ອງການຢ່າງ ນັ້ນເຊັ່ນກັນ. ຍຸກສະໄໝໃດທີ່ລາວມີການຮັບຄຳຈາກພາສາອື່ນຫຼາຍໃນພາສາໄທກໍ່ມີການຮັບ ຫຼາຍເຊັ່ນກັນ ພ້ອມນັ້ນການຮັບເອົາແບບໜັງສືຈາກພາຍນອກເຂົ້າມາດັດ ຫຼື ປັບປຸງນຄຳຕ່າງໆ ໃນພາສາຕົນຕ່າງກໍ່ມີຂະບວນການນີ້ເຊັ່ນກັນ. ຈາກສະພາບທີ່ລາວ ກັບໄທຕ່າງກໍ່ມີຄວາມໃກ້ ຊິດປະກອບກັບເຂດແດນກໍ່ຕິດຈອດກັນເຖິງພັນແປດຮ້ອຍກວ່າກິໂລແມັດ ໄດ້ເຮັດໃຫ້ພາສາທັ້ງ ສອງຍັງຄົງຄວາມສຳພັນຂອງຄວາມສາມາດສື່ສານກັນເອົາໄວ້ຕະຫຼອດມາເຖິງປະຈຸບັນ. ນອກນີ້ ກໍ່ຍັງມີຫຼາຍຢ່າງທີ່ເລິກເຊິ່ງອັນເປັນການໃຫ້ຮູ້ເຖິງຄວາມສຳພັນຂອງພາສາທັ້ງສອງ ເຊິ່ງອາດສາ ມາດນຳມາສຶກສາໄດ້ຫຼາຍໆປະການຕໍ່ໄປ.

ห้ามจำหน่าย

2). ຄວາມແຕກຕ່າງ ບາງປະການໃນພາສາລາວ ແລະ ພາສາ ໄທ.

ການຮຽກເປັນພາສາລາວແລະພາສາໄທກໍ່ໝາຍວ່າເປັນອັນລະພາສາ, ຫາກເປັພາສາ ທີ່ຢູ່ໃນຕະກູນຕ່າງກັນ, ຄວາມບໍ່ຄືກັນກໍ່ສາມາດ ເຫັນໄດ້ງ່າຍ. ສ່ວນພາສາລາວ ກັບໄທເຖິງວ່າ

ເປັນອັນລະພາສາ ແຕ່ຈະເຫັນເປັນຄວາມແຕກຕ່າງທີ່ຈະແຈ້ງໄດ້ນັ້ນມີພຽງບາງຢ່າງ,ເຊິ່ງມີບັນ ດາ ປະການເດັ່ນດັ່ງນີ້:

(1). **ລັກສະນະທາງພາສາ.**

ໃນພາສາລາວມີໜ່ວຍສຽງພະຍັນຊະນະ 20 ໜ່ວຍ ແຕ່ໃນພາສາໄທມີ 21 ໜ່ວຍ. ພະຍັນຊະນະຕົວທີ່ຕ່າງກັນ ເຊິ່ງໃນພາສາໄທມີ ແຕ່ບໍ່ມີໃນພາສາລາວຄື: / r/; / $t_{ɕ}$ /; / ch / ພະຍັນຊະນະໃນພາສາລາວມີ ແຕ່ໃນພາສາໄທບໍ່ມີໄດ້ແກ່ໜ່ວຍສຽງ / ɲ/.

ກ່ຽວກັບສຽງວັນນະຍຸດ:

ຈຳນວນສຽງວັນນະຍຸດໃນພາສາລາວ ແລະ ໄທ ມີເທົ່າທຽມກັນຄື: ໃນພາສາໄທມີ 5 ສຽງ, ໃນພາສາລາວສຽງວຽງຈັນມີນັບແຕ່ 5ເຖິງ 6ສຽງ. ແຕ່ໃນນີ້ ສິ່ງສັງເກດໄດ້ກໍ່ຄື ຄຳດຽວກັນ ເຊິ່ງມີຢູ່ໃນພາສາທັງສອງແຕ່ຈະມີສຽງວັນນະຍຸດທີ່ກົງກັນນັ້ນມີໜ້ອຍຄຳ. ເນື່ອງຈາກສຽງວັນນະ ຍຸດມີຄວາມບໍ່ກົງກັນໃນຫຼາຍໆຄຳເຊັ່ນນີ້ ຈຶ່ງພາໃຫ້ມີຜົນຕໍ່ການພັນແປດ້ານຄວາມໝາຍຂອງ ຄຳ ແລະ ການເກີດເປັນຄຳໃໝ່ໃນພາສາ ຕະຫຼອດເຖິງວິທີສ້າງຄຳໃໝ່ຂຶ້ນມາໃນພາສາກໍ່ມີສິ່ງ ຕ່າງກັນຫຼາຍ.

(2). **ຄວາມແຕກຕ່າງໃນພະຍັນຊະນະຄວບ**

ໃນພາສາລາວ ພະຍັນຊະນະ ທີ່ສາມາດໃຊ້ຄວບ ກັບພະຍັນຊະນະ ຕົວອື່ນໄດ້ຮັບວ່າມີ ພຽງໜຶ່ງຕົວຄື: / w / ແລະ ສາມາດຄວບກັບພະຍັນຊະນະຕົວອື່ນໆໄດ້ 13 ຕົວ ດັ່ງທີ່ສະເໜີ ໄວ້ໃນພາກຕົ້ນ. ໃນພາສາໄທພະຍັນຊະນະທີ່ໃຊ້ຄວບໄດ້ນັ້ນ ມີ 3 ຕົວຄື: / r / ; / l / ; / w / .

(3). ກ່ຽວກັບຄຳ

ໃນພາສາລາວ ແລະ ໄທ ຕ່າງກໍ່ມີຄຳເຊິ່ງບໍ່ແມ່ນຄຳທີ່ມາຈາກກົກເຄົ້າອັນດຽວກັນ (Non cognate word) ຢ່າງຫຼວງຫຼາຍ. ພ້ອມນີ້ ຜົນກະທົບຈາກສະພາບ ແວດລ້ອມໃໝ່ ກໍ່

ໄດ້ເຮັດໃຫ້ແຕ່ລະພາສາ ເກີດຄວາມຕ້ອງການຮັບເອົາຄຳຈາກພາສາອື່ນເຂົ້າມາຕາມເງື່ອນໄຂ ຂອງພາສາໃຜມັນ. ສະນັ້ນມີຫຼາຍຄຳເຊິ່ງມີໃນພາສາລາວແຕ່ບໍ່ພົບໃນພາສາໄທ ແລະກໍ່ມີ ຄຳຊຸມໜຶ່ງໃນພາສາໄທມີ ແຕ່ບໍ່ມີໃນພາສາລາວ.

ຕົວຢ່າງ:

1. ຄຳທີ່ມີໃນພາສາລາວ ແຕ່ບໍ່ມີໃນພາສາໄທ: ເຫີ້ງ, ຄົວ (ຄົວກິນ, ຄົວສັດ ...), ດົນ, ປານໃດ, ຍ່ານ, ເຊາະ, ເຫຼົ້າ, ລັບ (ລັບພ້າ), ມ່ຳ, ມົກ, ເອາະ, ຈີ່, ຫຍ້ໍ, ຄັ້ນ, ເຫຍັ້ນ, ແຍງ, ດາດ, ເດິ, ຊຸກ, ຍູ້, ໂປກ,ໃຄ່, ພອງ, ຫຼາບ, ມຸບ, ໝູບ, ຫ້ຳ, ແຍ່, ຈູດ, ແລະ ຊິ່ປາ, ຊິ່ນົກຫຼາຍ ຊະນິດກໍ່ຕ່າງກັນ.

2. ຄຳທີ່ມີໃນພາສາໄທ ແຕ່ບໍ່ມີໃນພາສາລາວ: ໂປຣຍ, ຖຸນ, ເຊືອດ, ຄຣ້າມ, ກະດາກ, ຊຳແລະ, ຊະລໍ, ກຣ້ຽວກຣາດ, ໂຊກໂຊນ, ເທີ, ສັນ, ກຣະຜີນ, ຂະຫຍຳ, ຂະຍີ້ ...

ນອກນີ້ ພົບວ່າມີຫຼາຍຄຳເຖິງຮູບຄຳຈະຄື ຫຼື ຄ້າຍຄືກັນທີ່ສຸດ ແຕ່ຄວາມໝາຍຈະບໍ່ກ້ຽງ ກັນທຸກຢ່າງ ໝາຍວ່າ ສ່ວນປະກອບທາງຄວາມໝາຍໃນຄຳນັ້ນໆ ມີການປ່ຽນໄປພາໃຫ້ເກີດ ຄວາມໝາຍ ເຄື່ອນໄປ.

ການໃຊ້ຄຳກໍ່ແມ່ນບັນຫາໜຶ່ງທີ່ສະແດງອອກເຖິງຄວາມແຕກຕ່າງ ລະຫວ່າງພາສາລາວ ແລະ ພາສາໄທ ດ້ວຍການຕິດຕາມພົບວ່າ ຄຳດຽວກັນແຕ່ເມື່ອນຳໄປໃຊ້ກັບບໍລິບົດຕ່າງໆ ມີຫຼາຍກໍລະນີ ພົບວ່າໃຊ້ຕ່າງກັນ ຫຼື ໃຊ້ດັ່ງກັນບໍ່ໄດ້ກໍ່ມີ.ຕົວຢ່າງທ ແທກ, ແລ່, ຫັ່ນ,ແພ້,ຄູ , ອະ ລຸ້ອະລວຍ....ຈາກທີ່ສະເໜີໃຫ້ເຫັນຄວາມສຳພັນ ໂດຍຫຍໍ້ນີ້ ໄດ້ຈຳ ແນກໃຫ້ເຫັນວ່າ ພາສາ-ລາວແລະພາສາໄທເປັນອັນລະພາສາ ເຊິ່ງມີຄວາມແຕກຕ່າງຢ່າງໃດໜຶ່ງຢູ່ໃນທຸກ ລະບົບນັບ ແຕ່ໜ່ວຍສຽງ ຈົນເຖິງ ການໃຊ້ ຄຳ.

3). ການຮັບຄຳຈາກພາສາໄທມາໃນພາສາລາວ

ບົນພື້ນຖານທີ່ຖືວ່າ ພາສາລາວເປັນພາສາຕ່າງຫາກຈາກພາສາໄທ ແລະ ຍັງຄົງຄວາມ ເປັນເອກະລັກອັນດັ້ງເດີມຂອງຕົນໄວ້ສະເໝີມາ ສະນັ້ນ ລາວຈຶ່ງມີຄວາມຮູ້ສຶກຕໍ່ກັບ ຄຳຈຳນວນ

ໜຶ່ງ ເຊິ່ງຖືວ່າເປັນຄຳຮັບຈາກພາສາໄທເຂົ້າມາ ເຖິງວ່າຮູບຄຳ ແລະສຽງໃນຄຳນັ້ນມີຄວາມຄ້າຍກັບຄຳຂອງລາວກໍ່ຕາມ,ແຕ່ກໍ່ມີມີຂໍ້ສັງເກດອັນເປັນຫຼັກບາງ ຢ່າງທີ່ສຳຄັນ ດັ່ງນີ້:

1.) ຄວາມໝາຍຂອງຄຳ.

2.) ຄວາມສຳພັນຂອງຄວາມໝາຍຄຳນັ້ນກັບຄວາມໝາຍຂອງຄຳອື່ນໃນລະບົບຄວາມໝາຍນັ້ນ.

3.) ວິທີການປະກອບສ້າງຄຳນັ້ນເຊິ່ງຕ່າງຈາກວິທີ ແລະ ຈິດສຳນຶກທາງພາສາທີ່ມີມາໃນພາສາລາວ.

4.) ມີສ່ວນໃດສ່ວນໜຶ່ງຂອງຄວາມໝາຍໃນຄຳເທົ່ານັ້ນທີ່ມີຄວາມຄືກັບຄຳໃນພາສາລາວແຕ່ ອີກສ່ວນໜຶ່ງຂອງຄວາມໝາຍໃນຄຳນັ້ນ ມີຄວາມແຕກຕ່າງ.

5.) ພົບວ່າມີການນຳຄຳນັ້ນມາໃຊ້ແທນໜ້າທີ່ຂອງຄຳບາງຄຳທີ່ມີແລ້ວໃນພາສາລາວ.

ການຈະຈຳແນກໃຫ້ອອກວ່າ ຄຳໃດແມ່ນຄຳລາວ ແລະ ຄຳໃດແມ່ນຄຳຮັບຈາກພາສາໄທນັ້ນ ມັນບໍ່ແມ່ນແນວທີ່ຈະເຫັນຈະຮູ້ໄດ້ງ່າຍປານໃດສຳ ລັບຄຳທົ່ວໄປ. ສະນັ້ນ ຄົນລາວມີຫຼາຍຄົນ ບໍ່ສາມາດແຍກອອກ, ອັນໄດ້ເປັນສາເຫດໃຫ້ເກີດການຮັບຄຳຂອງພາສາໄທເຂົ້າມາໃຊ້ປົນປະກັບຄຳຂອງພາສາລາວແບບບໍ່ຮູ້ສຶກ.

ໃນບັນດາຄຳທີ່ລາວຮັບມາຈາກພາສາໄທນັ້ນເປັນທີ່ໜ້າສັງເກດກໍ່ຄືເປັນຄຳໃໝ່ ທີ່ບອກສິ່ງໃໝ່ ກໍ່ມີຫາກບໍ່ຫຼາຍຄຳປານ ໃດ,ແຕ່ເປັນຄຳທີ່ມີແລ້ວໃນພາສາລາວ ການເປັນໄປເຊັ່ນນີ້ຄົງເກີດຈາກດ້ານອື່ນທີ່ນອກຈາກພາສາເປັນສຳຄັນເຊັ່ນ ຜົນສະທ້ອນທາງເສດຖະກິດ, ການຄ້າ ການບັນເທີງ ແລະ ສິ່ງພິມຕ່າງໆ.

4). ຂໍ້ສັງເກດ ຕໍ່ກັບຄຳທີ່ຮັບຈາກພາສາໄທ

ເນື່ອງຈາກຄຳໃນພາສາລາວ ແລະ ພາສາໄທມີຄວາມຄື ຫຼື ຄ້າຍຄືກັນຫຼາຍປະການ ນັບທັ້ງຮູບຄຳ, ຄວາມໝາຍ ແລະ ສຽງ ຕະຫຼອດເຖິງການໃຊ້ຄຳ ໃນບໍລິບົດ, ດ້ວຍເຫດນີ້ ການ

ຈະຮັບວ່າຄຳໃດແມ່ນຄຳທີ່ເອົາມາຈາກພາສາໄທສູ່ພາສາລາວນັ້ນ ຈຶ່ງມີຄວາມລຳບາກພໍຄວນ ເພື່ອສັງເກດ ແລະ ຕັດສິນ.ສຳລັບ ຜູ້ຄົ້ນຄວ້າເອງໄດ້ມີຫຼັກບາງປະການທີ່ສຳຄັນເພື່ອໃຊ້ພິຈາ-ລະນາ ຄື: ໜຶ່ງ ໃຊ້ວິທີທັງ 5 ທີ່ສະເໜີ ໄວ້ໃນບົດນີ້

ສອງ ໃຊ້ວິທສັງເກດຕາມການປະກົດຕົວຂອງຄຳນັ້ນໃນພາສາລາວຄື:

1.) ເມື່ອກ່ອນຄຳນີ້ ບໍ່ທັນປະກົດມາ ເຊິ່ງຫາປະກົດຂຶ້ນໃໝ່ຢູ່ໃນໄລຍະທ້າຍຂອງທົດສະ ວັດນີ້, ການປະກົດນັ້ນມັກເລີ່ມດ້ວຍວົງແຄບກ່ອນ.

2.) ປະກົດແທນຄຳ ຊະນິດດຽວກັນ ທີ່ມີແລ້ວໃນພາສາລາວ.

3.) ມາເຮັດໜ້າທີ່ອັນດຽວກັບຄຳທີ່ມີແລ້ວໃນພາສາລາວ ຫຼື ມາປ່ຽນແທນຊະນິດຄຳ ນັ້ນໆຂອງພາສາລາວ.

4.) ໂຄງສ້າງຂອງຄຳໂດຍສະເພາະຄຳປະສົມມີວິທີປະກອບຄຳທີ່ຕ່າງຈາກແບບທີ່ມີ ໃນພາສາລາວ.

ລາວ ຮັບຄຳຈາກພາສາໄທເຂົ້າມາມັກເປັນຄຳທີ່ບໍ່ແມ່ນສິ່ງໃໝ່, ຄຳທີ ຮັບເຂົ້າມາມັກເປັນຄຳທີ່ເຮົາມີແລ້ວໃນພາສາລາວ.ການຮັບກໍລະນີ ນີ້ເອີ້ນວ່າແບບ ແທນທີ່ ການຮັບຄຳຈາກພາສາໄທນີ້ເຄີຍມີມາແຕ່ດົນ ສິ່ງນີ້ສາ ມາດສຶກສາໃຫ້ຮູ້ໄດ້ໂດຍວິທີ ສຶກສາພາສາໃນແງ່ປະຫວັດ.

ບັນດາຄຳທີ່ຮັບຈາກ ພາສາໄທໃນພາສາລາວ

ຄຳທີ່ລາວຮັບຈາກພາສາໄທໄດ້ເຫັນເປັນສອງກໍລະນີ ຄື ກໍລະນີທີ່ເປັນຄຳຮ່ວມຕະກູນແຕ່ມີ ຄວາມໝາຍປະຕິພາກຫຼືແຕກຕ່າງເຊິ່ງບາງສິ່ງໃນຄວາມໝາຍຂອງຄຳມີຄວາມແຕກຕ່າງ ກັນ,ຄຳຊຸມນີ້ຫາກເບິ່ງພຽງໂຄງສ້າງຂອງຄຳຈະເຫັນຕວາມຕ່າງໄດ້ຍາກ,ແຕ່ຫາກເບິ່ງດ້ານບໍລິ ບົດທີ່ໃຊ້ກໍຈະເຫັນຄວາມແຕກຕ່າງໄດ້.ກໍລະນີທີ່ສອງ ໄດ້ແກ່ຄຳຂອງພາສາໄທທີ່ບໍ່ມີໃນພາສາ ລາວເມື່ອກ່ອນເຊິ່ງລາວໄດ້ຮັບເອົາມາໃຊ້.ແຕ່ລະກໍລະນີໄດ້ພົບຄຳຕ່າງໆດັ່ງນີ້:

1. ຄຳຮ່ວມຕະກູນແຕ່ມີຄວາມໝາຍປະຕິພາກຫຼືແຕກຕ່າງ ທີ່ບາງຄັ້ງເຫມນຳມາ ໃຊ້ໃນພາສາລາວ.

ภำพาสาไท	ภำพาสาลาว
ตะกี่อ, กี่อ	ຊຶ່ນ
แพ้	ເສຍ,ໂຈກ
สีสี้ม	ສີໜາກກ້ຽງ
กอบ	ຜ່ອຍ
เฮัด	ຫຼາບ
มาลิ	ດອກຊ້ອນ
ที่นอน	ຜ້າເສື່ອ
ห้องส้วม	ຫ້ອງຖ່າຍ
หมู่บ้าน	ບ້ານ
ดอกไม้ไฟ	ປັ້ງໄຟດອກ
นิกพิลาบ	ນົກກາງແກ
ดูแล	ເບິ່ງແຍງ
ซ่อง	ຊົ່ວ ໄລຍະ
สะหมุนไพ	ເຄື່ອງປ່າ,ຮາກຢາພື້ນເມືອງ
ใต้นำ้	ໃນນ້ຳ,ພື້ນນ້ຳ
ลุ่มนำ้	ຕອນໃຕ້
ลินนะลิง	ລະດົມ
แมวโน้ม	ທ່າອ່ຽງ
ผัด	ຂົ້ວ
หอด	ຈືນ
เรือเรว	ເຮືອໄວ
หางหอย	ຫາງຮ່ອມ,ຫາງປີກ
สีสี้ม	ສີໜາກກ້ຽງ

ມູມມອງ
ຢັ້ງ
ຢອດຢັ້ງ
ບ້ານພັກ
ໄກ່ນ້ອຍ
ລູກໝາ
ໝູຊັບ
ໄກ່ຊັບ
ໄກ່ຢ້າງ
ນ້ຳແຂ
ຮອງເທົ້າ
ຄຸ້ນໜ້າ
ແອອັດ
ລິດຕິດ
ພັກດັນ
ແປຮູບ

ແງ່ມອງ
ອ່ຽມ
ຄັກສຸດ, ຄັກຂະໜາດ
ເຮືອນພັກ
ລູກໄກ່
ໝານ້ອຍ
ໝູປິ່ນ
ໄກ່ປິ່ນ
ໄກ່ປີ້ງ
ນ້ຳກ້ອນ
ເກີບ
ເຄີຍໜ້າ, ລ້ຽງໜ້າ
ແຫ້ຍຢັດ,ບຽດ
ລິດອັ່ງ
ຊຸກຍູ້
ປຽນຮູບ, ປຽນຊີ

(2). ຄຳ ທີ່ຮັບຈາກພາສາໄທ

ຕົ້ມຍຳ
ຜັດເຜັດ
ທອດກອບ
ຊັດເຈນ.
ໄວໄວ

ເຫຼວໄຫຼ
ທາບທາມ
ໄກ່ເກ່ຍ
ໂນ້ມນ້າວ
ປະເດັນ

ລ້ອນ	ກົມກືນ
ຊ້ອດຫອຍ	ຮັດກຸມ
ລາດໜ້າ	ປາບປົ້ມ
ໝູກອບ	ດຸເດືອດ
ຂຽບກຸ້ງ	ດູໝິ່ນ
ຊົ້ນ	ໂມ້ມມ້າວ
ເສີມສວຍ.	ລົ້ມເຫຼວ
ຍ້ຳຍ້ຳ	ແປ (ແປພາສາ)
ດູຖູກ	ໄສ້ກອກ

8. ການຮັບຄຳຈາກພາສາຊວາມະລາຢູ

ດ້ວຍການສຶກສາພົບວ່າ ໃນພາສາລາວໄດ້ມີຄຳຈຳນວນໜຶ່ງ ທີ່ຮັບຈາກພາສາຊວາມະລາຢູ. ໃນເບື້ອງຕົ້ນໄດ້ວາງທັດສະນະຕໍ່ກັບການຮັບຄຳຊຸມນີ້ວ່າຄົງຮັບແບບຜ່ານພາສາອື່ນ ໂດຍສະເພາະໄດ້ແກ່ພາສາໄທ. ການວາງທັດສະນະເຊັ່ນນີ້ ກໍ່ເນື່ອງຈາກວ່າ ຄຳທີ່ພົບວ່າເປັນຄຳຂອງພາສາຊວາມະລາຢູໃນພາສາລາວ ນັ້ນເຫັນຈະເປັນຄຳກ່ຽວກັບໝາກໄມ້ເປັນສຳຄັນ ແລະ ກໍ່ແມ່ນໝາກໄມ້ທີ່ບໍ່ພົບການປູກ ຫຼື ປ່ຽໃນປ່າຂອງລາວ; ອັນທີ່ສອງ ການຕິດຕໍ່ພົວພັນ ແລະ ພົມແດນລະຫວ່າງ ລາວ ກັບ ຊວາມະລາຢູນັ້ນ ກໍ່ຫ່າງໄກ ແຕ່ໃນທາງປະຫວັດສາດ ມີນັກຄົ້ນຄວ້າບາງຄົນໃຫ້ຂໍ້ຄິດເຫັນວ່າ ແຕ່ກ່ອນນັ້ນຄື ປະມານ 3000–4000 ປີ ດິນລາວໄດ້ມີຄົນພວກໜຶ່ງ

ທີ່ບໍ່ແມ່ນກຸ່ມໄຕ (Tai) ແຕ່ເປັນຄົນໃນກຸ່ມ (Malayo polionasian) ໄດ້ຢູ່ມາກ່ອນແລ້ວ[1] ຕໍ່ມາຄົນໃນກຸ່ມນັ້ນໄດ້ຖອຍລົງໄປທາງໃຕ້ ຈາກນັ້ນກໍ່ກະຈາຍຕົວໄປຢູ່ໃນດິນແດນທີ່ເປັນແຫຼມ ມາລາຢູ ແລະ ອິນດູເນເຊຍໃນປະຈຸບັນ, ຂໍ້ຄວາມນີ້ສະແດງໃຫ້ຮູ້ວ່າ ລາວບໍ່ໄດ້ມີການສຳພັນ ຫຼື ສຳຜັດກັບພາສາຊວາມາລາຢູເລີຍ, ຫາກມີຄຳຈາກພາສາຊວາມາລາຢູໃນພາສາລາວກໍ່ຄົງຮັບ ມາໃນສະໄໝນີ້ໂດຍປະມານການໃນສະຕະວັດທີ 18 -19 ກໍ່ເປັນໄດ້. ພວກທີ່ໜີໄປນັ້ນຍັງປະ ຮ່ອງຮອຍໄວ້ຈົນເຖິງປະຈຸບັນກໍ່ຍັງພົບເຫັນ, ພ້ອມນີ້ໃນປະຫວັດສາດລາວກໍ່ຍັງຈາລຶກ ຄຳວ່າ ເມືອງຊວາ ເອົາໄວ້. ເຊິ່ງຄຳວ່າຊວານີ້ບໍ່ມີຄວາມໝາຍໃນພາສາລາວນອກນີ້ຄຳວ່າ ຊວາ ຍັງ ພົບເປັນຊື່ຂອງເກາະໜຶ່ງອອກສຽງວ່າ swa ທີ່ເປັນສະຖານທີ່ສຳຄັນດັ່ງສູນກາງທາງສາສະໜາ ໃນເຂດອິນໂດເນເຊຍໃນປະຈຸບັນ. ແຕ່ຄຳວ່າຊວາທີ່ພົບໃນພາສາລາວກັບຄຳວ່າ swa ໃນພາ ສາອິນໂດນັ້ນຍັງບໍ່ຊາບວ່າມີການກ່ຽວຂ້ອງກັນຫຼືບໍ່.

ນັ້ນເປັນຄຳຄິດເຫັນຂອງນັກຄົ້ນຄວ້າປະຫວັດສາດ ແລະ ບູຮານຄະດີ ແຕ່ໃນທີ່ນີ້ກໍ່ຍັງ ຈະຫາຂໍ້ມູນອື່ນເພື່ອນຳມາເປັນສິ່ງຢັ້ງຢືນໃຫ້ແນ່ນອນ ແລະ ສົມບູນບໍ່ທັນໄດ້ພຽງແຕ່ໃຫ້ຂໍ້ ຄວາມຕາມທີ່ພົບເທົ່ານັ້ນ.

ລັກສະນະບາງຢ່າງຂອງພາສາຊວາມະລາຢູ

ພາສາຊວາມະລາຢູ ເປັນພາສາກາງທີ່ສຳຄັນຂອງຊາວເກາະສຸມາດຕຣາ. ໃນຂົງເຂດ ນັ້ນຍັງມີອີກຫຼາຍເກາະ ເຊິ່ງມີປະຊາກອນທີ່ປາກພາສາຕ່າງກັນດຳລົງຊີວິດຢູ່ເຊັ່ນ ເມືອງປາ ເລມບັງ, ເມືອງຍຳບີ ແລະ ເມືອງອື່ນໆ ຕາມຝັ່ງທະເລອິນໂດ ຕ່າງກໍ່ໃຊ້ພາສາຊວາມະລາຢູ ເປັນພາສາກາງເພື່ອຕິດຕໍ່ສື່ສານ. ພາສາຊວາມະລາຢູເປັນພາສາຄຳຕິດຕໍ່ (Agglutinative)

---

[1] ພົງສາວະດານລາວ. ປີ 1957. ໜ້າ 3-5.

ເຊິ່ງນອນໃນຕະກູນ Austro-Asiatic ໃນສາຂາ Malayo Polynesian[2]. ພາສາປະເພດນີ້ ມີລັກສະນະຂອງຄຳປະກອບດ້ວຍຫຼາຍພະຍາງເປັນຈຳນວນຫຼາຍ, ການສ້າງຄຳຈະມີ ການຕື່ມ ສ່ວນໜ້າ, ສ່ວນຫຼັງ; ໃນນັ້ນ ວິທີເຕີມບາງຄັ້ງກໍ່ຈະເຕີມພຽງບາງສ່ວນອາດເປັນໜ້າ ຫຼື ຫຼັງ ຂອງຄຳຫຼັກ ແຕ່ບາງກໍລະນີ ກໍ່ຈະເຕີມທັງໜ້າກັບທາງຫຼັງນຳກັນກໍ່ມີ, ໜ່ວຍຄຳທີ່ເຕີມນັ້ນ ເປັນຕົວບອກໃຫ້ຮູ້ເຖິງການປ່ຽນແປງຈາກກິລິຍາເປັນນາມ ຫຼື ເປັນຢ່າງ ໃດໜຶ່ງ, ຕົວຢ່າງ : Churi ແປວ່າລັກ; penchuri ຄົນຂີ້ລັກ ໃນນີ້ / pen / ບໍ່ໝາຍວ່າແມ່ນ ຄົນ; ເປັນ ພຽງໜ່ວຍຄຳໜຶ່ງສຳລັບໄວ້ປ່ຽນຄຳກິລິຍາເປັນນາມ ແລະ ຄຳ tertawa ຫົວຂວັນ; tertawakan ການຫົວຂວັນ,ພ້ອມນີ້ຍັງມີຫຼາຍຄຳທີ່ມີວິທີປ່ຽນຕາມລະບົບນີ້. ນອກນີ້ ການສ້າງ ຄຳຍັງໃຊ້ ວິທີນຳຄຳຫຼັກມາປະສົມກັນໃຫ້ເກີດຄຳປະສົມຂຶ້ນ ດັ່ງຄຳລາວເຮົາກໍ່ມີເຊັ່ນ: kapala ໝາຍເຖິງ ຫົວ ແລະ batas ແປວ່າ ທາງ. ເມື່ອຢາກກ່າວວ່າ: ຫົວທາງ ຫຼື ຕົ້ນທາງ ກໍ່ຈະນຳຄຳທັງສອງມາປະສົມເປັນ kapala batas. ແລະ ອື່ນໆ.

ການສ້າງຄຳທີ່ໃຊ້ວິທີຊ້ຳຄຳ ເພື່ອໄດ້ຄວາມໝາຍທີ່ບອກເຖິງຈຳນວນຫຼາຍນັ້ນ ເປັນວິທີ ໜຶ່ງທີ່ສຳຄັນໃນພາສາຊວາມະລາຢູ. ຕົວຢ່າງ: orang ແປວ່າ ຄົນ. ຄຳວ່າ ຝູງຄົນ ກໍ່ຈະຊ້ຳຄຳ ເຊັ່ນ orang orang. ທີ່ສະເໜີມານີ້ເປັນພຽງຄວາມຮູ້ບາງອັນກ່ຽວກັບພາສາ ຊວາມາ ລາຢູ ຫາກຕ້ອງການສຶກສາໃຫ້ເລິກເຊິ່ງກວ່ານີ້ ກໍ່ຕ້ອງການຂໍ້ມູນອື່ນອີກມາເພີ່ມເຕີມ ເຊິ່ງຂໍ້ມູນ ຕ່າງໆນັ້ນສາມາດຫາໄດ້ຕາມເອກະສານທີ່ກ່ຽວກັບພາສານີ້.

ໃນຕໍ່ໄປນີ້ ຈະນຳສະເໜີຄຳຕ່າງ ເຊິ່ງພົບວ່າ ເປັນຄຳທີ່ລາວຮັບຈາກພາສາຊວາ-ມາລາຢູ ເຊິ່ງອາດຜ່ານພາສາໄທຈຶ່ງມາສູພາສາລາວ.ຄຳສ່ວນຫຼາຍເກັບກຳໄດ້ຈາກປຶ້ມຄຳຢືມໃນພາສາ ໄທຂອງ ດຣ. ປຣະຍູຣ ຊິງສິນ, ນອກນັ້ນກໍ່ໄດ້ຈາກປຶ້ມກ່ຽວກັບພາສາຕ່າງປະເທດໃນພາສາໄທ, ວັດຈະນານຸກົມ 12 ພາສາ ແລະ ປຶ້ມຂໍ້ມູນຈາກ R.E Downs ໃນປຶ້ມ: Ethnic Group of Mainland Southeas Asia ເປັນຕົ້ນ. ຄຳຕ່າງໆທີ່ພົບນີ້ ຈະໄດ້ສະເໜີ ຕາມຮູບຄຳທີ່ປະກົດຂຽນ ແລະ ໃຊ້ກັນຕາມລະບົບຄຳໃນພາສາລາວ ຄື:

---

[2] ປຣະຍູຣ ຊິງສິນ ການປ່ຽນແປງຂອງພາສາ, ຄຳຢືມໃນພາສາໄທ. ພ.ສ 2526 ໜ້າ 163-164.

ຄຳ:	ກັນຊາ	ມາຈາກ	/ganjā/	ພືດລົ້ມລຸກຊະນິດໜຶ່ງທີ່ມີພິດໃນທາງເສບຕິດ.
	ກະດາດ	ມາຈາກ	/kertas/	ໃນພາສາລາວໝາຍເຖິງເຈ້ຍທີ່ໜາ ແລະ ແຂງ.
	ກະດັນງາ	ມາຈາກ	/kenanga/	ເຄືອຊະນິດໜຶ່ງໃນກຸ່ມພັນທີ່ໃຫ້ດອກ
	ກາລະບູນ	ມາຈາກ	/ karbur/	ນວດຊະນິດໜຶ່ງ ມີກິ່ນຫອມໃຊ້ເປັນຢາໄດ້.
	ກຳປັ່ນ	ມາຈາກ	/ kapal/	ເຮືອໃຫຍ່ທີ່ໃຊ້ຕາມທະເລ.
	ທຸລຽນ	ມາຈາກ	/durian/	ໝາກທຸລຽນ.
	ໝາກນັດ	ມາຈາກ	/ananas/	ໝາກໄມ້ຊະນິດໜຶ່ງ.
	ພັ້ງພອນ	ມາຈາກ	/bagban/	ສັດຊະນິດໜຶ່ງ.
	ພະນຽດ	ມາຈາກ	/pediat/	ຄອກຫ້ຽງເອົາຊ້ຽງ.
	ມະແລ້ງ	ມາຈາກ	/marengsa/	ພະຍາດຊັ້ນເປື່ອຍເນົ່າຊະນິດໜຶ່ງ.
	ມັ້ງຄຸດ	ມາຈາກ	/mangusta/	ໝາກໄມ້ຊະນິດໜຶ່ງ.
	ອິເກ	ມາຈາກ	/dikir/	ຟ້ອນຊະນິດໜຶ່ງຊື່ອີເກ ຫຼື ລິເກ.
	ລ້ຽງສາດ	ມາຈາກ	/langsat/	ໝາກໄມ້ຊະນິດໜຶ່ງ.
	(ໂຈນ)ສະລັດ	ມາຈາກ	/salat/	ໂຈນທີ່ປຸ້ນຕາມນ່ານນ້ຳ
	ສະຫຼ່າຍ	ມາຈາກ	/saraj/	ໄຄ ຫຼື ແໜຊະນິດໜຶ່ງທີ່ກິນໄດ້
	ສັ້ງຂະຫຍາ	ມາຈາກ	/seri kaya/	ຊື່ເຂົ້າໜົມຊະນິດໜຶ່ງ.

24 / VII
ห้ามจำหน่าย

9. ຄຳກຸ່ມຍ່ອຍຈາກພາສາຕ່າງໆ

1). ຄຳທີ່ຮັບຈາກພາສາເກຣັກ

ຄຳຂອງພາສາເກຣັກ ທີ່ນຳເຂົ້າມາໃຊ້ໃນພາສາລາວມີຈຳນວນບໍ່ໜ້ອຍ. ຄຳຊຸມນີ້ຄົງເຂົ້າມາໃນໄລຍະທ້າຍຂອງສະຕະວັດທີ 19 ໂດຍຮ່ວມກັບການເຂົ້າມາຂອງຄຳພາສາຝຣັ່ງ. ເຊິ່ງເປັນການຮັບໂດຍຜ່ານພາສາອື່ນ. ຄຳຂອງພາສາເກຣັກ ໃນພາສາລາວສາມາດຮູ້ໄດ້ຈາກການສຶກສາເຖິງແຫ່ງທີ່ມາຕາມເອກະສານທາງພາສາສະບັບຕ່າງໆ ເຊັ່ນ: ປຶ້ມທິດສະດີພາສາຂອງ Dach Tender 1959. ປຶ້ມ Lexicology ພາສາມົງໂກນ ຂອງ R.Kanabazar 1979 ພິມທີ່ ອູລັນບາຕໍ, ວັດຈະນານຸກົມພາສາລາວ-ຝຣັ່ງ, ວັດຈະນານຸກົມ ລາວ-ຣັດເຊຍ ເປັນຕົ້ນ ແລະ ເອກະສານບາງອັນທີ່ກ່ຽວກັບຄຳຢືມລະຫວ່າງພາສາອີກບາງອັນກ. ເຊິ່ງເອກະສານເຫຼົ່ານັ້ນ ໄດ້ບົ່ງບອກ ແລະ ໃຫ້ຄຳອະທິບາຍໄວ້ ຄຳທີ່ພົບວ່າຮັບຈາກພາສາເກຣັກມາໃນພາສາ ລາວ ຮວບຮວມໄດ້ດັ່ງນີ້ :

ຄຳພາສາລາວ	ຄຳພາສາເກຣັກ
ໂອໂຕມັດ	Automat
ອາໂກຣໂນມ	Akronome
ອາກາເດມີ	Akademy
ອານານໄລ	Analize
ອາຄີໂອໂລຢີ	Argeology
ອາໂຕມ	Atom
ໂອໂຕໂມບິນ	Automobill
(ລົດ) ບັດ	Bus
ເຈໂອກຣາຟີ (ພູມສາດ)	Geography

ຢິມນາສຕິກ (ກາຍະກຳ)	Gymnastic
ກຣາມ	Gramm
ກິໂລ	kilo
ໂລຊິກ	Logic
ມາສເຕີ	Master
ເມຕານ (ໂລຫະ), (ໂລຫະ)	Metall
ແມັດ	Metre
ມິວຊຽມ (ຫໍພິພິດທະພັນ)	Musuem
ມິກຣິບ	Microp
ໂປຣກຣາມ (ລາຍການ)	Programm

2). ການຮັບຄຳຈາກພາສາລາແຕັ້ງ

ໃນພາສາລາວມີຄຳຈຳນວນໜຶ່ງທີ່ແມ່ນຄຳຂອງພາສາລາແຕັ້ງ ເຊິ່ງໄດ້ມາພ້ອມກັບຂະບວນການຮັບຄຳຂອງພາສາຝຣັ່ງ ຈາກສະຕະວັດທີ່ 19-20 ມາ. ຄຳພາສາລາແຕັ້ງທີ່ພົບໃນພາສາລາວສ່ວນຫຼາຍໄດ້ກ່ຽວກັບການແພດ, ການຢາ ນອກນັ້ນກໍ່ມີຄຳຊະນິດອື່ນ ແຕ່ຮວມແລ້ວກໍ່ມີຄຳຈຳນວນບໍ່ຫຼາຍປານໃດ. ຕໍ່ໄປນີ້ຈະເປັນ ລາຍການຄຳຈາກພາສາລາແຕັ້ງ ທີ່ຮວບຮວມໄດ້ຈາກວັດຈະນານຸກົມສະບັບຕ່າງໆ ເຊັ່ນ ຣັດເຊຍ-ຝຣັ່ງ ພິມທີ່ມົດສະກູ ຄ.ສ 1977; ວັດຈະນານຸກົມ ລາວ-ຝຣັ່ງ ຂອງ Mare Reinhorn 7 ຄ.ສ 1970 ແລະ ວັດຈະນາວິທະຍາພາສາມົ໋ງໂກນ 1959 P 86-87 ພາກກ່ຽວກັບຄຳຢືມ ແລະ ປຶ້ມວັດຈະນານຸກົມການແພດ ຈັດພິມໂດຍກະຊວງສາທາລະນະສຸກ 1998 ແລະ ເອກະສານອື່ນໆບາງຢ່າງ ເຊິ່ງສາມາດເກັບກຳຄຳໄດ້ດັ່ງນີ້

ຄຳພາສາລາວ	ຄຳພາສາລາແຕັ້ງ

ເກເນຣານ, (ນາຍພົນ)	General
ຄອມມິສ	Comiss
ກົງສູນ	Consul
ເຄົາເຕີ	Counter
ຄອນເສີດ	Concert
ເລັກເຈີ	Lecture
ລາໂบຣາເຕີ	Laborator
ລາໂบ	Labor
ມໍເຕີ	Motor
ໂนด	Note
ອໍຟີເຊີ (ພະນັກງານ)	Officer
ເรอาลิซึม (ສັดจะทำ)	Realism
ສຳมะนา	Seminar
มอกฟิน	Morfin
วิตามิน	Vitamin
สะแล้ง	Sling
กินิน	Quinin
อานโกน (เห้าเก้าสิบ)	Algol
สะติกนิน	Sticnin
อาสาปรัง	Asperantur
อำปิซิลิน	Ampisilin
อาโตรปิน	Atropin
เรโรอิน	Heroin
และอื่นๆ	

3). ການຮັບຄຳຈາກພາສາຈາມ
ສະເໜີກ່ຽວກັບຈາມໂດຍຫຍໍ້

ອີງຕາມເອກະສານທີ່ສຶກສາກ່ຽວກັບຈາມໄດ້ສະເໜີໄວ້ວ່າ ຊາວຈາມໃນແຕ່ກ່ອນນັ້ນໄດ້ມີຖິ່ນຖານນັບແຕ່ຍ່ານກາງລາມລົງໄປເຖິງພາກໃຕ້ຫວຽດນາມ ແລະ ກວມເອົາສ່ວນໜຶ່ງຂອງປະເທດກຳປູເຈຍ ເຂດທີ່ມີຊາວຈາມເຄີຍຢູ່ໄດ້ແກ່ທົ່ງພຽງພາກໃຕ້ຫວຽດນາມ, ເຂດຕົ້ງເລສາບ (tonle sap) ໃນກຳປູເຈຍໂດຍສະເພາະຕາມເຂດ chua doc ທີ່ເປັນຊາຍແດນກຳປູເຈຍ ຫວຽດນາມ.

ພາສາຂອງຈາມໄດ້ຈັດຢູ່ໃນກຸ່ມ: Malynesia (Austronesian) ໃນແຕ່ກ່ອນຈາມໄດ້ມີໜັງສືຂຽນ ໂດຍເອົາຕົ້ນແບບຈາກອິນເດຍ (Maspero: 1928: 6-8) ໄລຍະຕໍ່ມາກໍ່ໄດ້ຮັບເອົາອັກສອນໂຣມັນເຂົ້າມາໃຊ້ໂດຍຊາວຝຣັ່ງເປັນຜູ້ໃຫ້ການຊ່ວຍເຮັດ(Benedict 1942: 599)

ກ່ຽວກັບພົນລະເມືອງ: ຊາວຈາມມີຈຳນວນໜ້ອຍ ແລະ ການຂະຫຍາຍຈຳນວນຄົນກໍ່ຊ້າ ຕາມເອກະສານຂອງ Oliver ແລະ Chagnouy (1951: 272) ໄດ້ເກັບສຳຊາວຈາມທີ່ຢູ່ໃນກຳປູເຈຍ ແລະ ຫວຽດນາມນັ້ນ ມີພຽງໜຶ່ງແສນຄົນ.

ສຳລັບຄວາມເຊື່ອ: ແຕ່ກ່ອນຊາວຈາມເຊື່ອຖືສາສະໜາຮິນດູ (Hinduism) ແລະ ຕໍ່ມາກໍ່ເຊື່ອສາສະໜາ ອິສະລາມບາງສ່ວນ. ເຖິງຢ່າງໃດຄວາມເຊື່ອເດີມ ແລະ ຄວາມເຊື່ອອັນໃໝ່ກໍ່ມີການປະຕິບັດຢູ່ຄຽງຄູ່ກັນຕາມແບບຂອງແຕ່ລະຄວາມເຊື່ອນັ້ນ.

ດ້ານປະຫວັດສາດ-ວັດທະນະທຳ: ຕາມການຄົ້ນຄວ້າຂອງ Maspero ໃນປີ 1928 ຈາມໄດ້ເລີ່ມປະກົດເປັນຮູບອານາຈັກໃນສະຕະວັດທີ່ 2 ຫຼັງ ຄ.ສ, ສະໃໝນັ້ນຈາມມີຄວາມເຊື່ອໃນສາສະໜາພາມ (Brahma), Vishnu ແລະ siva. ເຊິ່ງລາວເຄີຍວ່າ ສີວະລິງ ຫຼື ສີວະລິງຄະ. ຈາກຄວາມເຊື່ອດັ່ງກ່າວ ອັນທີ່ສ້າງເປັນສິ່ງແທນໃຫ້ເຫັນໃນການບູຊາກໍ່ຄື ຫີນທີ່ຖາກໃຫ້ເປັນຄືຮູບລິງຄະ ທີ່ເຮັດໄວ້ຢູ່ຫຼາຍບ່ອນເຊິ່ງມີໄວ້ໃຫ້ເຫັນມາເຖິງທຸກວັນນີ້ຕາມເຂດພາກກາງ

ພາກໃຕ້ຂອງລາວກໍ່ມີ. ສ່ວນສາສະໜາ Islam ໄດ້ເຂົ້າມາມີບົດບາດຕາມຫຼັງໃນລະຫວ່າງປີ 1030 ຫຼັງ ຄ.ສ. ການຂະຫຍາຍຕົວຂອງອານາຈັກຈາມໄດ້ນັບແຕ່ສະຕະວັດທີ VI ຫາສະຕະວັດທີ XIII. ໃນສະໄໝທ້າຍຂອງໄລຍະດັ່ງກ່າວ ຈາມກໍ່ໄດ້ປະສົບສົງຄາມກັບຂະແມ ແລະ ຫວຽດນາມ ເຖິງທ້າຍສະຕະວັດທີ XI ອານາຈັກຈາມໄດ້ອ່ອນລົງ, ຕໍ່ມາເຖິງປີ 1471 ອານາຈັກຈາມກໍ່ໄດ້ພັງທະລາຍ, ດິນແດນ ແລະ ພົນລະເມືອງສ່ວນໃຫຍ່ໄດ້ຕົກໄປຢູ່ໃນການຄອບຄອງຂອງ ຫວຽດນາມ, ສ່ວນໜຶ່ງຕົກເປັນຂອງຂະແມ.

ຕໍ່ກັບລາວ ໃນປະຫວັດສາດບໍ່ໄດ້ກ່າວເຖິງຄວາມສຳພັນໂດຍກົງກັບຈາມ ແຕ່ທາງດ້ານວັດທະນະທຳ ລາວກໍ່ໄດ້ຮັບຜົນບາງອັນໂດຍສະເພາະສິ່ງທີ່ເປັນຊື່ສະຖານທີ່, ພືດພັນບາງອັນ ເຊິ່ງເປັນຄຳຂອງຈາມຕັ້ງໄວ້ນັ້ນ ລາວກໍ່ໄດ້ຮັບເຂົ້າມາເປັນຄຳໃນພາສາລາວ. ດັ່ງສ່ວນຕໍ່ໄປນີ້ເປັນການສະເໜີກ່ຽວກັບຄຳຂອງພາສາຈາມທີ່ມີໃນພາສາລາວ. ການທີ່ຖືວ່າແມ່ນຄຳຂອງພາສາຈາມ ກໍ່ເນື່ອງຈາກເອກະສານຂໍ້ມູນຕ່າງໆທີ່ພົບນັ້ນໄດ້ສະເໜີເອົາໄວ້ເຖິງແຫຼ່ງທີ່ມາເຊິ່ງອ້າງໄວ້ວ່າເປັນຄຳຂອງພາສາຈາມ ໂດຍສະເພາະໃນວັດຈະນານຸກົມ ຈາມ-ຝຣັ່ງຂອງ ພິມໃນປີ ແລະ ຂໍ້ມູນກ່ຽວກັບຈາມອີກບາງອັນ.

ຕໍ່ໄປນີ້ເປັນການສະເໜີບັນດາຄຳທີ່ລາວຮັບມາຈາກພາສາຈາມເຊິ່ງຂຽນຕາມສຽງທີ່ປະກົດໃຊ້ໃນພາສາລາວເຊິ່ງມີດັ່ງນີ້ຄື:

ຫວາຍ	(ເສັ້ນຫວາຍ)	ຫ່າງ	(ຢູ່ຫ່າງກັນ)
ເອງ	(ຕົນເອງ)	ວິນ	(ວິນວຽນ)
ເພື່ອ	(ກໍ່ເພື່ອ)	ຄ່ຳ	(ຄ່ຳມືດ)
ຖອງ	(ເຖິງຖອງ)	ຫຼອກ	(ຜີຫຼອກ)
ພາ	(ພາໄປ)	ລອງ	(ລອງເບິ່ງ)
ຊົ່ວ	(ຊົ່ວຮ້າຍ)	ຟາງ	(ຕາຟາງ, ຟາງຕາຍ)
ປ່າ	(ປ່າຊ້າ)	ຜ່ອຍ	(ຜຸຜ່ອຍ)
ຢ່າງ	(ຫຼາຍຢ່າງ)	ກ້າງ	(ກ້າງປາ)

ທວນ	(ຊ້ຳ, ທວນຄືນ)	ຮອບ	(ຮອບວຽນ)
ພໍ້	(ພິບພໍ້)	ວຽນ	(ວຽນວົນ)
ບ່ຽງ	(ບ່ຽງ, ອ່ຽງ)	ແວ່	(ໄປແວ່)
ຕອມ	(ແມ່ງວັນຕອມ)	ກ້ານ	(ກ້ານພ້າວ)
ຊິກ	(ຊິກຕ່ອຍ)	ມອງ	(ມອງດູ)
ດາກ	(ດິນດາກ)	ຫ້າວ	(ຫ້າວຫັນ)
ເຊ	(ລຳເຊ, ແມ່ນ້ຳ)	ໝໍ	(ໝໍມໍ)
ຫ້ຶ	(ຮ້ານໄວ້ຂອງກິນ)	ກົດ	(ກົດໜີບ, ເນັ່ນ)
ເຕີນເລ (ທະເລ)		ສາບ	(ທະເລສາບ)

4). ການຮັບຄຳຈາກພາສາຂະມຸ

ຂະມຸກັບລາວມີຄວາມສະໜິດຕິດພັນໃນຄວາມເປັນຊາດແລະຮ່ວມກັນດຳລົງຊີວິດມາຕັ້ງຫຼາຍພັນປີ. ຊາວຂະມຸໃນລາວປະຈຸບັນມີປະມານ 4 ແສນກວ່າຄົນ[1] ເຊິ່ງດຳລົງຊີວິດຢູ່ຕາມບັນດາແຂວງພາກເໜືອຂອງລາວ ແລະ ບາງສ່ວນໃນແຂວງພາກກາງເຊັ່ນ: ບໍລິຄຳໄຊ.

ພາສາຂະມຸ ເປັນພາສາໜຶ່ງທີ່ຈັດເຂົ້າໃນຕະກູນ Mon-khmer ພາສາຂະມຸເປັນພາສາທີ່ມີຫຼາຍພະຍາງ(Polysyllable) ແຕ່ໃນນັ້ນກໍ່ມີຄຳຈຳນວນບໍ່ໜ້ອຍທີ່ເປັນຄຳດ່ຽວ, ເປັນພາສາບໍ່ມີສຽງວັນນະຍຸດກຳກັບຢູ່ໃນຄຳ ແຕ່ມີ ທຳນອງສຽງ (Intonation) ທີ່ມີບົດບາດຕໍ່ກັບການໃຫ້ຄວາມໝາຍ ແລະ ການໃຫ້ຈຸດເນັ້ນທາງຄວາມໝາຍໃນພາສາເວົ້າ.

---

[1] ຂໍ້ມູນຈາກປຶ້ມ ວັດຈະນານຸກົມ: ກົມໝຸ-ຝຣັ່ງ,ອັງກິດ. 1994 ໜ້າ 11.

ໃນພາສາຂະມຸ ມີສຽງພະຍັນຊະນະຕົ້ນດ່ຽວ 15 ໜ່ວຍສຽງ, ພະຍັນຊະນະຕົວທີ່ສາ ມາດຄວບມີ 3 ໜ່ວຍສຽງ ໄດ້ແກ່ /w/ /l/ /r/ ໃນນັ້ນ ຄວບສອງສຽງ ມີ 6 ໄດ້ແກ່ / hm, hn, hŋ, hɲ, hr, hw / ແລະ ຄວບສາມສຽງ ມີ 6 ຕົວໄດ້ແກ່: / phr, thr, chr, khr, khw,thw/ [2]

ພະຍັນຊະນະທ້າຍຄຳ (ຕົວສະກົດ) ມີ 9 ໜ່ວຍສຽງ ເຊິ່ງຕ່າງຈາກສຽງຕົວສະກົດ ທີ່ມີໃນພາສາລາວຕົວໄດ້ແກ່ / ɲ /, / l / ແລະ/ c / ນອກຈາກນີ້ ພາສາຂະມຸ ຍັງມີລັກສະນະສະເພາະອື່ນຄື ມີອຸປະສັກສຳລັບຕື່ມເຂົ້າທາງໜ້າຂອງບາງຄຳເພື່ອສ້າງຄຳໃໝ່ ໂດຍສະເພາະໃນກໍລະນີປ່ຽນຈາກຄຳກິລິຍາໃຫ້ເປັນຄຳນາມ ຫຼື ປ່ຽນຈາກຄຳນາມ ເປັນ ຄຳກິລິ ຍາ. ລັກສະນະສະເພາະການອອກສຽງຂອງຄຳ ມີການກັກສຽງໃນຕົ້ນທາງ(Preglot stops) ໃນຫຼາຍຄຳ. ຕົວ ທີ່ໃຊ້ໃນການກັກລົມຕົ້ນ ທາງໄດ້ແກ່ / h / ແລະ / ? / ເຊັ່ນ: / hmuɔn / , / ?yaŋ / ແລະ ອື່ນໆ.

ດ້ວຍການສຶກສາລັກສະນະທາງພາສາ, ລັກສະນະຂອງຄຳ ແລະ ລະບົບທາງຄວາມໝາຍ ຂອງພາສາຂະມຸ ຍັງມີຫຼາຍ ຢ່າງທີ່ພົບວ່າ ມີຄວາມແຕກຕ່າງກັບພາສາລາວ.ສຳລັບທ່ານທີ່ສົນ-ຈະສຶກສາຍັງ ສາມາດຫາຂໍ້ມູນເພີ່ມເຕີມຈາກເອກະສານອື່ນທີ່ກ່ຽວກັບພາສາຂະມຸຕໍ່ໄປ.

ພາສາລາວໄດ້ມີການຮັບຄຳຈາກພາສາຂະມຸມາໃຊ້ເປັນເວລາຕັ້ງນານ ອາດຈະເຖິງພັນປີ ມາແລ້ວ,ການທີ່ຮູ້ວ່າຄຳນັ້ນໆແມ່ນຄຳຈາກພາສາຂະມຸທີ່ລາວຢືມມາໄດ້ມີຂໍ້ສັງເກດທີ່ເປັນຫຼັກ ດັ່ງນີ້:

1. ໂຄງສ້າງຂອງຄຳ: ພົບວ່າມີຄຳຊຸມໜຶ່ງທີ່ລາວໃຊ້ຢູ່ນັ້ນມີໂຄງສ້າງຄຳເປັນຮູບປະສົມ ແລະ ສ່ວນຕ່າງໆທີ່ນຳມາປະສົມກັນນັ້ນ ລ້ວນແຕ່ຕ່າງຈາກລະບົບພະຍາງ ຫຼື ໜ່ວຍ ຄຳ, ຄວາມໝາຍທີ່ມີໃນພາສາລາວ ແຕ່ເມື່ອນຳໂຄງສ້າງ ແລະ ຄວາມໝາຍຂອງຄຳ ນັ້ນທຽບໃສ່ຄຳໃນພາສາຂະມຸພົບວ່າຢູ່ໃນລະບົບດຽວກັນ.

---

[2] ຂໍ້ມູນຈາກປຶ້ມ ວັດຈະນານຸກົມ ກຶມຫຸມຮົ່ງ,ອັງກິດ. 1994 ໜ້າ 23.

2. ການປະກົດເຫັນຄຳ: ຊຸມຄຳທີ່ເຫັນວ່າເປັນຄຳຂອງລາວເຊິ່ງຮັບຈາກພາສາຂະມຸນັ້ນ ເມື່ອເບິ່ງໃນພາສາຂະມຸກໍ່ປະກົດມີຄຳນັ້ນໆໃຊ້ຢ່າງທົ່ວໄປໃນພາສາຂະມຸຖິ່ນຕ່າງໆ ເຊິ່ງສະແດງເຖິງວ່າ ແມ່ນຄຳພື້ນຖານໃນລະບົບຄຳຂອງພາສາຂະມຸ.
3. ຊະນິດຄຳ: ຄຳທີ່ເຫັນວ່າເປັນຄຳຂອງລາວເຊິ່ງຮັບຈາກພາສາຂະມຸນັ້ນ ພົບວ່າເປັນຄຳທີ່ແມ່ນຊື່ຂອງສິ່ງຂອງ, ເຄື່ອງມືສຳລັບຫ້ຳງເອົາສັດຊະນິດນ້ອຍ ເຊິ່ງຊາວຂະມຸເຄີຍເຮັດເຄີຍໃຊ້ ແລະ ຊື່ແມວກິນ, ຊື່ແບບຄົວກິນ ເຊິ່ງຊາວຂະມຸເຄີຍຫາ ແລະ ແຕ່ງເປັນປະຈຳໃນທຳນຽມອາຫານຂອງຂະມຸ.

ສຳລັບຄຳທີ່ຮັບຈາກພາສາຂະມຸໃນພາສາລາວມີຈຳນວນບໍ່ຫຼາຍ ຄຳເຫຼົ່ານີ້ເກັບກຳໄດ້ຈາກ ວັດຈະນານຸກົມ ລາວ-ຂະມຸ ສະບັບ (1993 ແລະ 1994) ທີ່ຜູ້ວິໄຈເອງຮ່ວມກັບຄະນະນັກຄົ້ຄວ້າພາສາໄດ້ເຮັດ ແລະ ພິມອອກ. ນອກນັ້ນກໍ່ເກັບກຳໄດ້ຈາກການສຳພາດໃນຂະນະທີ່ໄປລົງພາກສະໜາມຕາມທ້ອງຖິ່ນໜອງພະບາງ, ອຸດົມໄຊ ເຂດນ້ຳທາ, ເມືອງງອຍ ທີ່ມີຊາວຂະມຸດຳລົງຊີວິດຢູ່ໃນໄລຍະປີ 2001-2002. ຄຳຈາກພາສາຂະມຸທີ່ລາວຮັບມານັ້ນ ສັງເກດເຫັນວ່າເປັນຄຳທີ່ກ່ຽວກັບເຄື່ອງມືຫ້ຳງເອົາສັດປ່າປະເພດນົກ, ໜູ, ເຄື່ອງມືໃຊ້ໃນວຽກໄຮ່ ແລະ ຊື່ຂອງກິນບາງຊະນິດ ເຊິ່ງມີດັ່ງນີ້

ຄຳລາວ		ຄຳພາສາຂະມຸ
ງວັບ	ເຄື່ອງມືຊະນິດໜຶ່ງ ສຳລັບຫ້ຳງ ເອົານົກນ້ອຍ)	/ŋwap/
ຊີຢອດ	(ເຄື່ອງມືຊະນິດໜຶ່ງມີສາຍສຳລັບຫ້ຳງເອົາໜູ ຫຼື ກະຮອກ)	/siyɔ̄t/
ຫ່າວ		/hāw/
ແມດ	(ວິທີຢ່າງໜຶ່ງທີ່ເຮັດເພື່ອເອົາປາເກັດ ຊະນິດນ້ອຍຕາມນ້ຳຫ້ວຍ)	/mǣt/
ກັນເຕາະ	(ເຄື່ອງກັ້ງຝົນທີ່ເຮັດດ້ວຍໃບເຕີຍ)	/kantɔ/
ກະເທິນ		/sadə̄n/

ຢັ້ງ	(ເຄື່ອງສານສຳລັບໃຊ້ເປ້)	/yaŋ/
ແປ່ມ	(ເຄື່ອງສານສຳລັບໃສ່ເຂົ້າເປືອກເວລາປູກໃນ ເວລາ ສັກໄຮ່)	/bǣm/
ຊັກແຊ່	(ເຄື່ອງມືສຳລັບສັກ ປູກເຂົ້າໄຮ່)	/saksæ/
ດອງ	(ແຊ່ໄວ້, ດອງໄວ້ກິນ)	/ kdɔ̄ŋ/
ມາກ	(ໝາຍ)	/māk /
ຜານ	(ຂ້າ)	/ phān /
ແຍງ	(ເບິ່ງແຍງ)	/yǣŋ/
ແຕ່ງ	(ແຕ່ງ, ເຮັດ)	/ tǣŋ/
ລະ	(ປະລະ, ປ່ອຍໄປ)	/ la /
ທຸ້ງ	(ທຸ້ງຕົ້ມ)	/ruŋ/
ຫວດ	(ຫວດ)	/huat /
ຮາງ	(ເຂົ້າຮາງ)	/hāŋ /
ແໜບ	(ແໜບສາລີ)	/trniap /
ກາບ	(ກາບຄາງ)	/kāp /
ໂບກ	(ໂບກສຳລັບຜອງ ເຂົ້າສານ)	/ ʔmôk/
ແອບ	(ແອບເຂົ້າ, ກ້ອງເຂົ້າ, ຕິບເຂົ້າ)	/ʔaip/
ຄົວ	(ຄົວກິນ)	/grua/
ຄາບ	(ຄາບເຂົ້າ)	/grāp/
ງາຍ	(ເຂົ້າງາຍ)	/ngaj /
/ຕະ	(ພໍ່ຕາ)	/ta /
ຢະ	(ຍ່າ)	/ya/
ໂຕ	(ໂຕສັດ,ເປັນໂຕ)	/tō/
ສະແໜງ		/sneŋ/

ຂວາຍ	(ໝິ່ດຍາມ)	/ khwaj /
ແຖ		/thǣm/
ເຫິ		/hrəŋ /
ສະຄ່ານ		/sakhān/
ຢວກ		/kj ok/
ໄຮ່		/hre/
ຮອດ		/rot /
ຊົ່ວ	(ໄລຍະ)	/yua/
ຄາວ	(ຈັກຄາວ, ຈັກໜ້ອຍ)	/grāw /
ຕື່ມ		/ tambɔ/

5). ການຮັບຄຳຈາກພາສາທະມິນ

ຄົນລາວໂດຍທົ່ວໄປມັກເຂົ້າໃຈວ່າ ບັນດາຄຳທີ່ລາວຮັບມາຈາກອິນເດຍໂດຍທາງສາສະໜາ ແລະ ວັດທະນະທຳ ນັ້ນໄດ້ແກ່ຄຳປາລີຂອງພວກມະຄົດ ແລະ ສັນສະກິດຂອງພວກອາລະຍັນເທົ່ານັ້ນແຕ່ໃນຄວາມເປັນຈິງ,ຄຳຂອງຊາດອື່ນ ໃນອິນເດຍທີ່ເຊື່ອມເຂົ້າໃນປາລີ ສັນສະກິດກ່ອນນັ້ນກໍ່ມີເຊັ່ນກັນ. ການທີ່ປາລີ ສັນສະກິດມາສູ່ລາວນັ້ນກໍ່ພາໃຫ້ຄຳຂອງຊາດຕ່າງໆທີ່ວ່ານີ້ໄດ້ຮ່ວມມານຳ. ໃນນີ້ຄົງມີຄຳຈາກຫຼາຍພາສາແຕ່ເນື່ອງດ້ວຍເອກະສານທີ່ກ່າວເຖິງເລື່ອງນີ້ໄດ້ພົບພຽງຈຳນວນໜຶ່ງເທົ່ານັ້ນເຊັ່ນ ເອກະສານທີ່ກ່ຽວກັບຄຳຂອງຊາວທະມິນທີ່ຮ່ວມມາກັບຂະບວນການຮັບຄຳຂອງປາລີ ສັນສະກິດສ່ວນທີ່ຜ່ານລັງກາ. ກ່ອນຈະກ່າວເລື່ອງພາສາກໍ່ຈະສະເໜີຄວາມເປັນມາຂອງຊາວທະມິນໂດຍຫຍໍ້ດັ່ງນີ້:

ໃນເອກະສານທີ່ກ່າວເຖິງຊາວທະມິນເຊິ່ງ ດຣ. ປຣະຢູນ ຊິງສິນ ສະເໜີໄວ້ມີບາງເລື່ອງດັ່ງນີ້ ຊາວທະມິນປະຈຸບັນໝາຍເຖິງເຜົ່າຊົນທີ່ຢູ່ຕາມພາກຕາເວັນອອກລຸ່ມລົງໄປເຖິງທິດໃຕ້ຂອງອິນເດຍບໍລິເວນເມືອງ ໂຈລະ, ບາງຊາດເຄີຍເອີ້ນຊາວທະມິນວ່າ: ພວກສິງຫົນ[1]. ໃນປະຫວັດສາດໄດ້ກ່າວວ່າ ຊາດທະມິນ ເຄີຍມີຄວາມຮຸ່ງເຮືອງໃນແຖບພາກໃຕ້ຂອງອິນເດຍມາແຕ່ກ່ອນທີ່ພວກອາລະຍັນ ສະໄໝພະເວດຈະອົບພະຍົບເຂົ້າໄປຢູ່ອິນເດຍ. ທະມິນເຄີຍມີວັນນະຄະດີຂອງຕົນເອງເປັນຈຳນວນຫຼາຍເຊິ່ງພາໃຫ້ສັນສະກິດກໍ່ຮັບເອົາໄປໃຊ້ ອັນນີ້ໄດ້ເປັນສາເຫດທີ່ພາໃຫ້ຄຳຂອງທະມິນຫຼາຍໆຄຳ ໄດ້ເຂົ້າໄປປົນຢູ່ນຳຄຳຂອງສັນສະກິດ.

ກ່ຽວກັບຄວາມສຳພັນລະຫວ່າງລາວກັບທະມິນນັ້ນ ຢູ່ລາວເຮົາຍັງບໍ່ທັນພົບວ່າມີເອກະສານໃດໄດ້ກ່າວເຖິງ ຈະເປັນທາງກົງ ຫຼື ທາງອ້ອມກໍ່ຕາມ ພຽງແຕ່ຍິນເລື່ອງທີ່ກ່າວເຖິງຄາວທີ່ລາວເຮົາໄປສະແຫວງເອົາຄວາມຮູ້ທາງສາສະໜາພຸດ ຫຼື ໄປຂໍເອົາອັດຖິຂອງພະພຸດທະເຈົ້າຈາກອິນເດຍຜ່ານລັງກາມາລາວໃນຄາວກ່ອນທີ່ຈະສ້າງພະທາດຫຼວງວຽງຈັນເທົ່ານັ້ນ. ແຕ່ສະເພາະຄຳວ່າ ທະມິນ ກໍ່ເປັນຄຳທີ່ລາວເຄີຍຍິນ ແລະ ເຄີຍເວົ້າ ເຊິ່ງການເວົ້ານັ້ນແມ່ນໃນຄວາມໝາຍທີ່ເຂົ້າໃຈວ່າ ຮ້າຍ ເຊັ່ນ: ເສືອທະມິນ ດັ່ງນີ້ເປັນຕົ້ນ. ການເຂົ້າໃຈທີ່ເປັນເຊັ່ນນີ້ ຄົງມາຈາກສາຍເຫດບາງປະການຄື:

ໜຶ່ງ: ລາວໄດ້ຮັບຄຳວ່າ ທະມິນ ແລະ ຄວາມໝາຍທີ່ໝາຍເຖິງ ຮ້າຍ ອາດຜ່ານພາສາໄທ ໂດຍທາງວັນນະຄະດີ, ນິດເລື່ອງ ຫຼື ລະຄອນ ເນື່ອງຈາກວ່າ ໃນໄທກໍ່ໄດຮັບເລື່ອງ ແລະ ຊາດົກຈາກລັງກາ ເຊິ່ງກໍ່ມີຄວາມທີ່ເວົ້າເຖິງທະມິນ.

ສອງ: ລາວອາດໄດ້ຮັບຄຳພີຊາດົກບາງອັນທີ່ເປັນເລື່ອງກ່ຽວກັບທະມິນ ຕາມຄວາມໝາຍທີ່ລັງກາເອົາໃຫ້ ມາໂດຍທາງສາສະໜາກໍ່ເປັນໄດ້, ແຕ່ເຖິງຢ່າງໃດ ຄຳວ່າທະມິນ ຕໍ່ກັບຄວາມຄິດຂອງຄົນລາວກໍ່ບໍ່ເຄີຍຖືວ່າເປັນຜູ້ຮ້າຍ.

---

[1] ປຣະຢູນ ຊິງສິນ: ການປ່ຽນແປງຂອງພາສາ; ພ.ສ 2526 ໜ້າ 176.

ໃນພາສາໄທ ໄດ້ກ່າວເລື່ອງທະມິນວ່າ ແຕ່ກໍ້ຄວາມວ່າ ທະມິນ ໃນພາສາຂອງຊາວທະມິນເອງ ໝາຍເຖິງ ຫອມຫວນ[2] ຕໍ່ມາຄວາມໝາຍນີ້ໄດ້ປ່ຽນແປງເປັນ ເສືອທະມິນ ຫຼື ໃຈດຳອຳມະຫິດນັ້ນດ້ວຍພວກລັງກາ, ເນື່ອງຈາກຊາດທັງສອງເຄີຍລົບລ່າຂ້າຟັນກັນມາເປັນເວລາດົນ. ດັ່ງທີ່ສະເໜີມາ ສັນສະກິດກໍ່ໄດ້ຮັບຄຳຂອງທະມິນຊຸມໜຶ່ງທີ່ໃຊ້ໃນທາງວັນນະຄະດີໄປ ເມື່ອສັນສະກິດເປັນພາສາທີ່ສຳຄັນໃຊ້ກັບທາງສາສະໜາພຸດນິກາຍຫີນະຍານ, ໃນເມື່ອສາສະໜານີ້ ໄດ້ຂະຫຍາຍຕົວໄປສູ່ທາງໃຕ້ເຖິງລັງກາ ເວລາຕໍ່ມາກໍ່ແຜ່ໄປເຖິງຫຼາຍປະເທດໃນເຂດອາຊີອາຄະເນ ກໍ່ເຮັດໃຫ້ສັນສະກິດກໍ່ໄດ້ແຜ່ອອກຕາມໄປນຳ ເມື່ອໄດ້ຮັບຄຳພີພິງສະວະດານບາງອັນຈາກລັງກາ ແລະ ໄດ້ຮັບຜົນຂອງສາສະພຸດລັດທິລັງວິງເຂົ້າມາ ກໍ່ພາໃຫ້ມີເລື່ອງກ່ຽວກັບທະມິນບາງອັນຕາມຄວາມໝາຍທີ່ຊາວລັງກາເອົາໃຫ້ເຂົ້າມາເຊັ່ນກັນ.

ກ່ຽວກັບພາສາທະມິນຈັດເຂົ້າໃນກຸ່ມພາສາ Dravidian, ໂຄງສ້າງຂອງຄຳໂດຍທົ່ວໄປເປັນຄຳແບບຕິດຕໍ່; ການສ້າງຄຳເຄີຍໃຊ້ການເຕີມໜ່ວຍຄຳເຂົ້າທ້າຍຂອງຄຳເປັນສຳຄັນ ນອກນັ້ນກໍ່ຍັງມີວິທີທີ່ລະອຽດຕື່ມອີກ. ກ່ຽວກັບຄຳທີ່ລາວເຮົາຮັບຈາກພາສາທະມິນນັ້ນ ດ້ວຍການສຶກສາຈາກເອກະສານຂໍ້ມູນທີ່ເປັນຄຳຢືມ ເຊິ່ງໄດ້ຄັດຫາເອົາພຽງຊຸມຄຳທີ່ພົບໃຊ້ໃນພາສາລາວ ໄດ້ມີຄຳຈຳນວນໜຶ່ງດັ່ງນີ້:

ຄຳລາວ.	ຄຳທະມິນ
ກະອອມ ຫຼື ອອມ	/kalayam/
ກະຫຼີ	/kari /
ຊຳພູ (ສີຊຳພູ)	/sompū/
ກຳມະຫຍີ	/kambali /
ມາໄລ	/malaya /
ກະສາຍ	/kashāya /

---

[2] ປຣະຍູນ ຊິງສິນ: ການປ່ຽນແປງຂອງພາສາ; ພ.ສ 2526 ໜ້າ 176.

ຄຳ	/kham /
ກຸລີ	/kaliyal/
ຕະກ່ວ ຫຼື ກ່ວ	/tagaram/
ເຈຍລະໄນ	/Caranaj /
ແຮ່ຈານ ແລະ ອື່ນໆ	/jān/
ວິໄລ.	/Vilaj /
ຊີບ, ຊີວາ.	/SIva /
ປະໄພ	/Prapaj /

6). ກຸ່ມຄຳທີ່ຊາບແຫຼ່ງທີ່ມາໂດຍກວ້າງໆ.

ໝາຍເຖິງກຸ່ມຄຳທີ່ພໍຊາບວ່າມາຈາກຕະກູນພາສາໃດໜຶ່ງ ແຕ່ບໍ່ສາມາດຊີ້ບອກໂດຍ ກົງວ່າ ເປັນຄຳຂອງພາສາໃດໃນຕະກູນນັ້ນ,ບາງຄຳ ເອກະສານທີ່ສະເໜີເຖິງແຫຼ່ງທີ່ມາບໍ່ກົງກັນ ແລະພົບຄຳນັ້ນມີໃຊ້ໃນຫຼາຍພາສາ. ຊຸມຄຳທີ່ຈະສະເໜີຕໍ່ໄປນີ້ ຊາບວ່າເປັນຄຳ ຈາກຕະກູນ ພາສາມອນ - ຂະແມ ແຕ່ບໍ່ສາມາດລະບຸເປັນພາສາໃດ ເຊິ່ງເກັບກຳຄຳໄດ້ດັ່ງນີ້:

ຕົວຢ່າງ :

ມອດ (ໂຕມອດ)	ລະ (ລະວາງ, ລະປ່ອຍ)
ສີໃຄ	ສາລິ
ກະຮອກ	ຫຼາມ

ສະກຸ (ຜັກ)	ລ່ວງ (ລ່ວງຫຼິ້ນ)
ກະດ້ຳງ	ຮຸ່ງ (ຮຸ່ງກິນນ້ຳ)
ກະແດ້ງ	ສະກຸ (ຜັກ)
ໄຮ່	ສະແຫຼບ (ຜັກ)
ກະແຕ	ກະດອມ (ຜັກ, ໝາກ)
ກະທິບ	ໂຕ (ໂຕປູ, ໂຕປາ...)
ຈ໊ຽງອ້ຽງ	ໄຮ້
ແລງລັກ (ຜັກ)	ຮ້ຽງ
ດອ້ຽ ຫຼື ບອ້ຽ, (ຢາ, ໝາກໄມ້)	ຂ໊ີໝົ້ນ
ໜ້ຳ (ໜ້ຳຍ໊ຽ)	ໄຮ (ໂຕໄຮ)
ຂວ້ຳກ	ເຮ໊ືອດ
ເຕ໊ືຍ	
ຂ໊ີ (ໝູຂ໊ີ, ໄມ້ຂ໊ີ)	ຊ້ຳ (ປ່ຳຊ້ຳ)
ພ້ອມ	ຮອດ

7). ບັນດາຄຳທີ່ບໍ່ທັນຊາບແຫຼ່ງທີ່ມາ.

ການສຶກສາຫາທີ່ມາ ຂອ້ງຄຳໃນນ໊ີວິທີສຳຄັນຄ໊ື ສຶກສາຕາມເອກະສານຕ່ຳ້ງ ທີ່ກ່ຽວກັບຄຳສັບເຊ່ັ່ນ ວັດຈະນາ ນຸກົມ, ປ໊ົມສຶກສາກ່ຽວກັບຄຳຕ່ຳ້ງປະເທດທີ່ມ໊ີໃນບ່ຳ້ງພາສາ, ເອກະສານທ່ຳ້ງປະຫວັດສາດ, ເອກະ ສານກ່ຽວກັບພາສາຖ໊ິ່ນ, ເອກະສານກ່ຽວກັບເຜ໊ົ້າຕ່ຳ້ງ ໃນພາກພ໊ື້ນອາຊ໊ີຕາເວ້ັນອອກສ່ຽງໃຕ້, ຈາກຕຳນານ, ເອກະສານກ່ຽວກັບການເຂ໊ົ້າມາຂອ້ງ ສາສະໜາ,ຂອ້ງເຜ໊ົ້າຊ໊ິນ ແລະ ອ໊ືກບ່ຳ້ງເອກະສານ. ນອກ ນ໊ີ ກ່ໍເປ້ັນການສຶກສາຂ໊ຶ້ນມາເປ້ັນຂ໊ໍ້ມູ້ນ ອ້ັນໃໝ່ທ໊ີ່ພ໊ົບໃນພາສາຕ່ຳ້ງ ທ໊ີ່ໄດ້ຄ໊ົ້ນຄວ້ຳໄລຍະໃໝ່ນ໊ີ.ຜ່ານການສຶກສາກ່ຽວກັບແຫຼ່ງຄຳຕາມ

ທີ່ກ່າວມານີ້ ກໍ່ສາມາດຮູ້ໄດ້ເຖິງແຫຼ່ງທີ່ລາວ ຮັບຄຳນັ້ນໄດ້ງ່າຍເພາະໂດຍໂຄງສ້າງຄຳ ແລະ ຄວາມໝາຍມີຄວາມແຕກຕ່າງຈາກອັນທີ່ມີໃນລະບົບຄຳຂອງພາສາລາວ.

ພ້ອມນີ້ກໍ່ພົບຄຳຊຸມໜຶ່ງເຫັນວ່າຈະແມ່ນຄຳຢືມແຕ່ບໍ່ທັນຊາບເຖິງທີ່ມາໄດ້ເທື່ອ, ຍັງເປັນທີ່ສົງໄສຕໍ່ກັບແຫຼ່ງໃດແທ້,ຫາກໃຊ້ວິທີສັງເກດຄວາມສຳພັນ ທາງ ຄວາມໝາຍຂອງຄຳ ໃນກຸ່ມຄຳ ແລະໂຄງສ້າງຂອງຄຳ ກໍ່ຍັງບໍ່ສາມາດໃຫ້ຄຳຕັດສິນ ເຖິງແຫຼ່ງອັນແນ່ນອນໄດ້ເຊັ່ນ ກັນ. ຄຳທີ່ຫາບໍ່ທັນຊາບແຫຼ່ງນີ້ພົບວ່າ ເປັນຄຳເກົ່າແກ່ ເກືອບຄືຄຳພື້ນຖານຂອງພາສາລາວ. ການທີ່ຮູ້ໄດ້ວ່າເປັນການຢືມນັ້ນ ກໍ່ເພາະ ລັກສະນະບາງປະການ ຂອງຄຳກໍ່ຍັງມີສິ່ງທີ່ສໍ່ໃຫ້ຮູ້ ຄວາມແຕກຕ່າງຈາກລະບົບພື້ນຖານໃນພາສາລາວຫຼາຍຢ່າງຄື:

1.ລັກສະນະຂອງຄຳມີຫຼາຍຄຳມີສອງພະຍາງ

2.ຫາກແຍກພະຍາງໃນຄຳແຕລະພະຍາງກໍ່ບໍ່ສາມາດເປັນໜ່ວຍຄຳໄດ້

3.ການປະກອບຂອງສະຫຼະໃນຄຳມີຄວາມຕ່າງຈາກຄຳຕົວອື່ນໃນກຸ່ມ

4. ບາງຄຳພົບເຫັນໃຊ້ໃນຫຼາຍພາສາ ເຊັ່ນຄຳວ່າ ລວກ,ແກງ,ຊາຍ(ຜູ້ຊາຍ),ເຂົ້າ...ໂດຍບໍ່ ຊາບ ວ່າມີເຄົ້າຢູ່ພາສາໃດ.

5.ຄວາມໝາຍ ຫຼື ທັ້ງໂຄງສ້າງ ເຫັນມີຄວາມແຕກຕ່າງບາງປະການກັບຄຳພື້ນຖານຂອງ ພາສາລາວ.

6.ຫຼາຍຄຳທີ່ພົບນີ້ພາໃຫ້ເກີດເປັນຄຳ Homonymy ກັບບາງຄຳໃນພາສາລາວ

ຕົວຢ່າງ ກຸ່ມຄຳທີ່ບໍ່ຊາບແຫຼ່ງທີ່ມາມີດັ່ງນີ້.

ກະເພາະ	ເຂົາ (ພູເຂົາ)
ກະເພົາ (ຜັກ)	ດອຍ (ພູດອຍ)
ຕຳລຶງ (ຜັກ)	ນານ
ເຂົ້າ (ເຂົ້າກິນ)	ປົ້ມ
ປຸງນ (ເຂົ້າປຸງນ)	ຝ້າງ (ເຂົ້າຝ້າງ)
ເຫັ້ງ (ເຂົ້າເຫັ້ງ)	ລຳໄລ

ບ້າງ (ບ້າງຫອ່ນຄຳ)
ກະຕ່າຍ
ຊ່າງ (ເປັນ)
ແກ້ງ
ເຫ່ວ ແຫ່ວ (ປ່າເຫ່ວ, ປ່າແຫ່ວ)
ຫົກ
ແຫ
ສາກ (ຕັ້ງສາກ)
ຕາບ (ຕາບໃດ)
ກະເສນ (ມ່ວງເສນ)
ເຂົ້າປຸ້ນ
ເບືອ (ເຂົ້າເບືອ)
ຊາຍ (ຜູ້ຊາຍ)
ສົ້ງ (ສົ້ງນຸ່ງ)
ທໍ (ທໍໄໝ)
ກະຕ່າຍ
ແຫ (ເຄື່ອງຫາປາ)
ມອງ
ລອງ (ລອງຫ້າງເອົານົກ)

ກ້າງແກ (ນົກ)
ໂຫລະພາ
ດ້າຍ (ເສັ້ນດ້າຍ)
ລວກ

ມອງ (ຄົກມອງ)
ໂມ້ (ໂມ້ແປ້ງ)
ມູມ
ກະສໍ (ມ່ວງສໍ)
ກາກ (ເຂົ້າກາກ)
ສານ (ເຂົ້າສານ)

ຫອກ
ເສື້ອ
ຫົ້ງ
ຈອກ (ຜັກ)
ກະດຸ້ງ
ໜ້າ (ໜ້າຍິ້ງ)

ເອກະສານອ້າງອີງ

Anttila Raimod: An introduction to historical and comparative Linguistics. New York, The Macmillan Company, 1972.

Arlotto, Anthony: Introduetion to historical Linguistics. Boston, Houghto Mifflin Company, 1972.

Bloom field, Leonard: Language Lodon: George Allen & Uniwin. 1933.

Etienne Aymonier; Antoine Cabaton: Dictionary CAM-FRANCAIS Paris, Imprimerie Nationale Publications: L'Ecole Francaise D'extréme-Qrient; MDCCCCVI.

Frank M. LEBAR, GERALD C. HICKEY, JOHN K. MUSGRAVE : Ethnic groups on mainland southeast Asia. Printed in United of America, Human Relative area files Press New Haven : 1964.

Jones, Robert B: On the reconstruction of Proto Tai. Lingua. 1965.

Li, Fragkuei: A hand book of comparative Tai. Hawai the Univ. Press of Hawai. 1972.

MARC REINHORN: DICTIONAIRE LAOTIEN FRANCAIS.
Tome 1, 2 Centre national de la Recherche scientifique 15
Quai Anatole France, Paris VII[e]. 1970.

Ts. Elzy Hojack: Mongolian lexicology: Ulanbator. 1979.

Hoenigswald, Henry M: Language change and Linguistic Reconstruction
Chicago, The Univ. of chicago press. 1960.

Petter Trudgill : Sociolinguistics An introduction. สะบับแปเป้นพาสาไท;
สำนักงานคะนะกำมะการนอิไจแห่งชาด.พ ส 2531.

U.A. Kopkoniev: K[h]mersko – Russky slovar: 2,e Izd.Moscow Russky
Yazik; 1984.

ภิมมะลา นาถะสีลิ ละบับถำ. พาทพาสาสาด ถะนะมะนุดสาด มะหาอิทะยา
ไลกะเสดสาด. พ ส 2539.

ถะนะอาจานพาท พาสาสาด: พิดจะนานุภิม ลาวไท อังกิด สะบับ
สะเหิมพะภาด.มะหาอิทะยาไลกะเสดสาด, ถะนะมะนุดสาด,
พาทพาสาด 2542.

จิด พูมิสัก: ถวามเป้นมา ของถำ สะหยาม, ไท, ลาว และ ขอม.
สำนักพิมสะหยาม.บ่ลิสัดเถลัดไทจำกัด. กุงเทบ 2535.

สุจะลิดธัภ ดิผะดุๆ พ้อมคะมะ: มอม บิบบาดด้านสังคิม วัดทะมะทำ
ความเป็นมา และความปุ่งแปงในรอบ200ปี ของ
กุงลัดตะมะโกสิม,
สะถาบันวิไจพาสาและ วัดทะมะทำ เพื่อกานพัดทะมา.
มะหาวิทะยาไล มะหิดิม. 2542.

สุภาสะหว่าๆ, สิมแสๆ และ คะมะ: วัดจะมานุกิมกิมหมุลาวฝรั่ๆ อังกิด
กะซวงทะแหลงข่าว และ วัดทะมะทำ. 1994.

สุทิวิๆ พิๆไพบูน: ปาลิ สันสะกิด ที่สำพันกับ พาสาไท.
บ่ลิสัดสำนักพิมไทวัดทะมาพานิดจำกัด. กุงเทบ.พ ส 2486.

ส.ดร.คุนบันจิบพันทุเมทา: พาสาต่างปะเทดในพาสาไท.
คะมะมะนุดสาด พากพาสาไท และ พาสาตะวันออก.
มะหาวิทะยาไลรามคำแหๆ . 2530.

สะถาบันคิ้นคว้าวัดะมะทำ: วัดจะมานุกิม ขะแม ลาว.
พิมที่โรงพิม กะซวงสาทาละมะสุก วงๆจัน. 2000.

ดุสะดีพอน ซำนิโรดสาม: พาสาสาดเชิงปะหวัดและพาสาไทปุบทุบ
จุลาลิงกอนวิทะยาไล. กุงเทบ : 2526.

พูมิ วิๆวิจิด: ไวยะกอนลาว: พะแนก สึกสาสูนกาๆ. ซำเหนือ 1967.

ພິດຈະນານຸກົມ ສະບັບລາຊະບັນດິດສະຖານ (ພາສາໄທ) ພ.ສ 2525.

ປະຫວັດສາດລາວ ເດີກດຳບນ-ປະຈຸບັນ. ກະຊວງຖະແຫຼງຂ່າວແລະວັດທະນະທຳ.
ນະຄອນວຽງຈັນ.ຄ ສ 2000.

ປຣະຍູນ ຊິງສິນ : ການປ່ຽນແປງ ຂອງພາສາ, ຄຳຍືມໃນພາສາໄທ.
ພາກວິຊາ ພາສາໄທ ຄະນະມະນຸດສາດ ແລະ ສັງຄົມສາດ;
ວິທະຍາໄລ ຊົນບູລີ 2526.

ປະສິດ ພາບຍະກອນ: ການສຶກສາພາສາໄທຕາມແນວພາສາສາດ. ວິທະຍານິພົນ.
ບໍລິສັດສຳນັກພິມ ໄທວັດທະນາພານິດຈຳກັດ. ກຸງເທບ: 2516.

ຢານໂອລອນສະວານເທຊອນ ດຣ. ດຳຣິງ ທາຢານິນ ພ້ອມຄະນະວັດຈະນານຸກົມ
ຂະມຸລາວ. ພິມທີ່ໂຮງພິມກະຊວງສາທາລະນະສຸກວຽງຈັນ.1994.

ວິໄລວັນ: ຂະນິດສະຖານັ້ນ: ພາສາສາດເຊີງປະຫວັດ
ສຳນັກພິມມະຫາວິທະຍາໄລ ທຳມະສາດ . 2526.

ວິຈິດຕາ ແສງພົນສິດທິ : ຄວາມຮູ້ເລື່ອງພາສາຕ່າງປະເທດ ແລະ ພາສາໄທ.
ສຳນັກພິ ໂອດຽນສະຕໍ; ກຸງເທບ 2524.

ວິທະຍາ ນາທອງ: ສຶກສາປຽບທຽບ ພາສາອັງກິດ ກັບພາສາໄທ.
ພາກວິຊາພາສາອັງກິດແລະພາສາສາດ ຄະນະມະນຸດສາດ

24 / VII
ห้องสมุดกลาง

มะหาวิทะยาไล ธามคำแหง. พ ส 2536.

อานัน ชิงวิทะยา, เมาอะธัด ชิงวิทะยา : พาสาสาดเบื้องต้นสำลับคู.
บริสัด สำนักพิม ไทวัดทะนาพานิด จำกัด. 2523.

อำมะธา ปะสิดลัดสะถิม: พาสาสาดสังคิม: พากพาสา ดะมะอักสอมสาด.
จุลาลิงกอม มะหาวิทะยาไล. กุงเทบ 2533.

เธืองเดด ปันเดื่อมขัดติยะ: พาสาถิ่นตะกูมไต:
จุลาลิงกอมมะหาวิทะยาไล กุงเทบ พิมเที่อที่ 2.พ ส 2531.

ສຶກສາການຢືມຄຳໃນພາສາລາວ

ຈຳນວນພິມ : 1.200 ຫົວ